ວັດທະນະທັມບູຮານລາວ

ຄົ້ນຄວ້າ ແລະ ຮິບໂຮມ

ໂດຍ

ຈັນມີ ສິດທິມະໂນທັມ

ເຫລັ້ມທີຫນຶ່ງ

ວັດທະນະທັມບູຮານລາວ

ຄົ້ນຄວ້າ ແລະ ຮີບໂຮມ

ໂດຍ

ຈັນມີ ສິດທິມະໂນທັມ

ເຫລັ້ມທີຫນຶ່ງ

ວັດທະນະທັມ ບູຮານລາວ

ຮິບໂຮມໂດຍ :
ຈັນມີ ສິດທິມະໂນທັມ
ພິມທີ່ ໂຮງພິມໜຸ່ມລາວ
ຕາມ ລອພ 60/ ພຈ 300199
ຈຳນວນພິມ 2000 ຫົວ
ຂະໜາດ 16 x 26

© ສະຫງວນ ລິຂະສິດ

ຄຳອະນຸໂມທະນາທານ

ຄະນະປະຈຳສູນກາງ ອົງການພຸດທະສາດສະໜາສຳພັນລາວ ໄດ້ກວດກາເບິ່ງແລ້ວ, ວັດທະນະທຳບູຮານລາວ ຊຶ່ງຄົ້ນຄ້ວາຮິບໂຮມ ໂດຍ ທ່ານຈັນມີ ສິດທິມະໂນທັມ. ເຫັນວ່າເປັນປຶ້ມທີ່ມີປະໂຫຍດໃຫ້ແກ່ຄົນລຸ່ນໃໝ່ໄດ້ສຶກສາຄົ້ນຄ້ວາ ແລະນຳໃຊ້ເຂົ້າໃນຊີວິດປະຈຳວັນ. ອີກດ້ານໜຶ່ງກໍແມ່ນເຮັດໃຫ້ຄົນລຸ່ນໃໝ່ ໄດ້ຮູ້ຈັກເຖິງຄວາມຈະເລີນທາງດ້ານວັດທະນະທຳຂອງຄົນບູຮານ, ປຶ້ມວັດທະນະທຳບູຮານລາວຕໍ່ສັງຄົມລາວໃນປັດຈຸບັນ ແມ່ນຍັງມີຄວາມຈຳເປັນຢູ່ຫລາຍພໍສົມຄວນ. ເພາະໃນໄລຍະຜ່ານມາ ຍັງບໍ່ມີທ່ານໃດຂຽນຂຶ້ນມາເທື່ອ.

ສະນັ້ນ ສູນກາງອົງການພຸດທະສາດສະໜາສຳພັນລາວ ຈຶ່ງອະນຸໂມທະນາ ໃນກຸສົນເຈຕະນາຂອງທ່ານຜູ້ຄົ້ນຄ້ວາ ແລະຮິບໂຮມປຶ້ມຫົວນີ້ຂຶ້ນ.

ວັດພະທາດຫລວງເໜືອ,

ວັນທີ 19/10/1999

ປະທານ

(ພຣະອາຈານມະຫາວິຈິຕຣ ສິງຫາຣາຊ)

ສາລະບານ

- ຄຳນຳ ໜ້າ
- ຄຳອະທິບາຍ " ກ
- ຄຳວ່າຂວັນ " ຂ
- ພິທີກ່ຽວກັບຂວັນ " ຄ
- 1. ພິທີສູດນ້ຳມົນ " ຄ
- 2. ພິທີສູດຂວັນກ່ອງ " ງ
- 3. ການສ້ອນຂວັນ " ງ
- 4. ການປະກອບພິທີສູດຂວັນ " ຈ
- ຣາສີປະຈຳວັນ " ສ
- ບຸບພະກິດກ່ອນສູດຂວັນ 4 ຢ່າງ " ຊ
- ວັດທະນະທຳບູຮານລາວ " 1
- ຄວາມເອົາຂອງໄປໝັ້ນລູກສາວເພິ່ນ " 1
- ຄວາມຮັບຂອງໝັ້ນ " 2
- ຄວາມໄປສູ່ຂັນໝາກ " 3
- ຄວາມຮັບຂັນໝາກ " 3
- ຄວາມມອບຂັນເງິນ " 4
- ຄວາມຮັບຂັນເງິນ " 4
- ຄຳສູ່ຂວັນນ້ອຍກ່ອນເວລາຈະແຕ່ງດອງ " 5
- ພິທີສູ່ຂວັນບ່າວສາວເວລາແຕ່ງດອງ " 10
- ຄຳສູ່ຂວັນບ່າວສາວເວລາແຕ່ງດອງ 10
(ແບບທີ່ໜຶ່ງແຜນບູຮານ)
- ຄວາມຜູກແຂນຄູ່ບ່າວສາວ(ສຳລັບຜູ້ຊາຍ) " 17
- ຄວາມຜູກແຂນຄູ່ບ່າວສາວ(ສຳລັບຜູ້ຍິງ) " 18

- ຄຳສູ່ຂວັນບ່າວສາວເວລາແຕ່ງດອງ ໜ້າ 19
(ແບບທີ່ສອງແຜນໃໝ່)
- ຄວາມຟາຍເຫົ້ລາແຜນເກົ່າ " 23
- ຄວາມຟາຍເຫົ້ລາ ອີກແບບໜຶ່ງ " 25
- ຄວາມຟາຍເຫົ້ລາ ອີກແບບໜຶ່ງ " 27
- ຄວາມສູ່ຂວັນແມ່ຍິງອອກກຳໃໝ່ " 28
- ຄວາມຜູກແຂນແອນ້ອຍ " 33
- ຄວາມຜູກແຂນແອນ້ອຍ ອີກ " 34
- ການເຊີນຂວັນທົ່ວໄປ " 34
- ຄຳເຊີນຂວັນທົ່ວໄປ " 34
- ສູດຂວັນທຳມະດາ " 39
- ຄຳສູດຂວັນຕ້ອນຮັບປີໃໝ່ " 44
- ຄຳສູດຂວັນຕ້ອນຮັບປີໃໝ່ແບບທີ 2 " 49
- ຄຳສູດຂວັນຕ້ອນຮັບປີໃໝ່ແບບທີ 3 " 54
- ຄຳສູ່ຂວັນເດັກນ້ອຍ " 58
- ຄວາມຜູກແຂນເດັກນ້ອຍ " 62
- ຄວາມຜູກແຂນເດັກນ້ອຍ(ອີກແບບໜຶ່ງ) " 62
- ຄວາມຜູກແຂນເດັກນ້ອຍ(ອີກແບບໜຶ່ງ) " 63
- ຄຳສູ່ຂວັນຜູ້ອາວຸໂສ " 63
- ຄຳສູ່ຂວັນຜູ້ຈະໄປຮຽນປະເທດນອກ " 67
- ຄຳສູ່ຂວັນຜູ້ຮຽນມາຈາກຕ່າງປະເທດ " 70
- ຄຳອວຍພອນບາສີທ່ານນາຍົກ, ເຈົ້າແຂວງ, " 73
ເຈົ້າເມືອງ, ນາຍພົນ, ນາຍພັນ
- ຄຳຖວາຍພຣະພອນ ບາສີພຣະມະຫາກະສັດ " 76
(ອະນຸລັກຂອງເກົ່າ)
- ຄຳບາສີພຣະສິງ " 82

- ຄຳຄາຣະວະພຣະພຸດທະຮູບ ໜ້າ 85
- ສູດຂວັນຫລວງ " 87
- ສູດຂວັນຄົນປ່ວຍ " 93
- ສູດຂວັນເຮືອນ " 97
- ຄຳສູ່ຂວັນຂຶ້ນເຮືອນໃໝ່ " 99
- ຂຶ້ນເຮືອນໃໝ່ " 103
- ພິທີຂຶ້ນເຮືອນໃໝ່ " 104
- ຄຳຕອກສິ່ວ ທີລ ເຫັລກຕາປູ, ຄວາມຝັນ " 107
- ຄວາມໃຫ້ພອນ " 108
- ສູ່ຂວັນພາ, ຄຳສູ່ຂວັນພາ " 108
- ສູ່ຂວັນເສົາເຮືອນທີ່ຈະປຸກໃໝ່ " 111
- ຄຳສູ່ຂວັນເສົາເຮືອນອີກແບບໜຶ່ງ " 114
- ຄຳສູ່ຂວັນເຂົ້າຂຶ້ນເລົ້າ " 116
- ຄຳສູ່ຂວັນເລົ້າເຂົ້າ " 121
- ຍົນຕິດປະຕູເລົ້າ, ຍຸ້ງ, ສາງ " 122
- ຄຳສູ່ຂວັນເຂົ້າໃນລານ " 123
- ຄຳສູ່ຂວັນລານ " 127
- ຄຳສູ່ຂວັນນາ " 129
- ຄຳສູ່ຂວັນງົວຄວາຍ " 130
- ຄຳສູ່ຂວັນງົວຄວາຍ(ອີກແບບໜຶ່ງ) " 132
- ຄຳສູ່ຂວັນກວຽນ - ຣົຖ " 134
- ຄວາມສົມມາພໍ່ແມ່ ເຈົ້າໂຄດລຸງຕາ " 136
- ຄວາມໃຫ້ພອນຄູ່ຜົວເມັຍມາສົມມາ " 137
- ຄວາມໃຫ້ພອນລູກຫລານ 137
ເອົາຜ້າແພມາສົມມາ
- ອີກແບບໜຶ່ງ " 138

- ຄວາມອ່ານໃບສຸວັນນະປັຕເຖຣາພິເສກ ໜ້າ 139
(ຫລາບທິດແບບຫລວງພະບາງ) "
- ຄວາມອ່ານໃບສຸວັນນະປັຕເຖຣາພິເສກ 141
(ຫລາບທິດແບບວຽງຈັນ)
- 1. ຊື່ຂອງດາວຣິກ ແລະຣາສີ " 143
- 2. ພິທີຫາດາວຣິກ " 144
- 3. ຊື່ຂອງເດືອນເປັນພາສາບາລີ " 145
- 4. ຊື່ຂອງວັນເປັນພາສາບາລີ " 146
- 5. ດິຖີ ຄືການນັບວັນຂຶ້ນ-ແຮມຂອງເດືອນ " 146
- ປັກຂະ ຄະນະນາ ຄືພິທີນັບວັນຂຶ້ນ-ແຮມ 147
ຕາມປັກ (15 ວັນ)
- ໂຄງໃນການທຳມຸງຄຸນຕ່າງໆ " 147
- 1. ໂຄງວັນຈົມ-ຟູ " 147
- 2. ໂຄງຍາມມະຫາໄຊ " 148
- 3. ໂຄງຫລາວເຫັລກ " 149
- 4. ໂຄງຫົວໃຈເປັນ " 149
- 5. ໂຄງຫົວໃຈຕາຍ " 150
- 6. ໂຄງອະມຸດຕະໂຊກ " 150
- 7. ໂຄງດິຖີທັງຫ້າ " 151
- 8. ໂຄງໂລກາວິນາດ-ທຸກທົນ " 151
- 9. ໂຄງທີ່ລົມເດືອນ " 152
- 10. ໂຄງພານວັນ " 153
- 11. ໂຄງນາກປະຈຳວັນ " 153
- 12. ໂຄງປີ້ນພິດ " 153
- 13. ໂຄງດາວພິດານເມືອງປະຈຳເດືອນ " 154
- 14. ໂຄງວັນແຕ່ງງານບ່າວ-ສາວ " 154

24 / VII
ຫ້າມຈຳໜ່າຍ

- 15. ໂຄງກາລະກິນີນ້ອຍ ໜ້າ 154
- 16. ໂຄງກາລະກິນີຫລວງ " 156
- ໂຄງຫ້າມທຳການຕາມວັນ " 158
- ເທວະດາປະຈຳທິດແຕ່ລະເດືອນ " 159
- 1. ພຣະຍາວັນ " 159
- 2. ພຣະຍາຍາມ " 160
- 1. ໂຄງວັນເກີດ " 161
- 2. ໂຄງເດືອນເກີດ " 162
- 3. ໂຄງປີເກີດ " 164
- ໂຄງປູກພືດບູຮານ " 168
- ການດູຂອງຫາຍແບບງ່າຍໆ " 168
1. ແບບຈັບຍາມ 3 ຕາ " 168
2. ແບບກາລະຈັກຣ " 171
- 2.2 ອິດທິພົນຂອງຍາມ " 172
- 2.3 ອິດທິພົນຂອງທັກສາ " 173
- ວິທີລົງລາຍລະອຽດໃນຫ້ອງແຫ່ງເວລາ " 176
- ຜັງກາລະຈັກຣ " 176
- ຊື່ຂອງຍາມກາງຄືນ " 177
- ຫລັກການຕັ້ງຊື່ຄົນ " 178
- ຊື່ຕົວຢ່າງ " 182
- ຍາມອຸບາກອງ(ຍາມພະມ່າແທກຄຸກ) " 187
- ຮີດເຂົ້າຄອງເຂີຍບູຮານ(ມີ 8 ລັກສະນະ) " 192

ຄຳນຳ

ປື້ມວັດທະນະທຳບູຮານລາວເຫຼັ້ມນີ້ ຂ້າພະເຈົ້າໄດ້ຄົ້ນຄ້ວາ ຊອກຫາ ເພື່ອຈົດກ່າຍ ຖ່າຍທອດ ຈາກໜັງສືປະເພນີບູຮານຕ່າງໆ ຫລາຍເຫຼັ້ມ ເພາະມີຈຸດປະສົງເພື່ອປົກປັກຮັກສາ ແລະສືບທອດສິ່ງ ທີ່ເປັນມໍຣະດົກທາງດ້ານຮີດຄອງປະເພນີ ວັດທະນະທຳ ອັນດີງາມ ຂອງລາວເຮົາເອົາໄວ້ ເພື່ອໃຫ້ຄົນຜູ້ເກີດໃໝ່ໃຫ່ຍລຸນໄດ້ຮູ້ ແລະເຂົ້າ ໃຈວ່າ ຄົນລາວໃນສະໄໝບູຮານນັ້ນ ເພິ່ນໄດ້ປະພຶດປະຕິບັດຕໍ່ຮີດ ຄອງປະເພນີຄືແນວໃດ.

ຄຳວ່າ "ປະເພນີ" ກໍຄືທຳນຽມ ແລະແບບແຜນໃນການປະພຶດປະ ຕິບັດຂອງຄົນ ບໍ່ວ່າຊາດໃດກໍ່ຍ່ອມມີປະເພນີເປັນຂອງຕົນເອງ, ຊາດ ລາວຂອງເຮົາກໍມີປະເພນີ ວັດທະນະທຳຂອງລາວ ໂດຍສະເພາະປະ ເພນີໃນສະໄໝບູຮານນັ້ນ ລ້ວນແລ້ວແຕ່ເປັນມໍຣະດົກອັນດີ ແລະຜູກ ພັນກັບການດຳລົງຊີວິດຂອງຄົນລາວ ທັງກາຍເປັນລັກສະນະອັນສະ ເພາະຂອງຄົນລາວ ຊາດລາວ ມາໂດຍຕະຫລອດ. ເຖິງປະຈຸບັນນີ້ປະ. ເພນີບູຮານລາວກໍຍັງຖືກນຳໃຊ້ຢູ່ໃນສັງຄົມລາວເປັນເອກອ້າງ ແລະ ບົ່ງບອກເຖິງຮີດຄອງ ປະເພນີ ວັດທະນະທຳອັນດີງາມ.

ຮີດຄອງອັນນີ້ໄດ້ມີມາແຕ່ສະໄໝບູຮານ ເພາະຢູ່ໃນວັນນະຄະດີ ຂອງລາວຫລາຍຜູກກໍໄດ້ເວົ້າເຖິງ ພິທີສູດຂັວນເອົາໄວ້ ພິທີສູດຂວັນນີ້ ສ່ວນຫລາຍແມ່ນໄດ້ເຄົ້າມູນມາຈາກສາດສະໜາພາມ ເປັນສ່ວນ ຫລາຍ ພາຍຫລັງສາດສະໜາພຸດໄດ້ມີອິດທິພົນເໜືອພາມ ຈຶ່ງໄດ້ມີ ການປະສົມປະສານລະຫ່ວາງພາມແລະພຸດ ບາງເທື່ອກໍມີພາມແລະຜີ ປົນກັນໄປນຳ ແຕ່ບາງຮີດຄອງ ປະເພນີ ມາເຖິງປະຈຸບັນກໍບໍ່ຖືກນຳໃຊ້ ເພາະບາງອັນກໍເຫັນວ່າບໍ່ສອດຄ່ອງກັບໄລຍະໃໝ່ ເທົ່າທີ່ນຳມາຈັດ ພິມໄວ້ ກໍບໍ່ໄດ້ໝາຍຄວາມວ່າຈະຕ້ອງນຳໃຊ້ທັງໝົດ ຕ້ອງມີການ ເລືອກເຟັ້ນເອົາແຕ່ສິ່ງທີ່ມັນສອດຄ່ອງກັບສະພາບຄວາມເໝາະສົມ

ໃນປັດຈຸບັນ ແຕ່ຫາກອັນໃດບໍ່ເໝາະສົມກັບກາລະ ເທສະ ກໍພຽງແຕ່ມີໄວ້ເພື່ອການສຶກສາຄົ້ນຄ້ວາ ເພື່ອໃຫ້ຮູ້ວ່າ ໃນສະໄໝບູຮານນັ້ນເພິ່ນມີຮີດຄອງ ປະເພນີ ອັນໃດແດ່.

ການປະກອບພິທີສູດຂ້ວນຕ່າງໆນັ້ນ ບາງທ້ອງຖິ່ນອາດແຕກຕ່າງກັນໄປເລັກນ້ອຍ ທີ່ໄດ້ນຳມາພິມໄວ້ກໍບໍ່ໄດ້ໝາຍຄວາມວ່າຈະຖືກຕ້ອງ ຄົບຖ້ວນ ເຕັມຮ້ອຍເປີເຊັນ ມີພຽງສູດຂ້ວນບາງຢ່າງທີ່ເຄີຍເຫັນແລະເຄີຍປະຕິບັດມາເທົ່ານັ້ນ.

ວັນທີ່ 6 ມິຖຸນາ(6) 1996

ຄຳອະທິບາຍ

ຄົນຊາດລາວເຮົາ ເປັນຊາດເກົ່າແກ່ຊາດໜຶ່ງຢູ່ໃນຊົມພູທະວີບ ປະຈຸບັນນີ້ເອີ້ນວ່າ ທະວີບອາຊີ ຕາມປະຫວັດສາດກ່າວໄວ້ວ່າ ຄົນຊາດລາວເຮົາເຄີຍມີຄວາມຈະເລີນ ຮູ້ຈັກການທຳມາຫາກິນ, ຮູ້ຈັກເຮັດໄຮ່ໄຖນາ, ຮູ້ຈັກປູກຝັງ ແລະລ້ຽງສັດ, ຮູ້ຈັກປຸກເຮືອນແປງຊານ ຕັ້ງເປັນບ້ານ ສ້າງເປັນເມືອງມາແລ້ວ ບໍ່ໜ້ອຍກ່ວາ 2.000 ປີ. ຊາດລາວເຮົາທີ່ມີອາຍຸຍືນຍາວມາເຖິງປານນີ້ ຕ້ອງມີຮີດຄອງ ທຳນຽມ ປະເພນີ ຢ່າງໃດຢ່າງໜຶ່ງ ອັນເປັນວັດທະນະທຳປະຈຳຊາດຂອງຕົນ ເຊິ່ງຄົນທັງຫລາຍນິຍົມວ່າດີວ່າຊອບແລ້ວປະຕິບັດສືບຕໍ່ກັນມາ; ຮີດຄອງທີ່ປະຕິບັດສືບຕໍ່ກັນມານີ້ ເຮົາເອີ້ນວ່າ ປະເພນີ.

ປະເພນີທັງຫລາຍທີ່ພວກເຮົານັບຖືກັນມາທຸກວັນນີ້ ມູນເຫດໄດ້ມາຈາກລັດທິສາສະໜາຕ່າງໆ ຄື ໄດ້ມາຈາກລັດທິຖືຜີ (ໄສຍະສາດ) ກໍມີ, ໄດ້ມາຈາກລັດທິສາສະໜາພາມກໍມີ, ໄດ້ມາຈາກສາສະໜາພຸດກໍມີ. ປະເພນີໃດມີຄົນນິຍົມຊົມຊອບ ປະເພນີນັ້ນກໍຈະເລີນແຜ່ຫລາຍຈົນກາຍມາເປັນກົດໝາຍຂອງຊາດ ສ່ວນປະເພນີໃດຂັດກັບສະໄໝນິຍົມ ບໍ່ມີຄົນນັບຖື ປະເພນີນັ້ນກໍເສື່ອມສູນໄປຕາມກາລະສະໄໝ.

ເພື່ອຮັກສາປະເພນີບູຮານບາງອັນຂອງເຮົາເອົາໄວ້ ແລະເພື່ອປະໂຫຍດໃນການຄົ້ນຄວ້າ ສຶກສາປະເພນີບູຮານ ອັນເປັນວິຊາຄວາມຮູ້ຂະແໜງໜຶ່ງໃນທາງວັນນະຄະດີ ຂ້າພະເຈົ້າຈຶ່ງໄດ້ຊອກຄົ້ນ ຮີບໂຮມປະເພນີຕ່າງໆຂອງລາວມາພິມໄວ້.

ຄຳວ່າຂວັນ

ກ່ອນຈະເຂົ້າສູ່ບົດກອນສູດຂວັນ ຈຳເປັນຕ້ອງໄດ້ຮູ້ຈັກກັບຄວາມໝາຍຂອງຄຳວ່າ "ຂວັນ" ເສັຍກ່ອນ ຄຳວ່າ ຂວັນ ນັ້ນມີ 2 ຢ່າງ. ຢ່າງ

ໜຶ່ງ ໝາຍເອົາຂົນ ຫຼື ຜົມທີ່ເກີດວຽນເປັນຮູບກົ້ນຫອຍຢູ່ເທິງຫົວຄົນ ຫຼື ສັດບາງພວກ ເຊັ່ນ ງົວ ຄວາຍ ເປັນຕົ້ນ ຂວັນແນວນີ້ກໍເປັນເຄື່ອງໝາຍບອກລັກສະນະ ດີ ຫຼື ຮ້າຍ ຂອງຄົນ ແລະສັດໄດ້, ຂວັນອີກຢ່າງໜຶ່ງ ໝາຍເອົາສິ່ງບໍ່ມີຕົວຕົນ ແຕ່ມີປະຈຳຢູ່ກັບຕົວຄົນເຮົາຄົບຖ້ວນຕາມອາການ 32 ຂອງຄົນຕັ້ງແຕ່ເກີດມາເອີ້ນວ່າ ຂວັນຄີງ. ຂວັນຄີງນີ້ມີຄວາມສຳຄັນ ຜູກພັນຢູ່ກັບຄົນໂດຍກົງ ຄົນບູຮານຖືກັນມາວ່າ ຫາກຜູ້ໃດຂ້ວນໜີເນື້ອໜີຄີງແລ້ວ ມັກຈະບໍ່ຢູ່ດີມີແຮງ ຖ້າຂວັນຢູ່ກັບຕົນກັບຕົວ ຄົນເຮົາກໍມີຄວາມສຸກສະບາຍ ຈິດໃຈຊຸ່ມຊື່ນໝັ້ນຄົງ ຖ້າຂວັນບໍ່ຢູ່ກັບເນື້ອກັບຕົວດ້ວຍເຫດຢ່າງໃດຢ່າງໜຶ່ງ ກໍມີຄວາມເຈັບໄຂ້ ຫຼືໄດ້ປະສົບພົບໄພອັນຕະລາຍ ຄົນເຮົາກໍບໍ່ສະບາຍ ຫລືບາງທີອາດເຖິງຕາຍກໍໄດ້.

ດ້ວຍເຫດນີ້ ແຕ່ບູຮານເພິ່ນຈຶ່ງໄດ້ທຳພິທີສູດຂວັນ ຫລືເຊີນຂວັນໃຫ້ມາຢູ່ໃນເນື້ອໃນຄີງ ເພື່ອໃຫ້ຢູ່ດີມີຄວາມສຸກສະບາຍ ຫາຍພະຍາດ ຫລືສູດຂວັນເພື່ອເປັນການຮັບໂຊກ ການເຊີນຂ້ວນໃຫ້ມາຢູ່ໃນເນື້ອໃນຄີງນີ້ ເປັນການດີ ເພາະເປັນວິທີເລົ່າໂລມຈິດໃຈໃຫ້ດີ ເມື່ອຈິດໃຈດີແລ້ວສິ່ງອື່ນໆອັນກ່ຽວຂ້ອງກັບຊີວິດ ກໍເລີຍດີໄປນຳ.

ອີງຕາມເນື້ອໃນຈິດໃຈຂອງຄຳສູດຂວັນຕ່າງໆນັ້ນ ພໍຈະສະຫລຸບໄດ້ຄວາມວ່າ ການສູດຂວັນ ຫຼືການເຊີນນັ້ນ ນອກຈາກຈະເປັນປະເພນີທີ່ເຄີຍສືບທອດກັນມາແລ້ວ ກໍຍັງເປັນການເລົ່າໂລມ ຮຽກຮ້ອງຊົມເຊີຍແຕ່ໃນສິ່ງທີ່ດີ ເປັນສິຣິມຸງຄຸນ ໝາຍຄວາມວ່າ ເປັນການໃຫ້ກຳລັງໃຈຕໍ່ຜູ້ເຈັບປ່ວຍ ຫຼື ຜູ້ຈະປະກອບກິດຈະການໃດໆ ເພື່ອເປັນການອວຍພອນໃຫ້ສົມດັ່ງຄວາມມຸ່ງມາດປາຖະໜາ.

ພິທີກ່ຽວກັບຂ້ວນ

ຢູ່ໃນສະໄໝບູຮານ ກໍຄືໃນສະໄໝປະຈຸບັນນີ້ ປະຊາຊົນລາວນັ້ນ ນອກຈາກການເຮັດພິທີສູດຂວັນໃຫ່ຍໆເຊັ່ນ ສູດຂວັນທົ່ວໄປ, ສູດຂວັນທຳມະດາ, ສູດຂວັນອອກກຳ, ສູດຂວັນຂຶ້ນເຮືອນໃໝ່... ແລ້ວຍັງມີພິທີອື່ນໆອີກ ທີ່ຜູກພັນກ່ຽວກັບເລື່ອງຂວັນຄືງຂອງຄົນ ຓະຫລອດເຖິງສັດລ້ຽງຕ່າງໆ ເຊັ່ນ ຊ້າງ ມ້າ ງົວ ຄວາຍ ເປັນຕົ້ນ ດັ່ງຈະກ່າວຕໍ່ໄປນີ້ ຄື:

1. ພິທີສູດນ້ຳມົນ

ການສູດນ້ຳມົນ ທົດ ອາບ ນີ້ກໍຖືວ່າເປັນການສະເດາະເຄາະເຂັນເວນໄພ ສະໜຽດຈັງໄຮຝັນຮ້າຍ ແລະອຸບາດຕ່າງໆ ແລ້ວກໍຍັງຖືວ່າເປັນການສູດນ້ຳມົນເພື່ອເຕົ້າໂຮມຂວັນຄືກັນ. ເຄື່ອງສູດນ້ຳມົນນັ້ນກໍມີນ້ຳທຳມະດາໃສ່ຂັນ ເອີ້ນວ່າຂັນນ້ຳມົນ ໃສ່ໝາກສົ້ມປ່ອຍເຜົາ 3 ຂໍ້ (ໝາຍເຖິງພຣະຣັຕນະໄຕ), ທົວເຂົ້າໜົມ 5 ຝານ (ໝາຍເຖິງພຣະເຈົ້າ 5 ພຣະອົງ), ໃບຫົວານຊົນ 7 ຝານ (ໝາຍເຖິງໂພດຊົງ 7), ຕົວໝາກທູດ 9 ຝານ (ໝາຍເຖິງພຣະນະວະໂຣກຸດຕະຣະທຳ 9) ນິມົນພຣະ 3, 5, 9, 11 ອົງ ມາສູດໄຊຍະມຸງຄຸນ ມີທຽນຮອບທົວ ຄ່າສອກຄ່າຄິງ ມີຂັນຫ້າ ແລະຝ້າຍຜູກແຂນ ພິທີສູດນັ້ນຈະສູດຢູ່ເຮືອນ ຫືລໄປສູດຢູ່ວັດກໍແລ້ວແຕ່ຈິດໃຈຂອງຕົນເອງ.

ຖ້າກຳລັງພໍ ຈະຖວາຍພັດຕາຫານເຊົ້າ ຫືລເພນ ແກ່ພຣະສົງໄດ້ກໍຍິ່ງດີ ອັນນີ້ເປັນວິທີທີ່ດີທີ່ສຸດ ເຮັດຢ່າງນີ້ກໍນັບວ່າເປັນສິຣິມຸງຄຸນອັນສູງສຸດແລ້ວ ເມື່ອໝົດພິທີຝ່າຍພຣະສົງແລ້ວ ມີຈຸດປະສົງຈະເຮັດພິທີສູດຂ້ວນອີກກໍເຮັດໄດ້ຕາມໃຈ.

2. ພິທີສູດຂັວນກ່ອງ

ສູດຂັວນກ່ອງ ໝາຍເຖິງພິທີສູດຂັວນກ່ອງເຂົ້າ ບູຮານເອີ້ນວ່າສູດຂັວນກ່ອງ ພິທີນີ້ເພິ່ນຈະເອົາກ່ອງເຂົ້າໜ່ວຍໜຶ່ງ ແລ້ວເອົາເຂົ້າປັ້ນໜຶ່ງ ໄຂ່ໄກ່ໜ່ວຍໜຶ່ງ ກ້ວຍໜ່ວຍໜຶ່ງ ອ້ອຍປ້ອງໜຶ່ງ ແລະເສື້ອຂອງຜູ້ເຈັບປ່ວຍນັ້ນໃສ່ລົງໃນກ່ອງເຂົ້າ ພ້ອມດ້ວຍດອກໄມ້ໜຶ່ງຄູ່ ທຽນໜຶ່ງຄູ່ ແລະຝ້າຍຜູກແຂນໜຶ່ງຄູ່ ເພິ່ນນິຍົມເອົາໄປໃຫ້ພຣະສູດຢູ່ວັດ 3 ຄືນ ເມື່ອຄົບຕາມກຳນົດແລ້ວ ກໍເອົາມາຜູກແຂນໃຫ້ຜູ້ປ່ວຍ.

3. ການສ້ອນຂັວນ

ການສ້ອນຂວັນ ກໍ່ແມ່ນອີກພິທີໜຶ່ງທີ່ເວົ້າເຖິງຂວັນຄີງຂອງຜູ້ເຈັບໄຂ້ໄດ້ປ່ວຍ ຫືລ ປະສົບອຸບັດເຫດ ການສ້ອນຂວັນແມ່ນສ້ອນດ້ວຍເຊີງສ້ອນປານັ້ນເອງ ມີແຕ່ເພິ່ນເອົາເຂົ້າປັ້ນໜຶ່ງ ໄຂ່ໜ່ວຍໜຶ່ງໃສ່ລົງໃນເຊີງ ເມື່ອໄປຮອດບ່ອນທີ່ເກີດເຫດ ເຊັ່ນ ບ່ອນຖືກຄວາຍຊົນ ຕົກຕົ້ນໄມ້ ແລ້ວເພິ່ນກໍ່ທຳທ່າສ້ອນຄືສ້ອນປາຢູ່ໃນນ້ຳທັງເອີ້ນຂວັນພ້ອມຫລັງຈາກສ້ອນແລ້ວເພິ່ນກໍ່ເອົາປັ້ນເຂົ້າແລະໄຂ່ມາໃສ່ມືຜູ້ເຈັບປ່ວຍແລ້ວກໍ່ເອົາຝ້າຍຜູກແຂນໃຫ້ ເຮັດແນວນີ້ຄົນບູຮານເພິ່ນຖືວ່າຜູ້ເຈັບປ່ວຍຈະໄດ້ສ່ວາງຫາຍມາຍດີ.

ແຕ່ບາງທ້ອງຖິ່ນເພິ່ນພັດເອີ້ນວ່າໄປຮ້ອງຂັວນ ຫືລ ເອີ້ນຂວັນ ນີ້ເພິ່ນໃຊ້ຫວດໜຶ່ງເຂົ້າໜຶ່ງໜ່ວຍ ດົ້ນໄຟທີ່ຍັງມີໄຟແດງໆຢູ່ ໜຶ່ງດົ້ນຖືໄປນຳ ເມື່ອໄປສູ່ບ່ອນທີ່ຈະເອີ້ນແລ້ວ ເພິ່ນກໍງ່ຽງຫວດລົງພ້ອມທັງເອົາດົ້ນໄຟແດງແກ່ວງໄປມາຄ່ອຍໆ ແລະທັງເອີ້ນຂວັນພ້ອມ ເມື່ອກັບມາໃກ້ຈະເຖິງເຮືອນ ເພິ່ນກໍທຳທ່າຖາມວ່າ(ນາມສົມມຸດ) ທ້າວ ກ. ຫືລ ນາງ ຂ.ມາຮອດແລ້ວບໍ? ຜູ້ຢູ່ເຮືອນກໍຕອບວ່າ ເອີມາຮອດແລ້ວເດ ດັ່ງນີ້.

4. ການປະກອບພິທີສູດຂ້ວນ

ປະເພນີໃນການສູດຂ້ວນນັ້ນ ມີອັນແຕກຕ່າງກັນ ການປະກອບພິທີກໍຕ້ອງອີງໃສ່ຕົວຈິງວ່າ ຈະປະກອບພິທີສູດຂ້ວນເນື່ອງໃນໂອກາດອັນໃດກັນແທ້ ສິ່ງທີ່ເປັນເອກະພາບກັນນັ້ນ ແມ່ນການຫ້າງຫາ ແລະປະດັບປະດາພາຂ້ວນ ເຊິ່ງເລີ່ມແຕ່ການທັຍບໝາກເບັງພາຂວັນ ແລະຫາດອກໄມ້ມາເໜັບພາຂ້ວນ. ຢູ່ໃນພາຂ້ວນຈະມີເຂົ້າສານກ້ວຍ ເຂົ້າຕົ້ມ ເຂົ້າໜົມໃສ່ໃນຖ້ວຍ 4 ຖ້ວຍ ມີໄຂ່ແລະໄກ່ຕົ້ມໜຶ່ງໂຕ ມີດອກໄມ້ ທູບທຽນ ຜ້າຜືນ ແພວາ (ຖ້າສູດຂ້ວນຄົນ ມີເຄື່ອງປະດັບປະດາຕ່າງໆ ເຊັ່ນ ແວ່ນ ທີວ ແຫວນ ປອກແຂນ ສ້ອຍຄໍ ນໍ້າຫອມ ເປັນຕົ້ນ ຫືລ ແລ້ວແຕ່ຄວາມນິຍົມຂອງພື້ນບ້ານທີ່ເຄີຍເຮັດມາ) ແລະມີຝ້າຍຜູກແຂນດ້ວຍ. ສ່ວນທຽນນັ້ນ ນິຍົມທຽນຮອບຫົວ ຄ່າສອກ ຄ່າຄີງ ແລະຍາວຄ່າລໍາຕົວຂອງຜູ້ຖືກສູດຂວັນໜຶ່ງຄູ່.

ການປະດັບປະດາເອ້ຢ້ອງໝາກເບັງພາຂ້ວນນັ້ນ ສິ່ງທີ່ນິຍົມແລະຂາດບໍ່ໄດ້ຄື ໃບເງິນ ໃບຄໍາ ໃບຍໍ ໃບຄູນ ແລະດອກຄູນເທົ່ລານີ້ ບໍ່ວ່າຈະສູດຂ້ວນເນື່ອງໃນໂອກາດໃດກໍແມ່ນປະບໍ່ໄດ້. ສ່ວນດອກໄມ້ ຫືລຍອດໄມ້ອື່ນໆ ຈະເອົາມາປະດັບຕື່ມກໍໄດ້. ໝາກເບັງພາຂ້ວນນັ້ນເມື່ອເພິ່ນຕົກແຕ່ງເປັນທີ່ຮຽບຮ້ອຍແລ້ວ ເພິ່ນກໍຈະເອົາຕັ້ງໃສ່ຂັນ ຫລືໂອເງິນ ໂອທອງແລ້ວແຕ່ຈະຫາໄດ້.

ຈາກນັ້ນເພິ່ນຈິ່ງຍໍຂັນໝາກເບັງຂຶ້ນໄປຕັ້ງໃສ່ພາເຂົ້າອີກເທື່ອໜຶ່ງ ແລະ ຢູ່ຂ້າງພາຂ້ວນນັ້ນ ຈະມີແອບເຂົ້າ ນໍ້າເຕົ້າ ແລະ ແກ້ວ ເຫົ້ລາຕື່ມອີກ. ສ່ວນຜູ້ທີ່ຈະຖືກນໍາມາເພື່ອສູດຂ້ວນນັ້ນ ຕ້ອງນຸ່ງເຄື່ອງສຸພາບບໍ່ວ່າຍິງ ຫືລຊາຍ ກໍຕ້ອງມີຜ້າບ່ຽງບ້າຍ ການບ່ຽງຜ້າເພິ່ນກໍໃຫ້ບ່ຽງເຕັງບ່າກໍ້ຊ້າຍ ຈຶ່ງຖືວ່າຖືກຕ້ອງຕາມຂະໜົບທໍານຽມ ວັດທະນະທໍາຂອງລາວ.

ເມື່ອທຸກໆຄົນມານັ່ງອ້ອມພາຂ້ວນແລ້ວ ນັ່ງພັບພຽບຈັບພາຂ້ວນດ້ວຍມືຂວາ ຫັນໜ້າໄປສູ່ທິດຣາສີປະຈຳວັນ ຕັ້ງຈິດໃຈໃຫ້ແນ່ວແນ່ຢ່າຄິດໄປທາງອື່ນ ຕໍ່ຈາກນັ້ນນັກປາດຜູ້ສະຫລາດໃນພິທີການ(ໝໍພອນ)ທີ່ຖືກເຊີນມາກໍຈະເລີ່ມພິທີສູດຂ້ວນ. ຕາມປົກະຕິທົ່ວໄປນັ້ນ ບໍ່ວ່າຈະສູດຂ້ວນເນື່ອງໃນໂອກາດໃດກໍຕາມ ກ່ອນໝໍພອນຈະເລີ່ມເຂົ້າສູ່ບົດກອນສູດຂ້ວນ ເພິ່ນຕ້ອງຂຶ້ນຕົ້ນດ້ວຍ ນະໂມຕັດສະ ພະຄະວະໂຕ ອະຣະຫະໂຕ ສັມມາສັມພຸດທັດສະ (3 ເທື່ອ) ກ່ອນແລ້ວຈິ່ງສັກເຄເທວະດາ.

ຣາສີປະຈຳວັນມີດັ່ງນີ້:

ວັນອາທິດ	ຣາສີຢູ່ທິດ	ປັດສິມ
ວັນຈັນ	ຣາສີຢູ່ທິດ	ພາຍັບ
ວັນອັງຄານ	ຣາສີຢູ່ທິດ	ບຸຣະພາ
ວັນພຸດ	ຣາສີຢູ່ທິດ	ອຸດອນ
ວັນປະຫັດ	ຣາສີຢູ່ທິດ	ອີສານ
ວັນສຸກ	ຣາສີຢູ່ທິດ	ຫັກຂິນ
ວັນເສົາ	ຣາສີຢູ່ທິດ	ອາຄະເນ

ຫ້າມຫັນໜ້າໄປສູ່ທິດຣາຫູປະຈຳວັນ

ວັນອາທິດ	ຣາຫູຢູ່ທິດ	ພາຍັບ
ວັນຈັນ	ຣາຫູຢູ່ທິດ	ບຸຣະພາ
ວັນອັງຄານ	ຣາຫູຢູ່ທິດ	ທໍຣະດີ
ວັນພຸດ	ຣາຫູຢູ່ທິດ	ຫັກຂິນ
ວັນປະຫັດ	ຣາຫູຢູ່ທິດ	ອຸດອນ
ວັນສຸກ	ຣາຫູຢູ່ທິດ	ປັດສິມ
ວັນເສົາ	ຣາຫູຢູ່ທິດ	ອາຄະເນ

ບຸບພະກິດກ່ອນສູດຂ້ວນ 4 ຢ່າງ

ເມື່ອນັ່ງໄດ້ທ່າ ແລະໄດ້ເວລາແລ້ວ ນັກປາດຜູ້ສະຫລາດທີ່ຖືກເຊີນມາ ເພື່ອເລີ່ມປະກອບພິທີສູດຂ້ວນ ກ່ອນສູດຄວນທຳບຸບພະກິດດັ່ງນີ້:

1. ຈຸດທູບ ທຽນ
2. ຖ້າມີພຣະພຸດທະຮູບ ຫືລພຣະສົງກໍຂາບພຣະຂໍໂອກາດເສັຍກ່ອນ
3. ປະນົມມືຈັບດ້າຍມຸງຄຸນ ອັງເຊີນເທວະດາ ອາຮັກ ໃຫ້ລົງມາຟັງ ແລະເປັນພະຍານ ໃນການສູດຂ້ວນດ້ວຍຄວາມເຄົາລົບ

ວິທີກ່າວຄຳອັງເຊີນ ເປັນພາສາລາວພື້ນບ້ານ ໄຫ້ວວອນເອົາຕາມຄວາມຊອບໃຈກໍໄດ້ ຫລື ຈະວ່າເປັນພາສາບາລີ (ສັກເຄ ກາເມ ຈະຣູເປ ຯລຯ ສາທະໂວເມ ສຸນັນຕຸ) ໄປຈົນຈົບກໍໄດ້ ແລ້ວແຕ່ຄວາມສະດວກ.

4. ວ່າ ນະໂມ (3 ເທື່ອ) ສະແດງຕົນເຖິງ ພຣະພຸດ ພຣະທັມ ພຣະສົງ ຄື ພຸດທັງ ສະຣະນັງ ຄັດສາມິ, ທັມມັງສະຣະນັງ ຄັດສາມິ, ສັງຄັງ ສະຣະນັງ ຄັດສາມິ. ທຸຕິຍັມປິ... ຕະຕິຍັມປິ... ຈົບແລ້ວວ່າ ອິຕິປິໂສ ... ສວາກຂາໂຕ... ສຸປະຕິປັນໂນ...

ເມື່ອຈົບບຸບພະກິດທັງ 4 ນີ້ແລ້ວ ຕໍ່ໄປນັ້ນກໍເລີ່ມວ່າຄຳສູດຂ້ວນ ຕາມແຕ່ຈະສູດຂ້ວນອັນໃດ ກໍເລືອກວ່າຕາມຕ້ອງການ ແລະວ່າທຳນອງສູດຂ້ວນໃຫ້ຊັດເຈນ ວ່າສຽງອ່ອນພອຍ ໃຫ້ເປັນທີ່ເຢັນຫູຂອງຜູ້ຟັງ ເຮັດໃຫ້ຜູ້ຟັງຊື່ນອົກຊື່ນໃຈ ເປັນເຫດໃຫ້ມີຄວາມສຸກໃຈ ຫາຍໂຣຄ ຫາຍໄພ ເພາະໄດ້ຟັງຄຳອັນເປັນສຸພາສິດ ເຮັດໃຫ້ເກີດກຳລັງໃຈອັນດີ.

ເມື່ອຈົບຄຳສູດຂ້ວນແລ້ວ ຈັບຝ້າຍຜູກແຂນຂຶ້ນມາພາດ ແລ້ວກ່າວຄຳຜູກແຂນທີ່ເຫັນວ່າບົດໃດເໝາະສົມ ຕໍ່ຈາກນັ້ນຈຶ່ງວ່າຄຳອັງເຊີນເທວະດາກັບໄປສູ່ສະຖານທີ່ເດີມ.

ວັດທະນະທຳບູຮານລາວ

ຄຳວ່າ ວັດທະນະທຳ ໄດ້ແກ່ຄວາມຈະເລີນ ທາງຂະນົບທຳນຽມ ແບບແຜນ ຮີດຄອງແລະປະເພນີ. ຄຳວ່າບູຮານ ໄດ້ແກ່ອັນເກົ່າແກ່ ແລະດັ້ງເດີມ ລວມຄວາມແລ້ວກໍຄື ຮີດຄອງອັນເປັນຂອງເກົ່າແກ່ ແລະດັ້ງເດີມ ແບ່ງອອກເປັນ 3 ຢ່າງ ຄື:

1. ວັດທະນະທຳ ທາງສາສະໜາພຸດ
2. ວັດທະນະທຳ ທາງສາສະໜາພາມ
3. ວັດທະນະທຳ ທາງສາສະໜາພຸດ ແລະພາມປົນກັນ

ເຊັ່ນ: ການບວດເປັນພິກຂຸ ແລະສາມະເນນໃນພຣະພຸດທະສາສະໜາ ເປັນວັດທະນະທຳທາງສາສະໜາພຸດ, ການຈັດພິທີສູ່ຂັວນນາກ ຫືລສູ່ຂັວນອື່ນໆ ເປັນປະເພນີຂອງພາມ ດັ່ງນີ້ເປັນຕົ້ນ.

ດ້ວຍເຫດທີ່ສາສະໜາພາມ ແລະສາສະໜາພຸດ ມີສາຍສຳພັນກ່ຽວຂ້ອງກັນມາແຕ່ບູຮານການ. ປະຊາຊົນຜູ້ນັບຖືສາສະໜາພຸດ ຈິ່ງມັກເອົາພິທີທາງສາສະໜາພາມເຂົ້າມາປົນໄວ້ນຳ ເຖິງຢ່າງໃດກໍຕາມ ຮີດຄອງປະເພນີທີ່ພວກເຮົາໄດ້ນິຍົມນັບຖືກັນມາແຕ່ບັນພະບຸຣຸດນັ້ນ ຈັດເປັນວັດທະນະທຳອັນດີງາມປະຈຳຊາດຕະຫລອດມາ ທັງເປັນການສົ່ງເສີມສິລະທັມທາງພຣະພຸດທະສາສະໜາໄດ້ອີກວິທີໜຶ່ງ ຈິ່ງໄດ້ນຳວັດທະນະທັມຕ່າງໆ ມາຈັດພິມໄວ້ເພື່ອເປັນປະໂຫຍດໃນການສຶກສາ ຄົ້ນຄ້ວາແກ່ອະນຸຊົນຮຸ່ນຫລັງສືບຕໍ່ໄປ ດັ່ງໄດ້ຄັດເລືອກມາລົງພິມໄວ້ຕໍ່ໄປນີ້:

ຄວາມເອົາຂອງໄປໝັ້ນລູກສາວເພິ່ນ

ພວກຂ້ານ້ອຍທັງຫລາຍມາຂໍໝັ້ນຂໍໜ່ຽວລູກສາວນຳຍາພໍ່ຍາແມ່

ພວກເຖົ້າແກ່	ເພິ່ນຈິ່ງຫາມື້ໄດ້ວັນງາມ
ເພິ່ນຈິ່ງໃຫ້ຂ້ານ້ອຍມາຖາມ	ຄວາມຈິງຄັກແນ່
ຂໍໃຫ້ພວກພໍ່ແມ່	ເຈົ້າໂຄດລຸງຕາ

ກະຣຸນາ　　　　　　　　ຮັບເອົາຂອງໝັ້ນ
ຂໍໃຫ້ບັ້ນ　　　　　　　　ຜັດມື້ວັນຍາມ
ເພື່ອໃຫ້ໄດ້ໄປຖາມ　　　　ອາຈານຜູ້ສະຫລາດ
ຜູ້ເພິ່ນເປັນນັກປາດ　　　　ຮູ້ໂຊກວັນດີ
ໃຫ້ໄດ້ຫາບຸຣີ　　　　　　ພັນພູຄຳໝາກ
ທຸກພາກພ້ອມ　　　　　　ຝູງໝູ່ເງິນຄຳ
ແຕ່ງໃສ່ຂັນ　　　　　　　ນຳເຂີຍມາສູ່
ພໍໄດ້ຢູ່　　　　　　　　ກໍ່ສ້າງສືບແປງ
ໃຫ້ໄດ້ເປັນຜົວຮັກເມັຍແພງ　ຢູ່ຢືນເຖິງເຖົ້າ
ຕາບຕໍ່ເທົ້າ　　　　　　　ຊີວິດຍືນຍາວ

ອາຍຸ ວັນໂນ ສຸຂັງ ພາລັງ ຯ

ຄວາມຮັບຂອງໝັ້ນ

ມື້ນີ້ແມ່ນມື້ສົນວັນຊອບ　　　　ມື້ປະກອບຍາມດີ
ພວກພໍ່ແມ່　　　　　　　　　ເຈົ້າໂຄດລຸງຕາ
ເພິ່ນໄດ້ມາຂໍໝັ້ນຂໍໝັ່ງວ　　　ລູກສາວນຳຍາພໍ່ຍາແມ່
ຂ້ອຍເປັນເຖົ້າເປັນແກ່　　　　ຈຶ່ງໄດ້ຮັບຄວາມຈິງ
ຂ້ອຍເປັນຝ່າຍຜູ້ຍິງ　　　　　ເອົາແຕ່ທາງໄດ້
ຂໍໃຫ້ໄດ້ເປັນໄພ້　　　　　　ເຈົ້າໂຄດລຸງຕາ
ບໍ່ໃຫ້ຂ້ອງໃຫ້ຄາ　　　　　　ອັນໃດຈັກສິ່ງ
ວ່າແຕ່ໄດ້ເປັນມິ່ງ　　　　　　ຜົວຮັກເມັຍແພງ
ຝູງໝູ່ເງິນຄຳແດງ　　　　　　ໜ້ອຍຫລາຍກໍ່ບໍ່ວ່າ
ເອົາມາເປັນກະຕ່າ　　　　　　ຊິຮັບໂລດທັນທີ
ຂໍໃຫ້ເປັນຜົວຮັ່ງເມັຍມີ　　　ນຳກັນສືບສ້າງ
ບໍ່ໃຫ້ຫ່າງໆ　　　　　　　　ຄວາມປາດຖະໜາ

ອາຍຸ ວັນໂນ ສຸຂັງ ພະລັງ ຯ

ຄວາມໄປສູ່ຂັນໝາກ

ມື້ນີ້ເປັນມື້ສັນວັນຊອບ ມື້ປະກອບຍາມດີ
ພວກຂ້ານ້ອຍມີຂັນໝາກມາຫາ ມີຂັນຍາມາສູ່
ມີທັງໝາກອ່ອນບ້ານ.............. ຍາຄວັນບ້ານຫ້ອມ
ມີມາພ້ອມ ໝາກຈີບພູພັນ
ແຕ່ງໃສ່ຂັນ ພາກັນມາສູ່
ເຊີນພໍ່ແມ່ຄ້ຽວພູຫອມປາກ ຄ້ຽວໝາກຫອມຄໍ
ຄ້ຽວໝາກແລ້ວເຊີນພໍ່ແມ່ ຄາດຄ່ານາງວາງຄ່າທ້າວ
ມີໜ້ອຍຂໍຫາ ມີຫລາຍຂໍສ້າງ
ຢ່າໃຫ້ເຄີກໃຫ້ຫ່າງ ຂໍພອນຄວາມດີ
ຂໍໃຫ້ເປັນຜົວຮັ່ງເມັຍມີ ນຳກັນສືບສ້າງ
ຢ່າໃຫ້ຫ່າງ ຄວາມປາດຖະໜາ

ອາຍຸ ວັນໂນ ສຸຂັງ ພະລັງ ໆ

ຄວາມຮັບຂັນໝາກ

ເອີ ພວກເຈົ້າໂຄດລຸງຕາ ເພີ່ນມີຂັນໝາຫມາຫາ
ມີຂັນຢາມາສູ່
ມື້ນີ້ ເປັນມື້ສັນວັນດີ ແຕ່ເດີມທີມີມາແຕ່ເຄົ້າ
ທ້າວແລະນາງ ຈາກັນຖືກຕ້ອງ
ເວົ້າໃຫ້ຄ່ອງ ຮອດບ່ອນຕົກລົງ
ຄວາມປະສົງ ຕົກລົງກັນໄວ້
ຂໍໃຫ້ໄດ້ ສາມບວກຄວາຍນອນ
ພໍ່ແລະແມ່ ເຈົ້າໂຄດລຸງຕາ
ຮອນລົງມາ ເອົາແຕ່ສາມບວກຊ້າງ

ຢ່າໃຫ້ຄາໃຫ້ຄ້າງ ເງິນແຊງນ້ຳນິມ
ແຕ່ປະຖິມ ມີມາສາມບີ້
ບໍ່ແມ່ນເອົາຄ່າໜີ້ ເອົາມາແຊງນ້ຳນິມ
ມັນມີແຕ່ປະຖົມ ມູນເດີມແຕ່ເຄົ້າ
ມີແຕ່ເຄົ້າ ບູຮານຕັ້ງແຕ່ງມາ
ຂໍໃຫ້ເປັນອາວະຫາວິວະຫາ ມຸງຄຸນໝັ້ນແກ່ນ
ຂໍໃຫ້ແມ່ນ ຜົວດຽວ ເມັຍດຽວ

ອາຍຸ ວັນໂນ ສຸຂັງ ພະລັງ ౪

<u>ຄວາມມອບຂັນເງິນ</u>

ມື້ນີ້ເປັນມື້ສັນວັນຊອບ ມື້ປະກອບຍາມດີ
ເປັນວັນໄຊຍະດິຖີ ອະມຸດຕະໂຊກ
ພວກຂ້ານ້ອຍທັງຫລາຍໄດ້ນຳລູກນຳຫລານມາຂໍສິມສູ່ຢູ່ຫາ
ມາຂໍສ້າງຂໍສາຂໍຮັ່ງຂໍມີ ນຳພໍ່ນຳແມ່
ພວກເຖົ້າແກ່ ເພິ່ນຈຶ່ງຫາມື້ໄດ້ຍາມດີ
ຫາໄດ້ມື້ເກົ້າກອງ ຫາເງິນທອງບໍ່ຍາກ
ຫາໄດ້ມື້ລະຮ້ອຍ ຫ້ອນມື້ເລັກມື້ນ້ອຍຈຶ່ງໄດ້ຮອດ.....ພັນ
ຍໍໃສ່ຂັນມາມອບ
ວ່າເອົາມາຕອບຄຸນບິດາ ມານດາພໍ່ແມ່
ຂໍໃຫ້ພວກເຖົ້າແກ່ ຈຶ່ງໄດ້ຮັບເອົານຳ
ກັບທັງຄຳ ມີມາ.... ... ບາດ
ບໍ່ໃຫ້ຂາດເງິນແຊງນ້ຳນົມ ແຕ່ປະຖົມມີມາສາມບີ້
ບໍ່ແມ່ນເອົາມາໄຊ້ໜີ້ ເອົາມາແຊງນ້ຳນົມ
ມັນມີແຕ່ປະຖົມ ມູນເດີມແຕ່ເຄົ້າ
ມີແຕ່ເຄົ້າ ບູຮານຕັ້ງແຕ່ງມາ
ຂໍໃຫ້ເປັນອາວະຫາວິວະຫາ ມຸງຄຸນໝັ້ນແກ່ນ
ຂໍໃຫ້ແມ່ນ ຜົວດຽວເມັຍດຽວ

ອາຍຸ ວັນໂນ ສຸຂັງ ພະລັງ ໗

ຄວາມຮັບຂັນເງິນ

ເອີ ເຈົ້າໂຄດລຸງຕາເພິ່ນໄດ້ນໍາລູກນໍາຫລານ ມາຂໍສິນສູ່ຢູ່ຫາ

ມາຂໍສ້າງຂໍສາ ຂໍຮັ່ງຂໍມີ ນໍາພໍ່ນໍາແມ່
ພວກເຖົ້າແກ່ ເພິ່ນຈິ່ງຫາມື້ໄດ້ວັນດີ
ຫາໄດ້ມື້ເກົ້າກອງ ຫາເງິນທອງບໍ່ຍາກ
ຫາໄດ້ມື້ລະຮ້ອຍ ທ້ອນມີເລັກມີນ້ອຍ
ຈຶ່ງໄດ້ຮອດ... .. ພັນ ຍໍໃສ່ຂັນມາມອບ
ວ່າເອົາມາຕອບຄຸນບິດາ ມານດາພໍ່ແມ່
ຂ້ອຍເປັນເຖົ້າເປັນແກ່ ຈຶ່ງໄດ້ຮັບເອົານໍາ
ກັບທັງຄໍາ ມີມາ... ... ບາດ
ຢ່າໃຫ້ຂາດ ເງິນແຂງນໍາມີມ
ແຕ່ປະຖົມ ມີມາສາມບີ້
ບໍ່ແມ່ນເອົາມາໄຊ້ໜີ້ ເອົາມາແຂງນໍາມີມ
ມັນມີແຕ່ປະຖົມ ມູນເດີມແຕ່ເຄົ້າ
ມີແຕ່ເຄົ້າ ບູຮານຕັ້ງແຕ່ງມາ
ຂໍໃຫ້ເປັນອາວະຫາວິວະຫາ ມຸງຄຸນໝັ້ນແກ່ນ
ຂໍໃຫ້ແມ່ນ ຜົວດຽວເມັຍດຽວ

ອາຍຸ ວັນໂນ ສຸຂັງ ພະລັງ ໗

ຄໍາສູ່ຂັວນນ້ອຍກ່ອນເວລາຈະແຕ່ງດອງ

ກ່ອນຈະສູ່ຂັວນນີ້ ທາງເຮືອນຝ່າຍຍິງ ແລະເຮືອນຝ່າຍຜູ້ຊາຍ ເຂົາຈັດພາຂັວນໄວ້ເຮືອນລະ 1 ພາ ກ່ອນຈະມາເຂົ້າພາຂັວນໃຫ່ຍໂຮມກັນ ຈະຕ້ອງສູ່ຂັວນຢູ່ເຮືອນຝ່າຍຍິງ ແລະຝ່າຍຊາຍກ່ອນ ເອີ້ນວ່າສູ່ຂວັນນ້ອຍ ຄໍາສູ່ຂັວນວ່າດັ່ງນີ້ :

ສີ ສີ ມື້ນີ້ເປັນວັນດີ　　　　ວັນດີຖືອະມຸດຕະໂຊກ
ໂຕກໃບນີ້　　　　ແມ່ນໂຕກໄມ້ຈັນ
ຂັນໃບນີ້　　　　ແມ່ນຂັນໄມ້ແກ້ວ
ເຖົ້າແກ່ຕົກແຕ່ງແລ້ວ　　　　ຈຶ່ງໃຫ້ຂ້ອຍຍໍມາ

ຮຽກເອົາຂ້ວນວ່າ :

(ຜູ້ຊາຍວ່າ) ເອຫິຕາຕະ　　　　ປິຍະປຸດຕາ
(ຜູ້ຍິງວ່າ) ເອຫິອັມມາ　　　　ປິຍະທິຕາ
ປຸເຣຖະ ປາຣະມິງ ທັດຖະຍັງ ເມ ພິສິນຈິຖະ ກະໂຣຖະ
ວະຈະນັງ ມະມະ ອາຄັດສາຫິ ດັ່ງນີ້ເປັນເຄົ້າ.
ບັດນີ້ ຂ້າຈັກເລົ່າພາກພື້ນ　　　　ນ້ອຍອ່ອນດາຣາ
ແຕ່ຄາວແມ່ເຈົ້າຖືພາ　　　　ປະຕິສົນທິຮ່ວມທ້ອງ
ເຂົ້າສູ່ທ້ອງ　　　　ທ້ອງແມ່ມານດາ
ຄັນນານມາ　　　　ໄດ້ 10 ເດືອນແລ້ວ
ແມ່ເຈົ້າຈຶ່ງສະເທືອນ　　　　ວ່າເຈັບປວດທ້ອງ
ຝູງພີ່ນ້ອງ　　　　ແລ່ນຂຶ້ນມາຫາ
ຝູງຕານາຍ　　　　ແລ່ນຂຶ້ນມາຫລ່ຳ
ແມ່ເຈົ້າເຈັບຢູ່ຣີຣັກຣີຮ່ອນ　　　　ນອນແລ້ວພັດລຸກ
ແມ່ເຈົ້າກໍເຈັບຊິຊຸກ　　　　ແມ່ເຈົ້າກໍເຈັບຊິເຊື່ອນ
ໄຫ້ກິ້ງເກື່ອນໄປມາ　　　　ເໝືອນດັ່ງຊີວາຈັກຂາດ
ເປັນດັ່ງຈັກມ້ອຍ　　　　ມໍຣະນາດຕາຍໄປ
ແມ່ເຈົ້າທົນບໍ່ໄຫວ　　　　ຈຶ່ງມ້ອຍໄປນ້ອຍໜຶ່ງ
ແລ້ວຈຶ່ງປະສູດລູກ　　　　ມື້ມທ້ອງອຸທອນ
ເປັນຜູ້ຍິງເຈົ້າຈຶ່ງຕົກຫງາຍ　　　　ເປັນຜູ້ຊາຍເຈົ້າຈຶ່ງຕົກຂວ່ຳ
ແມ່ເຈົ້າຊ່ຳ　　　　ເປັນບ້າປ່ວງຢູ່ງົມງົວ ໆ
ບາງຜ່ອງມີຄວາຫາສາຍແຮ່　　　　ບາງຜ່ອງແຜ່ສາຍບື
　　　　ສອງມືໂຈມລູກລ້າງ
ແລ້ວຈຶ່ງໂຈມເຈົ້າໃສ່ດັ້ງ　　　　ໄປຜອກຜີພາຍ
　　　　ໄປພາຍຜີເປົ້າ

ຜີນິກເຄົ້າມັນຮ້ອງກູກເອີ້ຂວັນ	ວ່າກູ້ຫູກກູ້ຫູກ ກຸກກູ ກຸກກູ
ແມ່ນລູກສູ	ໃຫ້ມາເອົາດຽວນີ້
ກາຍມື້ນີ້	ວັນໜ້າແມ່ນລູກກູ
ແມ່ເຈົ້າຈິ່ງລ້ຽງແລດູ	ແມ່ເຈົ້າຈິ່ງອຸ້ມໃສ່ອູ່
ແມ່ເຈົ້າຈິ່ງຢູ່ໃນໄຟ	ໄກວເຈົ້າໄປຢູ່ຕິຕ້ອນໆ
ແມ່ເຈົ້າກິນນ້ຳຮ້ອນ	ປາກເປື່ອຍໂພງສຸກ
ໄຟແທ່ງລຸກ	ແມ່ເຈົ້າຫິນຫວາຍ
ອໍຣະຫິນອໍຣະຫວາຍ	ຫິວໃຈໄກວແມ່ໄດ້ດ່າປ້ອຍ
ຂວັນອ່ອນນ້ອຍ	ນິ່ງໜ້າຢ່າວອນ
ເຈົ້າຈິ່ງນອນຢູ່ອູ່ສາຍຝ້າຍ	ເຈົ້າຈິ່ງຍ້າຍມາຢູ່ອູ່ສາຍໄໝ
ພໍ່ແມ່ເຈົ້າ	ຍັງຈິງໃຈຮັກຮໍ່
ອັນນີ້ຫາກແມ່ນທຳມະຊາດ	ພໍ່ປິຕາເຈົ້າແລ້ວ
ອັນນີ້ຫາກແມ່ນທຳມະຊາດ	ແມ່ມານດາເຈົ້າແລ້ວ
ນົມແມ່ຮ້າວ	ໃຫ້ເຈົ້າຄ່ອຍກິນ
ແພຜືນດີຜືນງາມ	ແມ່ຫົ່ມເຈົ້າໄວ້
ເດີກຊຸກໄຊ້	ເຈົ້າພັດຕື່ນກິນນົມ
ແມ່ຍັງຊົມ	ເຈົ້າຢູ່ບໍ່ເປີດ
ແມ່ກຳເນີດ	ເຂົາຈິ່ງໜ່າຍຈິ່ງຊັງ
ເຮັດລັງຕັງ ເຂົາຈິ່ງໄດ້ໄລ່ຂ້າ	ເຈົ້າມານີ້ແລ້ວ
ບັດນີ້ເຈົ້າຈິ່ງໄດ້ມາເກີດເປັນລູກແກ້ວ	ພໍ່ແມ່ບຸນເຮືອງ
ຄຳເຫລືອງສີ	ລະໃໝ່ໜ້າ
ຜູ້ເກັ່ງກ້າ	ແມ່ນທະນຸມານ
ຄົນຫານ	ແມ່ນທ້າວສັງຄັບ
ໃຫ້ຮີບເອົາຂວັນຄືນມາ	ຢ່າໄດ້ໄປທ່ຽວ
ພໍ່ແມ່ເຈົ້າ	ຍັງໝ່ຽວວອນຫາ
ທັງຕານາຍ	ແລະປູ່ຍ່າ
ພ້ອມກັນເອີ້ນຊີຊ່ວາ	ເອົາຂວັນ ວ່າ......
ອາຄັດສາທິ	ຂວັນເຈົ້າຈິ່ງເຂົ້າມາ

ຕາຕະ ດູຣາເຈົ້າ   ລູກຮັກຂອງພໍ່ແມ່
ມື້ນີ້ ແມ່ນມື້ດີ   ວັນມີສີ ເຄົ້າຄື້ນ
ເປັນວັນດີ ລື່ນລົ້ນ   ຜາບແພ້ສັດຕູ
ໝໍ່ຄູນດູ   ວ່າເປັນວັນໂຊກ
ວັນຫາຍໂສກ   ສັບພະໂຣຄາ
ຂ້ວນເຈົ້າຈິ່ງມາຈຳເລີນ   ສີສິມບັດເທົ້າເຖົ້າ
ຕາບຕໍ່ເທົ້າ   ເຖິງຊົ່ວຊີວັງ ພຸ້ນເຍີ
ຝົນຕົກ ເຈົ້າຢ່າໄດ້ໄປກິນ   ນ້ຳຮອຍກະຮອກ
ແດດອອກ ເຈົ້າຢ່າໄດ້ໄປກິນ   ນ້ຳຮອຍຄວາຍ
ພໍ່ແມ່ເຈົ້າ   ຍັງຂິນຂວາຍຮັກໄຄ່
ເຈົ້າໃຫ່ຍມາແລ້ວ   ພໍ່ແມ່ສອນໃຫ້ເຈົ້ານອນ
ເຈົ້າກໍນອນ

ພໍ່ແມ່ສອນໃຫ້ເຈົ້າຮູ້   ເຈົ້າກໍຮູ້ຢ່າໃຫ້ເສັຍແຮງ
ແມ່ເຈົ້າຄິດສະແດງຄືຄູ່   ໃຫ້ເຈົ້າກິນນົມ
ຄີງເຈົ້າກົມ   ໃຜເຫັນກໍຢາກສ່ອງ
ເນື້ອເຈົ້າຄ່ອງ   ໃຜເຫັນກໍຢາກແຍງ
ເຖິງຍາມແລງ   ໃຜກໍຢາກພົ້ໜ້າ
ເຖິງລະດູຟ້າ   ສັງຂານປີໃໝ່ ມາແລ້ວ
ເຖິງເດືອນສາມ   ດອກຮັງຄີ້
ເຖິງເດືອນສີ້   ດອກຮັງບານ
ຕະການງາມ   ຊ້ອຍໂຊດ
ມີທັງດອກແກ້ວໂກດ   ຍາງຫລວງ
ມີທັງດອກຈວງຈັນ   ງາມສະພູ່
ມີທັງດອກໄມ້ໝູ່   ສາຣະພີ
ດອກຈຳປາຈຳປີ   ກັນນິກາກ້ານເກດ
ມີທັງດອກຝາງເທດ   ພ້ອມອາຮວນ
ມີທັງດອກລຳດວນ   ແລະດອກແກ້ວ
ບານບໍ່ແລ້ວ   ຄືດອກສາມປີ

ບານມີສີ ແມ່ນດອກເບັງມາດ	ສະພາດພ້ອມນາໆ
ແມ່ເຈົ້າຈຶ່ງພາ	ສາວຮາມມາຮວດຮ້ອຍ
ຝູງບ່າວສາວສຳນ້ອຍ	ເຂົາຫຼິ້ນຢູ່ແຊວໆ
ແລ້ວຈຶ່ງຢາຍ	ເປັນຖັນເປັນຖ້ອງ
ເອົາມາໃສ່ຂັນກະທ່ອງ	ສູ່ຂ້ວນເຈົ້າ

(ຊາຍໝຸ່ມນ້ອຍ ຫຼື ຍິງໝຸ່ມນ້ອຍ)

ເສື້ອຜ້າລາຍຜອກພ້ອຍ	ແມ່ເຈົ້າຫົ່ມເອົາຂວັນ
(ຜູ້ຊາຍ) ເອຫິຕາຕະ	ປິຍະປຸດຕາ ອາຄັດສາຫິ
(ຜູ້ຍິງ) ເອຫິອັມມະ	ປິຍະທິຕາ ອາຄັດສາຫິ
ເຈົ້າຈຶ່ງມາຢູ່ດີ	ໃນບຸຣີຜາສາດ ເປັນເຈົ້າ
	ອາດນານປີ
ຄວາມບໍ່ດີ	ຈຶ່ງໃຫ້ໜີຄາດແຄ້ວ
ຫາຍໂສກແລ້ວ	ໃຫ້ເຈົ້າຢູ່ເທັຍຣະຄາ
ຄວາມເຈັບຕາ	ແລະປວດທ້ອງ
ໂພຍພະຍາດຕ້ອງ	ຢ່າໃຫ້ມີ
ຈຶ່ງໃຫ້ນອນຫລັບດີ	ຢູ່ໃນຫ້ອງ
ປະເທດຫ້ອງ	ທີ່ນອນຕີນ
ເຮືອນມຸງຄຸນຫັລງໃຫ່ຍ	ພໍແຫ່ລງຊ້າງພັງພາຍ
ຈຶ່ງໃຫ້ຢູ່ສຸກສະບາຍເທົ້າເຖົ້າ	ຕາບຕໍ່ເທົ້າເຖິງພັນປີ
ສົມບັດເຂົ້າຂອງມີບໍ່ໄຮ້	ໃຫ້ເຈົ້າໄດ້ເປັນພຣະຍາ
ພໍ່ຊີຫາຄູ່ຄອງ	ມາໃຫ້ຊົມຊ້ອນ
ເຈົ້າຢ່າຮ້ອນ	ຂັງຢູ່ໃນໃຈ
ຂໍໃຫ້ສົມບັດໄຫລ	ຫັ່ລງມາໂຮມເຮົ້າ
ໃຫ້ເຈົ້າມີເຮືອນຊານ	ສົມສະຖານໃຫ່ຍກ້ວາງ
ທັງປວງຍາດມາໂຮມ	ຊົມແຊວສຽງຫົວມ່ວນ
	ເຈົ້າຢ່າດ່ວນນອນໃຈ
ທຳອັນໃດໃຫ້ຮີຮ່ຳ	ນ່ຳໆ ພ້ອມພິຈານ
ສີລທານທຳຢ່າຂາດ	ຕັກບາດພ້ອມຈັງຫັນ

ເຖິງວັນສິລໃຫ້ຮ່ຳຮູ້ ໃຫ້ອຸສາສູ້ພາວະນາ
ຈັດຕາໂຣ ທັມມາ ວຸດທິທັມ ສີ່ ປະການ
ຄື ອາຍຸ ວັນໂນ ສຸຂັງ ພະລັງ
ອາຍຸໂຍດຍືນຍາວ ວັນນະພາວຜິວຜ່ອງ
ສິເນື້ອຄ່ອງເຫຼືອຫລາຍ ສຸກສະບາຍບໍ່ເສົ້າ
ພະລະເຂົ້າກຳລັງແຮງ ຄວາມແຂງແຮງຢ່າແກ່ເຖົ້າ
ຕາບຕໍ່ເທົ້າຊົ່ວຊີວາ ພັນນະນາເຮືອງຮອດ
ເຖິງຍອດແກ້ວ ຕິຕິກຂາ
ອະໂຣຄະພະຍາ ຮຽງຮາບ
ຜາບແພັໝູ່ ມານຍາ
ຂໍໃຫ້ມີຍິດຖາ ບັນດາສັກລ້ຳເລີດ
ສົມບັດເກີດ ອະນັນຕັງ
ສັກໂກສັກກາຍັງອິງອາດ ຢ່າຄາດແຄ້ວຮາສີ
ຈົ່ງໃຫ້ຢູ່ສະຫວັດສະດີ ເຖິງເຖົ້າ
ຕາບຕໍ່ເທົ້າເຖິງນິຣະພານ ເປັນສະຖານອັນວິເສດ
ດ້ວຍເດຊແຫ່ງ ພຣະຣັຕນະໄຕຣ
ສັບພະພຸດທາ ນຸພາເວນະ
ສັບພະທັມມາ ນຸພາເວນະ
ສັບພະສັງຄາ ນຸພາເວນະ

ສະຖາ ໂສດຖີ ພະວັນຕຸ ເຕ໌

ພິທີສູ່ຂ້ວນ

ບ່າວສາວເວລາແຕ່ງດອງ

ການປະກອບພິທີໝັ້ນ ກໍມີອັນຕ່າງກັນແດ່ແຕ່ລະທ້ອງຖິ່ນຕາມ ຊິນນະບົດ ສົມມຸດວ່າພິທີສູ່ຂ້ວນກິນດອງ ຜູ້ຖືກສູ່ຂ້ວນໄດ້ແກ່ເຈົ້າ

ບ່າວ ແລະເຈົ້າສາວທັງຄູ່ຈະຕ້ອງນຸ່ງເຄື່ອງໃຫ້ຈົບງາມ ຖືກຕ້ອງຕາມຮີດຄອງປະເພນີຂອງລາວ ຄື : ຜູ້ຍິງກໍນຸ່ງເສື້ອຂາວ ປັດຈຸບັນນີ້ອາດຈະແມ່ນສີອື່ນ ໆ ກໍໄດ້ ເຊິ່ງເອີ້ນວ່າ ຊຸດແຕ່ງດອງ ຫືລ ຊຸດວິວາຫະມຸງຄຸນ, ເກົ້າຜົມດ້ວຍປັກປິ່ນເກົ້າ, ໃສ່ຊ້ອງ, ໃສ່ແພບ່ຽງເຕັງບ່າເບື້ອງຊ້າຍ.

ສ່ວນເຈົ້າບ່າວ ຫືລ ເຂີຍ ກໍນຸ່ງເສື້ອຂາວແຂນຍາວ ນຸ່ງຜ້າກັ່ງວຫາງໄກ່ (ບາງທ້ອງຖິ່ນເອີ້ນວ່າຜ້າວາ ຫືລ ຜ້າຫາງ) ໃສ່ແພບ່ຽງເຕັງບ່າເບື້ອງຊ້າຍຄືກັນ ເມື່ອຈູງແຂນເຂີຍລ້າງຕີນເຂົ້າສູ່ພາຂັວນແລ້ວ ຜູ້ເປັນເຂີຍຈະຕ້ອງເອົາໄຟທຽນຢູ່ໃນມືເຊິ່ງໄຕ້ມານຳຂະບວນແຫ່ນັ້ນໄຕ້ໃສ່ທຽນຍອດພາຂັວນກ່ອນ ຫລັງຈາກນັ້ນຈິ່ງນັ່ງລົງ ຖືຝ້າຍຄືນລະເສັ້ນກັບເຈົ້າສາວ ປະນົມມື ແລ້ວໝໍພອນຈິ່ງເລີ່ມພິທີສູດຂັວນຕໍ່ໄປ.

ຄຳສູ່ຂັວນບ່າວສາວເວລາແຕ່ງດອງ
(ແບບທີໜຶ່ງແຜນບູຮານ)

ສີ ສີ ສິດທິພູະພອນ ປະວໍຣະແວນວິເສດ
ອະຕິເຣກະເຕໂຊ ໄຊຍະຕຸພະວັງ ໄຊຍະມັງຄະລັງ
ອາວາຫະວິວາໂຫ ໄຊຍະມະຫາມຸງຄຸນ
ວັນນີ້ເປັນວັນດີ ວັນດີຖືອະມຸດຕະໂຊກ
ໂຕກໃບນີ້ ແມ່ນໂຕກໄມ້ຈັນ
ຂັນໃບນີ້ ແມ່ນຂັນໄມ້ແກ້ວ
ເຖົ້າແກ່ປຸນແມ່ນແລ້ວ ຈິ່ງໄດ້ແຕ່ງພາຂັວນ
ຢູ່ສອນລອນຊະລ້າຍ
ມີທັງຝ້າຍຜູກແຂນ ແຫວນໃສ່ກ້ອຍ
ປັດນ້ອຍສ້ອຍສັງວານ ອາຫານຫລາຍເຫືລອມາກ
ສັບພະພາກພ້ອມ ທຸກສິ່ງທຸກອັນ
ມີທັງພູພັນ ແລະໝາກຈີບ
ຈັດແຕ່ງຮີບເດົາດາ ມາລາຫອມທ່ວງເຮົາ

ເຫົ້າລາກ້ອງແກ້ວ ໃສ່ພາຂັວນ
ຊວນກັນມາມວນເຕົ້າ ເຂົ້າຕົ້ມກ້ວຍແລະໃບສີ
ມີທັງໄຂ່ໜ່ວຍດີ ກັ່ງງປອດ
ພູະຍອດໄທ້ ທະສະພິລຍານ
ອີງລີງມາ ແຕ່ເມືອງຟ້າ
ກົວດແກ່ວງໜ້າທັກຊື່ ຊຸນສີຊຸນພັນ
ໂສມສີສັນ ງາມສະພາດ
ທ່ານຈິ່ງປົງພູະຣາຊະອາດຍາ ປະສິດທິພູະພອນ
ບໍ່ອອນແວນວິເສດ
ອະຕິເຣກະເຕໂຊ ໄຊຍະຕຸພະວັງ ໄຊຍະມັງຄະລັງ
ດັ່ງນີ້ເປັນເຄົ້າ
ປາກົດເຂົ້າເປັນປີ ສົມລິດທີໄຊຍະໂຊກ
ປະກອບໂຍກ ເປັນມິ່ງເມັ່ຍຂັວນ
ຕາມກະບວນ ບູຮານແຕ່ງໄວ້
ຂັນດອກໄມ້ ຍົກຂຶ້ນພຽງຕາ
ຂັນສິນມາ ລຸງຕາເຈົ້າໂຄດ
ກອງໂກດແກ້ວ ເງິນຂາວ
ລູກສາວກົກ ເພິ່ນຄາດຄ່າຫລາຍ
ລູກສາວກາງສາວປາຍ ເພິ່ນຄາດຄ່າມາກ
ບໍ່ຍາກແທ້ດີທີລ
ປຸນແປງດີ ພໍ່ແມ່
ທັງເຖົ້າແກ່ ແລະຕານາຍ
ຝົນຮວຍຮ່າ ປີໃໝ່
ຟ້າຮ່ຳຮ້ອງ ເດືອນສາມ
ຝູງບ່າວຮາມ ມາໂອມນາງງາມຄ່າກົວາງ
ບໍ່ໃຫ້ຮ້າງເປັນສອງ ຂໍເປັນດອງຮັກຍິ່ງ
ລູກແກ້ວກິ່ງ ຍັງປະສິງ
ຝູງວິງສາ ຕານາຍເບື້ອງປູ່

ເຈົ້າຮູ້ແລ້ວ ຕົກແຕ່ງປຸນແປງ
ແພງຄໍາຮັກລູກແກ້ວ ປຸນແມ່ນແລ້ວຈຶ່ງຍໍມາ
ມີທັງດວງມາລາ ຫອມຮ່ວງເຮົ້າ
ເຄື່ອງຮັບເຈົ້າ ເຫຼືອຫລາຍ
ທັງຕານາຍ ແລະພໍ່ແມ່
ເຖົ້າແກ່ພ້ອມ ສາວບ່າວນິງຮາມ
ມາຊ່ອຍຍໍພາຂ້ວນເບື້ອງຂວາ ເຈົ້າຢູ່ລີລ້າຍ
ມາຊ່ອຍຍໍພາຂ້ວນເບື້ອງຊ້າຍ ເຈົ້າຢູ່ລີລຽນ
ວຽນຊ້າຍຂວານັ້ນ ແມ່ນຊາຍໂຖງແຈກເຫຼົ້າ
ຝູງຜູ້ເຖົ້າ ເພິ່ນນັ່ງຖັນເທິງ
ບັດນີ້ຂ້ອຍຈັກເຊີນເອົາຂ້ວນຜົວ ໃຫ້ເຈົ້າມາຫຽມເນື້ອ
ມາຢູ່ເຮືອໃນຄີງ
ຂ້ອຍຈັກເຊີນເອົາຂ້ວນນາງງາມ ໃຫ້ເຈົ້າມາຫຽມຄູ່
ທັງຂ້ວນເຈົ້າ ຜູ້ເປັນຜົວ

<u>ວ່າມາເຢີຂ້ວນເຮີຍ !</u>

ໃຫ້ເຈົ້າມາເຊີຍຊົມ ຄອງຂ້ວນຄູ່ແກ້ວ
ມາຮອດແລ້ວ ທັດດອກຊຸນຟູມ
ບານຈູມເຈືອ ແມ່ນດອກຂັດເຄົ້າ
ທັດດອກເຂົ້າກວມຕາ ເກສາງາມຕັ້ງໄຫ່ລ
ຫຽມທ້າວໃໝ່ວັນດີ ທີລາງໂສມສີສອງເຈົ້າ
ຄືຄູ່ທ້າວອິນແປງ ມາເຜືອແຜງຍືນຍາວເຖິງເຖົ້າ
ຕາບຕໍ່ເທົ້າ ຍືນຍິ່ງເທັຍຣະຄາ

<u>ວ່າມາເຢີຂ້ວນເຮີຍ !</u>

ຂ້ວນແຄ່ງ ໃຫ້ເຈົ້າມາຢູ່ແຄ່ງລີລາ
ຂ້ວນຂາ ໃຫ້ເຈົ້າມາຢູ່ຂາລີລ້າຍ
ເຂົ້າສູ່ຄ້າຍ ຮຽງຮ່ວມໄສຍາ
ຍາມຄືນມາຫານທ້າວ ແທນແທ່ທ້າວບາຄານ
ໃນວັນວານຊົມຊື່ນ

ແຫ່ທ້າວຂື້ນທານາງ	ຕີນທົວທາງຄຸດນາກ
ຫລາວເຫັລກຫລາກ	ຜີຫລອງ
ໃນດວງທັມ	ກ່າວໄວ້
ທີ່ນັ່ງໃຫ້ສົມຄວນ	ບໍຣະບວນແຖນແຕ່ງ
ຈັດແຈ່ງໃຫ້	ເປັນຄູ່ລົງມາ
ໃຫ້ໄດ້ມີບຸດຕີ	ບຸດຕາສືບຕໍ່
ພໍ່ແມ່ເຖົ້າແກ່ປູກແລ້ວ	ໃຫ້ເປັນຄູ່ຫງມສອງ
ໃຫ້ເຈົ້າມາ	ປຸນປອງເປັນລູກ
ພໍ່ປູກໄວ້	ໃຫ້ເປັນຄູ່ແທນເຮືອນ
ສອງບຸນເຮືອງ	ລູກຫລາ
ຮັກເກົ່ງກ້າ	ຫງມທັນ
ຂ້ອຍຈັກເຊີນເອົາຂ້ວນບາຄານ	ໃຫ້ເຂົ້າມາຫງມໄຫ່ລ
ລະໃໝ່ເນືອຜິວບາງ	ໂສມນາງງາມຢູ່ຖ້າ
ອິນຟາກຟ້າ	ຕົກແຕ່ງປຸນແປງ
ໃຫ້ເຈົ້າມາເຝືອແຝງ	ເມັຍແພງເຖິງເຖົ້າ
ຮ້ອຍຂວບເຂົ້າ	ຍືນຍິ່ງເຫັຍຣະຄາ
ໃຫ້ເຈົ້າມີບຸດຕີບຸດຕາ	ຍິງຊາຍຢ່ານ້ອຍ
ຂ້ອຍຊ່ວງໃຊ້	ໃຫ້ໄດ້ພໍແສນ
ຂອງກັບແນນ	ໃຫ້ເຈົ້າມີທຸກສິ່ງ
ຊ້າງມ້າມິ່ງ	ອານຄໍາ
ພູະຍາທັມຕົນອິງອາດ	ລິດເດຊກ້າລືຊາ
ຕາມຕໍາລາກ່າວໄວ້	ອິນທ່ານໃຫ້ຖວາຍພອນ
ເປັນຄໍາສອນ	ພູະອິນສັ່ງໂລກ
ໂຕກຂັນແກ້ວ	ຮອງຮັບພາຂ້ວນ
ຄືດັ່ງສາວສະຫວັນ	ລົງມາຕັ້ງແຕ່ງ
ອິນທ່ານໃຫ້	ແບ່ງໄຂສອນ
ດອກໄມ້ຊອນ	ແຊມເກົ້າ
ຂ້ອຍຈັກເຊີນຂ້ວນເຈົ້າ	ພ້ອມພໍ່າທັງສອງ

ວ່າມາເຢີຂັວນເຮີຍ!

ຍາມເມື່ອຕາເວັນຄ່ຳ ລີງລັບປ່າແຊງ
ຍາມເມື່ອຕາເວັນແດງ ລີງລັບປ່າໄມ້
ໃຫ້ຂັວນນາງ ມາຫຽມນາງຢ່າຊ້າ
ແມ່ເຈົ້າແອ້ມສ້ວມຖ້າ ຕີກແຕ່ງຄອຍທາ
ມີທັງຜ້າກາສາ ແພລາຍຊ້ອນເສື່ອ
ຮັດສະໜີແກ້ວເຮື່ອ ປັກແສ່ວໄໝແດງ
ຂັວນຈອມແພງ ໃຫ້ເຈົ້າມາຫຽມຄູ່
ຂັວນເຈົ້າຢູ່ ຟາກຟ້າແດນໄກ
ກໍໃຫ້ມາສາມື້ນີ້ວັນນີ້

ວ່າມາເຢີຂັວນເຮີຍ !

ໃຫ້ເຈົ້າມາສະເກດເກົ້າ ທັດດອກມະລິວັນ
ໃຫ້ເຈົ້າມາທານຳມັນຈັນ ແມ່ເຈົ້າແຕ່ງໄວ້
ໃຫ້ມາທັດດອກໄມ້ ຄ້ອງເກດສວຍລວຍ
ມວຍບໍ່ຍາວ ປະສິງໃສ່ຊ້ອງ
ຝູງໝູ່ບ່າວພີ່ນ້ອງ ບ້ານໃຕ້ຄອຍທາ
ນາງທິດາບ້ານເໜືອ ມາຄອຍເບິ່ງໜ້າ
ເພິ່ນຊ່າເຈົ້າ ບຸນກ້ວາງສູ່ພາຍ
ໃຫ້ເຈົ້າມາສະເຫີວຍງາຍ ພາຂັວນແຕ່ງໃໝ່
ໃຫ້ໄດ້ປ້ອນເຂົ້າໄຂ່ ເຂີອເຈົ້າທັງສອງ
ຕາມທຳນອງ ບູຮານແຕ່ງໄວ້
ໝໍບອກໃຫ້ ວ່າມື້ນີ້ວັນດີ
ຂ້ອຍຈັກເອົາສອງສີ ຮຽງໝອນຊ້ອນເສື່ອ
ໃຫ້ເຈົ້າໄດ້ສືບເຊື້ອ ພໍ່ແມ່ແທນເຮືອນ
ເຖິງປີເດືອນ ຝົນຮວຍຮ້ອງຮ່ຳ
ວັນເຈັດ-ແປດຄ່ຳ ໃຫ້ເຈົ້າຢູ່ຈຳສິລ
ວັນສິບສີ່-ສິບຫ້າຄ່ຳ ໃຫ້ເຈົ້າຍິນດີຖືຄອງຕັກບາດ
ຢ່າໃຫ້ຂາດ ທານສິລພາວະນາ

ຂ້ວນຕາໃຫ້ເຈົ້າມາຢູ່ຕາ ຍີແຍ້ມ
ຂ້ວນແກ້ມໃຫ້ເຈົ້າມາຢູ່ແກ້ມ ແລະຄາງ
ຂ້ວນແອວບາງ ຂ້ວນນິມພໍາພ້ອມ
ໃຫ້ເຈົ້າມານັ່ງລ້ອມ ອ້ອມຢູ່ພາຂ້ວນ

ວ່າມາເຢີຂ້ວນເຮີຍ !

ມື້ນີ້ ແມ່ນມື້ດີ ປີນີ້ແມ່ນ ປີເຮົາ
ຜູ້ເຖົ້າເກີດເປັນສາວ ກໍວ່າແມ່ນມື້ນີ້ວັນນີ້
ຂ້ອຍທ່ານໄດ້ແທນເຮືອນ ກໍວ່າແມ່ນມື້ນີ້ວັນນີ້
ນອນຫລັບໄດ້ເງິນໝື່ນ ກໍວ່າແມ່ນມື້ນີ້ວັນນີ້
ນອນຕື່ນໄດ້ເງິນແສນ ກໍວ່າແມ່ນມື້ນີ້ວັນນີ້
ແບນມືໄປໄດ້ແກ້ວມະນີໂຊດ ກໍວ່າແມ່ນມື້ນີ້ວັນນີ້
ແຂນທ້າວກ່າຍແຂນນາງ ກໍວ່າແມ່ນມື້ນີ້ວັນນີ້
ເຂົ້າເຕັມສາງລົ້ນຂື່ ກໍວ່າແມ່ນມື້ນີ້ວັນນີ້
ສາມວັນໃຫ້ເຈົ້າໄດ້ ແກ້ວມຸງຄຸນມາຫາເຈົ້າເນີ
ຫ້າມື້ໃຫ້ເຈົ້າໄດ້ເສື້ອຜ້າ ມາໂຮມເຈົ້າເນີ
ໃຫ້ແຂນທ້າວກ່າຍແຂນນາງ ສຸກສະບາຍພໍາພ້ອມ
ໃຫ້ອ່ອນນ້ອມ ຕັ້ງຕໍ່ຊິມເຊີຍ
ເຈົ້າເປັນເຂີຍ ໃຫ້ມີໃຈກ້ວາງ
ເຈົ້າຢ່າໄດ້ກ່າວອ້າງ ສັບພະສິ່ງອັນໃດ
ຄັນໄລ່ໄກ່ ໃຫ້ເຈົ້າວ່າໂຊ
ຄັນໄລ່ໝາ ໃຫ້ເຈົ້າວ່າເສ້
ຄັນໄລ່ງົວໄລ່ຄວາຍ ໃຫ້ເຈົ້າວ່າຮື
ເຈົ້າຢ່າດື້ເຕະຕ່ງວຊຸຍລຸຍ ຕໍ່ໜ້າເຈົ້າໂຄດ
ຢ່າປາກໂພດ ສັບພະສິ່ງອັນໃດ
ໃຫ້ເຈົ້າມີໃຈໃສ ຕໍ່ນາງແກ່ນໄທ້
ເຈົ້າເປັນລູກສະໄພ້ ໃຫ້ເຈົ້າຮັກແມ່ຜົວ
ຢ່າໄດ້ເວົ້າໝົວ ໆ ຂ້ວນຜົວເຊີງຊູ້
ເຈົ້າຜູ້ຮູ້ ນັກປາດຟັງທັມ

ເຖິງເດືອນດຳ ຢ່າໄດ້ຫ່ຽວຍາມຄ່ຳ
ເຮືອນຫລັງຕ່ຳ ນັ້ນແມ່ນເຮືອນອາ
ຊາຍຄາສູງຫັລງໃຫ່ຍ ກະທອດໃສ່ປ້ານລົມ
ຫັລງກົມໆ ນັ້ນແມ່ນເຮືອນພໍ່
ເກີຍຊານຕໍ່ຫລັງໃຫ່ຍຫລັງສູງ ນັ້ນແມ່ນເຮືອນລຸງ
ແລະເຮືອນປ້າ
ຫັລງໜ້າກ້ວາງ ດັ້ງໃສ່ແຂນນາງ
ລາຍລວງກົມ ປ້ານລົມຮູບນາກ
ແປ້ນພື້ນຮາບ ມຸງກະເບື້ອງດິນຂໍ
ມີຫໍເຢັນ ຫັລງສູງພ້ອມພາບ
ໂຮງມ້າອາດ ແຂວນທີ່ງອາຊາໄນ
ໄຫໃນເຮືອນ ໂອ່ງນ້ຳບໍ່ແກ້ວ
ຫັລງນັ້ນ ພໍ່ໃຫ້ແລ້ວ ແກ່ລູກທັງສອງ
ໃຫ້ເຈົ້າມາປຸນປອງ ກິນທານຢ່າໄຮ້
ອາຍຸໄດ້ຮອດຮ້ອຍ ຍືນຍິ່ງເທັຍຣະຄາ
ໄດ້ກິນຊີ້ນ ໃຫ້ເຈົ້າລ້ຽງເຮືອນອາ
ໄດ້ກິນປາ ໃຫ້ເຈົ້າລ້ຽງເຮືອນຍ່າ
ເພິ່ນຊ່ຳເຈົ້າ ບຸນກ້ວາງຊູ່ພາຍ
ມີລູກຊາຍ ໃຫ້ໄດ້ຜູປະເສີດ
ໃຫ້ເຈົ້າໄດ້ລູກແກ້ວ ເກີດຮ່ວມອຸທອນ
ໃຫ້ເຈົ້າຟັງຄຳສອນ ຕານາຍພໍ່ແມ່
ໃຈແຜ່ກ້ວາງ ພີ່ນ້ອງວົງສາ
ຕາເບື້ອງຊ້າຍ ເຈົ້າຢ່າຫລຽວດູຊາຍ
ຕາເບື້ອງຂວາ ເຈົ້າຢ່າແລຫາຊູ້
ເຖິງຍາມແລງ ໃຫ້ເຈົ້າຫາພາເຂົ້າ
ເຖິງຍາມເຊົ້າ ໃຫ້ເຈົ້າແຕ່ງພາງາຍ
ຢ່າໄດ້ນອນຫລັບຫລາຍ ຕື່ນສວາຍຜິດຮີດ
ໃຫ້ເຈົ້າຈີບໝາກໄວ້ ປະສິງແຕ່ງພາງາຍ

ເຈົ້າມີຜົວ ໃຫ້ເຈົ້າຖື້ມໃຈເກົ່າ
ເຫົ້າລາໄຫນ້ອຍ ໃຫ້ເຈົ້າຢາຍໄພ່
ເຫົ້າລາໄຫໃຫ່ຍ ໃຫ້ເຈົ້າຢາຍຊຸມ
ມື້ມຸງຄຸນ ຂອງເຈົ້ານາງແກ້ວ
ໝົກກ່າວແລ້ວ ຊໍ້າຕື່ມແຖມພອນ
ເປັນຄໍາສອນ ພູ້ະອິນສັ່ງໂລກ
ເຈົ້າຫາກມີໂຊກແລ້ວ ໃຫ້ຄ່ອຍພຽນເອົາ

ວ່າມາເຢີຊ້ອນເຮີຍ !

ຂ້ອນຜົວໃຫ້ເຈົ້າມາ ຊົມເມັຍນີນ່ໍາ
ເຖິງຍາມຄໍ່າ ໃຫ້ເຈົ້າເຂົ້າບ່ອນນອນ
ຫົວຮຽງໝອນ ໃຫ້ເຈົ້າຮັກຮໍ່
ໃຫ້ເຈົ້າຕັ້ງໜ້າຕໍ່ ທໍາແຕ່ຄວາມດີ
ຄວາມສຸກມີ ພຽງພໍບໍ່ນ້ອຍ
ແລງຄໍ່າຄ້ອຍ ໃຫ້ເຈົ້າຢູ່ສະຫວັດດີ
ກໍຂ້າເຖີ້ນ

ໄຊຍະຕຸພະວັງ ໄຊຍະມັງຄະລະ ໄຊຍະມະຫາມຸງຄຸນ

ຈັດຕາໂຣ ທັມມາ ວັດທັນຕິ
ອາຍຸ ວັນໂນ ສຸຂັງ ພະລັງ ৵

ຄວາມຜູກແຂນຄູ່ບ່າວສາວ
(ສໍາລັບຜູ້ຊາຍ)

ມື້ນີ້ແມ່ນມື້ສັນວັນຊອບ ມື້ປະກອບຍາມດີ
ເພິ່ນປູກໄມ້ໃຫ້ເປັນດົງ ກໍວ່າດີມື້ນີ້ວັນນີ້
ເພິ່ນບົງສົງໃຫ້ເປັນເຫລົ່າ ກໍວ່າດີມື້ນີ້ວັນນີ້
ເພິ່ນປູກບົງເຊື້ອເຈົ້າ ໃຫ້ເປັນຄູ່ຜົວເມັຍ
ກໍວ່າດີມື້ນີ້ວັນນີ້
ຕັ້ງແຮກແຕ່ນີ້ເມືອໜ້າໃຫ້ເຊື້ອເຈົ້າ ເປັນຄູ່ກັນ ຄືນົກຖົວ

ໃຫ້ເປັນຜົວເມັຍກັນ ຄືນົກອັງງ
ໃຫ້ທ່ຽງໝັ້ນ ຄືດັ່ງເສົາສະເໝນ
ໃຫ້ເຈົ້າເປັນ ຜົວແກ້ວເມັຍທິບ
ຢ່າໄດ້ເປັນ ຜົວເຜດເມັຍມານ

ວ່າມາເປີຂ້ວນເຮີຍ !

ໃຫ້ເຈົ້າມາຝັນກັນ ເປັນດັ່ງເຊືອກເຮືອ
ໃຫ້ເຈົ້າມາເຝືອກັນ ເປັນດັ່ງເຊືອກຊ້າງ
ຢ່າໄດ້ມ້າງ ຈັກຍາມ
ໃຫ້ເຈົ້າເປັນເສດຖີມີມັ່ງ ໄດ້ນັ່ງກິນນັ່ງທານ
ລ້ຽງລູກຍິງ ໃຫ້ເຈົ້າໄດ້ລ້ຽງຫລາຍ
ລ້ຽງລູກຊາຍ ໃຫ້ເຈົ້າໄດ້ລ້ຽງງ່າຍ
ໃຫ້ເຈົ້າຍູທ່າງຈ່າຍ ແຕ່ແກ້ວແຫວນເງິນຄຳ
ຈັດຕາໂຣ ທັມມາ ວັດທັນຕິ ອາຍຸ ວັນໂນ ສຸຂັງ ພະລັງ ຯ

ຄວາມຜູກແຂນຄູ່ບ່າວສາວ
(ສຳລັບຜູ້ຍິງ)

ມາເປີຂ້ວນເຮີຍ !

ເຈົ້າຜູ້ຍິດຍິ່ງລ້ຳ ສິດທິເດດລືຊາ
ປັນຍາຍິດ ໂລກລືທັງຄ້າຍ
ໂຊກເຈົ້າແລ້ວ ຊຳ້ພັດຕື່ມແຖມມາ
ເປັນດັ່ງສຸມຸນທານາງ ນຳກຸມພັນຮ່ວມສະເນ
ຮຽງຊ້ອນ
ໃຫ້ເຈົ້າຍືນຍາວໝັ້ນ ນຳກັນເທົ້າຊົ່ວຊີວັງທ້ອນ
ຢ່າໄດ້ຄະຄາດຮ້າງ ເປັນໝ້າຍທ່າງສອງ

ມາເປີຂ້ວນເຮີຍ !

ຂ້ວນທົວແກ້ວວິນຍານ ທິບພະຮູບຮຽມເຮີຍ
ຢ່າໄດ້ເດີນດຸ່ງດັ້ນ ຊີມຊູ້ຊິໝົ່ນໝອງ

ມາທ້ອນ, ຂ້ວນທົວເຈົ້າ ໜີຄືງປາງກ່ອນ
ຢ່າໄດ້ໄປຢູ່ຊ້ອນ ຊິມຊູ້ເພິ່ນຊີຊັງເຈົ້າແລ້ວ
ໃຫ້ເຈົ້າມາຢູ່ຫ້ອງ ເຮືອນຢູ່ສະຖານພຽງເຈົ້າເນີ
ຢ່າໄດ້ໄປເມົາມົວ ເວດທະນານາຊູ້
ໃຫ້ເຈົ້າມາຢູ່ສືບສ້າງ ດອມແມ່ມານດາ
ທັງປີຕາ ເຜົ່າພີງພັນເຊື້ອ

<u>ມາເຢີຂ້ວນເຮີຍ !</u>

ຄັນວ່າຂ້ວນທົວເຈົ້າມາຮອດຫ້ອງສະຖານທອງທີ່ຢູ່ເຈົ້າແລ້ວ
ຂໍໃຫ້ລຸລາບໄດ້ ເງິນຄຳແກວຊູ່ປະການ
ຝູງໝູ່ໂຈນມານຮ້າຍ ສັດຕູຢ່າມາບຽດ
ໂພຍພະຍາດຮ້າຍ ຂໍໃຫ້ເວັ້ນຫລີກໄກ

ອາຍຸ ວັນໂນ ສຸຂັງ ພະລັງ ๔

<u>ຄຳສູ່ຂ້ວນບ່າວສາວເວລາແຕ່ງດອງ</u>

(ແບບທີ່ສອງແຜນໃໝ່)

ສີ ສີ ສະຫັວດສະດີ ຊິມຊື່ນ
ຮື່ນ ໆ ກ້ອງ ຟ້າໃໝ່ເອົາໄຊ
ສຽງດັງໄປຢູ່ບໍ່ຂາດ ມະຫາສັງກາດປ່ຽນຣາສີ
ເປັນຣະດູປີ..... ແຖມຖ່າຍ
ພູະສຸຣິຍະຍ້າຍ ເຂົ້າສູ່ຣາສີ
ເປັນປີ ພ.ສ 25....... ແທ້ດູງາມ
ຕາມທຳນອງ ບູຮານວ່າໄວ້
ເພິ່ນເລືອກໄດ້ ວ່າແມ່ນວັນດີ
ເປັນວັນ....ເດືອນ.... ຂຶ້ນ.....ແຮມ.... ຄ່ຳ
ມາພໍ່າພ້ອມ ນັກປາດອາຈານ
ເພິ່ນມານັ່ງຄູນທານ ວ່າແມ່ນແລ້ວ
ໂຕງຊ້າງແກ້ວ ກໍວ່າມື້ນີ້ເປັນວັນດີ

ໂຄງໄຊຍະດິຖີ ກໍວ່າຖືກອະມຸດຕະໂຊກ
ສິດທິໂຍກພ້ອມ ອຸດຕະມັງຄະລາ
ເປັນວັນມະຫາສາຣະທະການ ຟ້າຂາວດາວສ່ອງ
ນັກຂັດຕະຣິກປ່ອງ ວັນດີ
ເປັນວັນໄຊຍະດິຖີ ອະມຸດຕະໂຊກ
ໂຕກໃບນີ້ ແມ່ນໂຕກໄມ້ຈັນ
ຂັນໃບນີ້ ແມ່ນຂັນໄມ້ແກ້ວ
ພວກເຖົ້າແກ່ເລືອກມາໄດ້ແລ້ວ ຜູ້ເຄີຍແຕ່ງພາຂັວນ
ມີແຕ່ຜູ້ສົມຄວນ ແມ່ຄຳກັບແມ່ແກ້ວ
ມີສອງຄົນນີ້ແລ້ວ ເພິ່ນເຄີຍແຕ່ງພາຂັວນ
ກໍໄດ້ພາກັນມວນ ດາດີແຕ່ງແລ້ວ
ມີທັງເຫຼົ້າກ້ອງແກ້ວ ໃສ່ພາຂັວນ
ຊວນກັນມາ ມວນເຕົ້າ
ມີທັງເຂົ້າຕົ້ມກ້ວຍ ແລະບາຍສີ
ມີທັງໄຂ່ໜ່ວຍດີ ກັ້ງງປອດ
ເລີຍລວດແລ້ວ ບໍຣະບວນ
ບັດນີ້ຈຶ່ງໃຫ້ແມ່ເຖົ້າໝັ້ນ ກັບແມ່ເຖົ້າຍືນ
ທັງສອງຄົນຍໍພາຂັວນ ເອົາມາຕັ້ງໄວ້
ມີທັງຝ້າຍອ່ອນໄທ້ ເອົາມາໄວ້ຜູກແຂນ
ແຕ່ງຕາມແຜນ ບູຮານແຕ່ເຄົ້າ
ຝູງຜູ້ເຖົ້າ ເຈົ້າໂຄດລຸງຕາ
ໄປເຊີນເອົາເພິ່ນມາ ເຂົ້ານັ່ງໃນສາດ
ຈຶ່ງພ້ອມໂອກາດ ໃຫ້ຂ້າບາດເປັນພາມ
ໃຫ້ຫາເອົາຄວາມດີຄວາມງາມ ມາຮ້ອງຮຽກເອົາຂັວນ

ວ່າ ມາເຢີຂັວນເຮີຍ !

ຂັວນເຂືອເຈົ້າທັງສອງ ຢ່າໄດ້ໄປທ່ຽວຫຼົ້ນ
ແກມພິງພັນນາກ
ຂັວນເຂືອເຈົ້າຢ່າໄດ້ໄປຢູ່ຊ້ອນ ຊິມເຊື້ອນາກຫລວງ

ຊ້ວນເຊືອເຈົ້າ ຢ່າໄດ້ໄປຊົມດວງດອກໄມ້
ໃນເຂົາຂຶງຖ້ຳແອ່ນ
ຊ້ວນເຊືອເຈົ້າ ຢ່າໄດ້ໄປແລ່ນທີ່ລົມ
ນຳຊ້າງໝູ່ງາ
ຊ້ວນເຊືອເຈົ້າ ຢ່າໄດ້ໄປທ່ຽວຫລິ້ນ
ນຳປາໝູ່ໃຫ່ຍ
ຊ້ວນເຊືອເຈົ້າ ຢ່າໄດ້ໄປຊອກໃຊ້
ຊົມຊູ້ຕ່າງເມືອງ

ວ່າ ມາເຢີຊ້ວນເຮີຍ !

ເຊີນເຈົ້າມາທະຣິງສ້ອຍ ສັງວານເອ້ອວດ
ມີທັງມ້າວໃສ່ແຂນ ແຫວນໃສ່ກ້ອຍ
ກະຈອນນ້ອຍໃສ່ຫູ
ດູງາມລົ້ນ ເຫືລອຕາອິງອາດ
ມີທັງສາດອ່ອນກ້ຽງ ປູໄວ້ຖ້າເຮື່ອເຮືອງ
ມີທັງຂັນເງິນພ້ອມ ຂັນຄຳເດັຍຣະດາດ
ມີທັງດວງດອກໄມ້ ກ້ານກ່ອງອິນແປງ
ມີທັງດວງມາລາ ກິ່ນຫອມໂຮຍເຮົ້າ
ມີທັງຈຳປາສ້ອຍ ຈຳປີຊົກສະເດື່ອ
ເຮືອງເຮື່ອເຫຼື້ລອມ ພາຊ້ວນແກ້ວແຕ່ງປຸນ
ເຈົ້າຜູ້ບຸນມາກລິ້ນ ໄດ້ມາຮ່ວມຮຽງສອງ
ຍູທ່າງຊົມດວງຫອມ ຊູ່ວັນເລີງເລື້ອຍ
ເຊີນເຈົ້າມາຊົມດວງດອກໄມ້ ສະເລເຕຫອມອ່ອນ
ໜ້າສະອອນຕັ້ງແຕ່ມຸ້ງມ່ານກັ້ງ ໃນຫ້ອງບ່ອນຊົມອນ
ມີທັງອາພອນຜ້າ ແພກະສາແມ່ເຈົ້າແຕ່ງ
ປຸນແປງໄວ້ຖ້າເຈົ້າ ບຸນກ້ວາງຜູ້ຊົມາ

ວ່າ ມາເຢີຊ້ວນເຮີຍ !

ມີທັງໄພຕິດໄຕ້ ພາຊ້ວນເຮືອງເຮື່ອ
ເຖົ້າແກ່ມານັ່ງລ້ອມ ເປັນຖ້ານຕ່ຳສູງ

ຝູງໝູ່ຕານາຍເຖົ້າ ສອນລອນເປັນໝູ່
ນັ່ງຖ້າເຈົ້າ ບຸນກ້ວາງຜູ້ຊິມາ

ວ່າ ມາເຢີຂ້ວນເຮີຍ !

ເຊີນເຈົ້າມາກິນໄຂ່ໜ່ວຍປອດ ແລະທິວມັນ
ມີທັງກ້ວຍຕີບຈັນ ຫອມອ່ອນ
ສະຊ່ອນໜ້າ ມາແລ້ວໃຫ້ຢູ່ດີ
ຂໍໃຫ້ເປັນອາວະຫາ ວິວາໂຫອັນດີວິເສດ
ເຂົ້າສູ່ເຂດ ເຈັຍຣະການ
ສີນິງຄານ ພ້ອມຄູ່ໃໝ່
ຂໍໃຫ້ເຈົ້າທັງສອງຜົວເມັຍ ມີອາຍຸຍືນຍາວຢ່ານ້ອຍ
ໃຫ້ໄດ້ຮອດຮ້ອຍຂວບເຂົ້າ ຍາວນານ
ໃຫ້ເຈົ້າໄດ້ຊິງ ຍິດສັກບໍຣິວານ
ມີລູກຫລານ ຫລາຍແສນສ່ຳ
ຊ້າງມ້າພ່ຳ ງົວຄວາຍ
ໃຫ້ເຈົ້າມີຊັບສິ່ງຂອງ ຫລາຍຢ່າໄຮ້
ໃຫ້ເຈົ້າໄດ້ ໂດຍຊອບທັມ
ຢ່າໄດ້ເປັນກັມ ອັນສາໂຫດ
ໃຫ້ເຊືອເຈົ້າໄດ້ສ້າງ ໂພດທິສົມພານ
ສ້າງສີລທານ ຢ່າໄດ້ຂາດ
ຂໍໃຫ້ພູວະນາດເຈົ້າ ໂຜດກະຣຸນາ
ແຖມສັກດາ ຫລາຍເຮືອງເຮືອ
ບຸນກ້ວາງເພື່ອ ປາກງູນ
ຈຳນຳນງູນ ຢູ່ສະຖານສິບສ້າງ
ຢ່າໄດ້ເປັນໝ້າຍຮ້າງ ຄາໄຄ
ຫາຍໂພຍໄພຊາວຫ້າ ພະຍາດເກົ້າສິບທິກ
ໃນຂັນທະສັນດານ ຢູ່ທຸກເມື່ອ
ບຸນກ້ວາງເພື່ອ ສາຍສະໝອນ

ວ່າ ມາເຢີຂ້ວນເຮີຍ !

ບັດນີ້ຂ້ອຍຈັກຍໍຂັວນເຂືອເຈົ້າ ຂຶ້ນໄວ້ທີ່ສູງ
ຂ້ອຍຈັກຈູງຂັວນເຂືອເຈົ້າ ຂຶ້ນໄວ້ທີ່ໝັ້ນ
ໃຫ້ເຈົ້າມາຢູ່ໝັ້ນ ສະເໝີກ້ອນຜາແອ່ນ
ໃຫ້ເຈົ້າມາຢູ່ໝັ້ນ ສະເໝີແທ່ນຜາຈວງຜາຈັນ
ໃຫ້ເຈົ້າມາຢູ່ໝັ້ນ ສະເໝີດັ່ງພູເຂົາ-
ຫລວງໄກລາດ
ໃຫ້ເຈົ້າມາຢູ່ໝັ້ນ ສະເໝີທາດອິນແຂວນ
ມາພະລັນຢ່າຊ້າ
ຂ້ອຍມານັ່ງຢູ່ຖ້າ ຄອຍຜູກເອົາຂັວນ

<u>ວ່າ ມາເຍີຂັວນເຮີຍ !</u>

ຂັວນທັງມວນ ມາພະລັນພໍ່າພ້ອມ
ເຖົ້າແກ່ມານັ່ງລ້ອມ ເຈົ້າຢູ່ສອນລອນ
ຄັນວ່າຂັວນເຂືອເຈົ້າທັງສອງ ມາຮອດຫ້ອງ
ສະຖານທອງທີ່ຢູ່ເຈົ້າແລ້ວ
ຂໍໃຫ້ລຸລາບໄດ້ ເງິນຄໍາແກ້ວຊູ່ປະການ
ຝູງໝູ່ໂຈນມານຮ້າຍ ສັດຕູຢ່າມາບຽດ
ໂພຍພະຍາດຮ້າຍ ຂໍໃຫ້ເວັ້ນຫລີກໄກ
ໄຊຍະຕຸພະວັງ ໄຊຍະມັງຄະລັງ

ດັ່ງນີ້ກໍຂ້າເຖີ້ນ ໗

ຄວາມຜູກແຂນຄູ່ບ່າວສາວ

(ສໍາລັບຊາຍ-ຍິງ)

(ເບິ່ງໜ້າ)

<u>ຄວາມຟາຍເຫົ້ລາ</u>

(ແຜນເກົ່າ)

ສູີ ສູີ ສິດທິການ ຂ້າຈັກກ່າວຕໍານານ

ນິທານ　　　　ຟາຍເຫລົ້າ
ຄວາມຜູ້ເຖົ້າ　　　　ເພິ່ນວ່າຂຸນສູງ
ເປັນຄວາມລຸງຄວາມຕາ　　　　ມາແຕ່ພໍ່ແຕ່ແມ່
ເປັນຄວາມເຖົ້າຄວາມແກ່　　　　ມາແຕ່ເປີງທໍ້ທົວຂາວ
ເປັນຄວາມຍອນຄວາມລາວ　　　　ມາແຕ່ເປີງຫມາອີງຮົ້ວ
ນ້ຳອັນນີ້ມັນຫາກຫອມກິ່ນກົ້ວ　　　　ເທົ້າທົ່ວຈັກກະວານ
ເປັນນິທານ　　　　ຕໍ່ໄປພາຍຫນ້າ
ເປັນຄວາມຂ້າ　　　　ເຂົາວ່າອິມຊະເລັງ
ເປັນຄວາມມ່ານຄວາມເມັງ　　　　ເຂົາວ່າມັງຈໍ້
ເປັນຄວາມທໍ້ຄວາມທານ　　　　ເຂົາວ່າສຽວຈຽວ
ເປັນຄວາມມອນຄວາມແກວ　　　　ເຂົາວ່າສຽວວ້າງ
ຄວາມລາວເມືອງລ້ານຊ້າງ　　　　ເຂົາວ່າເຫລົ້າສາໂທ
ຕັກໃສ່ໂອ　　　　ເພິ່ນວ່ານ້ຳເຫລົ້າ
ຕາມບາລີພູະເຈົ້າ　　　　ເພິ່ນວ່ານ້ຳສຸຣາ
ລາວເຮົາແປວ່ານ້ຳອ້ອຍນາ　　　　ຫລືນ້ຳຕາຜີເຜດ
ຫລາຍປະເທດ　　　　ເຂົາມາຊ່າງຈາເດມໍ
ຫລາຍພາສາ　　　　ເຂົາມາຊ່າງເວົ້າເດມໍ
ນ້ຳອັນນີ້ຫາກເປັນ　　　　ນ້ຳກ້ານນ້ຳຫານ
ໃຜຈັກທຳການບຸງຄຸນ　　　　ຫາກເອົາຍັງນ້ຳເຫລົ້າ
ແຕ່ເພິ່ນຫລໍ່ພູະເຈົ້າຍັງເອົາໄປເຮັດ　　　　ຄາຍພິດສະຫມູ
ຫວິດໄປຮອດຜີພູ　　　　ຜີແຖນແລະຜີຟ້າ
ຊາວເມືອງພະມ້າ　　　　ຍັງເອົາໄປຂຶ້ນຜີ
ທຳມະດານ້ຳອັນນີ້　　　　ມີມາສຳລັບໂລກ
ໃຜໄດ້ກິນກໍ່ຫາຍໂສກ　　　　ຫາຍໂຣຄໂພຍໄພ
ຜູ້ຂີ້ໄຮ້ໄດ້ກິນ　　　　ກໍ່ກ່າວຄວາມຮັ່ງຄວາມມີ
ດີກວ່າພໍ່ກວ່າແມ່　　　　ດີກວ່າຜີດ້ຳຜີດວງ
ຜູ້ປູມຫລວງໄດ້ກິນ　　　　ກໍ່ວ່າປູມໂຕນີ້ ດີງາມ
ໃສປອດ　　　　ປູມຍອດພະຫຍາ

ຜູ້ເຈັບຫູເຈັບຕາໄດ້ກິນ ກໍວ່າຕາໂຕນີ້ຮຸ່ງເມືອ

ຮອດເມືອງຫໍ້ກໍແຜວ

ຮຸ່ງເມືອຮອດເມືອງແກວ ເຫັນໝົດຊູ່ແຫ່ງ

ຜູ້ສິບແວ່ງໄດ້ກິນ ກໍວ່າສິບໂຕນີ້ແວ່ງດີແວ່ງງາມ

ຕັ້ງແຕ່ສາວຜູ້ດີຜູ້ງາມ ກໍຍັງແວ່ງຫາງກົ້ນ(ກໍຍັງຫີລກບໍ່ພົ້ນ)

ໃຜກໍບໍ່ມີມື້ມ ນ້ຳເຫົ້າລາແລະນ້ຳຢາ

ແຕ່ຜູ້ມີຜະຫຍາ ກໍຍັງເວັ້ນບໍ່ໄດ້

ຜູ້ຂີ້ໄຮ້ ກໍຍັງຍ່ອມສະແຫວງຫາ

ຂ້ອຍຈັກທົ່ວດໃສ່ມືກ້ຳຊ້າຍ ແລະກ້ຳຂວາ ຂໍໃຫ້ເຈົ້າໄດ້ອີງ

ໝອນລີງໝອນລາຍຄ້ຽວໝາກ ແຂນສອກເທົ້ານິມນາງ

ມີລູບເອີກລູບອາງ ໃຫ້ເຂົາທົວຢູ່ຍຸ້ມຍີແຍ້ມ

ຂ້ອຍຈັກທົ່ວດລົງດິນ ຂໍໃຫ້ນາງທໍຣະນີມາຊ່ອຍ

ຄ້ຳເຈົ້າເນີ

ຂ້ອຍຈັກທົ່ວດລົງນ້ຳ ຂໍໃຫ້ພະຍານາກມາຊ່ອຍ

ຊູເຈົ້າເນີ

ຂ້ອຍຈັກທົ່ວດເມືອພູເມືອຜາ ໃຫ້ເຈົ້າໄດ້ຈີກໄຫເງິນໄຫ

ຄຳຖ້ວມສອກ

ຂ້ອຍຈັກທົ່ວດໄປກ້ຳບາງກອກ ໃຫ້ເຈົ້າໄດ້ແພກະສາ

ແລະເງິນໝາກຄໍ້ ມາໄວ້ເຮັດແນວ

ຂ້ອຍຈັກທົ່ວດໄປກ້ຳເມືອງແກວ ໃຫ້ເຈົ້າໄດ້ເງິນຮາງ

ແລະເງິນແໜັນ

ຄວາມຄັ່ງແຄ້ນ ຂອງເຈົ້າຢ່າໄດ້ມີ

ໃຫ້ເຈົ້າຮັ່ງຄືດັ່ງເສດຖີ ໃຫ້ເຈົ້າມີຄືດັ່ງຫວຍຄ້າ

ມີລູກຍິງ ໃຫ້ເຈົ້າໄດ້ລ້ຽງຫລາຍ

ມີລູກຊາຍ ໃຫ້ເຈົ້າໄດ້ລ້ຽງງ່າຍ

ໃຫ້ເຈົ້າຍູທ່າງຈ່າຍ ແຕ່ແກ້ວແຫວນເງິນຄຳ

ໄຊຍະຕຸພະວັງ ໄຊຍະມັງຄະລະ

ໄຊຍະສຸຂະ ສະຫັວດສະດີ

ໃຫ້ເຈົ້າຂຶ້ນເຈົ້າເກີນ ກໍຂ້າເຖີ້ນ ໆ

ຄວາມຟາຍເຫົ້ລາອີກແບບໜຶ່ງ

ສີ ສີ ສິດທິ	ມື້ນີ້ແມ່ນມື້ດີ
ສີ ສີ ສິດທິ	ມື້ນີ້ແມ່ນມື້ຂຶ້ນ
ຂໍໃຫ້ຊຸມເຈົ້າຂຶ້ນ	ປານນ້ຳໄຫລມາ
ຂໍໃຫ້ຊຸມເຈົ້າຂຶ້ນ	ປານນາງສິດາຂຶ້ນນັ່ງແທ່ນ
ນັ່ງແຍງແວ່ນ	ຊົມຮູບແຍງເງົາ
ລືມສະເຫົລາເຮັຍ	ໃຫ້ຊຸມເຈົ້າງາມບໍ່ຮູ້ເສົ້າ
ນ້ຳເຫົ້ລາຈອກນີ້	ຈະໃຫ້ໃຜທົວດໃຜກໍ່ບໍ່ທົວດ
ຈະໃຫ້ໃຜຟາຍ	ໃຜກໍ່ບໍ່ຟາຍ
ຂ້ອຍຈຶ່ງໄດ້ດອກໄມ້ເງິນດອກໄມ້ຄຳ	ນຳມາຟາຍນ້ຳເຫົ້ລາ
ນ້ຳເຫົ້ລາອັນນີ້ຄັນແມ່ນຕົກໃສ່ດິນ	ຂໍໃຫ້ນາງທໍຣະນີມາຊ່ອຍ
	ຄ້ຳເຈົ້າເນີ
ຄັນແມ່ນຕົກໃສ່ນ້ຳ	ຂໍໃຫ້ພະຍານາກມາຊ່ອຍ
	ຊູເຈົ້າເນີ
ຂ້ອຍຈັກທົວດຂຶ້ນພູ	ແລະເທິງຜາ
ໃຫ້ຊຸມເຈົ້າໄດ້ຈົກໄຫເງິນໄຫຄຳ	ເຕັມແຢ້
ຂ້ອຍຈັກທົວດໄປກ້ຳເມືອງແພ່	ແລະເມືອງພວນ
ໃຫ້ຊຸມເຈົ້າໄດ້ແຜ່ນ	ແພກະສາ
ຂ້ອຍຈັກທົວດໄປເມືອງກຸລາ	ແລະເມືອງທ້
ໃຫ້ເຈົ້າໄດ້ເງິນຈໍ້	ແລະເງິນປີ້ງມາໄວ້ເຮັດກ່ຽວ
ຂ້ອຍຈັກທົວດໄປເມືອງສ່ຽວ	ໃຫ້ໄດ້ສ່ຽວສະຫາຍຮັກ
ຂໍໃຫ້ໄດ້ເງິນແລະຄຳ	ຫລວງຫລາຍທັງແທ່ງ
ຄິດອັນໃດ	ຂໍໃຫ້ຊຸມເຈົ້າໄດ້
ໄຄ່ອັນໃດ	ຂໍໃຫ້ຊຸມເຈົ້າມີ
ໃຫ້ໄດ້ເປັນເສດຖີ	ແລະທວຍຄ້າ

ເຕຊານຸພາບແກ່ກ້າ ຜາບໝູ່ຜີມານ
ຂ້ອຍຈັກຫິວດໄປຍ່ານ ກໍ່ຕາເວັນຕົກ
ຂໍໃຫ້ຂຸນເຈົ້າໄດ້ຈົກ ຖົງເງິນຖົງຄຳຮັດສອກ
ຂ້ອຍຈັກຫິວດໄປກໍ່ຕາເວັນອອກ ໃຫ້ໄດ້ປອກເງິນຂາວ
ງາມແພວພາວ ກອງເງິນແໜ້ນອັ່ງ
ນ້ຳອັນນີ້ຈະຢັ່ງເຖິງ ທໍຣະນີດ່ານດ້າວ
ທຸກປະເທດທ້າວ ຝູງເທົ່າລາເທພາ
ກັບທັງເທວະດາ ຝູງຢາຍຢັ້ງຢູ່
ທຸກໝູ່ໄມ້ປ່າໃຫ່ຍ ໄພພະນອມ
ທຸກຈອມເຂົາ ກ້ວາງໆໄກຍາວໂຍດ
ໃນແສນໂກດ ຂີງເຂດຈັກກະວານ
ຂໍໃຫ້ຂຸນເຈົ້າມີບໍຣິວານ ຫລວງຫລາຍເປັນຮ້ອຍ
ຢ່າໄດ້ຄິດຄັ່ງຄ້ອຍ ໃນສິ່ງໃດ ໆ
ຂ້ອຍຈັກຫິວດບາດໜຶ່ງ ໃຫ້ໄດ້ງົວແມ່ລາຍ
ຂ້ອຍຈັກຫິວດບາດສອງ ໃຫ້ໄດ້ຄວາຍເຂົາຟ້ອງ
ຂ້ອຍຈັກຫິວດບາດສາມ ໃຫ້ໄດ້ຄ້ອງເກົ້າກຳ
ຂ້ອຍຈັກຫິວດບາດສີ່ ໃຫ້ໄດ້ຄຳເກົ້າໝື່ນ
ຂ້ອຍຈັກຫິວດບາດຫ້າ ໃຫ້ໄດ້ເຂົ້າລ້ານໝື່ນມາເຍັຍ
ຂ້ອຍຈັກຫິວດບາດຫົກ ໃຫ້ໄດ້ເງິນຄຳແກ້ວ
ຢ່າງຫລວງຫລາຍ
ຂ້ອຍຈັກຫິວດບາດເຈັດ ໃຫ້ມີຜູ້ພາຍຖົງເງິນຖົງຄຳມາໃຫ້

ໂອມອຸອະ ມຸມະມູນມາ ມະຫາມູນມັງ ມູນລັງໂຫນຕຸ
ຍະຖາ ວາຣີວະໂຫ ປຸໂຣ ສັບພະກາລັງ
ຍັງເຕັມດີທຸກມື້ອ ທຸກຍາມ ກໍຂ້າເຖີ້ນ ໔

ຄວາມຟາຍເທົ້ລາອີກແບບໜຶ່ງ

ເອກະ ເອໂກ　　　　ມີກຄະຣຸດໂທ
ຍັງມີກະທາຊາຍຜູ້ໜຶ່ງ　　　　ມັນກຳບາຍເອົາຖົງລາຍ
　　　　ມາຫ້ອຍບ່າ
ແລ້ວຈຶ່ງແບກເອົາໄມ້ສາມງ່າມ　　　　ກັບແຫ້ລງປືນ
ໄປຢືນຢູ່ຮະແວກປ່າ　　　　ແລ້ວຈຶ່ງຫລຽວຂຶ້ນເທິງ
ເຫັນໄມ້ຂາມປ້ອມ　　　　ສາມງ່າມໂກນກາງ
　　　　ມີທາງເລີກແລະກັວາງ
ເປັນນ້ຳສ້າງຜີແປງ　　　　ນາຍພານຈຶ່ງໄປສະແຫວງ
　　　　ດູທຸກຄ່ຳເຊົ້າ
ຍັງມີນົກແຂກເຕົ້າ　　　　ຄາບຮວງເຂົ້າບິນມາ
ຈັບສາຂາຢືນຢູ່　　　　ພ້ອມທັງໝູ່ເພື່ອງນັນ
ບາງຜ່ອງສັບຕອດກັນ　　　　ກວນຍາດ
ບາງຜ່ອງອ້າປາກຄາບ　　　　ກວນກິນ
ບາງຜ່ອງບິນເມືອເທິງ　　　　ສິນແລ້ວ
ບາງຜ່ອງກິນອີ່ມແລ້ວ　　　　ກິ້ງເກືອກຕົກລົງ
ບາງຜ່ອງນອນຫລັບກິນ　　　　ຊີແຊວຊີຊື່ນ
ເຈຕະປຸດໂຕ　　　　ທິສວາ
ນາຍພານເຫັນ　　　　ພິກິນວິປະຫລາດ
ນ້ອຍບໍ່ນານວາງໜ້າ　　　　ຮີບບໍ່ຊ້າເຮວພະລັນ
ມັນຈຶ່ງຜັນຕົນຂຶ້ນ　　　　ໄປດູແຈ້ງແຈບ
ເຫັນແຕ່ເຂົ້າ　　　　ກັບແກບປິນຮຳ
ນ້ຳອັນນີ້ວ່າຝົນຕົກຮຳ　　　　ສັ່ງມາກິນຫວານແຊບຊ້ອຍ
ກິນໜ້ອຍທາກເມົາຫລາຍ　　　　ເມົາບໍ່ຕາຍພໍ່ຊື່ນ
ຜິວ່ານ້ຳອັນອື່ນ　　　　ຄວນຕາຍແລະນາ
ພານຈຶ່ງມະເນມະນາລົງມາ　　　　ປົດເອົາໃບໄມ້
ປົດໄດ້ແລ້ວ　　　　ຈຶ່ງເຮັດເປັນຕວຍ

ຕັກໃສ່ກະບອກ

ແລ້ວຈິ່ງຖອກ ໃສ່ແຫ້ລງປີນ

ແລ້ວຈິ່ງເອົາກັບຄືນ ເມືອຖວາຍພູະບາດ

ມະຫາຣາຊະເຈົ້າ ຈິ່ງປົງພູະຣາຊະອາດຍາ

ໂດຍຄວາມສະໜິດ

ຍັງມີບັນດິດແລະນັກປາດ ຜູ້ສະຫລາດມາພິຈາຣະນາ

ເອີ ອັນນີ້ແມ່ນນ້ຳ ສຸຣາເມໄຣ

ພີ່ນ້ອງໄທເຮືອນໄກ ຕັກໄປເທໃສ່ກະບອກ

ແລ້ວຈິ່ງຖອກໃສ່ແອ່ງ ແລ້ວຈິ່ງແບ່ງມາໃຫ້ຜູ້ຂ້າຟາຍ

ຟາຍໄປໄດ້ທຸກພາກ ຟາຍໄປເໜືອທຸກທີ່

ຂ້ອຍຈັກເຊີນອຳນາດເຈົ້າທີ່ ມາກິນສາເນີ

ເສືອກິນແລ້ວ ເສືອດູສະຫ່ວາງ

ຊວງກິນແລ້ວ ໃຫ້ຊວງຕູກຸ້ມ

ກຸ້ມ, ໃຫ້ເຈົ້າກຸ້ມ ທັງໝູ່ມາໂຮມ

ກຸ້ມ, ໃຫ້ເຈົ້າກຸ້ມ ທັງຄວາຍຢູ່ໃຕ້ລ່າງ

ກຸ້ມ, ໃຫ້ເຈົ້າກຸ້ມ ທັງຊ້າງແລະມ້າ

ທັງຂ້ອຍຂ້າ ຝູງຢູ່ໃນເຮືອນ

ກຸ້ມ, ໃຫ້ເຈົ້າກຸ້ມ ທັງເງິນຄຳຢູ່ໃນໄຖ່

ກຸ້ມ, ໃຫ້ເຈົ້າກຸ້ມ ທັງລູກນ້ອຍໆ ໃນ

ທ້ອງຊິເກີດມາ

ອຸອະ ມຸມະ ມູນມາ ສະຫາໂສດຖີ ພະວັນຕຸ ເຕ໌

ຄວາມສູ່ຂວັນແມ່ຍິງອອກກຳໃໝ່

ສູີ ສູີ ສິດທິ ໄຊຍະຕຸພະວັງ ໄຊຍະມັງຄະລະ

ໄຊຍະມະຫາມຸງຄຸນ ປຸນເປັນດີລ້ຳເລີດ

ວັນນີ້ເປັນວັນປະເສີດ ພ້ອມພຳລືຊາ

ຝູງລຸງຕາແລະພໍ່ແມ່ ມານັ່ງລ້ອມຖ້ຳຮັບເອົາຂວັນ

ຂ້ອຍຈັກເຊີນເອົາຂ້ວນມານດາ ແລະກຸມມາຣາອ່ອນນ້ອຍ
ໜ້າຊື່ນຂ້ອຍໂສພາ ທີ່ອອກກຳມາຊົມຊື່ນ
ເນື້ອກ້ຽງມິ່ນ ໃສງາມດີ
ບັດນີ້ຂ້ອຍຈັກພັນລະນາ ແຕ່ເດີມດາເຄົ້າ
ແຕ່ເຈົ້າເອົາກຳເນີດ ລົງມາເກີດໃນທ້ອງແມ່ມານດາ
ຫລາຍວັນມາບໍ່ນ້ອຍ ນັບອ່ານໄດ້ເຂົ້າເຂດສິບເດືອນ
ແມ່ເຈົ້າເລີຍສະເທືອນ ເຈັບປວດທ້ອງ
ຝູງພີ່ນ້ອງບ້ານໃຕ້ ແລ່ນຂຶ້ນມາຫາ
ຝູງຕານາຍບ້ານເໜືອ ແລ່ນຂຶ້ນມາລ່ຳ
ແມ່ເຈົ້າເຈັບປວດທ້ອງ ຮ້ອງຢູ່ເຣຣິນ
ສິນລະວິນ ແມ່ເຈົ້າລຸກນັ່ງ
ແມ່ເຈົ້າອຸ້ມທ້ອງດິ້ນຢູ່ ຊີຊຸກຊີເຊື່ອນ ບິດເບືອນ
ກົ້ງເກື່ອນໄປມາ
ໃຈມານດາ ເໝືອນຈັກຫລູດລົ້ມ
ແມ່ເຈົ້າເຈັບແຄ່ງ ຝູງພີ່ນ້ອງເຂົ້າມາບີບແຄ່ງ
ໃຫ້ແມ່ເຈົ້າຢູ່ລີລາ
ແມ່ເຈົ້າເຈັບຂາ ຝູງຕານາຍເຂົ້າມາບີບຂາ
ໃຫ້ແມ່ເຈົ້າຢູ່ລີລ້ອຍ
ແມ່ເຈົ້າເຈັບທ້ອງນ້ອຍ ນັ່ງຢູ່ຊີງລີງ
ພໍ່ເຈົ້າຄືວເຄີຍດີງ ເອົາເຊືອກມາມັດ ໃຫ້
ແມ່ເຈົ້າຜູກຈ່ອງ
ນັ່ງຢ່ອງຢໍ້ ເບັ່ງອອກເຕັມແຮງ
ໃຫ້ເຈົ້າອອກມາເຢີ ຈອມແພງລູກແກ້ວ
ຄັນເຈົ້າອອກມາແລ້ວ ມີ້ມທ້ອງແມ່ມານດາ
ເປັນຍິງເຈົ້າຕິກຫງາຍ ເປັນຊາຍເຈົ້າຕິກຂວ້ຳ
ແມ່ເຈົ້າເປັນບ້າປ່ວງຢ້ງມງົວ ມີຄືວຈັບສາຍແຮ່
ເປັນຜູ້ຍິງກຳຫາກດີຫລາຍ ເປັນຜູ້ຊາຍຍັງຊີໄດ້ບວດ
ສ້າງຜະໜວດ ໃນສາສະໜາ

ຍັງຊິໄດ້ບວດທາແທນຄຸນ ບິດາມານດາພໍ່ແມ່
ຝູງພີ່ນ້ອງຈຶ່ງໄດ້ເອົາແມ່ເຈົ້າ ມາອາບນ້ຳສະລ່ວຍສິງສີ
ແມ່ເຖົ້າໝັ້ນຈຶ່ງເອົາມີດ ມາຕັດສາຍແຮ່
ມາແຜ່ສາຍບື
ແມ່ເຖົ້າຍືນຈຶ່ງເອົາແພຜືນດີຜືນງາມ ມາຕຸ້ມຫົ່ມ
ແລ້ວຈຶ່ງເອົາເຈົ້າໃສ່ດັ້ງ ໄປຜອກຜີໂພງຜີພາຍ
ຜີຫຸງແລະຜີເປົ້າ
ຜີນົກເຄົ້າ ໂຕມັນຮ້ອງກຸກກູ
ຄັນແມ່ນລູກສູ ໃຫ້ມາເອົາດຽວນີ້
ຕັ້ງແຕ່ນີ້ ເມືອໜ້າແມ່ນລູກກູ
ແມ່ຈຶ່ງຍົກໃສ່ອູ່ ນອນຢູ່ຂ້າງຄີໄຟ
ໄກວເຈົ້າໄປ ຕິຕ້ອນ ໆ
ແມ່ເຈົ້າກິນນ້ຳຮ້ອນ ປາກເປື່ອຍໂພງສຸກ
ໄຟແຮ່ງລຸກ ແມ່ເຈົ້າແຮ່ງຮ້ອນ
ແມ່ເຈົ້າຮ້ອນ ອິດອ່ອນອໍຣະທວຍ
ມີຈັບບວຍ ຜ່ອງກິນນ້ຳຮ້ອນ
ທຸກຍາກຂ້ອນ ດອມລູກບຸດຕາ
ເວທະນາ ແມ່ເຈົ້າຈິ່ມປ້ອຍ
ຊ້ວນອ່ອນນ້ອຍ ນິ່ງໜ້າຢ່າວອນ
ກຸມມາຣາກຸມມາຣີເຮີຍ ຊ້ວນເຈົ້າຈົ່ງມາສູ່
ໃຫ້ເຈົ້າມານອນອູ່ ສາຍແພງເຈົ້າເນີ
ເຖິງຍາມແລງ ເຈົ້າຢ່າໄດ້ອ້ອນແມ່
ແມ່ເຈົ້າຍົກ ໃສ່ອູ່ສາຍຝ້າຍ
ແມ່ເຈົ້າຢ້າຍ ໃສ່ອູ່ສາຍໄໝ
ເຈົ້າຜູ້ດີ ນອນອູ່ສາຍຝ້າຍ
ເຈົ້າຜູ້ຮ້າຍ ນອນອູ່ສາຍໄໝ
ແມ່ເຈົ້າໄກວ ຈົ່ງໃຈຮັກຂໍ່
ອັນນີ້ຫາກແມ່ນທັມະຊາດພໍ່ ປິດຕາເຈົ້າແລ້ວ

ອັນນີ້ຫາກແມ່ນທັມມະຊາດແມ່ ມານດາເຈົ້າແລ້ວ
ນົມແມ່ຮ້າວ ໃຫ້ເຈົ້າຄ່ອຍດູດກິນ
ແພຜືນດີຜືນງາມ ແມ່ເອົາມາຫົ່ມຕຸ້ມ
ອຸ້ມເຈົ້າໄວ້ ກອດໃສ່ໃນເອິກ
ເດິກຊຸກໄຊ້ ເຈົ້າພັດດູດກິນນົມ
ແມ່ຍັງຊົມ ເຈົ້າຢູ່ບໍ່ເປີດ
ແມ່ກໍາເນີດ ເຂົາຈຶ່ງໝ່າຍຈຶ່ງຊັງ
ເຮັດລັງຕັ້ງເຂົາຈຶ່ງໄລ່ ເຈົ້າໜີມາເກີດ
ເອົາກໍາເນີດ ໃນທ້ອງແມ່ມານດາເຈົ້າແລ້ວ
ລູກແກ່ນແກ້ວ ຈຶ່ງເຕີບໃຫ່ຍຈະເລີນໄວ
ໂຣຄາໄພ ຢ່າໄດ້ມາບຽດຕ້ອງ
ຝູງພີ່ນ້ອງ ຮັກເຈົ້າດັ່ງດວງຕາ
ຈຶ່ງໄດ້ພ້ອມກັນຫາ ຊື່ນາມຂອງເຈົ້າ
ຝູງຜູ້ເຖົ້າ ຫາຣືກຍາມດີ
ເອົາເດືອນປີ ຄູນຫານວັນເກີດ
ມື້ທີ່ເຈົ້າມົ້ມທ້ອງ ຂອງແມ່ມານດາ
ຖືກກັບເວລາ ອຸດຕະມະຣືກ
ເຈົ້າຕົກຖືກ ຍາມອຸດທັງຣາຊາ
ບັດນີ້ຂ້ອຍຈັກເຊີນກຸມມາຣາລູກແກ້ວ ພ້ອມແມ່ມາໂຮມ
ເປັນອາຄົມ ຄາຖາຮຽກຮ້ອງ ວ່າ...
(ຊາຍ) ເອຫິຕາຕະ ປິຍະປຸດຕາ
(ຍິງ) ເອຫິອັມມະ ປິຍະທີຕາ

ປຸເຣຖະ ປາຣະມິງ ທະທະຍັງ ເມ ພິສິນເຈຖະ

ກະໂຣຖະ ວະຈະນັງ ມະມະ

<u>ວ່າ ມາເຢີຂ້ວນເຮີຍ !</u>

ຂ້ວນເຈົ້າມາຮອດແລ້ວ ຢ່າໄດ້ຄັ້ງເຄືອງແຄນ
ຄົນທົ່ວແດນ ຮັກຫອມແຕ່ເຈົ້າ
ຝູງພີ່ນ້ອງ ຕ່າງກໍຊື່ນຊົມບານ

ໃນສົມພານ	ລູກຫລ້ານເກີດໃໝ່
ບັດນີ້ຂ້ອຍຈັກເອົາຂ້ວນແກ່ນໄທ້	ຂອງແມ່ມານດາ
ທີ່ໄດ້ຖືພາມານ	ແສນໜັກໜ່ວງທ້ອງ
ອຸ້ມທ້ອງໄວ້	ເຖິງເຂດສິບເດືອນ
ເດີນເຊເຊືອນ	ແມ່ອຸ້ມຫອບທ້ອງ
ໜັກໜ່ວງຈ່ອງ	ຍາມຍ່າງໄປມາ
ແຕ່ໃຈຂອງມານດາ	ບໍ່ເຄີຍໄດ້ປະໝາດ
ຍົວຣະຍາດຍ້າຍ	ແມ່ກໍຄ່ຽມຄຶມດີ
ບໍ່ໃຫ້ມີແນວໃດ	ສະເທືອນເຖິງເຈົ້າ
ກ່ຽວກັບລູກແກ່ນເຫົ້າງາ	ທີ່ເນົາຢູ່ໃນຄັນ
ຈົນເຖິງວັນ	ເຈົ້າໄດ້ປະສູດ
ລູກແກ້ວເກີດ	ມົ້ມຈາກຄັນມາ
ທັງປິຕາມານດາ	ກໍດີໃຈຊື່ນຊ້ອຍ
ທີ່ໄດ້ມີລູກນ້ອຍ	ສືບໜໍ່ແທນວົງ
ບັດນີ້, ກໍຈິ່ງໄດ້ຮຍກຮ້ອງ	ຕຸ້ມເຂົ້າຫອມຂ້ວນ

ວ່າ ມາເຢີຂ້ວນເຮີຍ !

ຂວັນແມ່ໄດ້ອຸ້ມທ້ອງ	ຖະໜອມລູກໃນຄັນກໍດີ
ຂ້ວນຂອງແມ່ເຊຊວນ	ຍາມເດີນທີລນັ່ງກໍດີ
ຂ້ວນຂອງແມ່ແຄັນຄັ່ງ	ປວດເມື່ອຍກາຍາກໍດີ
ຂ້ວນມານດາ	ນອນສະແຄງອຸ້ມທ້ອງ
ທີລບຢູ່ທ້ອງ	ຝັນທ່ຽວທາງໄກ
ຝັນໄດ້ໄປ	ທ່ຽວດົງໜົ້ນປ່າ ກໍໃຫ້ ມາສາມື້ນີ້ວັນນີ້
ຂ້ວນແມ່ຝັນໄປຄ້າ	ໄດ້ທ່ອນຄຳແດງ ກໍໃຫ້ ມາສາມື້ນີ້ວັນ ນີ້
ຂວັນຈອມແພງ	ມານດາແກ່ນແກ້ວ
ຄັນລູກເກີດມົ້ມແລ້ວ	ໃຫ້ເຈົ້າເຂື່ອນແຂງດີ
ວ່າ ດູຣາລູກຮັກ	ຂອງພໍ່ແລະແມ່

ບຸນແຜ່ກ້ວາງ ສືບສ້າງປາຣະມີ
ຈິ່ງມາສະເຫີວຍຄວາມຍິນດີ ດອມຍາດພີ່ນ້ອງ
ທັງພວກພ້ອງ ຝູງໝູ່ວົງວານ
ໃຫ້ເຈົ້າມາ ນອນອູ່ສາຍໄໝ
ມາທີງຜ້າສະໄບ ຜືນງາມຜົວຜ່ອງ
ມາຊົມມຸກແກ້ວສ່ອງ ດອມແມ່ມານດາ
ມາຊົມດວງມາລາ ດອມພໍ່ແລະແມ່
ຂ້ວນເຈົ້າມາຮອດແລ້ວ ໃຫ້ເຈົ້າໃຫ່ຍພຽງລຸງ
ໃຫ້ເຈົ້າສູງພຽງປ້າ
ໃຫ້ເຈົ້າຈຳເລີນໜ້າ ຢູ່ສະຫວັດສະດີ

<u>ວ່າ ມາເຢີຂ້ວນເຮີຍ !</u>

ມາຢູ່ມຸ້ງດອມໝອນ ມາຢູ່ນອນດອມພໍ່ດອມແມ່
ໃຫ້ເຈົ້າມາເປັນແກ່ ຈະເລີນຄວາມຍິນດີ
ຂ້ວນລູກເຈົ້າ ກໍໃຫ້ແລ່ນມາລີລາ ໆ
ຂ້ວນມານດາ ກໍໃຫ້ແລ່ນມາລີ້ລາຍ ໆ
ມາຢູ່ຄ້າຍ ຮຽງຮ່ວມບຸດຕາ
ໃຫ້ມາຊົມມາລາ ດອມຜົວແລະລູກ
ໃຫ້ເຈົ້າມາຜູກໝັ້ນ ຍີນຍິ່ງເທັຍຣະຄາ
ໃຫ້ເຈົ້າໝັ້ນ ປານແຜ່ນຫີນແລງ
ໃຫ້ເຈົ້າແຂງ ປານແຜ່ນຫີນລາດ
ໃຫ້ເຈົ້າໝັ້ນ ປານລ່ຽມອາດເສົາສຸເມຣ
ໃຫ່ຍພຽງຕໍ ເຈົ້າຢ່າໄດ້ຫັກ
ໃຫ່ຍພຽງຫລັກ ເຈົ້າຢ່າໄດ້ໂຄ່ນ
ຢ່າໄດ້ໝົ່ນເໝືອນຕອງ ຢ່າໄດ້ໝອງເໝືອນເຖົ່າ
ຢ່າໄດ້ເສົ້າເສັຍສີ
ໃຫ້ເຈົ້າມີອາຍຸຍືນຍາວ ຢ່າໄດ້ຖ່ອຍເຖົ້າ
ຕາບຕໍ່ເທົ້າ ຮ້ອຍເອັດພູະວັດສາ ກໍຂ້າເຖີ້ນ
ຈັດຕາໂຣ ທັມມາ ວັດທັນຕິ ອາຍຸ ວັນໂນ ສຸຂັງ ພະລັງ ໆ

ຄວາມຜູກແຂນແອນ້ອຍ

ມາເຢີຂັວນເຮີຍ !

ມາຢູ່ເຮືອນ ນຳພໍ່ນຳແມ່
ມາຢູ່ນຳເຖົ້ານຳແກ່ ນຳລຸງນຳຕາ
ກິນເຂົ້າເຈົ້າຢ່າອິມ ກິນໜົມເຈົ້າຢ່າຮາກ
ເຂົ້າຕິກປາກ ເຈົ້າຢ່າຄາຍ
ກິນເຂົ້າທໍ່ໄຂ່ເປັດ ໃຫ້ເຈົ້າໜ້າໃຫ່ຍ
ກິນເຂົ້າທໍ່ໄຂ່ໄກ່ ໃຫ້ເຈົ້າຕຸ້ຍເຈົ້າພີ
ໃຫ້ເຈົ້າພີຄືໝາກຟັກ ໃຫ້ເຈົ້າໜັກຄືໝາກແຕງ
ໃຫ້ເຈົ້າມີຣິດທີແຮງ ຜາບມານທັງຄ້າຍ

ອາຍຸ ວັນໂນ ສຸຂັງ ພະລັງ ໆ

ຄວາມຜູກແຂນແອນ້ອຍອີກ

ຝ້າຍດ່ອນຕາງຄຳ ຝ້າຍດຳຕາງແກ້ວ
ຂ້ອຍຜູກແລ້ວ ໃຫ້ເຈົ້າໃຫ່ຍສູງມາ
ໃຫ້ເຈົ້າໃຫ່ຍພຽງລຸງ ໃຫ້ເຈົ້າສູງພຽງອາວ
ໃຫ້ເຈົ້າຍີນເຈົ້າຍາວ ຄືພໍ່ຄືແມ່
ໃຫ້ເຈົ້າເຖົ້າເຈົ້າແກ່ ຄືລຸງຄືຕາ
ຝົນຕົກເຈົ້າຢ່າໄດ້ໄປອື່ນ ຟ້າຂື້ນເຈົ້າຢ່າໄດ້ໄປໄກ
ໃຫ້ເຈົ້າໃຫ່ຍ ຄືໜໍ່ໄມ້ທີກແຄມທາງ
ໃຫ້ເຈົ້າໃຫ່ຍ ຄືໜໍ່ໄມ້ພາງແຄມຫ້ວຍ
ໃຫ້ເຈົ້າໃຫ່ຍຄືກ້ວຍ ຕົ້ນຕຳງາມເລິງ
ໃຫ່ຍພຽງຕໍ່ ເຈົ້າຢ່າໄດ້ທັກ
ໃຫ່ຍພຽງຫັລກ ເຈົ້າຢ່າໄດ້ໂຄ່ນ
ຢ່າໄດ້ໝົ່ນເໜືອນຕອງ ຢ່າໄດ້ໝອງເໜືອນເຖົ່າ
ຢ່າໄດ້ເກົ່າເສັຍສີ

ໃຫ້ເຈົ້າຮຸ່ງ ຄືແສງພະຈັນ

ໃຫ້ເຈົ້າມີວັນ ຄືແສງພະອາທິດ

ໃຫ້ເຈົ້າມີຣິດ ຄືພະໂມກຄັລລາ

ອາຍຸ ວັນໂນ ສຸຂັງ ພະລັງ ໆ

ການເຊີນຂວັນທົ່ວໄປ

ການສູ່ຂວັນ : ຜູ້ເປັນເຈົ້າຂອງຂວັນເຂົ້າມານັ່ງໃກ້ພາຂວັນ ແລ້ວຕັ້ງຈິດອະທິດຖານ ຂໍໃຫ້ມີຄວາມສຸກຄວາມຈະເລີນ, ຜູ້ສູດກໍ່ຕັ້ງຈິດອະທິດຖານຕໍ່ສິ່ງສັກສິດ ແລ້ວຈຸດທູບທຽນວຽນທົວ ຂາບພະພຸດທະຮູບ ແລະພະສົງ ມືຈັບດ້າຍມຸງຄຸນ ເຈົ້າຂອງຂວັນເອົາມືຂວາຈັບພາຂວັນ ຜູ້ເປັນໝໍພອນປ່າວປະກາດວ່າ :

ສັກເຄ ກາເມ ຈະ ຣູເປ ຂິຣີສິຂະຣະ ຕະເຕ ຈັນຕະລິກເຂ ວິມາເນ ທີເປ ຣັດເຖ ຈະ ຄາເມ ຕະຣຸວະນະຄະຫະເນ ເຄຫະວັດຖຸມຫີເຂດເຕ ພູມມາຈາຍັນຕຸ ເທວາ ຊະລະຖະລະ ວິສະເມ ຍັກຂະຄັນທັບພະນາຄາ ຕິຖັນຕາ ສັນຕິເກຍັງ ມຸນີວະຣະວະຈະນັງ ສາທະໂວ ເມ ສຸນັນຕຸ.

ທັມມະສະວະນະກາໂລ ອິຍັມພະທັນຕາ

ທັມມະສະວະນະກາໂລ ອິຍັມພະທັນຕາ

ທັມມະສະວະນະກາໂລ ອິຍັມພະທັນຕາ.

ເມື່ອປ່າວສັກເຄເທວະດາຈົບແລ້ວ ໃຫ້ວ່າ :

ສັບພະພຸດທານຸພາເວນະ ສັບພະທັມມານຸພາເວນະ ສັບພະສັງຄານຸພາເວນະ ສັບພະໂສດຖີ ພະວັນຕຸ ເຕ.

ເມື່ອຈົບແລ້ວ ຜູ້ເປັນໝໍພອນຈິ່ງເຂົ້າສູ່ບົດສູດຂວັນ ໂດຍເລືອກເອົາຄຳສູດຂວັນ ທີ່ສອດຄ່ອງ ເໝາະສົມກັບຈຸດປະສົງ ເປົ້າໝາຍຂອງວຽກງານທີ່ຈັດຂຶ້ນເຊັ່ນ ສູດຂວັນອອກກັມໃໝ່, ສູດຂວັນສ້າງຄອບຄົວໃໝ່, ສູດຂວັນຕ້ອນຮັບປີໃໝ່ ແລະອື່ນ ໆ.

ຄໍາເຊີນຂ້ວນທົ່ວໄປ

ສິ ສິ ສິດທິພູຊພອນ ບໍວອນແວນວິເສດ
ອະເນກະເຕໂຊ ໄຊຍະມັງຄະລະ
ມະຫາສິຣິມັງຄະເຣດ ສາດຕະເພດພ້ອມອາຄົມ
ຊຸມບຸຣົມ ປຸນແຕ່ງແລ້ວ
ໃຫ້ລູກແກ້ວ ອອກກິນເມືອງ
ຣິດທິເຮືອງ ທະຣິງແທ່ນ
ມື້ນີ້ແມ່ນ ມະຫາຄຸນ
ຊຸມແຖນ ດາແຕ່ງແລ້ວ
ໃຫ້ລູກແກ້ວ ກົ່ງລົງມາ
ເປັນຣາຊາ ສືບສ້າງ
ເມືອງມິ່ງກ້ວາງ ນາຄອງ
ຊຸມເຈືອງປອງ ເປັນໂຊກ
ໄຕຣໂລກ ຍ່ອມລືຊາ
ທະຣິງອານຸພາວາ ຍວດຍິ່ງ
ເປັນເຈົ້າຈອມມິ່ງ ເມືອງແມນ
ແສນເມືອງ ມາຊ່ອຍຄໍ້າ
ມື້ນີ້ຊໍ້າ ຄູນຄືງ
ພູຍາຈັກທະຣິງ ທິດສະຣາດ
ພາມມະນາດ ເລົ່າແຖມພອນ
ພູະອິສວນ ຫລອນແຖມໂຊກ
ພູະນາຣາຍໂຍກ ສິດທິໄຊ
ທ້າວສະຫັດສະໄນ ປະສາດຝົນທ່າແກ້ວ
ໃຈຜ່ອງແຜ້ວ ບໍຣິສຸດ
  ອຸດຕະມະໂຊກ ອຸດຕະມະໂຍກ
  ອຸດຕະມະດິຖີ ອຸດຕະມະນາທີ
  ອຸດຕະມະສີ ພິລາດ

ອິນທະພາດພ້ອມ ໄຕຣຍາງ
ທັງນາວາງ ຄາດຄູ່
ພ້ອມກັນຢູ່ ສອນລອນ
ອາທິດຈອນ ຈັນທະຣິກ
ອັງຄານຖືກ ມະຫາໄຊ
ພຸດ ປະຫັດໄປ ເປັນໄຊກ
ສຸກ ເສົາໂຍກ ເດດມຸງຄຸນ
ອັນເປັນຜົນ ຫລາຍປະໂຫຍກ
ອຸດຕະມະໂຊກ ແທ້ດີຫລີ
ມະເຫສັກຂີ ທີລາງລໍ້າໂລກ
ໃຫ້ຫາຍທຸກໂສກ ນານາ
ພູ່ຍະອະໄພຣາຊາ ຂຶ້ນທະຣິງແທ່ນ
ຫາຍໂພຍແມ່ນ ວັນດີ
ກັນທາຊາລີ ເມືອຮອດປູ່
ສະຖິດຢູ່ ເຢັນໃຈ
ພູ່ຍະຍາສີສົນໄຊ ພູວະນາດ
ໄປນິມົນຣາດ ບຸດຕາ
ໃຫ້ເປັນຣາຊາ ດັ່ງເກົ່າ
ເປັນເຈົ້າເລົ່າ ສອງທີ
ວັນນີ້ ເປັນວັນ ດີຖີທັງຫ້າ
ເຈົ້າຟ້າ ເລົ່າແຖມຄຸນ
ພິມມະ ປຸນປອງຣາດ
ພ້ອມແກ້ວອາດ ສິບປະການ
ວໍຣະສານ ຕົວອິງອາດ
ຂຶ້ນສູ່ອາດ ເຣງໂຍ
ວັນນີ້ ໂພທິຍານ ໜໍ່ຟ້າ
ເຕຊະກ້າ ສະເທືອຍເມືອງ
ພູ່ຍະບຸນເຮືອງ ຄຸ້ມຄອງໄພ່

ທິດສະຣາດ ໄຕ່ຕາມທັມ
ຈຳນຳສັດ ໃຫ້ພົ້ນ
ວັນນີ້ ດີລື່ນລົ້ນ ປະໝານ
ທະນຸມານ ໃຈຜ່ອງແຜ້ວ
ນິຣະມິດຜາສາດແກ້ວ ກໍ່ແປງເມືອງ
ນາຄອງເຮືອງ ທິດສະຣາດ
ຊຽງເຄືອອາດ ຂຸນເມັງ
ເງິນຍາງເຊັງ ຄັບຄັ່ງ
ສະພັ່ງພ້ອມ ຝູງໝູ່ເສນາ
ເທວະດາມາເປັນ ບໍຣິວານແວດລ້ອມ
ມາຢູ່ອ້ອມ ທຸກໝູ່ໂຍທາ
ທັງນາຄາ ນາຄີຄຸດນາກ
ທຸກພາກພ້ອມທໍຣະນີ ເມກຂາຣາສີສາວທ່າວ
ເຊື້ອຖ່ອນທ້າວ ປະຣະເມສວນ
ບຸຣິມມະບໍວອນ ຣິດທີກ້າ
ເອົາແຜ່ນຟ້າ ຂີ່ຕາງຍານ
ກຸມພະກັນດານ ຍົມມະຣາດ
ຈະຕຸໂລກອາດ ອິງຫລວງ
ທັງຄວງບິນ ບຸຣິມມະເຈົ້າຟ້າ
ຊິງເດດກ້າ ກ່ວາສິ່ງທັງຫລາຍ
ຈິ່ງຢັ່ງຢາຍພູະພອນ ແລະຄວງຈຸ້ມ
ລົງມາຄຸ້ມ ຝູງຄົນ
ໃຫ້ຫາຍກັງວົນ ແລະເດືອດຮ້ອນ
ໂພຍພະຍາດຂ້ອນ ພ່າຍໜີໄປ
ທັງພາຍໃນ ແລະພາຍນອກ
ແດນດ້າວ ຂອກຄີຣີ
ພູະລືສີ ສິດທິເດດ
ຈົບເພດພ້ອມ ອາຄົມ

ນິຍົມປະສິດປະສາດ ພອນແກ້ວອາດດວງດີ
ມື້ນີ້ແມ່ນມື້ສົບ ວັນນີ້ແມ່ນວັນຊອບ
ຣືກປະກອບຍາມດີ ເປັນຍາມສິດທິໄຊຍະ
ມຸງຄຸນອະດິເຣກ
ອະເນກະສະຫັວດສະດີ ແຫ້ດີທີ່ລ
ບັດນີ້, ຝູງຂ້ານ້ອຍ ໃຈຊື່ນຊ້ອຍຍິນສະອອນ
ຂໍໂອມອ່ານອວຍພອນ ໃຫ້ແກ່ທ່ານ... ...
ຜູ້ຊິງຄຸນຄາມມາກ ຂ້ານ້ອຍຫາກຂໍວອນ
ຖວາຍພູະພອນດວງວິເສດ ຂໍໃຫ້ທ່ານ... ...
ສິມເຈດແມ້ງ ມະໂນໝາຍ
ສັບພະອຸປັດທະວະອັນຕາຍ ຖ້ວນທຸກສິ່ງ
ຢ່າໄດ້ມາຂອດຂິ້ງຂັນໃຈ ຂໍໃຫ້ທ່ານ... ...
ຈົ່ງມີໄຊຊະນະ ອັນລ້ຳເລີດ
ດ້ວຍອຳນາດຄຸນປະເສີດ ສາມປະການ ຄືວ່າ
ຄຸນພູະສັບພັນຍຸດຕະຍານ ຕົນຜ່ານແຜ້ວ
ທັງຄຸນແກ້ວ ແຫ່ງດວງທັມ
ຄຸນພູະສັງຄະຣັຕນະ ນຳທຸ້ມທໍ່
ເປັນວຽງແກ້ວກໍ່ ປາການ
ຕາງພິນທານແວດລ້ອມ ຂໍໃຫ້ທ່ານ... ...
ຈົ່ງປະສິດປະສາດພ້ອມ ດ້ວຍດວງພອນ ຄື
ອາຍຸ ວັນນະ ສຸຂະ ພະລະ ອະໂຣຄາຍະ ປະຕິພານະ
ອະທິປະຕິ ຄຸນາກອນທຸກເຍື່ອງ
ມີເຕຊານຸພາບ ກະເດື່ອງທົ່ວທໍຣະນີ
ເໝືອນດັ່ງແສງພູະສຸຣີ ໃສສ່ອງໂລກ
ຫາຍທຸກໂສກ ຢູ່ສະຫັວດສະດີ
ຊະຍະຕຸພະວັງ ຊະຍະມັງຄະລັງ
ຈົ່ງເປັນໄຊຍະມຸງຄຸນ ອັນແວນຍິ່ງ
ຖ້ວນທຸກສິ່ງ ບໍ່ຣະບວ ກໍຂ້າເຖີ້ນ ฯ

ສູດຂ້ວນທຳມະດາ

ຄົນທຳມະດາທີ່ບໍ່ເຈັບໄຂ້ໄດ້ປ່ວຍ ແຕ່ເມື່ອໄດ້ໜີໄປຢູ່ບ່ອນອື່ນໄດ້ຫລາຍເດືອນ ຫລາຍປີແລ້ວ ກັບມາ ຫຼື ຈະຍ້າຍໄປຢູ່ບ້ານອື່ນເມືອງໄກກໍດີ, ຜູ້ເຮັດຣັດຖະການໄດ້ເລື່ອນຍົດ ເລື່ອນຂັ້ນກໍດີ, ເຈົ້ານາຍຜູ້ທີ່ໂຄຣົບນັບຖື ນັບຖືມາຢື້ຢາມຖາມຂ່າວກໍດີ ຫຼື ຜູ້ທີ່ໝໍໂທນທວາຍວ່າຈະເຈັບໄຂ້ໄດ້ປ່ວຍ ຊາຕາຂາດ ທາດທັກ ຫລັກປີຫລັກເດືອນ ໂຄ່ນກໍດີ ໃຫ້ເຮັດພິທີສູດຂ້ວນ ເພື່ອເປັນສີຣິມຸງຄຸນແກ່ຄົນເຫຼົ່ານັ້ນດ້ວຍ ຄຳສູດຂ້ວນມີດັ່ງຕໍ່ໄປນີ້ :

ສີ ສີ ສິດທິພູະພອນ	ປະວໍຣະແອນວິເສດ
ອະຕິເຣກະເຕໂຊ	ໄຊຍະມັງຄະລາຕິເຣກ
ອະເນກະສະຫວັດສະດີ	ຄວາມສຸຂາ ຄວາມສາມັກຄີ
ຄວາມເມດຕາໄມຕຣີ	ຈົ່ງມີແກ່ທ່ານ... ...
ໃຫ້ຢູ່ສຸກສຳລານ	ຢ່າຮູ້ເຖົ້າ
ຕາບຕໍ່ເທົ້າ	ທັງພະຣິຍາ
ທັງບຸດຕິບຸດຕາ	ແລະລູກເຕົ້າ
ຂໍໃຫ້ໄດ້ເປັນເຈົ້າເປັນໃຫ່ຍ	ກ່ວາເພິ່ນທັງຫລາຍ
ສຸກສຳບາຍລ້ຳເລີດ	ຂ້າແກ້ວເກີດກາງໂຮງ
ທັງຣີພົນແລະໄພ່ນ້ອຍ	ຢ່າຄາດຄ້ອຍຈາກຊີວັງ
ຂໍໃຫ້ມີອາຍຸຍືນຍາວ	ຢ່ານ້ອຍ
ໃຫ້ໄດ້ຮ້ອຍຂວບເຂົ້າ	ຍາວນານ
ຝູງໝູ່ສັດຕູມານ	ຢ່າມາບັງບຽດໄດ້
ຂໍໃຫ້ເທບພະໄທ້	ຜູ້ຕັດສ່ອງສໍຣະຍານ
ລົງມາໂຈມຂ້ວນຫລານ	ເຈົ້າຂຶ້ນໃຫ້ໃຫ່ຍສູງ
ລົງມາໂຈມຂ້ວນຫລານ	ເຈົ້າຂຶ້ນໃຫ້ໃຫ່ຍກ້ວາງ
ວ່າ ສີ ສີ ມື້ນີ້ແມ່ນມື້ດີ	ສີ ສີ ມື້ນີ້ແມ່ນມື້ໝັ້ນ
ໝັ້ນ, ໃຫ້ເຈົ້າໝັ້ນ	ຍິ່ງກ່ວາກ້ອນຜາແອ່ນ

ໝັ້ນ, ໃຫ້ເຈົ້າໝັ້ນ ຍິ່ງກ່ວາແທ່ນຜາຈວງຜາຈັນ
ໝັ້ນ, ໃຫ້ເຈົ້າໝັ້ນ ຍິ່ງກ່ວາພູເຂົາຫລວງໄກລາດ
ໝັ້ນ, ໃຫ້ເຈົ້າໝັ້ນ ຍິ່ງກ່ວາລຽມອາດເສົາສຸເມຣ
ໝັ້ນ, ໃຫ້ເຈົ້າໝັ້ນ ຍິ່ງກ່ວາດວງຕາເວັນໃສສ່ອງແຈ້ງ
ມື້ນີ້ ແມ່ນມື້ສະງ້າ ໝໍເຖົ້າວ່າມື້ແຂງ
ວັນນີ້ ແມ່ນວັນດີ ວັນດີຖືອະມຸດຕະໂຊກ
ສິດທິໂຍກພ້ອມ ອຸດຕະມັງຄະລາ
ເພິ່ນຈິ່ງໄດ້ໄປອາຣາທະນາ ອາຈານຜູ້ສະຫລາດ
ມານັ່ງອາດ ຄູນຂ້ວນ
ຄູນຂ້ວນຂຶ້ນ ສະເໝີຈອມຜາສາດ
ຄູນຂ້ວນຂຶ້ນ ສະເໝີທາດສີຈັນ
ມື້ນີ້ ແມ່ນມື້ສົນ ວັນນີ້ແມ່ນວັນຊອບ
ມື້ປະກອບຍາມດີ
ເຊິ່ງເປັນວັນໄຊຍະດິຖີ ອະມຸດຕະໂຊກ
ໂຕກໃບນີ້ ແມ່ນໂຕກໄມ້ຈັນ
ຂັນໃບນີ້ ແມ່ນຂັນໄມ້ແກ້ວ
ຂຸນນາງຕົກແຕ່ງແລ້ວ ຈິ່ງໃຫ້ຂ້ອຍຄູນຂ້ວນ
ວັນນີ້ແມ່ນວັນດີ ຂ້ອຍຈິ່ງສູ່
ຂ້ວນແກ້ວກູ່ ເກີດກາງເມືອງ
ບຸນເຮືອງງາມ ຍິ່ງຍ້ອຍ
ທັງໝຸ່ມນ້ອຍ ແລະປານກາງ
ທັງສາວຮາມ ແລະເຖົ້າແກ່
ພໍ່ແມ່ພ້ອມ ລູກເຕົ້າແລະນາຣີ
ທັງເສດຖີ ແລະທວຍຄ້າ
ຖ້ວນໜ້າໝູ່ ຊາວເມືອງ
ຂຸນສີເຮືອງ ເລີດຟ້າ
ຂຶ້ນຂີ່ຫລັງມ້າແກ້ວ ເອີ້ນຮຽກເອົາຂ້ວນ

ວ່າ ມາເຍີຂ້ວນເຮີຍ !

ຂ້ວນທັງມວນ	ມາພະລັນພໍ່າພ້ອມ
ເຖົ້າແກ່ມານັ່ງລ້ອມ	ເຈົ້າຢູ່ສອນລອນ
ໝົດແຕ່ເຮົາທີ່ນີ້ຍໍພາຂ້ວນຂື້ນ	ມັນບໍ່ມີແກນ
ໝົດແຕ່ເຮົາທີ່ນີ້ຍໍພາຂ້ວນຂື້ນ	ມັນບໍ່ມີໄດ້
ດັ່ງນັ້ນ ຈື່ງຂໍເຊີນເທບພະໄທ້	ເຈົ້າຜູ້ມີບຸນ
ມາຊ່ອຍຄູນຊ່ອຍຍໍ	ຂ້ວນຫລານເຈົ້າເຢີ
ຂ້ອຍຈັກເຊີນເອົາເທບພະເຈົ້າ	ຜູ້ຢູ່ກ້ຳຝ່າຍເໜືອ
ມາຊ່ອຍຄູນຊ່ອຍຍໍ	ຂ້ວນຫລານເຈົ້າເຢີ
ຂ້ອຍຈັກເຊີນເອົາເທບພະດາ	ຜູ້ຢູ່ກ້ຳຝ່າຍໃຕ້
ມາຊ່ອຍຄູນຊ່ອຍຍໍ	ຂ້ວນຫລານເຈົ້າເຢີ
ຂ້ອຍຈັກເຊີນເອົາເທບພະຖ່ອນໄທ້ຜູ້ຢູ່ທໍ່ອາດສະນະຄໍາ	
ມາຊ່ອຍຄູນຊ່ອຍຍໍ	ຂ້ວນຫລານເຈົ້າເຢີ
ສິບໝໍ່ສະດໍາ	ລຸກມາແຕ່ພູນ້ອຍ
ມາຊ່ອຍຄູນຊ່ອຍຍໍ	ຂ້ວນຫລານເຈົ້າເຢີ
ສາມສິບໝໍ່ນ້ອຍ	ລຸກມາແຕ່ພູຫລວງ
ມາຊ່ອຍຄູນຊ່ອຍຍໍ	ຂ້ວນຫລານເຈົ້າເຢີ
ສີ່ສິບໝໍ່ຫລວງ	ລຸກມາແຕ່ເມືອງຟ້າ
ມາຊ່ອຍຄູນຊ່ອຍຍໍ	ຂ້ວນຫລານເຈົ້າເຢີ
ຫ້າສິບໝໍ່ກ້າ	ລຸກມາແຕ່ພູທໍ່ພູໂຮງ
ມາຊ່ອຍຄູນຊ່ອຍຍໍ	ຂ້ວນຫລານເຈົ້າເຢີ
ໝໍ່ອັນນີ້	ແມ່ນໝໍ່ຊ່າງຈາ
ຄາຖາອັນນີ້	ແມ່ນຄາຖາແຕ່ເຄົ້າ
ໝໍ່ເຖົ້າ	ແຕ່ບູຮານ
ເຈັດໃບຍໍເພິ່ນກໍ່ເອົາມາໜຸນ	ເຈົ້າແລ້ວ
ເຈັດໃບຄູນເພິ່ນກໍ່ເອົາມາຄໍ້າ	ເຈົ້ແລ້ວ
ມີທັງນໍ້າເຕົ້າແກ້ວ	ອອກບໍ່ກິນເຢັນ
ກໍ່ຫາກເຢັນດີທີ່ລ	ເໜືອນນະທີທັງຫ້າ
ໃຫ້ເຈົ້າມີຂ້ອຍຂ້າ	ຫລວງຫລາຍ

ມີງົວຄວາຍ　　　　　　　　　ແພ່ເຕັມຄອກ
ຊ້າງມ້າອອກ　　　　　　　　　ເນືອງນັນ
ມີຄຳຕັນ　　　　　　　　　　ແກ້ວວິເສດ
ໜໍ່ແກ້ວເກີດກາງເມືອງ　　　　　ຄຳເຫຼືອງມີຢ່າໄຮ້
ເອົາມາໄວ້ກິນທານ　　　　　　ສ້າງສິລທານໄປພາຍໜ້າ
ຂໍອັງເຊີນຜູ້ແກ່ກ້າ　　　　　　ຊື່ທະນຸມານ
ທັງຄີນທານ　　　　　　　　　ຊື່ທ້າວສັງຄີບ
ຖືບມ້າແກ້ວ　　　　　　　　　ເອີ້ນຮຽກເອົາຂັວນ

<u>ວ່າ　ມາເຢີຂັວນເຮີຍ !</u>

ຂັວນເຈົ້າໄປປູກພູເປັນຮາກ　　　　ກໍໃຫ້ມາສາມື້ນີ້ວັນນີ້
ຂັວນເຈົ້າໄປປູກໝາກເປັນໃບ　　　ກໍໃຫ້ມາສາມື້ນີ້ວັນນີ້
ຂັວນເຈົ້າໄປປູກທິວສິງໄຄຊຽວອ່ອນ ກໍໃຫ້ມາສາມື້ນີ້ວັນນີ້
ຂັວນເຈົ້າໄປຕັ້ງຕ້ອນກິນປາ　　　ກໍໃຫ້ມາສາມື້ນີ້ວັນນີ້
ຂັວນເຈົ້າໄປເຮັດນາກິນເຂົ້າ　　　ກໍໃຫ້ມາສາມື້ນີ້ວັນນີ້
ຂັວນເຈົ້າໄປປັ້ນເບົ້າຫໍ່ລເງິນຄຳ　　ກໍໃຫ້ມາສາມື້ນີ້ວັນນີ້

<u>ວ່າ　ມາເຢີຂັວນເຮີຍ !</u>

ມານຳທາງຄີນທ່ອງ　　　　　　　ມານຳປ່ອງຄີນທຽວ
ມາກິນເຂົ້າຕົ້ມ　　　　　　　　ແລະຂອງຫວານ
ມາກິນນ້ຳຕານ　　　　　　　　ແລະນ້ຳອ້ອຍ
ໝໍພອນເອີ້ນຈ້ອຍ ໆ　　　　　　ຂັວນເຈົ້າໃຫ້ຕ່າວມາ

<u>ວ່າ　ມາເຢີຂັວນເຮີຍ !</u>

ສາມສິບສອງຂັວນ　　　　　　　ໃຫ້ມາເຕົ້າ
ເກົ້າສິບສອງຂັວນ　　　　　　　ໃຫ້ມາໂຮມ
ທັງຂັວນໃນ　　　　　　　　　ແລະຂັວນນອກ
ຂັວນຂອກ　　　　　　　　　　ແລະຂັວນກາງ
ຂັວນແອວບາງ　　　　　　　　ກີມກົ່ວ
ຂັວນທ້ອງນ້ອຍ　　　　　　　　ແລະຮາວນົມ
ຂັວນຜົມດຳ　　　　　　　　　ດູອາດ

ຂ້ອນປາກຕ້ານ ຈາຣະຈາ
ຂ້ອນຕາແລະຂ້ອນຄິ້ວ ຂ້ອນນິ້ວແລະຂ້ອນແຂນ
ຂ້ອນຂາແພນ ກາງໄຫ່ລ
ລະໃໝ່ນັ້ນຂ້ອນຫູ ຂ້ອນດັງດູດົມກິ່ນ
ໜັກໜິ່ນຂ້ອນຫົວໃຈ ກໍໃຫ້ມາສາມັ້ມື້ວັນນີ້

ວ່າ ມາເຢີຂ້ອນເຮີຍ !

ກິນເຂົ້າຜີ ໃຫ້ເຈົ້າຮາກ
ຄຶ່ງວໝາກຜີ ໃຫ້ເຈົ້າຄາຍ
ໃຫ້ເຈົ້າຄືນມາດາຍ ທ້ອງເປົ່າ
ມາຢູ່ພີ້ ກິນເຂົ້າຖົ່ວງາ
ມາຢູ່ພີ້ ກິນປາກັບໄຂ່
ໃຫ້ມາຢູ່ສືບສ້າງ ດອນແມ່ພູ່ມານດາ
ທັງປິຕາວົງສາ ແລະເຊື້ອໂຄດ
ຢ່າກິ້ວໂກດ ໂກທາ
ໃຫ້ເຈົ້າມາຮັກສາ ຕີນຕົວເຈົ້າ
ຕາບຕໍ່ເທົ້າ ຍືນຍົ່ງເທັຍຣະຄາ

ຈັດຕາໄຣ ທັມມາ ວັດທັນຕິ
ອາຍຸ ວັນໂນ ສຸຂັງ ພະລັງ
ດັ່ງນີ້ ກໍຂ້າເຖີ້ນ ໆ

ຄໍາສູດຂ້ອນຕ້ອນຮັບປີໃໝ່

ສິ ສີ ສິດທິພູະພອນ ປະວໍຣະແວນວິເສດ
ອະເນກະເຕໂຊ ມະໂຫຣາຣິກອະທິກອະທາ
ອະຕຸລະຍາ ພະຫຸລະເຕໂຊ
ຊະຍະມັງຄະລາຕິເຣກ ອະເນກະສະທັວດສະດີ
ໄມຕຣີຈິ່ງມີແກ່ນາກຄຸດ ມະນຸດສະກຸມພັນ
ຄັນທັບພະຍັກຂາ ເທບພະດາສຸຣາສຸຣິນ

ອິນພູ໌ມຍິມມະຣາຊາ	ສຸນັກຂັດຕະສຸມັງຄະລາ
ອຸດຕະມະໂຊກ	ອຸດຕະມະໂຍກ
ອຸດຕະມະດິຖີ	ອຸດຕະມະນາທີ
ອຸດຕະມະສີ	ພິລາດ
ອິນທະພາດພ້ອມ	ໄຕຣຍາງ
ທັງນາວາງ	ຄາດຄູ່
ພ້ອມກັນຢູ່	ສອນລອນ
ອາທິດຈອນ	ຈັນທະຣິກ
ອັງຄານຖືກ	ມະຫາໄຊ
ພຸດ ປະຫັດໄປ	ເປັນໂຊກ
ສຸກ ເສົາ ໂຍກ	ແມ່ນວັນດີ
ວັນດິຖີ	ອະມຸດຕະໂຊກ
ສິດທິໂຍກພ້ອມ	ລັກຂະນາ
ອຸດຕະມັງຄະລາ	ອັນວິເສດ
ມື້ນີ້ ແມ່ນມື້ສັນ	ວັນນີ້ແມ່ນວັນໂຊກ
ໂຕກໃບນີ້	ແມ່ນໂຕກໄມ້ຈັນ
ຂັນໃບນີ້	ແມ່ນຂັນໄມ້ແກ້ວ
ເຖົ້າແກ່ປຸນແມ່ນແລ້ວ	ຈຶ່ງໄດ້ແຕ່ງພາຂ້ວນ
	ຢູ່ສອນລອນຊ້າຍລ້າຍ
ມີທັງຝ້າຍຜູກແຂນ	ແຫວນໃສ່ກ້ອຍ
	ປັດນ້ອຍສ້ອຍສັງວານ
ອາຫານຫລາຍ	ເຫຼືອມາກ
ສັບພະພາກພ້ອມ	ທຸກສິ່ງທຸກອັນ
ມີທັງພູພັນ	ແລະໝາກຈີບ
ຟ້າວແຕ່ງຮີບ	ເດົາດາ
ມາລາຫອມ	ຮ່ວງເຮົ້າ
ເຫຼົ້າລາກ້ອງແກ້ວ	ໃສ່ພາຂ້ວນ
ຊວນກັນມາມວນເຕົ້າ	ເຂົ້າຕົ້ມກ້ອຍແລະໃບສີ

ມີທັງໄຂ່ໜ່ວຍດີ　　ກ້ຽງປອດ
ແຕ່ງຊອບແລ້ວ　　ບໍ່ຣະບວນ
ແລ້ວຈຶ່ງຍໍພາຂັວນ　　ເອົາມາຕັ້ງຫ້ອງ
ຝູງພີ່ນ້ອງໝູ່ວົງສາ　　ທັງຕານາຍແລະພໍ່ແມ່
ເຖົ້າແກ່ພ້ອມ　　ສາວບ່າວນິງຮາມ
　ບັດນີ້, ໄດ້ຣືກງາມ　　ຍາມດີເລີດແລ້ວ
ພໍ່ເຖົ້າແກ້ວ　　ຈຶ່ງໄປອາຣາທະນາ
ອາຈານຜູ້ສະຫລາດ　　ມານັ່ງອາດຖູນຂັວນ

<u>ວ່າ ມາເຢີຂັວນເຮີຍ !</u>

ບັດນີ້ຂ້າຈັກຖູນຂັວນຂຶ້ນ　　ສະເໝີຈອມຜາສາດ
ຖູນຂັວນຂຶ້ນ　　ສະເໝີທາດພູຫລວງ
ຖູນຂັວນຂຶ້ນເໝືອນດັ່ງ　　ພູເຂົາຫລວງໄກລາດ
ຖູນຂັວນຂຶ້ນເໝືອນດັ່ງ　　ທາດອິນແຂວນ
ແສນພັນປີ　　ຢ່າໄດ້ຊ້າຍເມືອໜ້າ
ຫ້າພັນປີ　　ຢ່າໄດ້ຊ້າຍເມືອຫັລງ
ຖືໂຣ ຖືຣັງ　　ໃຫ້ເຈົ້າໝັ້ນແກ່ນ
ໃຫ້ເຈົ້າໝັ້ນ　　ປານແຜ່ນຫີນແລງ
ໃຫ້ເຈົ້າແຂງ　　ປານແຜ່ນຫີນລາດ
ໃຫ້ເຈົ້າໝັ້ນ　　ປານລ່ຽມອາດເສົາສຸເມຣ
ຈຳເລີນເປັນອາດກ້ວາງ　　ຢ່າໄດ້ຊຸໄດ້ຮ່ວງຢູ່ສວັສດີ
ແສນພັນປີ　　ຢ່າໄດ້ຖ້ອຍເຖົ້າ
ວັນຄ່ຳເຊົ້າ　　ໃຫ້ເຈົ້າຢູ່ສະບາຍບານ
ເຈັຍຣະກາລ　　ຍືນຍາວຍິ່ງ
ນັບດ້ວຍສິ່ງ　　ອະສິງໄຂ

<u>ວ່າ ມາເຢີຂັວນເຮີຍ !</u>

ບັດນີ້, ຝູງຂ້າທັງຫລາຍ　　ທັງອາດຍາເຈົ້ານາຍ
ຣັດຖະການ　　ເຖົ້າແກ່
ພໍ່ແມ່ພ້ອມຝູງໝູ່ຍິງຊາຍ　　ຫລາຍຄົນມາຄັບຄັ່ງ

ສະພັ່ງພ້ອມ ຝູງໝູ່ນາຣີ
ມີຄວາມຍິນດີພ້ອມກັນມາ ສູ່ຂ້ວນບາສີໃຫ້ແກ່ທ່ານ
ເຈົ້າພາບ
ພ້ອມດ້ວຍຄອບຄົວ ເຮືອນຊານຫັລງນີ້
ຈົ່ງປະສົບແຕ່ໂຊກ
ອີກປະການໜຶ່ງ ໃຫ້ທ່ານທາຍທຸກໂສກໂສກາ
ໃຫ້ທ່ານທາຍໂຣຄາ ໂພຍໄພພະຍາດ
ທັງອຸບດາແລະຈັງໄຮ ທັງທ້ວດໄອອັນຍວດຍິ່ງ
ຖ້ວນທຸກສິ່ງອິນຕາຍ ສັບພະອັນຕະຣາຍ
ຈົ່ງສູນຫາຍວິນາດ
ເຄາະຄາດເຂົ້າ ໃນເນື້ອຈົ່ງໜີໄກ
ຝູງສະໜຽດຈັງໄຮ ໃຫ້ປຣາໄຊເຫີນຫ່າງ
ໝົດທຸກຢ່າງນາ ໆ ອັນເກີດມາແຕ່ກໍາເນີດ
ທີ່ລເກີດຢູ່ໃນສະຣີຣະ ຮ່າງກາຍ
ພາຍໃນ ແລະພາຍນອກ
ຂອກຂ້າງທົ່ວ ສາຣະພາງກາຍ
ຂໍໃຫ້ຫາຍ ໄປນໍາປີເກົ່າ
ປີໃໝ່ນີ້ຂໍໃຫ່ທ່ານໄດ້ເປັນໃຫ່ຍ ເລື່ອນຍົດສັກສີ
ຂໍໃຫ້ທ່ານໄດ້ເປັນຣັຖະມຸນຕຼີ ທີ່ລປະທານາທິບໍດີ
ສູງສຸດຂະໜາດ
ຂໍໃຫ້ມີອໍານາດກວ້າງ ທົ່ວຂອບຈັກກະວານ
ຝູງໂຈນມານ ຢ່າໄດ້ມາບັງບຽດ
ຢ່າໄດ້ມີຜູ້ຄຶດຄຽດ ສໍ່ສຽດແລະນິນທາ
ຂໍໃຫ້ທ່ານມີຜະຫຍາແລະປັນຍາ ສະຫລຽວສະຫລາດ
ອົງອາດດ້ວຍ ຄືພະນາກຄະເສນ
ເຄາະຢ່າໄດ້ເຫັນ ເຂັນຢ່າໄດ້ຮູ້
ຍາມທ່ານຢູ່ ກໍໃຫ້ມີໄຊ
ຍາມທ່ານໄປ ກໍໃຫ້ມີໂຊກ

ໂຍກມ້າ ຢູ່ເທິງອານ
ໃກ້ທ່ານມີບໍລິວານ ຫລວງກລາຍພໍຫມື່ນ
ນອນຕື່ນ ໃຫ້ທ່ານໄດ້ເງິນພັນ
ນອນຝັນ ໃຫ້ທ່ານໄດ້ເງິນລ້ານ
ຍ້າຍອອກບ້ານ ໃຫ້ທ່ານຈອມຂຸມຄໍາ
ໃຫ້ມີເສນານໍາ ແຫ່ຫລັງແຫ່ຫນ້າ
ໃຫ້ທ່ານໄດ້ນຸ່ງຜ້າ ຜືນແຊ່ວໄຫມຄໍາ
ອາມະຫິດໃຈດໍາ ຢ່າໄດ້ມາກາຍໃກ້
ໃຕ້ລຸ່ມຟ້າ ໃຫ້ມານ້ອມສ່ວຍສິນ
ໃນແດນດິນ ທົ່ວປະເທດ
ໃຫ້ມານ້ອມເກດເກົ້າ ຂາບໄຫ້ວວັນທາ
ໃຫ້ມາກາລະບູຊາ ທຸກວັນຢ່າຂາດ
ໃຫ້ທ່ານໄດ້ສະເຫວີຍຣາດ ຢູ່ສ້າງຄອງເມືອງ
ໃຫ້ມີສົມພານເຮືອງ ລືຊາທົ່ວເທົ້າ
ໂຊກລາບເຂົ້າ ຫລຸຫລັ່ງໄຫລມາ
ໃຫ້ທ່ານມີເດຊາ ສັກດານຸພາບ
ໃຫ້ທ່ານໄດ້ພາບແພ້ ຂ້າເສິກສັດຕູ
ໃຫ້ທ່ານໄດ້ເປັນຄຣູ ອາຈານສອນສັ່ງ
ໂຊກລາບຫລັ່ງ ໄຫລເຂົ້າມາຫາ
ທັງໂພຄາ ແກ້ວແຫວນແສນສິ່ງ
ຊ້າງມ້ານິ່ງ ຝູງໝູ່ງົວຄວາຍ
ທັງທາສາ ທາສີ ມີຫລາຍຊ່ວງໃຊ້
ໃຫ້ທ່ານໄດ້ ລົມບັດດ່ວນໄຫລມາ
ສັດຕະຣະຕະນັງ ແກ້ວ 7 ປະການ
ຈົ່ງບັນດົນບັນດານ ໃຫ້ກະຈັດກະຈາຍ
ຕົກລົງມາ ໃນຂອງເຂດ
ປະເທດຫ້ອງ ພື້ນແຜ່ນພະສຖຸທາ
ຂໍໃຫ້ຕົກລົງມາ ເຮົ້ວໄວຢ່າໄດ້ຂາດ

ເປັນດັ່ງນ້ຳຝົນຫຍາດ	ຮຳແຜ່ນທໍຣະນີ
ກິນສິບປີຢ່າໄດ້ບົກ	ຈົກສິບປີຢ່າໄດ້ລົງ
ຢ່າໄດ້ບົກເປັນຫາດ	ຢ່າໄດ້ຂາດເປັນວັງ
ສັບພະກາລັງ	ຍັງເຕັມດີຄືເກົ່າ
ທຸກທົ່ວເທົ້າ	ຕະຫລອດລະດູການ
ເລົ້າເຂົ້າເປືອກ	ໃຫ້ໄດ້ພຽງປານຕານ
ເລົ້າເຂົ້າສານ	ໃຫ້ໄດ້ພຽງປາຍພ້າວ
ເລົ້າເຂົ້າຈ້າວ	ໃຫ້ລົ້ນຂີ້ເຫລືອເຍັຽ
ໃຫ້ທ່ານໄດ້ເມັຍ	ຜູ້ຊ່າງ
ໃຫ້ທ່ານໄດ້ຂີ່ຊ້າງ	ສານໃຫ່ຍງາງອນ
ສິມດັ່ງພອນ	ຜູ້ຂ້າເວົ້າ
ຂໍແກ່ເທບພະເຈົ້າ	ເທີ່ລາອິນທາ
ເທບພະບຸດເທບພະດາ	ນາຄານາຄີ
ທໍຣະນີ	ຄຸດນາກ
ທຸກພາພ້ອມ	ພະຍາເວດສຸວັນ
ເນົາຢູ່ເທິງສະຫວັນ	ພະອິນທາທິຣາດ
ປະສາດໃຫ້	ແຖມພອນ
ສອນລອນສາງຫຽມຄູ່	ພ້ອມກັນຢູ່ສະຫວັດດີ
ທັງບຸດຕາບຸດຕີ	ໃນບຸຣິຜາສາດ
ເປັນເຈົ້າອາດນານປີ	ຄວາມສຸກຢ່າມີຄາດແຄ້ວ
ຫາຍໂສກແລ້ວ	ຍືນຍິ່ງເທັຍຣະຄາ
ຄວາມເຈັບຕາ	ແລະປວດທ້ອງ
ໂພຍພະຍາດຕ້ອງ	ຢ່າໄດ້ມີ
ໃຫ້ທ່ານນອນຫລັບດີ	ຢູ່ໃນຫ້ອງ
ປະເທດຫ້ອງ	ທີ່ນອນຕົນ
ເຮືອນມຸງຄຸນ	ຫລັງໃຫ່ຍກວ້າງ
ພໍແຫ່ລາງຊ້າງ	ພັງພາຍ
ຂໍໃຫ້ທ່ານຢູ່ສຸກສະບາຍ	ຈົນເຖິງເຖົ້າ

ຕາບຕໍ່ເທົ້າ ເຂົ້າສູ່ນິຣະພານ
ຕາມສັງຂານ ອາຍຸເຂດ
ດ້ວຍເດດແຫ່ງ ພູຣະຣັຕນະໄຕຣ

ສັບພະພຸດທາ ນຸພາເວນະ
ສັບພະທັມມາ ນຸວາເວນະ
ສັບພະສັງຄາ ນຸພາເວນະ
ສະທາໂສດຖີ ພະວັນຕຸເຕ

ບັດນີ້ບໍຣະບວນຖ້ອນ ຖວາຍພອນຮັບປີໃໝ່
ໃຫ້ທ່ານສົມມາດແມ້ງ ໂດຍດ້ານດັ່ງກ່າວມາ
ຊິຂໍລາລົງແລ້ວ ສຽງອວຍພອນມັນກໍອ່ອນ
ມີແຕ່ວອ່ນໆຮ້ອງ ທາງຫ້ອງພັດເມື່ອຍລົງ
ໄຊຍະຕຸໃຫ້ເຈົ້າຕີຣະຄັງ ໄຊຍະມັງຄະລັງ
ໃຫ້ເຈົ້າຕີຄ້ອງ ກອງຕະໂພນ ແຄນປີ່
ສຽງໃຜດີ ໃຫ້ໄຊໂຍໂຫ່ຮ້ອງ
ດັ່ງກ້ອງທົ່ມເມືອງ ແດ່ທ້ອນ ໆ

ຄຳສູດຂວັນຮັບປີໃໝ່

(ແບບທີ່ 2)

ສີສີສິດທິພະພອນ ປະວໍຣະແວນວິເສດ
ອະເນກະເຕໂຊ ຊະຍະມັງຄະລາຕິເຣກ
ອະເນກະ ສະຫວັດສະດີ
ໄມຕີຣຈິ່ງມີແກ່ນາກຄຸດ ມະນຸດສະກູນພັນ
ຄັນທັບພະຍັກຂາ ເທບພະດາສຸຣາສຸຣິນ
ອິນພົມຍົມມະຣາຊາ ສຸນັກຂັດຕະສຸມັງຄະລາ
ອຸດຕະມະໂຊກ ອຸດຕະມະໂຍກ
ອຸດຕະມະດິຖີ
ອຸດຕະມະນາທີ ອຸດຕະມະສີພີລາດ

ອິນທະພາດພ້ອມໄຕຣຍາງ ທັງນາວາງຄາດຄູ່
ພ້ອມກັນຢູ່ສອນລອນ ອາທິດຈອນຈັນທະຣຶກ
ອັງຄານຖຶກມະຫາໄຊ ພຸດປະຫັດໄປເປັນໂຊກ
ສຸກເສົາໂຍກ ແມ່ນວັນດີ
ວັນດີຖືອະມຸດຕະໂຊກ ໂຕກໃບນີ້ເປັນໂຕກໄມ້ຈັນ
ຂັນໃບນີ້ເປັນຂັນໄມ້ແກ້ວ ເຖົ້າແກ່ປຸນແມ່ນແລ້ວ
ຈຶ່ງໄດ້ແຕ່ງພາຂວັນ ຢູ່ຊະລອນຊະລ້າຍ
ມີທັງຝ້າຍຜູກແຂນ ແທວນໃສ່ກ້ອຍ
ປັດນ້ອຍສອ້ຍສັງວານ
ອາຫານຫລາຍເຫລືອມາກ ສັບພະພາກພ້ອມ
ທຸກສິ່ງທູກອັນ
ມີທັງພູພັນ ແລະຫມາກຈິບ
ຟ້າວແຕ່ງຮີບເດີາດາ ມາລາຫອມຮ່ວງເຮົ້າ
ເຫລົ້າກອງແກ້ວ ໃສ່ພາຂວັນ
ຊວນກັນມາມວນເຕົ້າ ເຂົ້າຕົ້ມກ້ວຍແລະໃບສີ
ມີທັງໄຂ່ຫນ່ວຍດີ ກົງງປອດ
ແຕ່ງຊອບແລ້ວ ບໍຣະບວນ
ແລ້ວຈຶ່ງຍໍພາຂວັນ ເອົາມາຕັ້ງຫ້ອງ
ຝູງພີ່ນ້ອງຫມູ່ວົງສາ ທັງຕານາຍແລະເຖົ້າແກ່
ພໍ່ແມ່ພ້ອມ ສາວບ່າວນິງຮາມ
ບັດນີ້ໄດ້ຣືກງາມ ຍາມດີເລີດແລ້ວ
ພໍ່ເຖົ້າແກ້ວຈຶ່ງໄປຣາດທະນາ ອາຈານຜູ້ສະຫລາດ
ມານັ່ງອາສນ໌ຄູນຂວັນ
ຄູນຂວັນຂຶ້ນ ສະເຫນີຈອມຜາສາດ
ຄູນຂວັນຂຶ້ນ ສະເຫນີທາດພູຫລວງ
ຄູນຂວັນຂຶ້ນເຫີມອນດັ່ງ ພູເຂົາຫລວງໄກລາດ
ຄູນຂວັນຂຶ້ນເຫີມອນດັ່ງ ທາດອິນແຂວນ
ແສນພັນປີ ຢ່າໄດ້ຊາ້ຍເມືອຫນ້າ

ຫ້າພັນປີ	ຢ່າໄດ້ຊາຍເມືອຫລັງ
ຖືໂຮຖືຮັງ	ໃຫ້ເຈົ້າຫມັ້ນແກ່ນ
ໃຫ້ເຈົ້າຫມັ້ນ	ປານແທ່ນຫີນແລງ
ໃຫ້ເຈົ້າແຂງ	ປານແຜ່ນຫີນລາດ
ໃຫ້ເຈົ້າຫມັ້ນປານລ່ຽມອາດ	ເສົາສຸເມຣ
ຈາເລີນເປັນອາດກວ້າງ	ຢ່າໄດ້ຊຸໄດ້ຮ່ອງ
	ຢູ່ສະຫວັດສະດີ
ແສນພັນປີ	ຢ່າໄດ້ຖອຍເຖົ້າ
ວັນຄໍ່າເຊົ້າໃຫ້ເຈົ້າຢູ່	ສະບາຍບານ
ເຈັຍຣະການ	ຍືນຍາວຍິ່ງ
ນັບດ້ວຍສິ່ງ	ອະສິງໄຂ

<u>ວ່າ ມາເຢີຂວັນເຮີຍ !</u>

ບັດນີ້, ຝູງຂ້າທັງຫລາຍ	ທັງອາດຍາເຈົ້ານາຍ
	ຣັດຖະການເຖົ້າແກ່
ພໍ່ແມ່ພ້ອມ	ຝູງໝູ່ຍິງຊາຍ
ຫລາຍຄົນມາ	ຄັບຄັ່ງ
ສະພັ່ງພ້ອມ	ຝູງໝູ່ນາຣີ
ພ້ອມກັນມາບາສີ	ສູ່ຂ້ວນໃຫ້ແກ່ທ່ານເຈົ້າພາບ
ພ້ອມດ້ວຍຄອບຄົວ	ເຮືອນຊານທັລງນີ້
	ຈິ່ງປະສົບແຕ່ໄຊກ
ໃຫ້ທ່ານຫາຍທຸກໂສກ	ໂສກາ
ໃຫ້ທ່ານຫາຍໂຣຄາ	ໂພຍໄພພະຍາດ
ທັງອຸບາດແລະຈັງໄຮ	ທັງຫວັດໄອອັນຮ້າຍຍິ່ງ
ຖ້ວນທຸກສິ່ງອິນຕາຍ	ສັບພະອັນຕະຣາຍ
	ຈິ່ງສູນຫາຍວິນາດ
ເຄາະຄາດເຂົ້າໃນເນື້ອ	ຈິ່ງໜີໄກ
ຝູງສະໜຽດຈັງໄຮ	ໃຫ້ປຣາໄຊເຫີນຫ່າງ
ໝົດທຸກຢ່າງນາ ໆ	ອັນເກີດມາແຕ່ກໍາເນີດ

ຫືລເກີດຢູ່ສະຣີຣະຮ່າງກາຍທັງພາຍໃນແລະພາຍນອກ

ຂອກຂ້າງສາຣະພາງກາຍ ຂໍໃຫ້ຫາຍໄປນຳປີເກົ່າ
ປີໃໝ່ນີ້ຂໍໃຫ້ທ່ານໄດ້ເປັນໃຫ່ຍ ເລື່ອນຍົດສັກສີ
ຂໍໃຫ້ທ່ານໄດ້ເປັນຣັຖມຸນຕຼີ ຫືລປະທານາທິບໍດີ
ສູງສຸດຂະໜາດ
ຂໍໃຫ້ມີອຳນາດກ້ວາງ ທົ່ວຂອບຈັກກະວານ
ຝູງໂຈນມານ ຢ່າໄດ້ມາບັງບຽດ
ຢ່າໄດ້ມີຜູ້ຄິດຂິມຄຽດ ສໍ່ສຽດນິນທາ
ຂໍໃຫ້ທ່ານມີຜະຫຍາປັນຍາ ສະຫລຽວສະຫລາດ
ອົງອາດດ້ວຍ ດັ່ງພູ່ະນາກຄະເສນ
ເຄາະຢ່າໄດ້ເຫັນ ເຂັນຢ່າໄດ້ຮູ້
ຍາມທ່ານຢູ່ ກໍໃຫ້ມີໄຊ
ຍາມທ່ານໄປ ກໍໃຫ້ມີໂຊກ
ໂຍກມ້າ ຢູ່ເທິງອານ
ເຄາະຢ່າໄດ້ມາພານ ມານຢ່າໄດ້ມາຕ້ອງ
ອຸປະສັກຂັດຂ້ອງ ຢ່າໄດ້ມີ
ໃຫ້ເຈົ້າມີຣັດສະໝີ ໃສສ່ອງແຈ້ງ
ທົ່ວທຸກແຫ່ງໂລກາ
ເໝືອນດັ່ງພູ່ະ ຈັນທາຫຽວທິບ
ພົ້ນຈາກກິບ ເມໂຄ
ປັນນະຣະໂສເໝືອນດັ່ງ ພູ່ະຈັນເພັງ 15 ຄ່ຳ
ຢ່າໄດ້ຕົກຕ່ຳຄ້ອຍ ເສົ້າເສັຍສີ
ຂໍໃຫ້ເປັນດັ່ງແກ້ວມະນີ ດວງຊ້ອຍໂຊດ
ແສງຮຸ່ງໂລດ ທົ່ວໂລກາ
ເໝືອນດັ່ງແກ້ວບັບພາ ງາມດີໃສສ່ອງ
ເປັນດັ່ງມຸກແກ້ວສ່ອງ ໃສແສງ
ເປັນຂອງແພງ ອັນລ້ຳເລີດ
ຈິ່ງໃຫ້ເກີດແກ່ເຈົ້າເຮືອນ ເຈົ້າຊານ ເຈົ້າບ້ານ

เจ้าຊ່ອງແລະເຈົ້າສັດທາ

ຂໍໃຫ້ໄຫລຫຼັ່ງມາ ເງິນຄຳຢ່າຂາດ

ເປັນດັ່ງນ້ຳຝົນຫຍາດ ຮຳແຜ່ນທໍຣະນີ

ກິນສິບປີຢ່າໄດ້ບົກ ຈິກສິບປີຢ່າໄດ້ລົງ

ຢ່າໄດ້ບົກເປັນຫາດ ຢ່າໄດ້ຂາດເປັນວັງ

ສັບພະກາລັງ ຍັງເຕັມຄືເກົ່າ

ທຸກທິວເທົ້າຕະຫລອດ ລະດູການ ກໍຂ້າເຖິ້ນ

ຈັດຕາໄຣ ທັມມາ ວຸດທິທັມ 4 ປະການ

ຄື ອາຍຸ ວັນນະ ສຸຂະ ພະລະ

ອະໂຣຄາຍະ ພະວະຖ້ອນ 5

ປະຕິພານະ ພະວະຖ້ອນ 6

ອະທິປັດໄຕຍະ ພະວະຖ້ອນ 7

ຈົ່ງສະເດັດລົງມາຮັກສາ ຍັງຂັນທະສັນດານ

ແຫ່ງທ່ານເຈົ້າພາບ ພ້ອມດ້ວຍຄອບຄົວ

ເຮືອນຊານຫຼັງນີ້

ທຸກປີທຸກເດືອນ ທຸກວັນຄືນຄ່ຳເຊົ້າ

ຕາບຕໍ່ເທົ້າ ເຂົ້າສູ່ນິຣະພານ ກໍຂ້າເຖິ້ນ

ບັດນີ້, ຂ້ອຍຈັກໄດ້ ຮ້ອງຮຽກເອົາຂັວນ

<u>ວ່າ ມາເຍີຂັວນເຮີຍ !</u>

ໃຫ້ເຈົ້າມານຳທາງຄົນທ່ອງ ມານຳປ່ອງຄົນທຽວ

ນ້ຳພຽງເອິກໃຫ້ເຈົ້າຢັ່ງ ນ້ຳພຽງຝັ່ງໃຫ້ເຈົ້າລອຍ

ມາເນີ

ນ້ຳພຽງຄໍຫອຍ ໃຫ້ເຈົ້າເຜັ່ນຂ້າມ

ນຳທາງມາໄວ່ໆ

ເຈົ້າຢ່າໄດ້ຢູ່ຊູ້ໆ ໃຫ້ຫັນໜ້າຕ່າວມາ

<u>ວ່າ ມາເຍີຂັວນເຮີຍ !</u>

ມາກິນເຂົ້າຕົ້ມແລະຂອງຫວານ ມາກິນນ້ຳຕານ

ແລະນ້ຳອ້ອຍ

ມາກິນກ້ວຍຕີບນ້ອຍ	ຕີນເຕົ່າໝູສີ
ມີບຸຣີໝ້ຽງໝາກ	ມີຫລາຍຫລາກອາຫານ
ເຕັມພາພານ	ແລະພາໂຕກ
ມີທັງໄກ່ຜູ້ໂອກ	ຕົ້ມໃສ່ພາຂ້ວນ
ຂໍເຊີນຂວນ	ຂ້ວນຫິວເກດເກົ້າ
ມາກິນເຂົ້າຢູ່ໃນພາ	ມາກິນປາຢູ່ໃນຖ້ວຍ
ມີທັງກ້ວຍອ້ອຍຕານ	ຫວານຄາວເຄັມຈືດ
ສັບພະພືດພ້ອມ	ມື້ມ່ວງສຸກຫວານ
ໃສ່ພາພານ	ເອົາມາຕັ້ງໄວ້
ເຊີນຂ້ວນເຈົ້າແກ່ນໄທ້	ເຂົ້າມາສະເຫວີຍ

ວ່າ ມາເຢີຂ້ວນເຮີຍ !

ຂ້ວນເຈົ້າມາຮອດກາງເຫຼົ່າ	ຢ່າໄດ້ນັ່ງຊີງ
ຂ້ວນເຈົ້າມາຮອດກາງດົງ	ຢ່າໄດ້ນັ່ງໂສກ
ຂ້ວນເຈົ້າມາຮອດກາງໂຄກ	ຢ່າໄດ້ນັ່ງເຫົງາ
ຂ້ວນເຈົ້າມາຮອດປ່າເລົາ	ຢ່າໄດ້ນັ່ງຖ້າ
ຂ້ວນເຈົ້າມາຮອດປ່າຫ້ວາ	ຢ່າໄດ້ນັ່ງເຊົາແຮງ
ຂ້ວນເຈົ້າມາຮອດປ່າແຊງ	ຢ່າໄດ້ນັ່ງລີ້
ຂ້ວນເຈົ້າມາຮອດປ່າມີ້	ຢ່າລີ້ຢູ່ແຄມທາງ
ຂ້ວນເຈົ້າມາຮອດປ່າຍາງ	ຢ່າໄດ້ນັ່ງໄຫ້
ຂ້ວນເຈົ້າມາຮອດຖ່ງໄຮ່	ຢ່າໄດ້ແວ່ສູບຢາ
ຂ້ວນເຈົ້າມາຮອດຖົ່ງນາ	ຢ່າໄດ້ແວ່ກິນເຂົ້າ
ຂ້ວນເຈົ້າມາຮອດເຫົ່ງາໄມ້	ຢ່າໄດ້ທອດຫົວນອນ
ມາຄອນ ໆ	ເຈົ້າຢ່າໄດ້ສະທ້ານ
ໃຫ້ເຈົ້າມາຢູ່ບ້ານ	ຂຶ້ນສູ່ເຮືອນຕົນ
ມີທັງເຮືອນມຸງຄຸນ	ຫັລງໃຫ່ຍ
ມີທັງເສື່ອສາດໃໝ່	ໝອນປາຝາ
ມີທັງຜ້າຫົ່ມຟາ	ຜືນອາດ
ມີທັງມຸ້ງມ່ານກາດ	ກັນຍຸງ

ຝູງລຸງຕາ　　　　　　　ແລະພໍ່ແມ່
ມານັ່ງຖ້າ　　　　　　　ຄອຍຮັບເອົາຂັວນ

ວ່າ ມາເຢີຂັວນເຮີຍ !

ມາເຂົ້າຄີງ　　　　　　ຢ່າໄດ້ເໝັນສາບ
ມາເຂົ້າຄາບ　　　　　　ຢ່າໄດ້ເໝັນຄາວ
ກິນເຂົ້າຜີໃຫ້ເຈົ້າຮາກ　　　ສາເນີ
ຄຶງວໝາກຜີໃຫ້ເຈົ້າຄາຍ　　ສາເນີ
ໃຫ້ເຈົ້າຄືນມາດາຍ　　　　ທ້ອງເປົ່າ
ເຊີນເອົາຂັວນແຈ່ມເຈົ້າ　　ໃຫ້ມາເຂົ້າສູ່ຄີງ ແດ່ທ້ອນ
ບັດນີ້, ປະຣິໂຍສານສັ່ງງ　　ສຽງບໍ່ດີຊິລາກ່ອນ
ຂໍຂອບຄຸນພີ່ນ້ອງ　　　　ຊິລາໂຄ້ງຕ່າວລີງ

ກ່ອນແລ້ວ ໆ

ຄຳສູດຂັວນຕ້ອນຮັບປີໃໝ່
(ແບບທີ່ 3)

ສີ ສີ ສິດທິພູະພອນ　　　ປະວໍຣະແວນວິເສດ
ອະຕິເຣກະເຕໄຊ　　　　ໄຊຍະມັງຄະລາຕິເຣກ
ອະເນກະສະຫັວດສະດີ　　ຄວາມສຸຂາຄວາມສາມັກຄີ
ຄວາມເມດຕາໄມຕຣີ　　　ຈົ່ງມີແກ່ທ່ານ.............
ພ້ອມດ້ວຍຄອບຄົວ　　　ໃຫ້ຢູ່ສຸກສຳລານຢ່າຮູ້ເຖົ້າ
ຕາບຕໍ່ເທົ້າ　　　　　　ທັງພະຣິຍາ
ທັງບຸດຕີບຸດຕາ　　　　ແລະລູກເຕົ້າ
ຂໍໃຫ້ໄດ້ເປັນເຈົ້າເປັນໃຫ່ຍ　ກ່ວາເພິ່ນທັງຫລາຍ
ໃຫ້ມີສຸກສຳບາຍ　　　　ລ້ຳເລີດ
ຂ້າແກ້ວເກີດກາງໂຮງ　　ທັງຣິພົນແລະໄພ່ນ້ອຍ
ຢ່າໄດ້ຄາດຄ້ອຍ　　　　ຈາກຊີວັງ
ຂໍໃຫ້ມີອາຍຸຍືນຍາວ　　　ຢ່ານ້ອຍ

ໃຫ້ໄດ້ຮ້ອຍຂວບເຂົ້າ ຍືນຍິ່ງຍາວນານ
ຝູງໝູ່ສັດຕູມານ ຢ່າມາບັງບຽດໄດ້
ຂໍໃຫ້ເທບພະໄທ້ ຜູ້ຕັດສ່ອງສໍຣະຍານ
ລິງມາໂຈມຂ້ອນທ່ານ..... ເຈົ້າຂຶ້ນໃຫ້ໃຫ່ຍສູງ
ລິງມາໂຈມຂ້ອນ.......... ເຈົ້າຂຶ້ນໃຫ້ໃຫ່ຍກ້ວາງ
ວ່າ ສິ ສິ ມື້ນີ້ ແມ່ນມື້ນີ້
ສິ ສິ ມື້ນີ້ ແມ່ນມື້ໜັ້ນ
ໃຫ້ເຈົ້າມາຢູ່ໝັ້ນ ຍິ່ງກ່ວາກ້ອນຜາແອ່ນ
ໃຫ້ເຈົ້າມາຢູ່ໝັ້ນ ຍິ່ງກ່ວາແທ່ນຜາຈວງຜາຈັນ
ໃຫ້ເຈົ້າມາຢູ່ໝັ້ນ ຍິ່ງກ່ວາພູເຂົາຫລວງໄກລາດ
ໃຫ້ເຈົ້າມາຢູ່ໝັ້ນ ຍິ່ງກ່ວາລ່ຽມອາດເສົາສຸເມຣ
ໃຫ້ເຈົ້າມາຢູ່ໝັ້ນ ຍິ່ງກ່ວາດວງຕາເວັນໃສສ່ອງແຈ້ງ
ມື້ນີ້ແມ່ນມື້ສັນ ວັນນີ້ແມ່ນວັນດີ
ວັນດີຖີ້ ອະມຸດຕະໂຊກ
ພວກເຮົາພ້ອມກັນມາ ທຳລາບາສີສູ່ຂ້ວນສົມໂພດ
ສິງໂສດນ້ຳມຸດທາ ໃຫ້ເຈົ້າຫາຍໂຣຄາ
ແລະພະຍາດ
ທັງອຸບາດ ແລະຈັງໄຮ
ທັງຫ້ວດໄອ ອັນຮ້າຍຍິ່ງ
ຖ້ວນທຸກສິ່ງ ອິນຕາຍ
ໃຫ້ທ່ານເປັນເຈົ້ານາຍຜູ້ມີອຳນາດກ້ວາງທົ່ວຂອບຈັກກະວານ
ຝູງໂຈນມານ ຢ່າໄດ້ມາບັງບຽດ
ຢ່າໄດ້ມີຜູ້ຄິດຄຽດ ສໍ່ສຽດແລະນິນທາ
ໃຫ້ເຈົ້າມີຜະຫຍາປັນຍາ ດັ່ງເຈົ້າມະໂທສິຖ
ໃຫ້ທ່ານມີໃຈອິດ ດັ່ງພູະເຈົ້າເຕເມ
ສັບເພ ໓ ໂຣຄາ ສັບເພ ໓ ພະຍາ
ສັບເພ ໓ ອັນຕຣາຍາ ສັບເພ ໓ ອຸປັດທະວາ
ສັບເພ ໓ ທຸນນິມິດຕາ ສັບເພ ໓ ອະວະມັງຄະລາ

	ວິນັດສັນຕຸ
ຈັດຕາໂຣທັມມາ	ທັມທັງຫລາຍສີ່ປະການ
ຄື ອາຍຸ ວັນນະ	ສຸຂະ ພະລະ
ອະໂຣຄາຍະພະວະ	ຖ້ວນ 5
ປະຕິພານະພະວະ	ຖ້ວນ 6
ອະທິປັດໄຕຍະພະວະ	ຖ້ວນ 7
ຈິ່ງສະເດັດລົງມາຮັກສາ	ຍັງຂັນທະສັນດານ
ແຫ່ງທ່ານເຈົ້າເຮືອນ	ເຈົ້າຊານ ເຈົ້າບ້ານ
	ເຈົ້າຊ່ອງແລະເຈົ້າສັດທາ
ທຸກປີທຸກເດືອນ	ທຸກວັນຄືນຄໍ່າເຊົ້າ
ຕາບຕໍ່ເທົ້າ	ເຂົ້າສູ່ນິຣະພານ ກໍຂ້າເຖີ້ນ
ບັດນີ້, ຂ້າຈັກຮ້ອງຮຽກເອີ້ນ	ເຊີນໝູ່ຝູງຂ້ວນ

<u>ວ່າ ມາເຢີຂ້ວນເຮີຍ !</u>

ຂ້ວນເຈົ້າໄປປູກພູເປັນຮາກ	ກໍໃຫ້ມາສາມື້ນີ້ວັນນີ້
ຂ້ວນເຈົ້າໄປປູກໝາກເປັນໃບ	ກໍໃຫ້ມາສາມື້ນີ້ວັນນີ້
ຂ້ວນເຈົ້າໄປປູກຫົວສິງໄຄຂຽວອ່ອນ	ກໍໃຫ້ມາສາມື້ນີ້ວັນນີ້
ຂ້ວນເຈົ້າໄປປູກມັນອ້ອນເປັນເຄືອ	ກໍໃຫ້ມາສາມື້ນີ້ວັນນີ້
ຂ້ວນເຈົ້າໄປປູກໝາກເຂືອເປັນດອກ	ກໍໃຫ້ມາສາມື້ນີ້ວັນນີ້
ຂ້ວນເຈົ້າໄປຢອກຫົ້ລມ	ນໍາສັດໃຫ່ຍກາງດົງ
	ກໍໃຫ້ມາສາມື້ນີ້ວັນນີ້
ຂ້ວນເຈົ້າໄປຫິລງເຂົ້າ	ໃນໂກນແກມບ່າງ
	ກໍໃຫ້ມາສາມື້ນີ້ວັນນີ້
ຂ້ວນເຈົ້າໄປຢູ່ຄ້າງ	ນາງໄມ້ໝູ່ຊະນີ
	ກໍໃຫ້ມາສາມື້ນີ້ວັນນີ້
ຂ້ວນເຈົ້າໄປຢູ່ລີ້	ໃນນະທີຫ້ວຍຮ່ອງ
	ກໍໃຫ້ມາສາມື້ນີ້ວັນນີ້
ຂ້ວນເຈົ້າໄປຖືກບ້ວງຄ້ອງ	ພານໜ້າໃຫ້ຕ່າວມາ

<u>ວ່າ ມາເຢີຂ້ວນເຮີຍ !</u>

ຂ້ອນເຈົ້າເດີນໄປໜ້າ　　　　ອະເມຣິກາແລະຝັ່ຣງ
ຂ້ອນເຈົ້າໄປນັ່ງໄຫ້　　　　ໄຮຕີ້ນຣິມງາມ
ຂ້ອນເຈົ້າໄປຕົກນຳ້　　　　ວັງເວີນໃຫ້ໄຫລເວີ່ນ ມາເຢີ
ຂ້ອຍຊິຮ້ອງຮຽກເອີ້ນ　　　　ຂ້ອນເຈົ້າໃຫ້ຕ່າວມາ

ວ່າ ມາເຢີຂ້ອນເຮີຍ !

ຂ້ອນເຈົ້າໄປຕົກໄກຕ່າງປະເທດ　　　　ກໍໃຫ້ມາສາມື້ນີ້ວັນນີ້
ຂ້ອນເຈົ້າໄປຕົກຕ່າງເຂດເມືອງທໍ້　　　　ແລະເມືອງພວນ
ຂ້ອນເຈົ້າໄປຕົກເມືອງຍວນ　　　　ພາມະເທດ
ຂ້ອນເຈົ້າໄປຕົກຕ່າງປະເທດ　　　　ເຂດເມືອງໄທ
ຂ້ອນເຈົ້າຕົກໄປໄກ　　　　ເມືອງລະແວກ
ຂ້ອນເຈົ້າຕົກໄປເມືອງແຂກ　　　　ແລະຕານີ
ຂ້ອນເຈົ້າຕົກໄປເມືອງເກົາຫີລ　　　　ແລະຍີ່ປຸ່ນ
ຂ້ອນເຈົ້າໄປປັ້ນຫຸ່ນ　　　　ຫຽມຕີນ
ຂ້ອນເຈົ້າໄປທ່ຽວເມືອງບົນ　　　　ແລະເມືອງຟ້າ
ຂ້ອນເຈົ້າໄປຕົກເມືອງພະມ່າ　　　　ແລະອິນເດັຍ
ຂ້ອນເຈົ້າໄປທ່ຽວກຳປູເຈັຍ　　　　ແລະໄຊ່ງ່ອນ
ຂ້ອນເຈົ້າໄປເຣຣ່ອນ　　　　ຢູ່ທາງໄກ
ຂ້ອນເຈົ້າໄປນອນໄພ　　　　ແຣມເຖື່ອນ
ຂ້ອນເຈົ້າໄປຢູ່ເຂື່ອນນຳ້　　　　ນຳປາ
ຂ້ອນເຈົ້າໄປຢູ່ນຳນາຄາ　　　　ຄູດນາກ
ຂ້ອນເຈົ້າໄປຢູ່ປາກຫ້ວຍ　　　　ແລະລຳເຊ
ຂ້ອນເຈົ້າໄປຢູ່ນຳ້ທະເລ　　　　ຍາວຍ່ານ
ຂ້ອນເຈົ້າໄປຢູ່ນຳ້ມ່ານ　　　　ດ່ານຜີຫລວງ
ຂ້ອນເຈົ້າໄປຢູ່　　　　ນຳປວງຜີເຊື້ອ
ຂ້ອນເຈົ້າໄປຢູ່ເຮືອ　　　　ແຣມປີ
ຂ້ອນເຈົ້າໜີ　　　　ໃຫ້ຄືນມາຟ້າວຟັ່ງ
ໃຫ້ເຈົ້າເຂົ້າມານັ່ງ　　　　ໃນພຸ່ມພາຂ້ອນ
ບໍຣະບວນແລ້ວ　　　　ເຊີນຂ້ອນເຂົ້າມາສູ່

ເຊີນເອົາຂວັນໝູ່ເຈົ້າ	ໃຫ້ມາເຂົ້າສູ່ຄີງ
	ຂ້ານ້ອຍທ້ອນ ຯ

ຄາສູ່ຂວັນເດັກນ້ອຍ

ຍາມເມື່ອເດັກນ້ອຍໄດ້ຮັບອັນຕະລາຍຕ່າງ ໆ ເປັນຕົ້ນວ່າ ຕົກເຮືອນ ຕົກຕົ້ນໄມ້ ຫືລ ຕົກໃຈຢ້ານກົວສິ່ງໃດສິ່ງໜຶ່ງຈົນຂວັນໜີຄີງ ພໍ່ແມ່ຈິ່ງທຳພິທີສູ່ຂວັນ ຮຽກຂວັນໃຫ້ ຄາສູ່ຂວັນມີດັ່ງຕໍ່ໄປນີ້ :

ສິ ສິ ສິດທິໄຊຍະມັງຄະລະສຸຂະສະຫັວດສະດີ

ເອຫິ ຕາຕະ ປີຍະປຸດຕາ (ຍິງວ່າ ເອຫິ ອັມມະ ປີຍະທິຕາ) ປຸເຣຖະ ປາຣະມີງ ທະທະຍັງ ເມ ພີສັນຈິຖະ ກະໂຣຖະ ວະຈະນັງ ມະມະ.

ບັດນີ້, ຂ້າຈັກເຊີນເອົາຂວັນ	ກຸມມາຣາອ່ອນນ້ອຍ
ໜ້າຊື່ນຊ້ອຍ	ໂສພາ
ຂໍອັງເຊີນເທບພະດາ	ຕົນອິງອາດ
ຕົນຮັກສາຫວຍຮາດ	ໝູ່ນິກອນ
ຂໍຈົ່ງມາຊ່ອຍວອນ	ເອົາຂວັນອ່ອນນ້ອຍ
ຂວັນຫົວເຈົ້າໄປຕົກທີ່ລົມແລະພົງໄພ	ກໍໃຫ້ໄປນຳເອົາມາ
	ມື້ນີ້ວັນນີ້

ວ່າ ມາເຢີຂວັນເຮີຍ !

ຂວັນເຈົ້າໄປເດີນໄກປ່າກັວາງ	ກໍໃຫ້ມາສາມື້ນີ້ວັນນີ້
ຂວັນເຈົ້າໄປທີ່ລົມນ້ຳ	ວັງໃຫ່ຍນະທີຫລວງ
ກໍໃຫ້ມາ	ຢ່າຊ້າ
ຂວັນເຈົ້າໄປທ່ຽວຄ້າ	ເມືອງຜີຍັກໃຫ່ຍ
	ກໍໃຫ້ມາສາມື້ນີ້ວັນນີ້
ຂວັນເຈົ້າໄປຢູ່ກົກບາກຫລວງ	ຄວງບ່າງຮ້ອງ
	ກໍໃຫ້ມາສາມື້ນີ້ວັນນີ້
ຂວັນເຈົ້າໄປທ່ຽວທ່ອງ	ທາງໃຕ້ຫລີຜີ
	ກໍໃຫ້ມາສາມື້ນີ້ວັນນີ້

ຂ້ວນເຈົ້າໄປທ່ຽວທີ້ລົມ ນະທີຫລວງນ້ຳໃຫ່ຍ
ກໍໃຫ້ມາສາມື້ນີ້ວັນນີ້
ຂ້ວນເຈົ້າໄປຢູ່ ທົ່ງນາແກມທັຍາ
ຂ້ວນເຈົ້າໄປຢູ່ປ່າຊ້າ ແກມຜີ
ກໍໃຫ້ມາສາມື້ນີ້ວັນນີ້
ຂ້ວນເຈົ້າໄປຖືກຂີ່ລ່ຳໜາ ຂ້ວນເຈົ້າໄປຖືກຄາລ່ຳໃຫ່ຍ
ກໍໃຫ້ມາສາມື້ນີ້ວັນນີ້

ວ່າ ມາເຢີຂ້ວນເຣີຍ !

ຂ້ວນເຈົ້າໄປຢູ່ກາງດົງ ແລະກາງໂຄກ
ກໍໃຫ້ມາສາມື້ນີ້ວັນນີ້
ຂ້ວນເຈົ້າໄປໄລ່ນົກກະໂດກ ແລະກາເວົາ
ກໍໃຫ້ມາສາມື້ນີ້ວັນນີ້
ຂ້ວນເຈົ້າໄປນັ່ງເຫົງາ ຢູ່ໃຕ້ຕົ້ນໄມ້
ກໍໃຫ້ມາສາມື້ນີ້ວັນນີ້
ຂ້ວນກຳເນີດ 32 ໃຫ້ມາຢູ່ຄອງໃນເນື້ອ
ມາຢູ່ເຮືອໃນຄີງ

ວ່າ ມາເຢີຂ້ວນເຣີຍ !

ຂ້ວນຫົວໃຫ້ມາຢູ່ຫົວ ປັກປິ່ນເກົ້າ
ນ້ຳມັນເຂົ້າທາຫອມ
ຂ້ວນຂົນແລະຂ້ວນຄີ້ວ ຂ້ວນນີ້ວຊ້າຍແລະຝ່າຍຂວາ
ຂ້ວນປາທາທັງຄູ່ ເກີບແກ້ວຢູ່ຮັບຮອງ
ເຈົ້າຢ່າວອງພາດ່ວນ ຟ້າຮ້ອງຮ່ວນຮີບກັບມາ
ຂ້ວນຕາໃຫ້ມາຢູ່ຕາສອງກ້ຳ ເຈົ້າຢ່າໄດ້ທີລາງລ່ຳຫລົ້ນດູດາຍ
ເຊີນຂ້ວນເຈົ້າ ມາຢູ່ກາຍທຸກແຫ່ງ
ຂ້ວນແຄ່ງແລະຂ້ວນຂາ ກໍໃຫ້ມາສາມື້ນີ້ວັນນີ້

ວ່າ ມາເຢີຂ້ວນເຣີຍ !

ຂ້ວນປາກໃຫ້ມາຢູ່ປາກ ຢ່າເພີ້ຈົ່ມຫລົງໄຫລ
ຂ້ວນຫົວໃຈພາທ່ຽວ ເຈົ້າຢ່າໄດ້ຄິດນ້ອມໜ່ຽວ

	ໄປທາງໄກ
ໃຫ້ເຈົ້າມາເຣັວໄວ	ມື້ນີ້ວັນນີ້
ເຊີນຂວັນລູກເຕົ້າ	ມາຢູ່ລີ້ໃນເຮືອນ
ຂວັນປີເດືອນໃຫ້ມາເຕົ້າ	ຂວັນເກດເກົ້າເກສາ
ຂວັນຫູແລະຂວັນຕາ	ກໍໃຫ້ມາພໍ່າພ້ອມ
ຂວັນເຈົ້າໄປທ່ຽວຖໍ້າຄູຫາ	ນ້ຳນາຄາແລະຄຸດນາກ
ຂ້ອຍຈັກເຊີນເອົາເຈົ້າພູມພາກ	ມາຊ່ອຍຮຽກເອົາຂວັນ

ວ່າ ມາເຢີຂວັນເຮີຍ !

ຂວັນແຂ້ວ	ກໍໃຫ້ມາຢູ່ແຂ້ວເປັນແຖວ
ຂວັນແອວ	ແລະທ້ອງນ້ອຍ
ຂວັນນິ້ວກ້ອຍ	ໃຫ້ມາສອດສຸບແຫວນ
ຂວັນຄໍຄາງ	ແລະໄຫ່ລໜ້າ
ກໍໃຫ້ມາໂຮມເຂົ້າຢູ່	ປະຈຳ

ວ່າ ມາເຢີຂວັນເຮີຍ !

ຂວັນເຈົ້າມາຮອດແລ້ວ	ຢ່າໄດ້ທ່ຽວໄປມາ
ຕາມມັກຄາ	ແລະເຫວຫ້ວຍ
ຕາມປ່າກ້ວຍ	ແລະຮາວເຂົາ
ຂວັນເຈົ້າໄປທ່ຽວບ້ານກິນເຫົ້ລາ	ດອມໝູ່ຊາຍໂຖງ
	ກໍໃຫ້ມາສາມື້ນີ້ວັນນີ້
ມາຢູ່ສ້າງເຮືອນຕົນ	ຄຳກັງວົນບໍ່ມີມົ້ວ
ຂວັນຫົວເຈົ້າ	ຢ່າໄດ້ຄ່ວາກາງຄືນ
ເດືອນມິດເຈົ້າ	ຢ່າໄດ້ຫຽວຊຽວຄ່ຳ
ເດືອນດຳ	ເຈົ້າຢ່າໄດ້ທ່ຽວຫົ້ລມ
ກາງເວັນຢ່າຫຽວທ່ອງ	ມາຢູ່ຫ້ອງຫໍແກ້ວຊຸ່ມເຢັນ

ວ່າ ມາເຢີຂວັນເຮີຍ !

ຝົນຕົກ	ເຈົ້າຢ່າໄດ້ດຸ່ງໄປໜ້າ
ຟ້າຮ້ອງ	ເຈົ້າຢ່າໄດ້ດຸ່ງໄປໄກ
ກ້ອນເສົ້າໄປ	ເຈົ້າຈິ່ງໄປ

ຄືໄຟຄ່ວາ	ເຈົ້າຈິ່ງຄ່ວາ
ລຸກແຕ່ປ່າ	ມາເຮືອນ
ລຸກແຕ່ສວນແຕ່ນາ	ມາບ້ານ
ຂີ້ຄ້ານໃຫ້ເຈົ້ານອນຢູ່ເຮືອນ	ນຳພໍ່ນຳແມ່
ກິນເຂົ້າຜີ	ໃຫ້ເຈົ້າຮາກ
ຄ້ຽວໝາກຜີ	ໃຫ້ເຈົ້າຄາຍ
ໃຫ້ເຈົ້າຄືນມາດາຍ	ທ້ອງເປົ່າ
ໃຫ້ເຈົ້າມາກິນເຂົ້າ	ກັບກ້ວຍດອມອາ
ໃຫ້ເຈົ້າມາກິນເຂົ້າ	ກັບປາດອມປູ່
ໃຫ່ຍພຽງຕໍ່	ເຈົ້າຢ່າໄດ້ຫັກ
ໃຫ່ຍພຽງຫັລກ	ເຈົ້າຢ່າໄດ້ໂຄ່ນ
ຢ່າໄດ້ໝິ່ນເໝືອນຕອງ	ຢ່າໄດ້ໝອງເໝືອນເຖົ່າ
ຢ່າໄດ້ເກົ່າເສັຍສີ	ໃຫ້ເຈົ້າມີອາຍຸຍືນຢ່າສັ້ນ
ໃຫ້ເຈົ້າໃຫ່ຍພຽງລຸງ	ໃຫ້ເຈົ້າສູງພຽງປ້າ
ໃຫ້ເຈົ້າຈຳເລີນໜ້າ	ຢູ່ສະຫັວດສະດີ
ນອນຫັລບ	ໃຫ້ເຈົ້າໄດ້ເງິນພັນ
ນອນຝັນ	ໃຫ້ເຈົ້າໄດ້ເງິນໝື່ນ
ນອນຕື່ນ	ໃຫ້ເຈົ້າໄດ້ເງິນແສນ
ແບນມືໄປ	ໃຫ້ເຈົ້າໄດ້ແກ້ວມະນີໂຊດ
ໂທດຮ້າຍຢ່າໄດ້ມາພານ	ມານຮ້າຍຢ່າໄດ້ມາບຽດ
ໃຫ້ເຈົ້າຫາຍສະໜຽດ	ແລະຈັງໄຮ
ເຄາະເຈົ້າຢ່າໄດ້ເຫັນ	ເຂັນເຈົ້າຢ່າໄດ້ພໍ້
ໃຫ້ເຈົ້າຫາຍພະຍາດ	ທີໂຣຄາ
ໃຫ້ເຈົ້າມີສັກດາ	ຣິດທານຸພາບ
ຜາບແພ້	ຂ້າເສິກສັດຕູ

ສັບເພ ເຕ ໂຣຄາ ສັບເພ ເຕ ພະຍາ

ສັບເພ ເຕ ອັນຕຣາຍາປິ ວິນັສສັນຕຸ

ອະເສສະໂຕ ໆ

ຄວາມຜູກແຂນເດັກນ້ອຍ

ຝ້າຍດ່ອນຕາງຄຳ ຝ້າຍດຳຕາງແກ້ວ
ຂ້ອຍຜູກແລ້ວ ໃຫ້ເຈົ້າໃຫ່ຍສູງມາ
ໃຫ້ເຈົ້າໃຫ່ຍພຽງລຸງ ໃຫ້ເຈົ້າສູງພຽງອາວ
ໃຫ້ເຈົ້າຍືນເຈົ້າຍາວ ຄືພໍ່ຄືແມ່
ໃຫ້ເຈົ້າເຖົ້າເຈົ້າແກ່ ຄືລຸງຄືຕາ
ຝົນຕົກຢ່າໄດ້ໄປອື່ນ ຟ້າຂື້ນຢ່າໄດ້ໄປໄກ
ໃຫ້ເຈົ້າໃຫ່ຍ ຄືໝໍ່ໄມ້ຫົກແຄມທາງ
ໃຫ້ເຈົ້າໃຫ່ຍ ຄືໝໍ່ໄມ້ພາງແຄມຫ້ວຍ
ໃຫ້ເຈົ້າໃຫ່ຍເໝືອນກ້ວຍ ຕົ້ນຕ່ຳງາມເລີງ
ໃຫ່ຍພຽງຕໍ່ ຢ່າໄດ້ຫັກ
ໃຫ່ຍພຽງຫັລກ ຢ່າໄດ້ໂຄ່ນ
ຢ່າໄດ້ໝິ່ນເໝືອນຕອງ ຢ່າໄດ້ໝອງເໝືອນເຖົ່າ
ຢ່າໄດ້ເກົ່າເສັຍສີ
ໃຫ້ເຈົ້າມີຣິດ ຄືແສງພູະຈັນ
ໃຫ້ເຈົ້າມີວັນ ຄືແສງພູະອາທິດ
ໃຫ້ເຈົ້າມີຣິດ ຄືພູະໂມກຄັນລາ
ອາຍຸ ວັນໂນ ສຸຂັງ ພະລັງ ດັ່ງນີ້ກໍພໍ່ທ້ອນ ໆ

ອີກແບບໜຶ່ງ

ມາເຢີຂັວນເຮີຍ !

ມາຢູ່ເຮືອນ ນຳພໍ່ນຳແມ່
ມາຢູ່ນຳເຖົ້ານຳແກ່ ນຳລຸງນຳຕາ
ກິນເຂົ້າເຈົ້າຢ່າອີມ ກິນນົມເຈົ້າຢ່າຮາກ
ເຂົ້າຕົກປາກ ເຈົ້າຢ່າຄາຍ
ກິນເຂົ້າທໍ່ໄຂ່ເປັດ ໃຫ້ເຈົ້າໜ້າໃຫ່ຍ

ກິນເຂົ້າທ່ໍໄຂ່ໄກ່ ໃຫ້ເຈົ້າຕຸ້ຍເຈົ້າພີ
ໃຫ້ເຈົ້າພີຄືໝາກຟັກ ໃຫ້ເຈົ້າໜັກຄືໝາກແຕງ
ໃຫ້ເຈົ້າມີຣິດທີແຮງ ຜາບມານທັງຄ້າຍ
ອາຍຸ ວັນໂນ ສຸຂັງ ພະລັງ ດັ່ງນີ້ກໍພໍ່ທ້ອນ ໆ

ອີກແບບໜຶ່ງ

ມາເຢີຂ້ອນເຮີຍ !

ມາຢູ່ນຳພໍ່ນຳແມ່ ມາຢູ່ນຳເຖົ້ານຳແກ່
ຮ່ວມແຜ່ນ ປະຖະພີ
ເດັກວັນນີ້ ຄືຜູ້ໃຫຍ່ວັນຫັລງ
ເຈົ້າຈົ່ງຟັງ ຄວາມພໍ່ຄວາມແມ່
ຟັງຄວາມເຖົ້າຄວາມແກ່ ແລະຄວາມຄຣູສອນ
ຈົ່ງສອນລອນ ໂສມງາມຂຶ້ນໃໝ່
ໃຫ້ເຈົ້າເອົາໃຈໃສ່ ໃນການສຶກສາ
ຈະພາໄປ ສູ່ຄວາມກ້າວໜ້າ
ເຈົ້າຈົ່ງໄດ້ແກ້ວກ້າ ທາງແຫ່ງປັນຍາ
ໃຫ້ເຈົ້າມີວິຊາ ສ່ອງໃສສະອາດ
ເພື່ອສ້າງຊາດ ໃຫ້ຮຸ່ງເຮືອງງາມ

ກໍພໍ່ທ້ອນ ໆ

ຄວາມສູ່ຂ້ອນຜູ້ອາວຸໂສ

ສີ ສີ ສິດທິພູະພອນ ປະວໍຣະແວນວິເສດ
ອະຕິເຣກະເຕໂຊ ໄຊຍະມັງຄະລາຕິເຣກ
ອະເນກະ ສະຫັວດສະດີ
ມື້ນີ້ແມ່ນມື້ສົນ ວັນນີ້ແມ່ນວັນຊອບ
ມື້ປະກອບຍາມດີ –

ເປັນວັນໄຊຍະດິຖີ ອະມຸດຕະໂຊກ
ໂຕກໃບນີ້ ແມ່ນໂຕກໄມ້ຈັນ
ຂັນໃບນີ້ ແມ່ນຂັນໄມ້ແກ້ວ
ເຖົ້າແກ່ຕົກແຕ່ງແລ້ວ ພ້ອມພ່ຳງາມຕາ
ມີທັງດວງມາລາ ບຸບຜາດອກໄມ້
ຫຼຽນທູບໄຕ້ ສິ່ງກິ່ນຫອມຫວນ
ມວນຜາລາ ນາ ໆ ຜົນໄມ້
ຫາມາໄດ້ ຕົກແຕ່ງດາດີ
ມີໝາກເຟືອງ ໝາກໄຟແລະໝາກກ້ວຍ
ຢູ່ໃນຖ້ວຍ ແມ່ນໝາກແຕງໂມ
ຢູ່ໃນໂອນັ້ນແມ່ນ ເຫົ້າລາໂທຫວານ
ຕັກມາໃໝ່ ໆ
ມີຕົ້ມໄກ່ ພ້ອມພ່ຳຫວານຄາວ
ຝູງອາວອາ ຫາເອົາມາໃສ່
ມີທັງໄຂ່ໄກ່ຕົ້ມ ໜ່ວຍປອດງາມ ໆ
ມີທັງນ້ຳຫວານ ນ້ຳຕານນ້ຳສົ້ມ
ມີທັງເຂົ້າຕົ້ມ ທັງໝູ່ເຂົ້າໜົມ
ອຸດົມດີ ອາຫານທຸກຢ່າງ
ພາຂ້ວນຜ່າງ ຕັ້ງໃສ່ໃຈກາງ
ຝ້າຍຂາວວາງ ລຽນກັນຫລາຍເສັ້ນ
ລາງຄົນເຫັ້ຍນ ລົນນ້ຳໃສ ໆ
ໝໍພອນໄຂ ບົດກອນຂຶ້ນອ່ານ
ຂານຄຳມ່ວນ ເອີ້ນຮຽກເອົາຂ້ວນ

<u>ວ່າ ມາເຍີຂ້ວນເຮີຍ !</u>

ມື້ນີ້, ຕັ້ງຫາກແມ່ນ ເປັນວັນມະຫາໄຊ
ຈະບໍ່ມີໂພຍໄພ ອັນໃດມາຕ້ອງ
ເພິ່ນກ່າວຍ້ອງ ວ່າເປັນມຸງຄຸນ
ພາກັນມາ ຈົນຫລາຍແໜ້ນອັ່ງ

ມານັ່ງລ້ອມ	ມີເຖົ້າແກ່ລຸງຕາ
ມີອາວອາ	ແລະຝູງພໍ່ແມ່
ແລ້ວແຕ່ແມ່ນ	ມາຄໍ້າມາຄູນ
ພໍ່ເຖົ້າຄໍ້າ	ບ້ານໃຕ້ກໍມານໍາ
ພໍ່ເຖົ້າຄູນ	ບ້ານເໜືອກໍມາຮ່ວມ
ບໍ່ມີຜູ້ເຫິງາຫ່ງວມ	ນັ່ງຢູ່ຊຶງມຶງ
ບໍ່ມີຜູ້ນັ່ງຊຶງ	ອ່ອນເພັຍເປັ້ຍລ່ອຍ
ມີແຕ່ຜູ້ອ່ອຍຫ່ອຍ	ງາມໜ້າງາມຕາ
ພາກັນມາ	ຮຽກຂວັນມື້ນີ້
ມີແຕ່ຜູ້ຍິ້ມແຍ້ມ	ຈິດແຈ່ມໃສງາມ
ນໍາພາຂວັນ	ມາອວຍພອນມື້ນີ້
ຢູ່ສະຖານທີ່ນີ້	ແມ່ນອວຍພອນຜູ້ແກ່
ຝູງພໍ່ແມ່	ຜູ້ອາວຸໂສ
ຜູ້ມີບຸນມີຄຸນ	ຕໍ່ພວກລູກເຕົ້າ
ຜູ້ເປັນເຄົ້າແມ່ນ	ຕໍ່ລູກຫລານເຫລັນ
ເປັນຜູ້ມີບຸນຄຸນ	ຝູງຄົນໄດ້ເພິ່ງ
ຜູ້ເພິ່ນເບິ່ງ	ຕໍ່ຮີດສັງຄົມ
ຜູ້ອຸດົມ	ດ້ວຍຄວາມຮັກຫໍ່
ຜູ້ສ້າງກໍ່	ຄວາມສາມັກຄີ
ຜູ້ເພິ່ນມີຄວາມດີ	ດອມຍາດພີ່ນ້ອງ
ຈຶ່ງໄດ້ເອີ້ນຮຽກຮ້ອງ	ວ່າ ມາເຢີຂວັນເຮີຍ !
ຂວັນທ່ານມາຮອດແລ້ວ	ຈຶ່ງໃຫ້ໃສຄືແກ້ວແລະເງິນຄໍາ
ຜູ້ເພິ່ນນໍາຄວາມດີ	ມາສູ່ຍາດພີ່ນ້ອງ
ເຫດຢ່າຕ້ອງ	ຕົກຖືກກາຍາ
ໃຫ້ທ່ານມີ	ອາຍຸຍືນຍາວຍິ່ງ
ຢ່າມີສິ່ງ	ອຸບາດໂພຍໄພ
ຝູງຫັວດໄອ	ຢ່າວຽນມາໃກ້
ຄວາມເຈັບໄຂ້	ໃຫ້ເຫີນຫ່າງໄລລາ

ຢູ່ກັບປວງປະຊາ ພັນລະຍາແລະລູກເຕົ້າ
ຮີດຄອງເກົ່າ ແຕ່ກ່ອນປາງຫັລງ
ໃຫ້ທ່ານສອນ ແກ່ຄົນໜຸ່ມນ້ອຍ
ເພື່ອສືບສ້າງ ບ້ານມິ່ງເມືອງແມນ
ແສນບິດຮຽມ ອັນດີລໍ້າເລີດ
ປະເສີດແທ້ ມີຄ່າລາຄາ
ຝູງລູກຫລານຂໍບູຊາ ໃຊ້ແຍງຕາງແວ່ນ
ເປັນຕົ້ນແມ່ນ ຂໍຖອດບິດຮຽມ
ເພື່ອໃຫ້ມີໃຈພຽນ ສ້າງປະເທດຊາດ
ເດັດຂາດວ່າ ຈະບໍ່ທິລງລືມ
ຂໍຊາບຊຶມ ບຸນຄຸນອັນເລີດ
ບຸນຈິ່ງເກີດ ຕໍ່ເນື້ອງເຈືອຈູນ
ແກ່ຜູ້ມີບຸນຄຸນ ສີລທັມສູງສິ່ງ
ພວກເຮົາຈິ່ງກ່າວເອີ້ນ ເປັນສຽງດຽວກັນ

<u>ວ່າ ມາເຢີຂ້ວນເຮີຍ !</u>

ຂ້ວນເຈົ້າມາຮອດແລ້ວ ຈິ່ງມາຢູ່ນໍາລູກຫລານເຫັລນ
ຈິ່ງມາເປັນຜູ້ຊູ ແລະຜູ້ຊ້ວນ
ມາເປັນຜູ້ຊ່ອຍສ້າງ ຊີ້ທິດພາທາງ
ເພື່ອມາເປັນຄວາມຫວັງ ຊີ້ທາງອັນປະເສີດ
ເພື່ອໃຫ້ລູກຫລານເກີດ ຄວາມເຊື່ອສັດທາ
ຂໍເຊີນຂ້ວນທ່ານມາ ຍິນດີນໍາໝູ່
ຈິ່ງມາຢູ່ ນໍາລູກນໍາຫລານ
ເປັນຂ້ວນເຮືອນຂ້ວນຊານ ຢູ່ຍືນເຖິງເຖົ້າ
ມີຜູ້ເຖົ້າ ແມ່ນມີຜູ້ພາທາງ
ຖ້າມີນາງ ກໍຕ້ອງມີຄູ່ຊ້ອນ
ຖ້າມີຕ້ອນ ກໍຕ້ອງມີປາ
ມີນາດີ ກໍຕ້ອງມີເຂົ້າ
ມີຜູ້ເຖົ້າ ເປັນຂື່ຂ້ວນເມືອງ

ມີເງິນຄຳ	ກໍຈຶ່ງມີເຄື່ອງເອ້
ຝູງຂ້າທັງຫລາຍ	ພາກັນມາມື້ນີ້
ຫລາຍໜ້າ	ຫລາຍຕາ
ແມ່ນໄດ້ພາກັນມາ	ອວຍພອນອັນປະເສີດ
ຈຶ່ງລ້ຳເລີດ	ໝັ້ນແກ່ນສິດໃສ
ໃຫ້ທ່ານມີ	ອາຍຸຍືນຍາວໝັ້ນ
ໝັ້ນ, ໃຫ້ເຈົ້າໝັ້ນ	ປານກ້ອນຜາແອ່ນ
ໝັ້ນ, ໃຫ້ເຈົ້າໝັ້ນ	ປານແທ່ນຜາຈວງຜາຈັນ
ໝັ້ນ, ໃຫ້ເຈົ້າໝັ້ນ	ຄືດັ່ງພູເຂົາຫລວງໄກລາດ
ໝັ້ນ, ໃຫ້ເຈົ້າໝັ້ນ	ຄືລ່ຽມອາດເຂົາສຸເມຣ
ໝັ້ນ, ໃຫ້ເຈົ້າໝັ້ນ	ຄືດວງຕາເວັນໃສສ່ອງແຈ້ງ
ໝັ້ນ, ໃຫ້ເຈົ້າໝັ້ນ	ຄືແຜ່ນຫີນແລງ
ແຂງ, ໃຫ້ເຈົ້າແຂງ	ຄືແຜ່ນຫີນລາດ
ດ້ວຍບາດຄາຖາວ່າ	ໄຊຍະຕຸພະວັງ ໆ
ໄຊຍະມັງຄະລະ	ສຸຂະສະຫັວດສະດີ

ອາຍຸ ວັນໂນ ສຸຂັງ ພະລັງ

ໝັ້ນຍືນ ໝັ້ນຍືນ

ກໍຂ້າເຖີ້ນ ໆ

ຄຳສູ່ຂັວນ

ຜູ້ຈະໄປຮຽນປະເທດນອກ

ສີ ສີ ສິດທິພະພອນ	ປະວໍຣະແວນວິເສດ
ອະເນກະເຕໂຊ	ໄຊຍະມັງຄະລາຕິເຣກ
ອະເນກະສະຫັວດສະດີ	ວັນນີ້ ເປັນ............
ເດືອນ.... ຂຶ້ນ-ແຮມ......ຄ່ຳ	ປີ.............
ພ.ສ 25...........	ງາມດູອາດ
ມາພ່ຳພ້ອມ	ນັກປາດອາຈານ

ເພິ່ນມານັ່ງຄູນທານ ວ່າແມ່ນແລ້ວ
ໂຄງຊ້າງແກ້ວກໍວ່າ ມື້ນີ້ເປັນວັນດີ
- ໂຄງໄຊຍະດິຖີ ກໍວ່າຖືກອະມຸດຕະໂຊກ
ສິດທິໂຍກພ້ອມ ອຸດຕະມັງຄະລາ
ເປັນວັນມະຫາສາຣະທະການ ຟ້າຂາວດາວສ່ອງ
ນັກຂັດຕະຣິກປ່ອງ ວັນດີ
- ເປັນວັນໄຊຍະດິຖີ ອະມຸດຕະໂຊກ
ຈຳເລີນໂລກ ຈັກກະວານ
ເປັນວັນບໍຣິການ ເຮືອງຮຸ່ງ
ພູຣະອາທິດພຸ່ງ ຣັດສະໝີ
- ເປັນວັນດີ ລ້ຳເລີດ
ປະເສີດດ້ວຍ ຣິກງາມຍາມດີ
ບັດນີ້, ຝູງພີ່ນ້ອງ ເຖົ້າແກ່ທັງຫລາຍ
ທັງຍິງຊາຍ ແລະພໍ່ແມ່
- ຂິນຂວາຍຫາ ນຳມາຍັງເຄື່ອງ
ທຳລາບາສີ ໃສ່ພາມາຕັ້ງຫ້ອງ
ພວກພີ່ນ້ອງ ໝູ່ວົງສາ
ນອງກັນມາສະພັ່ງ ຖ້ວນໜ້ານັ່ງຢາຍຢັງ
- ຝູງຍິງຊາຍ ແລະເຖົ້າແກ່
ຝູງພໍ່ແມ່ ແລະຕານາຍ
ເຂົ້າມານັ່ງເປັນສາຍ ລຽນກັນຢູ່ໃນສາດ
ແລ້ວຈິ່ງພ້ອມໂອກາດ ໃຫ້ຂ້າບາດເປັນພາມ
- ໃຫ້ຫາເອົາຄວາມດີຄວາມງາມມາຮ້ອງຮຽກເອົາຂັວນ

<u>ວ່າ ມາເຢີຂັວນເຮີຍ !</u>

ຍາມເຈົ້າຢູ່ ກໍໃຫ້ມີໄຊ
ຍາມເຈົ້າໄປ ກໍໃຫ້ມີໂຊກ
ຍາມເຈົ້າຢູ່ ຢ່າໄດ້ມີອັນຄາ
- ຍາມເຈົ້າມາ ຢ່າໄດ້ມີອັນຂ້ອງ

ເຈົ້າໄປຮອດບ້ານໃດເມືອງໃດ	ຂໍໃຫ້ມີແຕ່ພີ່ແຕ່ນ້ອງ
ເຕັມບ້ານ	ເຕັມເມືອງ
ຢ່າໄດ້ມີຄຳຂັດເຄືອງ	ອັນໃດຈັກຢ່າງ
ຄັນເຈົ້າຄຶດຕ່າງ ໆ	ຢາກໄປຢາກມາ
- ໃຫ້ມີຜູ້ເອົາຣິຖມາຫາ	ຕ້ອນເອົາໄປທ່ຽວ
ຢ່າໄດ້ມີຜູ້ກ່ຽວ	ຄ່າຣິຖຄ່າລາງ
ໄປນຳທາງ	ຈ່າຍກິນຊູ່ມື້
ມີແຕ່ຜູ້ໄປຊື້	ມາໃຫ້ສູ່ກິນ
- ໃຫ້ເຈົ້າປານພູຂອິນ	ຢູ່ເທິງຊັ້ນຟ້າ
ຄັນເຈົ້າເດີນໄປໜ້າ	ໃຫ້ມີຜູ້ຮັບຮອງ
ຢູ່ເປັນໝວດເປັນກອງ	ຖ້າຮັບຖ້າຕ້ອນ
ຢ່າມີການເດືອດຮ້ອນ	ສັບພະສິ່ງອັນໃດ
- ຄັນເຈົ້າປາກນຳໃຜ	ໃຫ້ເຂົາຍໍມືໄຫ້ວ
ບໍ່ວ່ານ້ອຍທີລໃຫ່ຍ	ບ່າວໄພ່ເຈົ້າຂຸນ
ຂໍໃຫ້ເປັນຈັ່ງບຸນ	ກຸສົນຊາດແລ້ວ
ຂໍໃຫ້ຄຸນພຣະແກ້ວ	ປົກປັກຮັກສາ
- ການໄປມາ	ໃຫ້ປອດໄພເຖິງບ້ານ
ເຈົ້າຂີ້ຄ້ານ	ໃຫ້ນອນຢູ່ເຮືອນຕົນ
ນອນຫັລບ	ໃຫ້ເຈົ້າໄດ້ເງິນພັນ
ນອນຝັນ	ໃຫ້ເຈົ້າໄດ້ເງິນໝື່ນ
- ນອນຕື່ນ	ໃຫ້ເຈົ້າໄດ້ເງິນແສນ
ໃຫ້ທ່ານມີພົນແພນ	ອາຣັກຂາຢູ່ເຝົ້າ
ໃຫ້ທ່ານໄດ້ເປັນເຈົ້າ	ກວ່າໝູ່ທັງຫລາຍ
ໃຫ້ໄດ້ເປັນເຈົ້ານາຍ	ຜູ້ມີອຳນາດ
- ຄັນເຈົ້າໄປທາງນ້ຳ	ໃຫ້ມີຜູ້ຖືທ້າຍເຮືອ
ຄັນເຈົ້າໄປທາງບົກ	ໃຫ້ມີຜູ້ຖືຫາບ
ຄັນເຈົ້າໄປອາບນ້ຳ	ໃຫ້ມີຜູ້ລ້າງເທື່ອສີໄຄ
ຄັນເຈົ້າເດີນທາງໄກ	ໃຫ້ໄດ້ຂີ່ນເຮືອບິນ

- บໍ່ທັນດິນ ໃຫ້ເຈົ້າໄດ້ໄປຮອດ
ໃຫ້ເຈົ້າໄດ້ໄປຈອດ ລົງສູ່ສະໜາມບິນ
ໝູ່ພັກພວກໄດ້ຍິນ ພາກັນມາຮັບຕ້ອນ
ເອົາໄປສົ່ງຮອດບ່ອນ ສະຖານທີ່ພັກພາ
- ຂໍໃຫ້ເທບພະດາ ອິນພົມຍູ້ສົ່ງ
ໃຫ້ສະໝອງເຈົ້າປອດໂປ່ງ ຮຽນໄດ້ໝົດຊູ່ອັນ
ພາສາເຢີຣະມັນ ອັງກິດຝຣັ່ງ
ພາສາໃດຕ່າງໆ ໃຫ້ຮຽນໄດ້ຊູ່ອັນ
- ພາສາອາເມຣິກັນ ອິນເດັຍແລະພະມ່າ
ໃຫ້ລືມພານເຈົ້າແກ່ກ້າ ຄືແສງພູະຈັນ
ໃຫ້ເຈົ້າມີວັນ ຄືແສງພູະອາທິດ
ໃຫ້ເຈົ້າມີຣິດ ຄືພູະໂມກຄັນລາ
- ເຈົ້າປາກນຳຝຣັ່ງ ໃຫ້ອ່ວຍໜ້າເຂົ້າມາຫາ
ເຈົ້າປາກນຳອະເມຣິກາ ໃຫ້ອ່ວຍໜ້າເຂົ້າມາເວົ້າ
ເຈົ້າປາກນຳປະທານາທິບໍດີ ຜູ້ເປັນຈອມເປັນເຈົ້າ
ໃຫ້ໄດ້ເຄື່ອງ ບັນນາການ
ເຈົ້າປາກນຳທ່ານອາຈານ ໃຫ້ເພິ່ນສອນວິຊາຢ່າງ
ຄ່ອງແຄ້ວ
- ເຈົ້າສອບເສັງໄດ້ແລ້ວ ໃຫ້ເຈົ້າຕ່າວຄືນມາ
ຫາບິດາ ມານດາພໍ່ແມ່
ມາຮອດເຖົ້າຮອດແກ່ ປູ່ຍ່າຕານາຍ
ໃຫ້ມາສຸກສະບາຍ ຢູ່ຍືນເຖິງເຖົ້າ
- ຕາບຕໍ່ເທົ້າ ຮ້ອຍຊາວພູະວັດສາ

ຈັດຕາໂຣ ທັມມາ ວັດທັນຕິ
ອາຍຸ ວັນໂນ ສຸຂັງ ພະລັງ
ດັ່ງນີ້ ກໍຂ້າເຖີ້ນ ທ

ຄຳສູ່ຂັວນ

ຜູ້ຮຽນມາຈາກຕ່າງປະເທດ

- ສິ ສິ ສິດທິພູະພອນ	ປະວໍຣະແວນວິເສດ
ອະເນກະເຕໂຊ	ໄຊຍະມັງຄະລາຕິເຣກ
ອະເນກະສະຫັວດສະດີ	ວັນນີ້ ເປັນວັນ.........
ເດືອນ.......ຂຶ້ນ-ແຮມ.....ຄ່ຳ,	ປີ........................
- ພ.ສ. 25.........	ງາມດູອາດ

ບັດນີ້, ຝູງຂ້າທັງຫລາຍ ຂົນຂວາຍຫາຄັນທາແລະເຂົ້າຕອກ

ດອກໄມ້	ແລະທຽນສີ
ເປັນຂອງດີ	ອັນປະເສີດ
- ເລີດລ້ຳ	ກວາດວງມາລາ
ມະລິວັນ	ບານແບ່ງສ້ອຍ
ຫອມກິ່ນຄ້ອຍ	ຢູ່ທຸກຍາມ
ມີທັງດອກຈຳປາ	ແກມເບັງມາດ
- ເດັຍຣະດາດ	ຢູ່ກາງໄພ
ລົມພັດໃບ	ເປື້ອງແກ່ວງ
ແຕ່ງເປັນພາຂັວນແລ້ວ	ຈຶ່ງຍໍມາຕັ້ງໄວ້ກາງຫ້ອງ
ຝູງພີ່ນ້ອງ	ໝູ່ວົງສາ
- ຊວນກັນມາ	ຄັບຄັ່ງ
ຖ້ວນໜ້ານັ່ງ	ຍາຍຢັງ
ທັງຍິງຊາຍ	ແລະເຖົ້າແກ່
ຝູງພໍ່ແມ່	ແລະລຸງຕາ
- ພ້ອມກັນມາທຳລາບາສີ	ໃຫ້ແກ່ທ່ານ......
ລາວໄດ້ໄປຮຽນເອົາ	ຄວາມຮູ້ແລະວິຊາ
ລາວໄປຮຽນເອົາມາ	ໄດ້ໝົດຊູ່ຢ່າງ
ວິຊາການຕ່າງ ໆ	ຮຽນໄດ້ຊູ່ອັນ
- ລາວເປັນຄົນສຳຄັນ	ຮຽນດີຄ່ອງແຄ້ວ

ລາວສອບເສັງໄດ້ແລ້ວ	ກໍຈຶ່ງຕ່າວຄືນມາ
ສູ່ເຄຫາ	ເຮືອນຊານຮອດບ້ານ
ພໍ່ແມ່ລາວຈຶ່ງໄປກ່າວຕ້ານ	ເລົ່າພີ່ນ້ອງວິງວານ
- ເພິ່ນຈຶ່ງມີເຄື່ອງບັນນາການ	ນຳມາພ່ຳພ້ອມ
ນ້ອມນຳມາ	ຍັງທູບທຽນແລະດອກໄມ້
ຫາໄດ້ແລ້ວ	ຝູງໝູ່ເງິນຄຳ
ນຳກັນມາ	ເຂົ້ານັ່ງໃນສາດ
- ຈຶ່ງພ້ອມກັນໂອກາດ	ໃຫ້ຂ້າບາດເປັນພາມ
ໃຫ້ຫາເອົາຄວາມດີຄວາມງາມ	ມາຮ້ອງຮຽກເອົາຂັວນ

<u>ວ່າ ມາເຢີຂັວນເຮີຍ !</u>

ຂັວນເຈົ້າຄ່ວາເດີນໄກ	ກໍໃຫ້ມາສາມື້ນີ້ວັນນີ້
- ຂັວນເຈົ້າໄປທີລາງຢູ່ເມືອງໄທ	ທີລບາງກອກ
	ກໍໃຫ້ມາສາມື້ນີ້ວັນນີ້
ຂັວເຈົ້າໄປທີລາງຢູ່ເມືອງນອກ	ເມືອງອະເມຣິກາ
	ກໍໃຫ້ມາສາມື້ນີ້ວັນນີ້
ຂັວນເຈົ້າໄປຮຽນວິຊາ	ແລະຄວາມຮູ້
	ກໍໃຫ້ມາສາມື້ນີ້ວັນນີ້
ຂັວນເຈົ້າໄປຮຽນຢູ່	ເມືອງຝຣັ່ງແລະອັງກິດ
	ກໍໃຫ້ມາສາມື້ນີ້ວັນນີ້
- ຂັວນເຈົ້າຜູກມິດ	ນຳເຍີຣະມັນແລະຍີ່ປຸ່ນ
	ກໍໃຫ້ມາສາມື້ນີ້ວັນນີ້
ຂັວນເຈົ້າໄປເຄີຍຄຸ້ນ	ນຳແຂກອິນເດັຍ
	ກໍໃຫ້ມາສາມື້ນີ້ວັນນີ້
ຂັວນເຈົ້າໄປທ່ຽວເມືອງຣັດເຊັຍ	ມົງໂກເລັຍແລະພະມ່າ
	ກໍໃຫ້ມາສາມື້ນີ້ວັນນີ້

<u>ວ່າ ມາເຢີຂັວນເຮີຍ !</u>

- ໃຫ້ເຈົ້າຕ່າວໜ້າ	ມາສູ່ເມືອງຕົນ
ໃຫ້ເຈົ້າຂີ່ເຮືອບິນ	ບິນມາຢ່າຊ້າ

ຂ້ອຍມານັ່ງຢູ່ຖ້າ ຄອຍຜູກເອົາຂ້ວນ

ວ່າ ມາເຢີຂ້ວນເຮີຍ !

- ຄັນວ່າຂ້ວນເຈົ້າມາຮອດແລ້ວ ໃຫ້ຫາຍໂພຍໄພຍະມາດ
ໃຫ້ຫາຍໂຣຄພະຍາດຮ້ອນ ໃນເນື້ອໃຫ້ຢູ່ເຢັນ
ໃຫ້ເຈົ້າມາຢູ່ໝັ້ນ ພັນວັດສາເປັນເຂດ
ຮ້ອຍປະເທດທ້າວ ໃຫ້ມານ້ອມສ່ວຍສິນ
- ໃຕ້ໂລກລໍ້າ ລືເດດມະຫາຄຸນ
ມຸນຫງຸນມີ ໃຫ້ໝື່ນນາງມາລ້ອມ
ໃຫ້ເຈົ້າຍືນຍາວໝັ້ນ ມີໄຊສິດທິໂຊກ
ຂໍໃຫ້ບຸນມາກລົ້ນ ສິດທິເດດລືຊາ
- ນາໂຖເຖິງ ຍອດຍານດວງແກ້ວ
ສະຫັວດສະດີພ້ອມ ໃນນະຄອນຕຸ້ມໄພ່
ມະນຸດໃຕ້ລຸ່ມຟ້າ ໃຫ້ລືເທົ້າທົ່ວແດນ
ຝູງໝູ່ລາວຊາດເຊື້ອ ໃຫ້ໄດ້ເພິ່ງປາຣະມີ
- ຍິງຊາຍໃນຊົມພູ ໃຫ້ຂາບທູນປະນົມໄຫ້ວ
ອັນວ່າເງິນຄໍາແກ້ວ ໃຫ້ໄຫລຫັ່ລງມາໂຮມ
ໃນເຮືອນຊານ ຊູ່ວັນເລີງເລື້ອຍ
ກັບທັງແກ້ວຄ່າລ້ານ ໃຫ້ໄຫລເຂົ້າຮ່ວມໂຮງ
- ໃຫ້ມີແສງໃສເຫຼື້ລອມ ໃນໂຮງຢ່າໄດ້ຂາດ
ຂໍໃຫ້ທ່ານ......ບຸດຕະຣາດເຈົ້າ ເນົາຫ້ອງຢູ່ນານ
ຂໍໃຫ້ເທັຍຣະຄາຄົງ ຢູ່ຍືນຍາວໝັ້ນ
ຫລາຍວັນເດືອນປີໄດ້ ຄອງເມືອງຢ່າໄດ້ຂາດ
- ຂໍໃຫ້ທ່ານ.......ບຸດຕະຣາດເຈົ້າ ບຸນກ້ວາງຄ່ອຍຢູ່ດີ
ໃຫ້ເຈົ້າລີລາເດີນ ດ່ວນມາຢ່າຊ້າ
ໃຫ້ເຈົ້າລີລາເຂົ້າ ໃນຄີງຂອງເກົ່າເຈົ້າເນີ
ຝູງພີ່ນ້ອງ ຄອງຖ້າຊື່ນຊົມ
- ໄຊຍະຕຸ ພະວັງ ໄຊຍະມັງຄະລະ
ໄຊຍະ ໄຊຍະ ມະຫາມຸງຄຸນ

ຄວາມສຸກສົມບູນ ກໍຈົ່ງມີແກ່ເຈົ້າ
ຕາບຕໍ່ເທົ້າ ຮ້ອຍຊາວພູະວັດສາ

ວ່າ ມາເຢີຂັວນເຮີຍ !

- ຄັນວ່າຂັວນເຈົ້າມາຮອດຫ້ອງ ສະຖານທອງທີ່ຢູ່ເຈົ້າແລ້ວ
ຂໍໃຫ້ລຸລາບໄດ້ ເງິນຄຳແກ້ວຊູ່ປະການ
ອັນວ່າໂຈນມານຮ້າຍ ສັດຕູຢ່ານາບຽດ
ໄພຍພະຍາດຮ້າຍ ຂໍໃຫ້ເວັ້ນຫີລກໄກ
- ໄຊຍະຕຸ ໃຫ້ເຈົ້າຕີຣະຄັງ
ໄຊຍະມັງຄະລັງ ໃຫ້ເຈົ້າຕີຄ້ອງ
ກອງຕະໂພນ ແຄນປີ່
ສຽງໃຜດີໃຫ້ໄຊໂຍໂຫ່ຮ້ອງ ດັງກ້ອງທົ່ວເມືອງແດ່ທ້ອນ ຯ

ຄຳອວຍພອນບາສີທ່ານນາຍົກ

ຣັດຖຸມຸນຕຼີ, ເຈົ້າແຂວງ, ເຈົ້າເມືອງ

ນາຍພົນ, ນາຍພັນ

- ສີ ສີ ສະຫັວດສະດີຊົມຊື່ນ ຮື່ນ ໆ ກ້ອງຟ້າໃໝ່ເອົາໄຊ
ສຽງດັງໄປ ຢູ່ບໍ່ຂາດ
ມະຫາສັງກາດ ປຸ່ນຣາສີ
ເປັນຣະດູປີ... ແຖມຖ່າຍ ມາແລ້ວ
- ພູະສຸຣິຍະຍ້າຍ ເຂົ້າສູ່ຣາສີ
ເປັນວັນ.....ເດືອນ..... ຂຶ້ນ-ແຮມ....ຄ່ຳ
ມາພໍ່າພ້ອມ ນັກປາດອາຈານ
ເພິ່ນມານັ່ງຄູນຫານ ວ່າແມ່ນແລ້ວ
- ໂຄງຊ້າງແກ້ວກໍວ່າ ມື້ນີ້ເປັນວັນດີ
ໂຄງໄຊຍະດີຖີ ກໍວ່າຖືກອະມຸດຕະໂຊກ
ສິດທິໂຍກພ້ອມ ອຸດຕະມັງຄະລາ
ເປັນວັນມະຫາມຸງຄຸນ ສາຣະທະການ

ຟ້າຂາວ ດາວສ່ອງ

- ນັກຂັດຕະຣືກປ່ອງວັນດີ ວັນດີຖືອະມຸດຕະໂຊກ

ຈຳເລີນໂລກຈັກກະວານ ເປັນວັນບໍຣິການເຣືອງຣຸ່ງ

ພູະສຸຣິຍະພຸ່ງ ຣັດສະໝີ

ເປັນວັນດີ ອັນປະເສີດ

- ຝູງຂ້າທັງຫລາຍ ທັງຍິງຊາຍແລະເຖົ້າແກ່

ຂົນຂວາຍຫານາມາຍັງເຄື່ອງ ຣາຊະບາສີ

ໃສ່ພານມາຕັ້ງຫ້ອງ ຝູງພີ່ນ້ອງແລະລຸງຕາ

ພ້ອມກັນມາສະພັ່ງ ຖ້ວນໜ້ານັ່ງຢາຍຢັງ

- ທັງຍິງຊາຍ ແລະເຖົ້າແກ່

ພໍ່ແມ່ພ້ອມ ຝູງໝູ່ວົງສາ

ທັງຂຸນກວນ ແລະແສນໝື່ນ

ຊົມຊື່ນພ້ອມ ມີໃຈໃສສັດທາ

- ພ້ອມກັນມາຖວາຍ ປະລິດທິພູະພອນ

ໃຫ້ແກ່ທ່ານ.......

ຕັ້ງແຮກແຕ່ປີນີ້ ເດືອນນີ້ ວັນນີ້ເມືອໜ້າ

ຂໍໃຫ້ພະນະທ່ານນາຍົກ(.....) ພ້ອມຄອບົວ

ກັບທັງພະຣິຍາເມັຍມິ່ງ ພ້ອມດ້ວຍລູກແກ້ວກິ່ງຊາຍຍາ

- ຢ່າໄດ້ເຈັບຕາ ແລະປວດເກົ້າ

ຢ່າຮູ້ເຖົ້າ ຢ່າຮູ້ເຂົ້າພະຍາດທີໂຣຄາ

ຂໍໃຫ້ມີພູະຊົນພັນສາ ຍືນຍາວຢ່ານ້ອຍ

ໄດ້ຮ້ອຍຊາວ ເປັນຂະໜາດ

- ທົດສະຣາດ ເຂື່ອນແຂງເມືອງ

ເດຊະເຣືອງຮຽງຣາບ ຜາບແພ້ໝູ່ໂພຍໄພ

ຢ່າໄດ້ມີພັກໃດພວກໃດ ມາບັງບຽດ

ຢ່າໄດ້ມີຜູ້ຄຶດຂົມຄຽດ ສໍ່ສຽດແລະນິນທາ

- ຈົ່ງໃຫ້ພະນະທ່ານ ຊົງປັນຍາອັນວິເສດ

ຈົບເພດພ້ອມ ດ້ວຍດວງທັມ

ໃຫ້ຄຳປາກພະນະທ່ານ	ຢຳກ່ວາພິດງູເຫົ່າ
ໃຫ້ໄດ້ເປັນເຈົ້າ	ຜ່ານທະຣິງຍົດ
- ຄືວ່າກຽດຕິຍົດ	ແລະປະຣິວາຣະຍົດ
ຢ່າໄດ້ມີຜູ້ຄຶດຄິດ	ທໍຣະຍົດແລະຫຶງສາ
ໃຫ້ມີຫລາຍພາສາ	ມາບູຊາຫລາຍກ່ວາເກົ່າ
ໃຫ້ໄດ້ເປັນເຈົ້າ	ກັ່ງຣິ່ມຄັນຄຳ
- ໃຫ້ມີເສນານຳເມືອງນົບ	ໂຄຣົບໄຫ້ວຢຳແຢງ
ຂັນເງິນຂັນຄຳ	ແຢງມາຊູ່ພາກ
ຂອງລົ້ນຫລາກເມືອງນອງ	ຈິ່ງໃຫ້ທ່ານນາຍົກ.....
ມີເຕຊາ	ເຮືອງຍິ່ງ
ເປັນດັ່ງ	ແສງພູຣະອາທິດ
- ປະສິດທິເຕໂຊ	ວະໂຣທະຣາທິຣາດ
ເປັນດັ່ງອິນທິຣາດເຈົ້າ	ພິມມິນ
ທົ່ວແດນດິນ	ໂອຍອ່ອນນ້ອມ
ທຸກປະເທດທ່ານທ້າວ	ເຂົ້າມານ້ອມນົບໄຫ້ວ
	ສາທຸການ
- ເຂົ້າມາຖວາຍສົມພານ	ທຸກເມື່ອ
ເຮືອງເຮື່ອແກ້ວ	ເງິນຄຳ
ລົ້ວແຮຣຳ	ຜ້າຜ່ອນ
ຄຳບໍ່ທ່ຍອນ	ໄຫລມອງມາ
- ຖວາຍບູຊາຄັບຄັ່ງ	ສະພັ່ງໄຫ້ວວັນທາ
ຈິ່ງໃຫ້ຫລາຍພາສາ	ມານ້ອມນົບ
ຂໍໃຫ້ພະນະທ່ານນາຍົກ.....	ມີສົມພານຜາບແພ້
ຮ້ອຍທ້າວ	ພັນແດນ
ແສນສັດຕູ	ໂອຍອ່ອນນ້ອມ
- ທຸກປະເທດ	ຍ່ອມພີຣົມ
ຈິ່ງໃຫ້ເຂົາເຂົ້າມາ	ຖວາຍບັງຄົມຊ່ອຍສ້າງ
ຢ່າໄດ້ອວດອ້າງ	ແຂງຂັນ

ຈຶ່ງໃຫ້ພະນະທ່ານນາຍົກ.....	ຊິງກຳລັງເຮັວເຮັ່ງ
- ລາບເລັ່ງເຊົ້າ	ໄຫລມາ
ຍົດສັກໝາ	ລຳເລີດ
ຈຶ່ງເກີດຂຶ້ນ	ອະນັນຕັງ
ອະທິປັດໄຕຍັງ	ອິງອາດ
- ຢ່າຄາດແຄ້ວຄິງດີ	ຍິ່ງກ່ວາເກົ່າ
ໝື່ນເທົ້າ	ແສນທະວີ

ວ່າ ມາເຢີຊ້ອນເຮີຍ !

ຄັນວ່າຊ້ອນທ່ານມາຮອດຫ້ອງ	ສະຖານທອງທີ່ຢູ່ທ່ານແລ້ວ
- ຝູງຂ້າທັງຫລາຍກໍພ້ອມກັນ	ຍໍມືນິບໄຫ້ວປະນົມກອນ
ຖວາຍປະສິດທິພູະພອນໄປ	ບໍ່ໄດ້ຄາດແຄ້ວ

ແລ້ວໄປດ້ວຍບາດພູະຄາຖາວ່າ ໄຊຍະຕຸພະວັງ

ໄຊຍະມັງຄະລັງ ດັ່ງນີ້ກໍຂ້າເຖີ້ນ ຯ

ຄຳຖວາຍພູະພອນ

(ບາສີພູະມະຫາກະສັດ)

(ອະນຸລັກຂອງເກົ່າ)

- ສີ ສີ ສິດທິພູະພອນ	ປະວໍຣະແວນວິເສດ
ອະເນກະເຕໂຊ	ໄຊຍະມັງຄະລາຕິເຣກ
ອະເນກະ	ສະຫັວດສະດີ
ໄມຕີຈິ່ງມີແກ່ຝູງນໍຣະເທພາ	ນາກຄຸດ
- ມະນຸດສະກຸມພັນ	ຄົນທັບພະຍັກຂາ
ເທບພະດາ	ສຸຣາສຸຣິນ
ອິນພູມຍົມມະຣາຊາ	ສຸນັກຂັດຕະສຸມັງຄະລາ
ອຸດຕະມະໂຊກ	ອຸດຕະມະໂຍກ
- ອຸດຕະມະດິຖີ	ອຸດຕະມະນາທີ
ອຸດຕະມະສີພິລາດ	ອິນທະພາດພ້ອມໄຕຍາງ

ທັງນາວໆງຄາດຄູ່ ພ້ອມກັນຢູ່ສອນລອນ
ອາທິດຈອນຈັນທະຣິກ ອັງຄານຖືກມະຫາໄຊ
- ພຸດ ປະຫັດໄປ ເປັນໂຊກ
ສຸກເສົາໄດ້ອຸດຕະມະໂຍກ ພ້ອມອຸດຈາ
ອັນເປັນຊາຕາອະມະຕະມອນ ເປັນພອນອັນວິເສດ
ວັນນີ້ເປັນວັນປັດສະຈາກໂລກາວິນາດອຸບາດທຸກທົນປົນ
ຢໍາແລະພັກເພື່ອ
- ວັນນີ້ເປັນວັນປັດສະຈາກແຖວຮ້າຍໃຫ່ຍທັງປວງ
ວັນນີ້ເປັນວັນປັດສະຈາກພານງວງງາອ້າຍກໍ່າ ແລະຕຸ່ມຮອມ
ຣິກວັນດອມດີປອດ ເປັນຍອດມື້ມະຫາໄຊ
ຝູງຂ້າທັງຫລາຍມີ ຈິດໃຈຈິງຈອດ
- ຂໍຖວາຍພອນແກ່ ພູະຍອດເຈົ້າຈອມທົວ
ດ້ວຍບາດພູະຄາຖາວ່າ
ທີຄາຍຸໂກ ສຸຂີໂຕພະເວ ສະຫາ ຕຸມເຫ ພະທູສຸຂັງ
ມະຫາເຕໂຊ ມະຫາຍະໂສ
ມະຫາລາໂພ ລະເພຖະໂວດັ່ງນີ້ເປັນເຄົ້າ
- ທີຄາຍຸໂກຂໍໃຫ້ອິງສົມເດັດພູະອັກຄະວໍຣະຣາຊາແກ່ນເທົ້ງາ
ຕົນເປັນເຈົ້າ ຜາບສາກົນ
ຈິ່ງມີພູະພົນລະເຕຊານຸພາບ ກຸງໄກ
ຊິງພູະປັນຍາໄວ ວິໂຣດ
- ຂໍໃຫ້ມະຫາບຸພິດເຈົ້າ ຈິ່ງມີອາຍຸໂຍດຍືນຍາວ
ວັນມະພາວຜາຍແຜ່ ສະໜຸກແທ້ເຫືລອຫລາຍ
ສຸຂີໂຕ ອິງສົມເດັດພູະພູບານ ຈິ່ງມີສົມພານເພັງ
ເປັນອັນມາກ
ສຸກໂສດຫລາກ ດ້ວຍລາໂພ
- ລະເພຖະໂວ ມະຫາບຸພິດຕະເຈົ້າ
ພູບານຈອມມິ່ງ
ຈິ່ງໄດ້ຍັງ ນາງແກ້ວກິ່ງມະເຫສີ

ເຫວີແວນຈິງເຈດ	ຝູງທ້າວເທດແດນໄກ
ຈຶ່ງໃຫ້ມີໃຈໃສ	ຊົມຊື່ນ
- ຊ້າງມ້າໝື່ນ	ມະຫິງສາ
ນຳຂະບວນມາ	ຖວາຍບາດ
ຂ້າຂອມຣາດ	ຊາວວັງ
ງ່ອມໂຄມຄຳ	ທັນຕະຫັດຖີ
- ຂໍຈິ່ງໃຫ້ນຳນໍ່ງາ	ງາມແສນໂກດ
ເຂົ້າມາຊ່ອຍ	ໂພດທິສົມພານ
ມາຖວາຍບັນນາການ	ພູະບາດ
ບຸພິດຕະພູວະນາດ	ກຸງນໄກ
- ທົ່ວແຜ່ນໄຕຣ	ລືລ້ຳໂລກ
ມະຫາໂອກອ້າງ	ອ່ອນໂອຍຂາມ
ຂໍໃຫ້ເທບພະດາໃນແດນດອຍ	ຈັກກະວານວົງວາດ
ມາຮັກສາພູະບາດເຈົ້າ	ເບື້ອງລະແສນຕົນ
- ຕັ້ງແຕ່ພົ້ນສາກົນ	ກົງນາກ
ເຖິງພາກພົ້ນ	ພາຍບົນ
ໄນເວຫົນນາງເມກຂະລາ	ຕົນອົງອາດ
ທະຣົງແກ້ວກາດ	ຜລຽງແສງ
- ເຈົ້າຈິ່ງສຳແດງຍັງ	ດວງພະກາຍອິງຄະເຣດ
ລິເດດດ້າວ	ຜາບຊຸມພູ
ຝູງສັດຕູ	ໂຕນເຕັ້ນຫີລກ
ກົນຈິມານະອົກ	ເວັ້ນແວນໄກ
- ເສນາໃນສັບສໍ່	ຄວາມທໍ້ຍທໍ້ສົງສານ
ຈຶ່ງບັນດານໃຫ້ໜີໄກ	ແສນໂຍດ
ດ້ວຍເດດກ້າ	ພິລລະຍານ
ດ້ວຍສົມພານ	ພູະອົງການຕົນກວມເກດ
ຈຶ່ງທະຣົງເພດພ້ອມ	ດ້ວຍວິຊາ
- ແປດໝື່ນສີ່ພັນພູະຍາ	ມວນມາສົນສ່ວຍ

ທັງຫວຍໄຫ້ ໝູ່ເສດຖີ
ຈິ່ງເຂົ້າມາຍໍເອງຄະຊຸຣິ ບຸຣິມມະນາດ
ປາສາທັງ ລະເພຖະ ມະຫາຣາດເຈົ້າຈິ່ງໄດ້ຍັງ
ຜາສາດແກ້ວ ມຸນທຽນ
ທິງສະຖຽນ ແຖມຣາດ
ຖັດນັ້ນ, ພູະບາດເບື້ອງ ດາວພະໂຍມ
ອິນພິມມາສິມໂພດ ແສນຮ້ອຍໂກດເທພາ
ກັບທັງວິສຸກັມມາ ຕີນຈິບເພດ
- ທັງທ່ານທ້າວ ຝູງວິເສດສະເດັດມາ
ຄືວ່າ ຕີນພູະຍາທັງສີ່ ພ້ອມທຸກທີ່ຖວາຍພອນ
ແຖມນາມມະກອນກອງແກ້ວ ບຸພິດຕະເປັນເຈົ້າ
ຈິ່ງໄດ້ຜ່ານແຜ້ວ ສິງສານ
ບຸພິດຕະອິງການ ພູວະນາດເຈົ້າ
- ຈິ່ງພົ້ນຈາກພະຍາດ ເກົ້າສິບທັກປະການ
ນາງພູະທໍຣະນີສານ ຈິ່ງມາສະແດງໂດຍດອມຣາດ
ໂດຍດັ່ງເທບພະອາດໄທ້ ສົມພອນ
ນາກພັນກິງນະຄອນ ຄາມຂິງເຂດ
- ແດນທ້າວເທດ ຈີນຈາມ
ເກງກິວຂາມ ຂາບໄຫ້ວ
ນິບນອບນ້ອມ ສົມພານ
ມາຖວາຍສານ ແສນເຂດ
- ຝຣັ່ງເສດທ້າວ ເທດໄທ້ລັງກາ
ແສນພາສາຂອບເຂດ ຮ້ອຍປະເທດທ້າວ
ຊາວແຂກ ແສນພູະຍາ
ຊົມຊື່ນມາມວນໝີ່ ທຸກທີ່ຊ້າງໃຊ້ຂີ່ເຂນຄໍາ
ຄວນຈໍານໍາ ພ້ອມພາດ
- ມາຖວາຍບາດພູບານ ອິງການພູວະນາດ
ມ້າມິ່ງອາດອານຄໍາ ນາຍແນບນໍາຖວາຍຣາດ

ດ້ວຍເດຊະບາດເບື້ອງ ຮັງສີ
ຂໍຈົ່ງມີມາຍັງ ບັນນາການມູນມາກ
- ສິບສ່ວຍຫລາກ ນາ ໆ
ພານິດຊາ ເຊີຍຊົມຊອບ
ຂົງຂອກຂ້າງ ຄາເມ
ອາເນຕວາ ພ້ອມກັນຂົນຂວາຍຫາຂອງມາຝາກ
- ຜ້າຜ່ອນຫລາກ ນໍາມາ
ຫລາຍພາສາຍວນຍົ້ ພະມ່າຫໍ້ທົ່ງສາ
ສາກຍາປຸງຄະໂວ ແກວແກມມອນເມັງເທດ
ເຂີນແຂກເພດ ເພັ່ງພອນ
- ຖວາຍອາກອນກອງແກ້ວ ຜ້າຜ່ອນແລ້ວລ້ອນແຮລາຍ
ນໍາມາຖວາຍພູ່ະໄຕນໍຣົບ ໄຊຍະເຊດ.
ອີກປະການໜຶ່ງ, ພູ່ະນະວະໂລກຸດຕະຣະທັມເຈົ້າເກົ້າປະການ
ຈຶ່ງຈໍາເລີນຄໍາຄຶງ ອົງສົມເດັດບຸພິດຕະອົງການ
ຕົນວິເສດ
- ພູ່ະບາດເຈົ້າຈຶ່ງລີເດດ ດ້ວຍໄຊຍາ
ກຸງກົມພຸຊາ ອິນຖະປັດຖາ ບໍ່ແຂງຂັດ
ດ້ວຍຣັດຖະບໍຣິຫານ ພົນຂະເໜນທ້າວໄທ້
ຈຶ່ງໃຫ້ມາຂາບໄຫ້ວສົມພານ ບຸຣີມມະບໍພິດທຸກທິດ
ທ້ອງທົນຂວາ
- ອົງສົມເດັດເຈົ້າ ບົວຫລວງຢູ່ຫ້ລານຄໍາ
ກົງກົບກໍາ ປະກັນແກວ
ພົງພັນແນວ ປັນຈາຣະນະຄອນໂອຍອ່ອນ
ທັງທ່ອນທ້າວ ຈຸນລະນີ
- ມີໄມຕຼີສະເໜຫາ ມຸທຸຣາຈິດຕະເຈດ
ພານພ້ອມເພດສາມຜຍາສຸວັນນະກະຫາປະນາຣັດຕະເນດ
ກັບທັງກັລລະເຍດ ຍອດໄທ້ກຸມາຣີ
ຊ້າງພາຍສີ ຕົວດີງາມຂາວເຜືອກ

- ເລືອກເຄື່ອງເຂັ້ມ ຄຳແດງ
ອັດຊະດອນແພງ ຕົວດີທ້າງທີ່ງ
ເອ້ອວດຍິ່ງ ອານແກ້ວມະນີສີ
ຖັດນັ້ນ, ເສດຕະສັດດີ ດວງສູງເກົ້າຖ້ານ
- ຮິ່ມຫລາຍຮ້ານ ພ້ອມຂ່າຍໃບສີ
ຈາມະຣີ ຈຳມອນຄຳໂຄບ
ເຄື່ອງສິມໂພດພ້ອມ ເມັ້ງມາດພິຣົມ
ສະມາຄົມທັງເມືອງມວນ ມີໃຈມະທຸເຣດ
- ໂດຍດອມເດດ ພູະຣາຊະເຮັງໂຍ
ປັນຈະມາຣະຊີໂນ ມະຫາບຸພິດຕະວໍຣະຍານ
ຈິ່ງມ້າງມານ ໂມໂທຫ້າຮ້ອຍ
ເຜົາຜ່ານພ້ອຍ ເບື້ອງໂທດໂທໂສ
- ສາມີໂກ ມະຫາມະຄະຮັງ
ອິງສິມເດັດພູະພູບານ ຕົນຜ່ານເກົ້າ
ຈິ່ງໄດ້ເປັນເຈົ້າເອກະຣາດ ໃນຊຸມພູ
ສັດຕູຂາມຂາບໄຫ້ວ ທັງກຳຊ້າຍແລະກຳຂວາ
- ຖືສານມາສະໜອງເກດທຸກາທີ່ປັດຈັນຕະເທດທິນເໜືອ
ອຸດອນເຈືອ ຜາໃດດອຍກວ້າງ
ຊ້າງມ້ານິ່ງພັງພາຍ ອາກອນຫລາຍຄຳຕົ້
ທົ້ຫລວງລົ້ ຊຽງແມນ
- ແດນຊຽງຂອງ ເຂີນເມກ
ເມືອງທ້າວເອກ ລຳພູນ
ມາທູນສານ ແສນທີໂດຍຣາດ
ຊຸມຄາດໄວ້ ຊີ່ຜາເມືອງຍອງ
- ຕາມທຳນອງ ບຸຣານະຣາດ
ສັບພະໂພຍພະຍາດ ຈິ່ງຫາຍໜີໄກ
ໄຊຍະຄຸພະວັງ ໄຊຍະຕຸພະວັງ
ໄຊຍະມັງຄະລັງ ໄຊຍະມັງຄະລັງ

- ຂໍໃຫ້ອີງສິມເດັດ ບຸພິດຕະເປັນເຈົ້າ
ຍືນທ່ຽງເທົ້າຮ້ອຍຂວບເຂົ້າ ຊາວເອັດພູະວັດສາ
ກັບທັງຣາຊະບຸດຕາ ຣາຊະບຸດຕີ
ອັກຄະມະເຫສີ ເທວີສີສະໜົມນາດ
- ພົ້ນຈາກອຸບາດຮ້າຍ ນາ ໆ
ມີພູະຊົນພັນສາ ຍືນຍາວຍິ່ງ
ຖ້ວນທຸກສິ່ງບໍ່ຣະບອນ ກໍຂ້າເຖີ້ນ ໗

ຄໍາບາສີພູະສົງ

ເມື່ອເຖິງຣະດູເດືອນ 5 ສັງຂານຂຶ້ນປີໃໝ່ກໍດີ, ເມື່ອພຣະສົງໄດ້ຮັບເຖຣາພິເສກເປັນພຣະສໍາເຣັດ, ພຣະຊາ, ພຣະຄຣູກໍດີ ຫືລ ເມື່ອໄດ້ທໍາການອຸປະສົມບົດພິກຂຸໃໝ່ກໍດີ ຫືລ ພຣະສົງໄດ້ຮັບເລື່ອນສະມະນະສັກຂຶ້ນເປັນພຣະຄຣູ, ພຣະຫົລກຄໍາ, ພຣະລູກແກ້ວ, ພຣະຍອດແກ້ວກໍດີ ຫືລ ເມື່ອຈະເອົາພຣະພຸດທະຮູບຂຶ້ນກໍທໍາການບາສີພູະສົງທັງວັດ ເພື່ອເປັນການສິຣິມຸງຄຸນ ແລະເປັນການສົ່ງເສີມໃຫ້ພູະສົງເປັນຜູ້ສືບມໍຣະດົກພູະສາສະໜາສືບໄປ ຄໍາບາສີວ່າດັ່ງນີ້:

- ສີ ສີ ສິດທິພູະພອນ ປະວໍຣະແວນວິເສດ
ອະຕິເຣກະເຕໂຊ ມະໂຫຣາຣິກອະທິກອັດທາ
ອາຕຸລະມະທຸລະເຕໂຊ ໄຊຍະມັງຄະລະສະວັດສະດີ
ໄມຕີຈິ່ງມີແກ່ນາກຄຸດ ມະນຸດສະກຸມພັນ
- ຄັນທັບພະຍັກຂາ ເທພະດາສຸຣາສຸຣິນ
ອິນພົມ ຍົມມະຣາຊາ
ສຸນັກຂັດຕະ ສຸມັງຄະລາ
ອຸດຕະມະໂຊກ ອຸດຕະມະໂຍກ
- ອຸດຕະມະດິຖີ ອຸດຕະມະນາທີ
ອຸດຕະມະສີ ພິລາດ

ອິນທະພາດພ້ອມໄຕຼຍາງ ທັງນາວາງຄາດຄູ່
ພ້ອມກັນຢູ່ສອນລອນ ອາທິດຈອນຈັນທະຣິກ
ອັງຄານຖືກມະຫາໄຊ ພຸດປະຫັດໄປເປັນໂຊກ
- ສຸກເສົາໂຍກ ແມ່ນວັນດີ
ວັນດີຖືອະມຸດຕະໂຊກ ສິດທິໂຍກພ້ອມລັກຂະນາ
ຝູງຂ້າທັງຫລາຍ ທັງຍິງຊາຍນ້ອຍໃຫ່ຍ
ອຸປະສົກອຸປາສິກາ ພ້ອມກັນມາທຸກແຫ່ງ
- ມາແຕ່ງຂັນຂາບໄຫ້ວ ແລະບາສີສິງໂສດ
ດ້ວຍນ້ຳມຸດທາພິເສກ ກໍຫາກແລ້ວບໍຣະບວນ
ບັດນີ້, ຝູງຂ້າທັງຫລາຍ ຫາກເພິ່ງປະສັງສິດ
ກິດຈະນາຕາມ ບຸບພາຈານຈາຣິດ
- ຈົ່ງອະທິດຖານ ໃຫ້ເປັນພອນ 4ໂກຖາດ ຄື

ປະຖະມະໂກຖາດອັນຖ້ວນໜຶ່ງນັ້ນ ຂໍຖວາຍສົມມາ
ບູຊາເຈົ້າກູ
ຕົນຊົງສີລາທິຄຸນ ອັນວິເສດ
ໃນຂ່ວງເຂດອາຣາມ ແຖມສົມພານທຸກສິ່ງ
- ໄວ້ເປັນມິ່ງມຸງຄຸນ ໃຫ້ມີບຸນແລະຍົດກ້ວາງ
ຢູ່ສືບສ້າງສະມະນະທັມເຈົ້າ ຕາບຕໍ່ເທົ້າຮ້ອຍຊາວ
ພູະວັດສາກໍຂ້າເຖີ້ນ
- ທຸຕິຍະໂກຖາດອັນຖ້ວນສອງ ສົມພານນອງເນືອງມາກ
ບຸນລົ້ນຫລາກ ເຫືລອຫລາຍ
ຜັນຜາຍໄປ ແຜ່ກ້ວາງ
ເປັນທີ່ອ້າງ ແກ່ໂລກໂລກາ
- ລືຊາໄປທຸກແຫ່ງ ຕົກແຕ່ງພ້ອມທານາ
ທັງພູະຍາແສນໝື່ນ ມາຂາບພື້ນປາທາ
ສັກກາຣະບູຊາເຈົ້າກູ ທຸກວັນ ໆ ກໍຂ້າເຖີ້ນ
- ຕະຕິຍະພູະພອນອັນຖ້ວນສາມ ດູງາມໃສແລະເຮືອງຣຸ່ງ

24/VII ຫ້າມຈຳໜ່າຍ

ປານດັ່ງແສງພູະສຸຣິຍະພຸ່ງ ຂຶ້ນເຂົາຍຸຄັນທອນ
ໃຫ້ໄດ້ແຖມນາມກອນ ຂຶ້ນເປັນສິນເດັດອັກຄະ
ວໍຣະຣາຊະຄູຣ ດູງາມໃສສີສະອາດ
- ໃຫ້ໄດ້ນັ່ງຜາສາດແກ້ວ ແລະເມັງຊອນ
ອາພອນຫລາຍແກ້ວກົ່ງ ທຸກສິ່ງພ້ອມເງິນຕູາ
ຫລາຍພາສາ ຕ່າງເມືອງມາໄຫ້ວ
ມີທັງດອກໄມ້ແກ້ວ ແລະເງິນຄຳ
- ນຳມາຖວາຍ ພໍ່າພ້ອມ
ນ້ອມນິບໄຫ້ວ ວັນທາ
ໂຣຄາສັງ ຢ່າມີມາຕ້ອງ
ໃຫ້ເຈົ້າກູໄດ້ສອນລູກນ້ອງ ພໍ່ແສນຕົນ
- ທິດສະພົນ ຕົນຜ່ານແຜ້ວ
ຄືພູະໄຕຍະປິດົກແກ້ວ ທັງ 3 ກໍຂ້າເຖິ້ນ
- ຈະຕຸດຖະພອນອັນຖ້ວນສີ່ ໃຫ້ຮູ້ທີ່ແຈ້ງ
ຕັດສ່ອງ ສໍຣະຍານ
ໃຫ້ມີສິນພານເຮືອງ ທົ່ວໂລກ
ໃຫ້ໄດ້ຂ້າມພົ້ນຈາກ ໂອຄະສົງສານ
ໃຫ່ໄດ້ເຖິງສະຖານ ອັນປະເສີດ
- ດູເລີດລ້ຳ ກ່ວາເທພາ
ໃຫ້ເປັນດັ່ງພູະມະຫາໂມກຄັລລາ · ສາຣີບຸດ
ອົງບໍຣິສຸດແລະປະເສີດ ດ້ວຍຣິດທີ
ທໍຣະນີມາຊ່ອຍຄ້ຳ ອິນທາຊ້ຳຕື່ມສັດທາ
- ຈະຕຸຣານາກຄຸດ ມະນຸດສະກຸນພັນ
ຄັນທັບພະຍັກ ທັງຫລາຍ
ອັນຢາຍຢັງຢູ່ ຄູ່ໝູ່ໄມ້ໄພພະນອນ
ທັງຈອມເຂົາ ແລະຈົ່ມນ້ຳມະຫາສະໝຸດ
- ສຸດແດນແສນໂກດ ຈັກກະວານ
ໃຫ້ທະຍານລົງມາ ດ້ວຍຣິດທາ

ມີເຄື່ອງສັກກາຣະບູຊາ	ມາພ່ຳພ້ອມ
ມານິບນ້ອມ	ປະນົມກອນ
- ຖວາຍພູະພອນທັມ	ຢ່າຄາດແຄ້ວ
ໃຫ້ເລີດແລ້ວດ້ວຍໄນຍະ	ຄາຖາວ່າ:
ໄຊຍະຕຸພະວັງ ໄຊຍະມັງຄະລັງ ດັ່ງນີ້ເປັນເຄົ້າ	
ຂໍໃຫ້ເຈົ້າກູມີໄຊຊະນະ	ຜາບມານຜູ້ໃຈບາບ
- ມາຂາບພື້ນປາທາ	ມາສັກກາຣະບູຊາ
ເຈົ້າກູທຸກ ໆ ວັນ	ກໍຂ້າເຖີ້ນ
ອັນໜຶ່ງ, ຂໍໃຫ້ເຈົ້າກູໄດ້ຊິງສີລາທິຄຸນຄາມມາກ	
ອິດເຍື້ອນຍາກ	ຄ່ອຍກະທຳພຽນ
- ໃຈສະຖຽນ	ແຂງຂະໜາດ
ອີງອາດດ້ວຍ	ປັນຍາ
ທະຣິງວັດສາ	ຫລາຍຂະໜາດ
ອີງອາດແຜ່	ຜາຍທັມ
- ສຸດຕະນິກາຍທັງຫລາຍ	ອັນວິເສດ
ຈົບເພດພ້ອມ	ພູະວິໄນ
ພູະອາພິທັມມາໄຂ	ແຈ້ງຈອດ
ຕະຫລອດເທົ້າ	ເຖິງມະຫາປັດຖານທັມ
- ອະທິກັມ	ໄຂເຣືອງຣາດ
ຂໍໃຫ້ເຈົ້າກູໄດ້ເປັນ	ສະມະນະນາດໝັ້ນຍືນຍົງ
ເທັຍຣະຄາຄົງເທົ້າຮ້ອຍຊາວວັດສາ ຢ່າໄດ້ຖ່ອຍເຖົ້າ	
ຕາບຕໍ່ເທົ້າ	ເຂົ້າສູ່ນີຣະພານ

ທຸກາຕິນ ທຸກາອີງ ກໍຂ້າເຖີ້ນ ៴

<u>ຄຳຄາຣະວະພູະພຸດທະຮູບ</u>

ຄຳຄາຣະວະນີ້ແມ່ນຈຳເພາະພູະແກ້ວມໍຣະກົດເມື່ອຍັງຢູ່ວຽງຈັນ.

ເຖິງວັນສັງຂານຂຶ້ນປີໃໝ່ ເມື່ອໄດ້ເອົາພູະພຸດທະຮູບລົງຫົດສົງແລ້ວ ເວລາຈະເອົາຂຶ້ນໄວ້ທີ່ເດີມ ໃຫ້ທຳພິທີຄາຣະວະດັ່ງດຽວກັບບາສີພູະສົງ ຄຳຄາຣະວະ ວ່າດັ່ງນີ້:

- ສີ ສີ ປີເດືອນແຖມເຖິງເຂດ ພຣະສຸຣິເຍດເຂົ້າສູ່ຣາສີ
ຜີຈັກປຸນເປັນປີ ປີກກະຕິມາດ (ຖ້າແມ່ນ ປີ
ອະທິກະມາດ ກໍໃຫ້ວ່າອະທິກະມາດ)
ຝູງຂ້ານ້ອຍນາດ ຂ້າພະບາດທັງຫລາຍ
ທັງຍິງຊາຍ ແລະເຖົ້າແກ່
- ພໍ່ແມ່ພ້ອມ ຊຸມກວານ
ຊວນກັນມາຍໍມືທູນ ໃສ່ຫົວເກດເກົ້າ
ໄຫ້ວພູະຣະຕະນະ ແກ້ວເຈົ້າ
(ພູະພຸດທະຮູບເຈົ້າ)
ຕົນມີຣົດສະໝີຣັງສີ ເຖິງຣະດູປີມາຖ່າຍເຕົ້າ
- ອົງພູະແກ້ວເຈົ້າ (ອົງພູະພຸດທະຮູບເຈົ້າ)
ຈິ່ງສະເດັດລີລາລົງ ຊົງຕົນງາມພີຜ່າຍ ໆ
ຝູງຂ້າທັງຫລາຍ ພາກັນມາຂາບໄຫ້ວແລະບູຊາ
ພ້ອມກັນມາ ຂັດສີລູບໄລ້
- ເພື່ອຢາກໄດ້ ດັ່ງຄຳມັກຄຳປາດຖະໜາ
ຢູ່ຫຽມປາຫາກົ້ມຂາບໄຫ້ວພູະແກ້ວເຈົ້າ(ພູະພຸດທະຮູບເຈົ້າ)
ຕົນລືຊາ
ຄຳປາດຖະໜາແຫ່ງຝູງຂ້າທັງຫລາຍ ຢ່າໄດ້ຄາດແຄ້ວ
ຂໍໃຫ້ແລ້ວ ດັ່ງເຈດຕະນາໝາຍ
- ຝູງຂ້າທັງຫລາຍບໍ່ມີໃຈຕົບໜາດ້ວຍໂທດ ບໍ່ກົ້ວໂກດໂກທາ
ພ້ອມກັນມາຣາຊະບາສີ ແກ່ພູະແກ້ວເຈົ້າ
(ພູະພຸດທະຮູບເຈົ້າ)
ທັງຜູ້ເຖົ້າ ແລະປານກາງ
ທັງສາວຮາມ ແລະເດັກນ້ອຍ
- ມີໃຈຊື່ນຊ້ອຍ ເຫຼື້ອມໃສດີ

ຝູງຂ້າທັງຫລາຍ	ໄດ້ຂັດສີສິງເກດ
ຕາມປະເທດ	ເມືອງຄົນ

ຝູງຂ້າທັງຫລາຍໄດ້ກະທຳພຽນສ້າງກຸສົນ ມາຫລາຍຊາດ

- ຈຶ່ງໄດ້ອຸປະຖາກ	ພູະແກ້ວເຈົ້າ
	(ພູະພຸດທະຮູບເຈົ້າ)
ຕົນຊົງທັມພາຍໂພດ	ເມດຕາສັດຕະວະໂລກ
ໃຫ້ພົ້ນຈາກ	ໂອກຄະສົງສານ
ໃຫ້ເຖິງພູະນິບພານອັນລ້ຳຍິ່ງ	ພົ້ນຈາກສິ່ງອົນຕາຍ
- ຝູງຂ້າທັງຫລາຍພ້ອມກັນມາ	ຕົກແຕ່ງແລ້ວ
ຈຶ່ງຖວາຍແກ່	ພູະແກ້ວເຈົ້າ
	(ພູະພຸດທະຮູບເຈົ້າ)
ອົງເປັນເຫົ້າງາແກ່ຄົນ	ແລະເທວະດາທັງຫລາຍ
ອົງມີຣິດສະໜີຣັງສີ	ງາມບໍ່ເສົ້າ
- ຕາບຕໍ່ເທົ້າ	ທ້າພັນພູະວັດສາ

ພຸ້ນແດ່ກໍຂ້າເຖີ້ນ ໗

ສູດຂ້ວນຫລວງ

ເມື່ອຜູ້ເຖົ້າຜູ້ແກ່ ທີ່ເປັນພໍ່ເຮືອນແມ່ເຮືອນເຈັບໄຂ້ໄດ້ປ່ວຍ ຈະຮັກສາດ້ວຍຫົວານຢາອັນໃດກໍບໍ່ເຊົາ ແລ້ວທາງບູຮານເພິ່ນຮັກສາທາງຈິດໃຈອີກດ້ວຍການສູດຂ້ວນໃຫ້ ຄືຮຽກເອົາຂ້ວນໃຫ້ມາຢູ່ເນື້ອຢູ່ຄີງ. ການສູ່ຂ້ວນແນວນີ້ເອີ້ນວ່າສູ່ຂ້ວນຫລວງ ຫລືສູ່ຂ້ວນໃຫ່ຍ ໃຊ້ສູດເວລາກາງຄືນເດິກສະຫງັດກະວ່າໃຫ້ຄົນນອນໝົດ ທີລ ປະມານ 9-10 ໂມງກາງຄືນ ໃຫ້ສູດ 3 ຄືນ ວິທີນີ້ເຖົ້າແກ່ບູຮານເຄີຍເຮັດມາໄດ້ຜົນດີ ຄືຜູ້ເຈັບປ່ວຍກໍລຸກໄດ້ ໄຂ້ຫາຍພາຍໃນ 3-4ວັນ. ເຄື່ອງສັກກາຣະບູຊາຈັດແຕ່ງຄືກັນກັບ ສູ່ຂ້ວນທຳມະດາ ແຕ່ໃຫ້ເພີ່ມທູບທຽນທໍ່ອາຍຸຂອງຜູ້ປ່ວຍ ຄຳສູດຂ້ວນ ວ່າດັ່ງນີ້ :

* ສູ ສູ ສິດທິພູະພອນ ບໍວອນແວນວິເສດ ວັນນີ້ເປັນວັນດີ ຂັວນເຈົ້າໜີໃຫ້ເຂົ້າສູ່ ມາຢູ່ເນື້ອອຸ່ນຄີງຄວນ. ສາມສິບຂັວນເຈົ້າໄປຢູ່ດອມເສື້ອ ກໍໃຫ້ຄືນມາ. ຂັວນໜຶ່ງຜີປອບເຊື້ອເອົາໄປກໍໃຫ້ຄືນມາ ຂັວນເກົາເກດເກົ້າກໍໃຫ້ຄືນມາ. ຂັວນຫູຕາໄປຢູ່ດອມນາກກໍໃຫ້ຄືນມາ. ຂັວນຄີ້ວປາກໄປຢູ່ດອມແຖມກໍໃຫ້ຄືນມາ. ຂັວນຫົວໄປຢູ່ດອມແລນໃນສຸ່ງ ກໍໃຫ້ຄືນມາ. ຂັວນຫົວໄປຢູ່ເຮ່ວຮຸ່ງດອມຜີ ກໍໃຫ້ຄືນມາ. ຂັວນຫົວເຈົ້າໄປຢູ່ໃນມຸ້ງສອງດາງ ກໍໃຫ້ຄືນມາ. ຂັວນຕີນມືເຈົ້າໄປທ່ຽວຫຼີ້ລນ ກໍໃຫ້ຄືນມາ. ຂັວນຢູ່ແອ່ນສາຍຕາ ກໍໃຫ້ຄືນມາ. ຂັວນຂັນທາທັງຫ້າ ກໍໃຫ້ຄືນມາ. ຂັວນຫົວເຈົ້າໄປຢູ່ມຸ້ງດອມໝູ ກໍໃຫ້ຄືນມາ. ຂັວນຫົວເຈົ້າໄປຢູ່ຮູດອມເໜັ້ນ ກໍໃຫ້ຄືນມາ. ຂັວນຫົວເຈົ້າໄປຢູ່ພູເຖື່ອນຊ້າງ ກໍໃຫ້ຄືນມາ. ຂັວນຫົວເຈົ້າໄປກ່າວອ້າງດອມເງືອກສອງຫາງ ກໍໃຫ້ຄືນມາ. ຂັວນຫົວເຈົ້າໄປຢູ່ດອມນາງນາກສີ່ຫົວຫ້າເກົ້າ ກໍໃຫ້ຄືນມາສາມື້ນີ້ວັນນີ້.

<u>ວ່າ ມາເຢີຂັວນເຮີຍ !</u>

ມານຸ່ງເສື້ອແລະຜ້າຜືນໃໝ່ແຕ່ງໄວ້ຖ້າ ຮັບເຈົ້າຊາວຂັວນ ໂອມສັນຕະຣາຊະ ສວາໂຫມ, ສັບພະໂພຍໄພອັນຕະຣາຍທັງຫລາຍ ກໍໃຫ້ຫາຍເສັຍມື້ນີ້ວັນນີ້ <u>ວ່າມາເຢີຂັວນເຮີຍ !</u>

ເຊີນມາກິນເຂົ້າຕົ້ມແລະຂອງຫວານ ມີທັງນ້ຳຕານແລະເຂົ້າກ້ອນ ເຈົ້າຢ່າໄດ້ຮີບຮ້ອນວ່າຈະດ່ວນໄປໄກ ໃຫ້ເຈົ້າຄືນມາໄວຢູ່ເນື້ອຢ່າໄດ້ໄປຢູ່ເຮືອໄພສິນ ໃຫ້ເຈົ້າຄືນມາຈຳເລີນຂັນທັງຫ້າ ຄືນມາຫາຂອງຫອມອັນເຂົາແຕ່ງໄວ້ຖ້າ ມາທະຣົງເສື້ອຜ້າ ຜືນຢູ່ເມືອງຟ້າຄ່າແສນເມືອງ ຢ່າໄດ້ມີຄຳເຄືອງເຮັ່ງຮ້ອນ ຍູທ່າງຜັດຜ້າຜ່ອນສະໃບບາງ ຢ່າໄດ້ຄຶດເຖິງນາງຜີພີ່ນ້ອງ ໃຫ້ເຈົ້າຄືນມາຢູ່ຫ້ອງເຄຫາ ຝູງວົງສາຄອຍຢູ່ຖ້າ, ເຈົ້າຢ່າໄດ້ຫຼີລງເຂົ້າປ່າຊ້າແລະກອງຟອນ ໃຫ້ເຈົ້າຄືນມາໝັ້ນແສນປີ ໃຫ້ເຈົ້າຄືນມາດີແສນຊົ່ວ ເຈົ້າຢ່າໄດ້ໂສກເສົ້າເທົ້າຫ້າພັນພູະວັດສາ ສະມັນຕາ ອາຄົມ ພູົມມະ ສວາຫົມ.

ຂ້າຈັກເຊີນຂ້ວນຫົວໃຫ້ແລ່ນມາເຕົ້າ ຂ້າຈັກເຊີນຂ້ວນເຈົ້າໃຫ້ແລ່ນເຂົ້າມາໂຮມ, ຂ້ວນເຈົ້າໄປຕົກປ່າໄມ້ໄລ່ຂ້ອຍກໍນໍາຫາ ຂ້ວນເຈົ້າໄປຕົກປ່າເລົາປ່າຄາ ຂ້ອຍກໍນໍາເອີ້ນນໍາຮຽກ

ວ່າມາເຢີຂ້ວນເຮີຍ !

ຂ້ວນເຈົ້າໄປເຂົ້າຊວງແຖນນັ່ງ ກໍໃຫມາມື້ນີ້ວັນນີ້, ຂ້ວນເຈົ້າໄປເຂົ້າຕັ່ງແຖນເລົາ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນເຈົ້າໄປຂຶ້ນໂຮງແຖນເຖົ້າ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນເຈົ້າໄປຂຶ້ນໂຮງເຈົ້າແຖນຫລວງ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນຫົວໄປປູກພູເປັນຮາກ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນຫົວເຈົ້າໄປປູກໝາກເປັນໃບ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນຫົວເຈົ້າໄປຂຶ້ນເຂົາພູະສຸເມຣພັນຍອດ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນຫົວເຈົ້າໄປລອບລີ້ຢູ່ພູຜາໃຫ້ເຈົ້າແຕ່ງຄຣູຟ້າຜ່າໄມ້ ໄປນໍາເອົາມາ. ຂ້ວນເຈົ້າໄປເຂົ້າງ່າໄມ້ ໃຫ້ເຈົ້າແຕ່ງຂວານສິນ. ໃຫ້ເຈົ້າໃຊ້ໝໍຫລວງ ຜູ້ແຮ່ງຄົ້ນຄິນລຸກ ໃຫ້ເອົາມາມື້ນີ້ວັນນີ້. ໃຫ້ເຈົ້າໃຊ້ໝໍເຖົ້າຜູ້ແຮ່ງປຸກຄິນຕື່ນ ໃຫ້ເອົາມາມື້ນີ້ວັນນີ້.

ເທບພະດາເຈົ້າອົງໜຶ່ງ ຊື່ວ່າເທບພະບັນດານ ເທບພະດາອົງຖ້ວນສອງ ຊື່ວ່າລົມຜ່ານຟ້າ ເທບພະດາອົງຖ້ວນສາມ ຊື່ວ່າຂ້ວນຢ້ານຍິ່ງໃຈກົວ. ຂ້ວນຫົວໄປຢູ່ຕົ້ນແສນໝອກ ໃຫ້ໄປຊອກເອົາມາມື້ນີ້ວັນນີ້. ຂ້ວນເຈົ້າອອກນອກຟ້າ ໄປຢູ່ດອມໝູ່ຜີລົມ ໃຫ້ເອົາມາມື້ນີ້ວັນນີ້. ຂ້ວນຫົວໄປເຂົ້າໝົ້ນາງໄຄ ໃຫ້ເອົາມາມື້ນີ້ວັນນີ້. ຂ້ວນຫົວໄປເຂົ້າໄຫນາງໄອ່ ໃຫ້ເອົາມາມື້ນີ້ວັນນີ້. ຂ້ວນຫົວເຈົ້າໄປເກັບດອກໄມ້ຮ້ອງໄຫ້ຢູ່ນໍາຜີ ໃຫ້ເອົາມາມື້ນີ້ວັນນີ້. ໂອມສິດທິ ສວາໂຫມ.

ເທບພະດາເຈົ້າອົງໜຶ່ງ ຊື່ວ່າເທບພະບັນດານ, ເທບພະດາອົງຖ້ວນສອງ ຊື່ວ່າລົມຜ່ານຟ້າ ໃຫ້ໄປຊອກເອົາຂ້ວນມາ. ຂ້ວນໄປຢູ່ພູຜາແລະເຖື່ອນຖ້ຳ ທ່ານໍ້າແລະເມືອງຜີ ເຈົ້າຈິ່ງເປັນໄມຕີສິບຖ້ອຍຄໍານໍາເອົາຂ້ວນອ່ອນນ້ອຍຕ່າວຄືນມາ ແມ່ນວ່າເກີດເປັນເທວະດາແລະຄຸດນາກ ເຈົ້າຈິ່ງແຕ່ງຂອງຝາກໄປຫາ ທັງວົງສາແລະພີ່ນ້ອງ ໃຫ້ໄປຄ້ອງເອົາມາ ແມ່ນເຂົາຈັບໃສ່ຄາໃຫ້ເຈົ້າຊື້ ຄວນຄ່າລ້ານໃຫ້ເຈົ້າແຖມຄວນຄ່າແສນໃຫ້ເຈົ້າຊື້ ຄວນຄ່າຕື້ໃຫ້ເຈົ້າຕື່ມສິບບັດ ໃຫ້ເຈົ້າໄປຊື້

ເອົາມາ ຢ່າໄດ້ວາງເສັຍດາຍເປົ່າ ເຈົ້າຈິ່ງໄປຂີນຂວາຍເອົາມາໃຫ້ໄດ້ ຄ່ອຍຊອກໄຊ້ເອົາມາ ເທົ່າວັນເຖີ້ນ.

ຈະຕຸໂລກອາດອົງຫລວງ ທັງກົງກວງບຸຣິມເຈົ້າຟ້າ ຜູ້ແກ່ກ້າກວ່າ ຜີທັງຫລາຍ ຈິ່ງຢາຍຢັງຢູ່ ດ້ວຍຜ້າຜ່ອນແລະຄວງຈຸ້ມ ລົງມາກຸ້ມແກ່ ຝູງຄົນທັງຫລາຍ ໃຫ້ຫາຍຄ່າກັງວົນແລະເດືອດຮ້ອນ ສັບພະໂພຍພະ ຍາດຂ້ອນໃຫ້ຫາຍໄປ ທັງພາຍໃນແລະພາຍນອກ ຕັ້ງໄວ້ຂອກພໍ ແສນ ປະວໍຣະແວນວິເສດ ຈົບເພດຜັງງອາຄົມ ບູຣິມມະບໍພິດ ຈິ່ງປະ ສິດທິພູະພອນອັນນີ້ໃສ່ຫົວແຫ່ງຜູ້ຂ້າ ວ່າໃຫ້ຂ້າເປັນຂຸນ ຮຽກເອົາ ຂ້ວນໃຫ້ມາເຕົ້າເຂົ້າ ມາຫຽມຕົນຕົວ ຂ້ວນຫົວແລະຂ້ວນແກ້ມ ຂ້ວນ ປາກແຍ້ມຈິ່ງຈາຣະຈາ ຂ້ວນຕາແລະຂ້ວນຄິ້ວ ຂ້ວນນິ້ວແລະຂ້ວນ ແຂນ ຂ້ວນຂາແພນປ້ານໄຫ່ລ ລະໃໝ່ນັ້ນຂ້ວນຫູ ຂ້ວນດັງດູດົມກິ່ນ ໝັກໝັ່ນຂ້ວນຫົວໃຈ. ຂ້ວນໃນແລະຂ້ວນນອກ ຂ້ວນຂອກແລະຂ້ວນ ກາງ ຂ້ວນແອວບາງກົມກົ່ວ ຂ້ວນທ້ອງທົ້ວຮາວນົມ ຂ້ວນຜົມດຳດູ ອາດ ຂ້ອຍຈັກເຊີນເອົາເຈົ້າມາດຟ້າ ມາຊ່ອຍຮຽກເອົາຂ້ວນ

ວ່າ ມາເຢີຂ້ວນເຮີຍ !

ຂ້ວນເຈົ້າຮູ້ໄປແລ່ນຫຼິ້ລນຢູ່ໃນດົງ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນເຈົ້າຮູ້ ໄປກົດຊິງຢູ່ໃນພຸ່ມ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນເຈົ້າຮູ້ໄປຫົລງຕົກປະ ເທດລຸ່ມຄ່ວາໄປໄກ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນເຈົ້າຮູ້ໄປຫຼິ້ລນວິໄສສຸດ ເຂດ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນເຈົ້າຮູ້ໄປຫົລງປະເທດຄ່ວາເມືອງຜີ ກໍ ໃຫ້ມາມື້ນີ້ວັນນີ້, ຂ້ວນເຈົ້າຮູ້ຫັລກໜີໄປເກີດ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນເຈົ້າຮູ້ໄປເອົາກຳເນີດໃນເມືອງຄົນ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນເຈົ້າ ຮູ້ໄປປະຕິສົນໃນທ້ອງໃໝ່ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນເຈົ້າຮູ້ໄປທາງ ໃຕ້ທາງບົນ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນເຈົ້າຮູ້ໄປທ່ຽວຊົມຊາຍ ກໍໃຫ້ມາ ມື້ນີ້ວັນນີ້, ຂ້ວນເຈົ້າໄປມັກຫລາຍຊົມຊູ້ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນເຈົ້າ ຮູ້ໄປຫຼິ້ລນຢູ່ດອນຜີ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນເຈົ້າຮູ້ໄປຫຼິ້ລນຢູ່ຂ່ວງຄີ ຣີແລະປ່າຊ້າງ ກໍໃຫ້ມາມື້ນີ້ວັນນີ້, ຂ້ວນເຈົ້າໄປກ່າວອ້າງຢູ່ດອນ ເງືອກແລະງູ ກໍໃຫ້ມາມື້ນີ້ວັນນີ້.

ວ່າ ມາເຢີຂ້ວນເຮີຍ !

ເຈົ້າບໍ່ມາ ເຈົ້າຟ້າເພິ່ນຊິນຳຊອກຫາ ເຈົ້າແລ້ວ. ເຈົ້າບໍ່ມາ ເທບພະດາຊິນຳໄປຜູກເອົາ ເຈົ້າແລ້ວ.ເຈົ້າບໍ່ມາ ຄວງຍອດແກ້ວເພິ່ນຊິໜ່ຽງຂັວນເຈົ້າຄືນມາ ວ່າ ມາເຢີຂັວນເຮີຍ !

ມາຢູ່ເຮືອນເສົາແກ່ນ ມາຢູ່ແທ່ນສະນອນພຽງ ມາຢູ່ຕຽງໄມ້ແກ້ວມາຮອດແລ້ວເຈົ້າຈິ່ງຢູ່ສະຫັວດດີ ວ່າ ມາເຢີຂັວນເຮີຍ ! ມາຢູ່ໜັກໃນເນື້ອ ມາຢູ່ເຮື້ອໃນຄີງ ມາຢູ່ອີງເອື້ອມໄຫ່ລ ມາໃຕ້ສະຖານທອງ ມາຢູ່ປອງສືບສ້າງ ໃຫ້ເຈົ້າຕຸ້ມໄພ່ກ້ວາງຝູງໝູ່ວົງສາ ທັງທາສາ ທາສີຂ້ອຍຂ້າ ທັງຊ້າງມ້າໝູ່ງົວຄວາຍ ທັງຕານາຍແລະພໍ່ແມ່ ທັງເຖົ້າແກ່ແລະຂຸນກວານ ທັງຝູງຫລານເຫຼັນຫ້ລອນປັດຂອດ ພ້ອມກັນມາ ພາຂັວນດາແຕ່ງແລ້ວ ຖວາຍແກ່ແກ້ວຂັວນມາຫາຂອງກິນດີທຸກເຍື່ອງເຄື່ອງຂົ້ວໃສ່ໃນພາ ມາລາຫອມຮ່ວງເຮົ້າ ເຊີນຂັວນເຈົ້າເຂົ້າມາສະເຫັວຍ ໃຫ້ສະບາຍເບີຍບານຍິ່ງ ພ້ອມທຸກສິ່ງສັນດານ ໃນສະຖານຮຽງຄູ່ ພ້ອມກັນຢູ່ຍືນຍາວ ສົມພາວພຽງໄວວາດ ທຸກຂາຂາດແວນໄກໂຣຄາໄພຄາດຈາກ ເຄາະທ່າງພາກຫາຍໄປ ສັບພະໂພຍໄພພົ້ນໂສກ ສັບພະຍົດໂຍກກ້ວາງ ຢູ່ສະຫັວດສະດີ ກໍຂ້າເຖີ້ນ.

ວ່າ ມາເຢີຂັວນເຮີຍ ! ມາຢູ່ພີ້ກິນເຂົ້າຖ້ວງາ ມາຢູ່ພີ້ກິນປາກັບໄຂ່ ມາຢູ່ພີ້ເອື້ອມໄຫ່ລມານດາ ດອມທາສາທາສີຂອງເຈົ້າ ມາຢູ່ເລົ້າດອມເຂົ້າກ່ອມກະເຊີ ຝົນຊິຕົກຢ່າໄດ້ດຸ່ງໄປໜ້າ ຟ້າຊິຮ້ອງຢ່າໄດ້ດຸ່ງໄປໄກ. ຂັວນທົວເຈົ້າໄປຫຼິ້ນດອມທ້າວນົກເຂົາ ຂັວນທົວເຈົ້າໄປຫຼິ້ນ ດອມນາງນົກຈອກ ຂັວນທົວເຈົ້າໄປຫຍອກຫຼິ້ນ ດອມນົກອິນຊີ ຂັວນທົວເຈົ້າໄປນອນໃນຜີປ່າຊ້າ ກໍໃຫ້ມາມື້ນີ້ວັນນີ້, ຂັວນເຈົ້າໄປທ່ຽວຫຼິ້ນ ດອມທ້າວນົກຍາງ ຂັວນເຈົ້າໄປທ່ຽວຫຼິ້ນ ດອມນາງນົກເຈົ່າ ຂັວນເຈົ້າໄປທ່ຽວຫຼິ້ນ ດອມເຜົ່າຜີພາຍ ກໍໃຫ້ມາມື້ນີ້ວັນນີ້, ຂັວນເຈົ້າໄປທ່ຽວຫຼິ້ນ ດອມຊາຍຜີເປົ້າ ຂັວນເຈົ້າໄປທ່ຽວຫຼິ້ນ ດອມເຖົ້າຜີໂພງ ຂັວນເຈົ້າໄປທ່ຽວຫຼິ້ນນຳໂຮງນາງໄອ່ ກໍໃຫ້ມາມື້ນີ້ວັນນີ້, ຂັວນເຈົ້າໄປຫຼິ້ນເຊື້ອງໃຊ້ ເມືອງແມນ ຂັວນເຈົ້າໄປທ່ຽວຫຼິ້ນ ເມືອງແຖນທ້າວເຖືອກ ຂັວນເຈົ້າໄປທ່ຽວຫຼິ້ນ ດອມເງືອກລາຍລວງ ຂັວນເຈົ້າໄປທ່ຽວຫຼິ້ນ ດອມລວງລາຍນາກ ກໍໃຫ້ມາມື້ນີ້

ວັນນີ້, ຂ້ອນເຈົ້າໄປທ່ຽວທີ້ລນ ດອມຊາກຜີຕາຍ ຂ້ອນເຈົ້າໄປທ່ຽວທີ້ລນ ດອມຍາຍຜີຍ່າ ຂ້ອນເຈົ້າໄປທ່ຽວທີ້ລນ ດອມຮ່າຜີເມືອງ ກໍໃຫ້ມາມື້ນີ້ວັນນີ້.

ຂ້ອນເຈົ້າໄປທ່ຽວທີ້ລນໃນເຄືອເທີ່ລາຮ້າງ ຂ້ອນເຈົ້າໄປທ່ຽວທີ້ລນດອມຊ້າງສາມຫົວ ຂ້ອນເຈົ້າໄປທ່ຽວທີ້ລນ ດອມງົວແມ່ລ້ານ ກໍໃຫ້ມາມື້ນີ້ວັນນີ້, ຂ້ອນເຈົ້າໄປທ່ຽວທີ້ລນ ດອມຄວາຍເຂົາແຫລມແລະເຂົາຕູ້ ຂ້ອນເຈົ້າໄປທ່ຽວທີ້ລນດອມຊູ້ຫາງໄກ ຂ້ອນເຈົ້າໄປທ່ຽວທີ້ລນດອມໄຊ ໃນທໍຜີເສື້ອ ຂ້ອນເຈົ້າໄປອ່າວເອື້ອນຳໝູ່ປູປາ ຂ້ອນເຈົ້າໄປທ່ຽວຫາໃນດິນດ່ານນ້ຳ ຂ້ອນເຈົ້າໄປທ່ຽວທີ້ລນໃນຖ້ຳປ່າແຊງ ກໍໃຫ້ມາມື້ນີ້ວັນນີ້, ຂ້ອນເຈົ້າໄປທ່ຽວທີ້ລນເມືອງແມນແຖນຫລໍ່ ຂ້ອນເຈົ້າໄປທ່ຽວທີ້ລນດອມພໍ່ແຖນຫລວງ ຂ້ອນເຈົ້າໄປຢູ່ດອມນາງມາດຟ້າ ກໍໃຫ້ມາມື້ນີ້ວັນນີ້, ຂ້ອນເຈົ້າໄປຢູ່ຖ້ຳດອມທ້າວແຖນເລິງ ຂ້ອນເຈົ້າໄປທ່ຽວທີ້ລນເມືອງເທິງເປັນເຫດ ຂ້ອນເຈົ້າໄປທ່ຽວທີ້ລນດອມເຜດກິກໄຮ ຂ້ອນເຈົ້າໄປທ່ຽວທີ້ລນດອມໄຊຊີຊ້າງ ກໍໃຫ້ມາມື້ນີ້ວັນນີ້.

ວ່າ ມາເຢີຂ້ອນເຮີຍ !

ຂ້ອນເຈົ້າໄປທ່ຽວທີ້ລນນຳໝູ່ກວາງຟານ ຂ້ອນເຈົ້າໄປທະຍານທີ້ລນ ຢູ່ເທິງອາກາດ ຂ້ອນເຈົ້າໄປເຝົ້າຜາສາດ ຢູ່ດອມໝູ່ນາງຜີ ກໍໃຫ້ມາມື້ນນີ້ວັນນີ້ ວ່າ <u>ມາເຢີຂ້ອນເຮີຍ !</u>

ມາພະລັນຢ່າຊ້າ ຄັນເຈົ້າມາຮອດແລ້ວ ຈິ່ງໃຫ້ຢູ່ສະຫັວດສະດີ ມີສີໃສບໍ່ເສົ້າ ຕາບຕໍ່ເທົ້າຫ້າພັນພຸະວັດສາ ກໍຂ້າເຖີ້ນ. ອາຍຸ ວັນໂນ ສຸຂັງ ພະລັງ.

ສັບພະພຸດທາ ນຸພາເວນະ

ສັບພະທັມມາ ນຸພາເວນະ

ສັບພະສັງຄາ ນຸພາເວນະ

ສະທາ ໂສດຖີ ພະວັນຕຸ ເຕ ႗

<u>ສູດຂ້ວນຄົນປ່ວຍ</u>

ຄົນເຈັບໄຂ້ນານ ໆ ຫືລ ປ່ວຍປືນ ເມື່ອລຸກໄດ້ໄຂ້ຫາຍແລ້ວ ແຕ່ ຮ່າງກາຍຍັງບໍ່ແຂງແຮງ ຖືກັນວ່າຂ້ວນໜີເນື້ອໜີຄີງ ຈຶ່ງທຳພິທີຮຽກ ຂ້ວນໃຫ້ມາຢູ່ເນື້ອຢູ່ຄີງ ການສູດຂ້ວນຄົນປ່ວຍກໍມັກເຮັດໃນເວລາ ເດີກສະຫງັດເໝືອນກັນກັບສູດຂ້ວນຫລວງ ຄຳສູດຂ້ວນຄົນປ່ວຍ ວ່າ ດັ່ງນີ້ :

* ສິ ສິ ສິດທິ ໄຊຍະມັງຄະລັງ ພະວະຕຸ ທີຄາຍຸໂກ ໂຫຕຸ ອະເນ ກະສະຫັວດສະດີ ປາງເມື່ອພູະມຸນີຜາບແພ້ແກ່ຝູງມານ ພູະພູບານ ຕົນວິເສດ ຮູ້ເຫດຮ້ອນຄຳກັງວົນ ໃນເມືອງຄົນທຸກແຫ່ລງຫັລາ ມີໜ້າ ເສົ້າໂສກເຫືລອຫລາຍ ສັດເຈັບຕາຍ ມູນມາກ ເຈົ້າພູມີພາກຄຶດສົງ ສານສັດຢູ່ຈີໄຈ້ ໆ ພູະຈຶ່ງໃຫ້ທິບພະມົນ ເພື່ອໃຫ້ຫາຍກັງວົນແລະ ເດືອດຮ້ອນ ເປັນຕົ້ນວ່າ ສັບພະທຸກ ສັບພະໂສກ ສັບພະໂຣກ ສັບພະ ໄພ ສັບພະຈັງໄຣເຈັບໄຂ້ ພາຍໃນແລະພາຍນອກ ໃຫ້ຫາຍອອກ ແອນໄກ ຕົກໜີໄປຟາກຟ້າ ປະສາດໃຫ້ຜູ້ຂ້າຮຽກເອົາຂ້ວນ ທັງມວນ ໃຫ້ເຂົ້າມາສູ່ ຢູ່ໃນຕົນຄົນເຈັບໄຂ້ ໂຮມຂ້ວນໄດ້ສາມສິບສອງ ຕາມ ທຳນອງແຕ່ເກີດ ຂ້ວນກຳເນີດສາມສິບສອງ ໃຫ້ມາຢູ່ຄອງໃນເນື້ອ ມາຢູ່ເຮືອໃນຄີງ ມື້ນນີ້ວັນນີ້ <u>ວ່າ ມາເຢີຂ້ວນເຮີຍ !</u>

ຂ້ວນຫົວໃຫ້ມາຢູ່ຫົວປັກປິ່ນເກົ້າ ນ້ຳມັນເຂົ້າທາຫອມ ຂ້ວນຂົນ ແລະຂ້ວນຄິ້ວ ຂ້ວນນີ້ວຊ້າຍແລະຝ່າຍຂວາ ຂ້ວນປາຫາທັງງຄູ່ ເກີບ ແກ້ວຢູ່ຮັບຮອງ ເຈົ້າຢ່າວອງພາດ່ວນ ຟ້າຮ້ອງຮ່ວນຮີບກັບມາ, ຂ້ວນ ຕາໃຫ້ມາຢູ່ຕາສອງກ້ຳ ເຈົ້າຢ່າຫລີງລຳທີ້ລນດູດາຍ ເຊີນຂ້ວນເຈົ້າ ມາຢູ່ກາຍທຸກແຫ່ງ ຂ້ວນແຄ່ງແລະຂ້ວນຂາ ກໍໃຫ້ມາສາມື້ນີ້ວັນນີ້ <u>ວ່າ ມາເຢີຂ້ວນເຮີຍ !</u>

ຂ້ວນປາກໃຫ້ມາຢູ່ປາກ ຢ່າເພີ້ຈົ່ມທີລງໄຫລ ຂ້ວນຫົວໃຈພາ ຫ່ງວ ເຈົ້າໄດ້ຄຶດນ້ອມໜ່ງວໄປໄກ ໃຫ້ເຈົ້າມາສາມື້ນີ້ວັນນີ້ ເຊີນຂ້ວນ ເຈົ້າມາຢູ່ລີ້ໃນເຮືອນ ຂ້ວນປີເດືອນໃຫ້ມາເຕົ້າ ຂ້ວນເກດເກົ້າແລະເກ

ສາ ຂວັນເກັ້ງດັງແລະຈະມູກ ຂວັນມີຜູກທັງສອງ ຜີປອງເອົາມັດໄວ້ ກໍໃຫ້ມາສາມື້ນີ້ວັນນີ້.

ຂວັນຫູໃຫ້ມາຢູ່ຫູສອງກໍ້ ຂວັນເຈົ້າໄປທ່ຽວຖໍ້າພູຜາ ນໍ້ານາຄາ ຄຸດນາກ ຂ້ອຍຈັກເຊີນເຈົ້າພູມີພາກມາຊ່ອຍຮຽກເອົາຂວັນ ວ່າ ມາ ເຢີຂວັນເຮີຍ ! ຂວັນແຂ້ວໃຫ້ມາຢູ່ແຂ້ວເປັນແຖວ ຂວັນແອວບາງ ແລະທ້ອງນ້ອຍ ຂວັນນິ້ວກ້ອຍໃຫ້ມາສອດສຸບແຫວນ ຂວັນຄໍຄາງ ແລະໄຫ່ລໜ້າ ກໍໃຫ້ມາໂຮມເຂົ້າຢູ່ປະຈໍາ ເອຫິ ມະມະ ອາຄັດສາຫິ ນະຈະຣັນຕິ ມະມະອິທານິ ຂວັນເຈົ້າຈິ່ງມາສາໃນມື້ນີ້ວັນນີ້ ຂວັນເຈົ້າ ມາຮອດແລ້ວ ຢ່າໄດ້ທ່ຽວໄປມາ ຕາມມັກຄາແລະເຫວຫ້ວຍ ຂວັນ ເຈົ້າໄປຕົກນໍ້າປະເທດທ່າເມືອງຜີ ຂວັນເຈົ້າໄປທ່ຽວໃນຄີຣີແລະປ່າ ໄມ້ ຜີຈັບໄວ້ກໍໃຫ້ມາສາມື້ນີ້ວັນນີ້, ຂວັນເຈົ້າໄປລີ້ຢູ່ໃນເມືອງ ຜີມະ ເຫສັກຮຽກເອົາໄວ້ ຂ້າຈັກເຊີນພູະແກ່ນໄທ້ໂລກະບານ ກັບທັງທ້າວ ມັກຄະວານຜູ້ວິເສດ ມາຊ່ອຍປ້ອງຮຽກເອົາຂວັນ ວ່າ ມາເຢີຂວັນ ເຮີຍ !

ຂວັນເຈົ້າໜີໄປໄຮ່ ກໍໃຫ້ມາ ຂວັນເຈົ້າໜີໄປນາຕາແຮກ ກໍໃຫ້ມາ ຂວັນເຈົ້າໄປຕິດຄາກິ່ງເຫັລກໃຫ່ຍ ກໍໃຫ້ມາສາມື້ນີ້ວັນນີ້, ຂວັນເຈົ້າ ໄປທ່ຽວຫຼິ້ລນໃນປ່າຄາ ຂວັນເຈົ້າໄປປ່າຊ້າຢູ່ເມືອງຜີ ຍັກຂີນີຈັບຜູກ ໄວ້ ກໍໃຫ້ມາສາມື້ນີ້ວັນນີ້ ວ່າ ມາເຢີຂວັນເຮີຍ !

ຂວັນເຈົ້າໄປກິນເຫົ້ລາມົວເມົາລົ້ມທ່າວ ກໍໃຫ້ມາມື້ນີ້ວັນນີ້ ມາຢູ່ ລີ້ໃນເຮືອນຕົນ ຄໍາກັ້ງວິນບໍ່ມືວ ຂວັນຫິວເຈົ້າຢ່າໄດ້ຄ່ວາກາງຄືນ ເດືອນມືດເຈົ້າຢ່າໄດ້ທຽວຊຽວຄໍ່າ ເດືອນດໍາເຈົ້າຢ່າໄດ້ທ່ຽວຫຼິ້ລນ ກາງເວັນຢ່າທຽວທ່ອງ ມາຢູ່ຫ້ອງທໍແກ້ວຊຸ່ມເຢັນ ວ່າມາເຢີຂວັນເຮີຍ! ໃຫ້ເຈົ້າມາຢູ່ເຮືອນພື້ນແປ້ນຫ້ຍາແຝກມຸງໜາ ມາຢູ່ເຮືອນພື້ນແປ້ນ ຫ້ຍາຄາມຸງຖີ່ ມາຮອດແລ້ວຂວັນເຈົ້າຢ່າໄດ້ທ່ຽວໂຄຈອນ ເດີກອອນ ຊອນຂວັນເຈົ້າຢ່າໄດ້ທ່ຽວບ້ານ ຂີ້ຄ້ານ ໃຫ້ເຈົ້ານອນຢູ່ເຮືອນນໍາພໍ່ນໍາ ແມ່ນໍາລູກນໍາເຕົ້າ ໃຫ້ເຈົ້າມາກິນເຂົ້າຊຸນແຕ່ງໃສ່ພາ ຂອງມວນມາ ພ້ອມທຸກສິ່ງຊຸນຈັດຫາ ຝູງເຂົາດາແຕ່ງໄວ້ແລ້ວ ວ່າມາເຢີຂວັນເຮີຍ !

ເຊີນເຈົ້າເຂົ້າມາຫາ ໃນກາຍາຄົນປ່ວຍໄຂ້, ເຈົ້າຢ່າໄດ້ເຮ່ຮ່ອນ ຈິ່ງພະລັນມາ ເຈົ້າບໍ່ມາເທວະດາຊິຕາມເອົາເຈົ້າແລ້ວ ເຈົ້າບໍ່ມາມື້ນີ້ ນາງນາດນ້ອຍທໍຣະນີຈັກໄປຜູກເຈົ້າໄລ່ເອົາຂັວນ ຝູງເທວະດາທຸກໝູ່ ສະພູ່ພ້ອມຄອຍຫາງ ວ່າ ມາເຢີຂັວນເຮີຍ !

ມາກິນເຂົ້າພານເງິນພານຄໍາແປງແຕ່ງແລ້ວ ພານແກ້ວແລະ ພານທອງ, ເຊີນຂັວນເຈົ້າມາຢູ່ຫ້ອງປາງທອງເທວະຣາດ ຢ່າຄາດ ແຄ້ວແອນໜີ ຂອງກິນດີມີທຸກຢ່າງ ເຊີນຂັວນເຈົ້າມາຢູ່ປາງແກ້ວ ດອມໝູ່ວົງສາ ທັງຕານາຍແລະພໍ່ແມ່ ທັງເຖົ້າແກ່ແລະລູກຫລານ ເຫັລນ ທັງງົວຄວາຍແລະຊ້າງມ້າ ຂ້ອຍຂ້າພ້ອມໝູ່ທາສີທາສາ ວ່າ ມາເຢີຂັວນເຮີຍ!

ມາຮອດແລ້ວໃຫ້ເຈົ້າຢູ່ຍິນສະບາຍ ຫາຍໄພຍໄພແລະທຸກໂສກ ວິບປະໂຍກໜັກໜາ ຂໍໃຫ້ຫາຍໂຣຄາພະຍາດຮ້າຍ ເຈັບແຄ່ງກໍໃຫ້ ລາ, ເຈັບຕາແລະປວດທ້ອງ ທຸກທີ່ຫ້ອງເຈັບໃນຕົນຕົວ ທັງປວດຫົວ ແລະປວດໄທ່ລ ເຊີນຂັວນເຈົ້າໄຕ່ເຕົ້າເຂົ້າມາຄືງ ໃຫ້ເຈົ້າຫາຍໂພຍ ໄພ ພິດພະຍາດ ທັງອຸບາດແລະອິນຕາຍ ພາຍໃນແລະພາຍນອກ ຂັວນເຈົ້າອອກກໍໃຫ້ມາ ວ່າມາເຢີຂັວນເຮີຍ !

ມາຮອດແລ້ວເຈົ້າຢ່າໄດ້ໜີ ໄດ້ພົນປີຍາວຍິ່ງ ຂັວນແກ້ວກິ່ງຈິ່ງ ມາ, ຟາກນໍ້າກໍໃຫ້ມາ ຟາກພູຜາກໍໃຫ້ຂ້າມ ມາຮ່ວມຫ້ອງເຄຫາ ອຸ ອະ ມຸມະ ມຸນມາ ໄຊຍະຕຸພະວັງ ໄຊຍະມັງຄະລັງ ໂສດຖີ ເຕ ໂຫນຕຸ ສັບພະທາ. ແຕ່ນີ້ໄປໜ້າຂັວນເຈົ້າໃຫ້ຢູ່ໝັ້ນຍືນນານ ຕະຫລອດການ ອາຍຸໄຂ ໃຫ້ຂັວນເຈົ້າໝັ້ນເໝືອນດັ່ງຈັກກະວານ ໃຫ້ເຈົ້າໝັ້ນທ່ຽງ ເໝືອນດັ່ງພູະນິບພານບໍ່ຄາດແຄ້ວ ຢູ່ໝັ້ນແລ້ວສະຫັວດສະດີ ທີຄາຍຸ ໂກ ໂຫຕຸ ສັບພະທາ ອະເວຣາໂສກາ ສັດຕູຈຸປັດທະວາ ອະເນກາອັນ ຕະຣາຍາປີ ວິນັດສັນຕຸ ຈະ ເຕຊະສາ ຊະຍະສິດທິ ທະນັງ ລາພັງ ໂສດຖີພາຄະຍັງ ສຸຂັງ ພະລັງ ສິຣິ ອາຍຸ ຈະ ວັນໂນ ຈະ ຊີວະ ສິດທິ ພະວັນຕຸ ເຕ ຯ

ສູ່ຂ້ວນເຮືອນ

ການສູ່ຂ້ວນເຮືອນ ຄືການນຳເອົາພິທີເຮັດເຮືອນມາກ່າວໃນທີ່ປະຊຸມຊົນ ເພື່ອໃຫ້ຄົນທີ່ມາໃນພິທີໄດ້ຮູ້ຈັກການເຮັດເຮືອນໃຫ້ເປັນສິຣິມຸງຄຸນ ຖ້າເຮັດເຮືອນບໍ່ຖືກແບບ ກໍຈະນຳແຕ່ຄວາມບໍ່ເປັນມຸງຄຸນມາໃຫ້ ຄຳສູ່ຂ້ວນເຮືອນວ່າດັ່ງນີ້ :

* ສີ ສີ ສິດທິພູະພອນ ບໍວອນແວນວິເສດ ອະເນກະສະຫວັດສະດີ ໄຊຍະໂສດຖີ ພະວັນຕຸ ເຕ ດັ່ງນີ້ເປັນເຄົ້າ ອາຈານເຈົ້າຈິ່ງບອກໄປແຮກໄມ້ໃນປ່າ ມາປຸນແຕ່ງແປງເຮືອນ. ຂ້ອຍຈິ່ງຫາຂວານດວງກ້າພ້າດວງຄົມ ແບກເຂົ້າດົງຫາເສົາແຮກ ໄມ້ຮັງຕົ້ນນັ້ນໃຈແຕກແລະໂກນປາຍ, ໄມ້ຮັງຕົ້ນນັ້ນຊົນໂຄນແລຖອດສົ້ງນ, ໄມ້ຮັງຕົ້ນນັ້ນໃບຫ້ຽນແລະລົນໄຟ, ໄມ້ຈັ່ງໄຮລຳຊົ່ວ ບູຮານກ່າວໄວ້ວ່າເຂັດຂວງ. ຄົນທັງປວງໃຫ້ຫີລກເວັ້ນ.

ບັດນີ້, ຂ້ອຍຈິ່ງໄປພົບພໍ້ໄມ້ລຳດີ ບໍ່ມີຜີຢູ່ເຝົ້າ, ນັກປາດເຈົ້າຈິ່ງກ່າວຄາຖາວ່າ ສັບເພ ຍັກຂາ ປະລາຍັນຕຸ ດັ່ງນີ້ເປັນເຄົ້າ ຕົ້ນບໍ່ເສົ້າມີສີ ລຳດີງາມກັ່ງງປອດ ດູຍອດຍິ່ງສິ່ງເງິນລຽງ ຢູ່ດິນພຽງບໍ່ຄ້ອຍ ຂ້ອຍຈິ່ງເອົາຂວານມາບັກໜ້າແລະບັກຫລັງ ໄມ້ລົ້ມດັ່ງສຽງຄ່ອຍ ຂ້ອຍຈິ່ງເອົາເຈົ້າເມືອຢູ່ບ້ານຄູນຄ້ຳຊຸ່ມເຢັນ.

ບັດນີ້, ເຈົ້າຫາກລົ້ມເມືອໃຕ້ຂໍໃຫ້ໄດ້ເປັນ ມະຫາເສດຖີມີຣິດທີແລະອານາດ ເຈົ້າຫາກລົ້ມເມືອເໜືອ ຂໍໃຫ້ມີງົວຄວາຍເຕັມຄອກເຈົ້າຫາກລົ້ມເມືອຕາເວັນອອກ ຂໍໃຫ້ໄດ້ຜາບແພ້ແກ່ຜີບໍຣິສາດຕົວຈັ່ງໄຮ ເຈົ້າຫາກລົ້ມເມືອເບື້ອງຕາເວັນຕົກ ຂໍໃຫ້ມີອາຍຸຍືນຍາວເຖິງເຖົ້າໃຫ້ໄດ້ເປັນເຈົ້າແຕ່ງກິນທານ ຢູ່ສະບາຍບານບໍ່ໄຮ້ ເລີຍລວດໄດ້ເສົາທວນ ມວນມາທັງເສົາຄ້ຳ ກະທອດຊ້ຳແປຂາງ, ປ້ານລົມບາງກັບຂີ້ສະຍົວຊີ້ກອນແຂງ ຄວາຍເຖິກແຮງລາກແກ່ ເຖິງຫາດແຮ່ເຈົ້າຢ່າໄດ້ເຊົາ ເຖິງກໍເລົາເຈົ້າຢ່າໄດ້ແຕກ ເຖິງກໍແຝກໃຫ້ເຈົ້າຄ່ອຍຍູ້ກັນມາ. ວ່າມາເຢີຂ້ວນເຮີຍ ! ມານຳຄວາຍເຖິກຕົວກວຽນແກ່ ມານຳຄວາຍແມ່ຕົວກວຽນດຶງ ມາຊູນໄມ້ເຈົ້າຢ່າໄດ້ດວນ ມາຊູນຂວານເຈົ້າຢ່າໄດ້ສະ

ທ້ານ ຂ້ອຍຈັກເຊີນເຈົ້າເມືອຢູ່ບ້ານຄູນຄຳມັ່ງມູນ ຂ້ອຍຈຶ່ງໄປຫາອີລຸງ ມຸງຄຸນຜູ້ເພິ່ນເປັນຊ່າງໄມ້ ແສນໄຊມັງຄະລະໄດ້ ມາຕາມ ຜູ້ຖ້ວນສາມນັ້ນແມ່ນແສນຄຳບຸນເຮືອງຜູ້ເພິ່ນພິຈາຣະນາມາຖ້ວນຖີ່ ຜູ້ຖ້ວນສີ່ນັ້ນແມ່ນແສນຄຳບຸນຍັງ ຄົນສີ່ແສນຄົນນີ້ຈຶ່ງພ້ອມກັນມາເບິ່ງກະທອດ, ວັນສຸກປອດມື້ດີ ບູຮານມີຫລາຍແທ່ງ ແຕ່ງໄວ້ແຕ່ພາຍຫັລງ ເຄຫັງມີຖ້ວນແປດ ອາຈານເຈົ້າແກວດກົດໝາຍ. ຫັລງໜຶ່ງນັ້ນຊື່ວ່າສິນນອງມາຄື່ນເຄົ້າ ຫັລງໜຶ່ງນັ້ນຊື່ວ່າສອງເຖົ້ານັ່ງທິງທຸກ ຫັລງໜຶ່ງນັ້ນຊື່ວ່າ ຢືນກິນເຫົ້າໝົດຊົ່ວ ຫັລງໜຶ່ງນັ້ນຊື່ວ່າກົ້ນຖົງຮົ່ວເປັນຮູ ຫັລງໜຶ່ງນັ້ນຊື່ວ່າສາວມາຊູຊິງມັກ ຫັລງໜຶ່ງນັ້ນຊື່ວ່າ ມັກປ່ວຍໄຂ້ເສັຍຄາຍ, ຫັລງໜຶ່ງນັ້ນຊື່ວ່າ ມີເຂົ້າຂອງຫລາຍເຫືລອແຫ່ລ, ຫັລງໜຶ່ງນັ້ນຊື່ວ່າມີລູກແພ່ເຕັມເຮືອນຫັລງນີ້ ຈຶ່ງເປັນຫັລງຖ້ວນແປດ ສຳເລັດດັ່ງຄວາມມັກ ຄວາມປາດຖະໜາ ຈຶ່ງເອົາເຊືອກມາແທກຂື່ ເນັ່ງໃຫ້ຂື່ປັກສາມ ເປັນເຮືອນງາມຍອດຍິ່ງ ຮອດມື້ຈຶ່ງມາຍໍ ຂຸດຂຸມເອົາຂວາຍເນືອໃຕ້ທ້ອງນາກ ຫາມເສົາລາກມາທໍ ຍໍເສົາແຮກຂຶ້ນຂໍໃຫ້ໄດ້ຂີ້ໄຮ້ເກີດເປັນດີ ຍໍເສົາຂ້ວນຂຶ້ນຂໍໃຫ້ມີເຂົ້າຂອງຫລາຍເຫືລອແຫ່ລ ຍໍເສົາແຈໝູຂຶ້ນ ຂໍໃຫ້ລ້ຽງມ້ອນແພ່ເຕັມເຮືອນ ຍໍເສົາແຈເສືອຂຶ້ນ ຂໍໃຫ້ໄດ້ແກ້ວມະນີ ຝູງໝູ່ຜີຊາມສະຫ້ານ ຢ້ານແລ້ວຫີລກໜີໄກ ແລ້ວຈຶ່ງເອົາຂ້າວມາໃສ່ຂື່ ເອົາໄມ້ຊີ່ມາມັດ ສະຍົວປັກກາດຕັ້ງ ເສົາດັ້ງກາດລິງລົມ ເອົາແປບິນມາຄາດ ນ້ຳຈຸ່ມລ້າງຫວາຍມັດ ຈັດກອນຢາຍພໍຄ່ອງ ປ້ານລົມກ່ອງກິນແປ ທັງສີ່ແຈເຊືອກແທກແລ້ວ ຂ້ອຍຈຶ່ງເອົາຫັຍາແຝກມາມຸງໃຫ້ຣົ່ມເຈົ້າໜາ ເອົາຫັຍາຄາມາມຸງໃຫ້ຣົ່ມເຈົ້າກ້ວາງ ຂ້ອຍຈຶ່ງບອກເຖົ້າແກ່ແມ່ບ້ານ ພ້ອມກັນແຕ່ງພາຂ້ວນຂ້ອຍຈຶ່ງຂີນຂວາຍຫາຫົວມັນແລະຫົວເຜືອກ ເລືອກໄດ້ໝູ່ມັນໂງໂຈນໂຈໝາກພ້າວສ້ອມ ມາໃສ່ອ້ອມພາຂ້ວນ ມີທັງເຫົ້າລາກ້ອງພັນແລະນໍແຮດ ໄກ່ຜູ້ແສດໂຕທໍ່ນົກຂຸມແຊງ ດອກໄມ້ແດງໃສ່ແລ້ວ ຝ້າຍອ້ອມແກ້ວມຸງຄຸນ ປຸນຍໍມາຕັ້ງສາດ ນັກປູາດເຈົ້າຈຶ່ງຮຽກເອົາຂ້ວນວ່າ<u>ມາເຢີຂ້ວນເຮີຍ!</u> ມາທັງຂ້ວນໄມ້ຈິກຕົ້ນບໍ່ແຫງ ມາທັງຂ້ວນໄມ້ແດງລຳປອດ ມາທັງຂ້ວນກະທອດຂີ່ດັ້ງດອມກັນ ມາທັງຂ້ວນຕຶງ

ຂ້າວ ຂ້ວນເຊັ່ນສະຍົວຊີ້ ທັງໝູ່ກອນກາດແປ້ນ ປ້ານລົມໜ້າຈິ່ວ ທວານ ມາເຢີ! ມາຄູນໃຫ້ເຈົ້າດີ ບາສີໃຫ້ເຈົ້າຍົດກ້ວາງ ມີຜູ້ແທນແທ່ ຊ້າງຊົມງັນ ທຸກຄືນວັນຢູ່ເຝົ້າ ຕາບຕໍ່ເທົ້າ ເທັຍຣະຄາ ໄຊຍະຕຸພະວັງ ໄຊຍະມັງຄະລະ ສັບພະສິດທິ ພະວັນຕຸ ເຕ ໆ

ຄຳສູ່ຂ້ວນຂຶ້ນເຮືອນໃໝ່

* ສີ ສີ ສິດທິ ໄຊຍະຕຸພະວັງ ໄຊຍະມັງຄະລະ ໄຊຍະສຸພະດິຖີ ວັນນີ້ເປັນວັນດີ ວັນດີຖີສຸພະຣືກ ຖືກໜ່ວຍຊີ້ວ່າມະຫາມຸງຄຸນ ຍັງມີ ເຈົ້າພູະຍາຜູ້ມີບຸນອິງໜຶ່ງ ສະເດັດມາຈາກເມືອງໝັ້ນຄຳທອງ ມາສະ ແຫວງຫາຈອງສະຖານທີ່ຕັ້ງບ້ານ ເພື່ອປຸກສ້າງໃຫ້ຢູ່ຊຸ່ມກິນເຢັນ ຄວາມເປັນເຂັ່ນເຊັດຂວາງຈັງໄຣບໍ່ມີພໍ້ ຈິ່ງຕັ້ງຕໍ່ປຸກແປງໄປ ພູະເມດ ໄຕູໂພທິເຈົ້າ ວ່າດີບ່ອນນີ້ ແຕ່ກ່ອນກໍ້ພູະເຈົ້າສ້າງໂພທິສົມພານ ພູະ ເຈົ້າຜາບແພ້ຝູງໝູ່ພູະຍາມານຜູ້ສາໂຫດ ບ່ອນນີ້ບ່ອນພູະເຈົ້າໂຜດ ສັດນິກອນ ບ່ອນນາງທໍຣະນີເອົາຄຳມາປູກໄວ້ ພູະແກ້ວແກ່ນໃຫ້ວ່າຢູ່ ສະຫັວດສະດີ ໝື່ນພັນປີກໍ່ບໍ່ມີໂພຍໄພມາຕ້ອງ.

ບັດນີ້ເຈົ້າຊິໄດ້ນັ່ງຢູ່ຫ້ອງ ແກ້ວສ່ອງເງິນຄຳ ເຂົາຊິນຳແກ້ວແຫວນ ມາໃຫ້ ກັບທັງຂ້ອຍຊ່ວງໃຊ້ຫລຸຫັ່ລຽໄຫລມາ ສິໄດ້ມີສັກດາຣິດທີອົງ ອາດ ກັບທັງພວກໝູ່ຍາດຊິໄດ້ແຕ່ງຂອງຝາກມາຫາ ກັບທັງພະຣິຍາ ອັນງາມໜຸ່ມນ້ອຍ ນ້າຊື່ນຊ້ອຍໂສພາ.

ບັດນີ້, ຈັກໄດ້ພັນຣະນາແຕ່ເດີມດາເຄົ້າ ຈັດແຈ່ງເຂົ້າຫາໄມ້ປຸກ ເຮືອນ ມີໃຈພຽນທັງເຍື້ອນທັງຍາກ ແຕ່ງຖົງໝາກທັງນ້ຳບັ້ງທິງ ຄວາ ເຄັຍຫາຂວານຄົມແລະມີດພ້າ ແລ້ວຈິ່ງແບກເຂົ້າປ່າດັ້ນຄ່ວາດົງ ດອນ ເດີນໂຄຈອນມື້ແລງມື້ເຊົ້າ ວັນຄ່ຳເລົ້າສູນແລ້ວຕ່າວມາ ບາງ ຜ່ອງກິນສຸຣາແກມເຂົ້າ ຕື່ນມື້ເຊົ້າງາຍແລ້ວເລົ່າໄປ ຈິ່ງໃຈເຂົ້າດົງເລົາ ຫາຊອກ ໄປພົບໄມ້ລຳດົ້ວປອດດີ ໄມ້ມີສີເອົາເປັນເສົາແຮກ ແລ້ວຈິ່ງ ແບກຂວານໃສ່ຟັນລົງ ຕັດປາຍກົງລຳດີສະອາດ ນີ້ແມ່ນທຳມະຊາດ ໄມ້ຄ້ຳໄມ້ຄູນ ລຳຟັນລຸນເສົາຂ້ວນເປັນຄູ່ ທີ່ເກີດຢູ່ຝ່າຍຂ້າງຕີນດອນ

ຫລຽວເບິ່ງງາມສອນລອນອິນແປງປູກໄວ້ ຕັດເອົາໄດ້ມາຖາກເປັນເສົາ ໄປຫາເອົາບໍ່ຢຸດບໍ່ທໍ່ຍອນ ເດີນເຮ່ຮ່ອນເຂົ້າປ່າດົງໜາ ຫລາຍເວລາປີເດືອນຕິດຕໍ່ ຫລາຍພໍ່ານີ້ຕົວເຈົ້າອ່ອນແຮງ ຍາມແລງເຊົ້າ ຍາມງາຍປະເປົ່າ ມື້ສິບມື້ ປາໄປ້ສິບໄປ ປີເດືອນໄດ້ວັນຍາມເຂົ້າປ່າ ແດດແຮ່ງຮ້ອນລົມໄໝ້ຄ່ອຍພຽນ ປີເດືອນເຂົ້າ ທິກມາຂ້າມລ່ວງ ຝົນຫຼັ່ງຍ້ອຍຮາໍຜ້າຊຸ່ມເຢັນ ບໍຣະບວນແລ້ວ ຟັນເຮືອນທັລງໃຫ່ຍ ບັດນີ້ ຂ້າຈັກແຕ່ງຂັນດອກໄມ້ ເຊີນເຈົ້າເຂົ້າສູ່ເຮືອນ ເຂົາຟັນຕິກຕໍ ເຈົ້າຢ່າໄດ້ທັກເມືອທາງເໜືອ ເຂົາຟັນຕີກເຄືອ ເຈົ້າຢ່າໄດ້ທັກເມືອເມືອງນາກເຂົາຟັນຕີກຟາກນໍ້າ ເຈົ້າຢ່າໄດ້ເສົ້າເສັຍສູນ ໃຫ້ເຈົ້າມາຄໍ້ມາຄູນ ຮຸ່ງເຮືອງພຽງອາດ ໃຫ້ເຈົ້າມາສະພາດຢູ່ຊຸ່ມກິນເຢັນ ຄວາມເຂັດຂວາງຢ່າໃຫ້ໄດ້ ຄວາມເຈັບໄຂ້ກໍຢ່າໃຫ້ມີ ວ່າມາເຢີຂ້ວນເຮີຍ!

ມາພະລັນຢ່າຊ້າ ໃຫ້ເຈົ້າຕັ້ງໜ້າຂ້າມເທົ່ລາດອນເລົາມາເຢີ, ໃຫ້ເຈົ້າມາຈໍາເລີນຮຸ່ງເຮືອງເຮືອນກ້ວາງ ຢ່າໄດ້ຊຸໄດ້ຮ່ວງຢູ່ສະຫັວດສະດີຍໍເຮືອນຄົວ ໃຫ້ໄດ້ເປັນເຮືອນຮາດ ຍໍຜາສາດ ໃຫ້ໄດ້ເປັນຍອດທາດຈອມສູງ ເຮືອນໂຮງຄໍາເປັນຣິຖແກ້ວ ຍົກຂຶ້ນແລ້ວຢູ່ສະຫັວດສະດີ.

ຍົກເສົາໜຶ່ງ ໃຫ້ໄດ້ງົວແມ່ລາຍ, ຍົກເສົາສອງ ໃຫ້ໄດ້ຄວາຍເຂົາຢ້ອງ, ຍົກເສົາສາມ ໃຫ້ໄດ້ຄ້ອງເກົ້າກໍາ, ຍົກເສົາສີ່ຂຶ້ນ ໃຫ້ໄດ້ຄໍາເກົ້າໝື່ນ, ຍົກເສົາຫ້າຂຶ້ນ ໃຫ້ໄດ້ເຂົ້າລ້ານໝື່ນມາເຍັຍ, ຍົກເສົາຫົກຂຶ້ນໃຫ້ໄດ້ເມັຍຜູ້ງາມມານອນຫຽມຂ້າງ, ຍົກເສົາເຈັດຂຶ້ນ ໃຫ້ໄດ້ລູກຈ້າງມາແຕ່ງພາແລງພາງາຍ, ຍົກເສົາແປດຂຶ້ນ ໃຫ້ໄດ້ຊາຍຜູ້ງາມມາຢາຍແຈກເຫົ້ລາແລະຂອງຂ້ວນ, ຂໍໃຫ້ໄດ້ມາມວນ ງົວຄວາຍເຕັມຄອກ, ຊ້າງມ້າອອກເນືອງນອງ ເງິນຄໍາກອງພໍແບກ ເສົາຄໍ້າກໍຢ່າໃຫ້ແຕກ ເສົາແຮກກໍຢ່າໄດ້ເຊຊວນ ເສົາຂ້ວນກໍໃຫ້ເຈົ້າໝັ້ນແກ່ນ ໃຫ້ເຈົ້າໝັ້ນປານແຜ່ນເຫັລກແດງ ໃຫ້ເຈົ້າແຂງປານແຜ່ນຫີນລາດ ໃຫ້ເຈົ້າໝັ້ນປານລ່ຽມອາດເສົາສະເໝນ ຈໍາເລີນເປັນອາດກ້ວາງ, ຫ້ອງໜຶ່ງແອ້ມອາດໄວ້ ແຕ່ງບົວນາງ ຫຽມທາງກາງ ໃຫ້ມີສະບໍ່ແກ້ວ ນາງອາບແລ້ວ ຢູ່ສະຫັວດສະດີ, ເສົາຄໍ້າໃຫ້ເປັນແກ່ນພູທອມຊິ່ວພັນວາເສົາຂ້ວນໃຫ້ເປັນແກ່ນຈັນທອມຊິ່ວແສນມື້ ເພິ່ນມາຊີ້ ໃຫ້ເຈົ້າໄດ້ຈາ

ໜ່າຍ ຍາມເມື່ອຈ່າຍໃຫ້ເຈົ້າໄດ້ຂອງດີ ໃຫ້ເຈົ້າຮຸ່ງເຮືອງສີປຸນປັນເປັນຫ້ອງ.

ຫ້ອງລຸ່ມໄວ້ຜູກຊ້າງ ສານໃຫ່ຍງາຍາວ, ຫ້ອງໜຶ່ງໄວ້ໃຫ້ລູກເຂີຍລູກສາວເຂົ້າມາຊ່ວງໃຊ້, ຫ້ອງໜຶ່ງໄວ້ໃຫ້ລູກຊາຍແລະລູກສະໄພ້ແສນສໍ່າມາແຍງ, ລູກຊາຍລູກສາວແພງ ເຄື່ອງຄໍາພັນຮ້ອຍ, ຫລອນວ່າໄດ້ລູກເຂີຍລູກສະໄພ້ນ້ອຍ ໆ ມາສູ່ສົມໃຈປູ່ເດ, ຫ້ອງໜຶ່ງໄວ້ຖ້າສັງຄະເຈົ້າມາເທສນາສອນ, ຫ້ອງໜຶ່ງໄວ້ບູຊາ ນຶກເຖິງຄຸນແກ້ວ, ຫ້ອງໜຶ່ງໄວ້ຖ້າປິຕາມານດາພໍ່ແມ່, ຫ້ອງໜຶ່ງໄວ້ໃຫ້ເຖົ້າແກ່ມາຊຸມນຸມ, ຫ້ອງໜຶ່ງໄວ້ຖ້າຂຸນທາງໄກມາເຝົ້າ, ຫ້ອງໜຶ່ງໄວ້ຖ້າລູກເຕົ້າແລະຫລານເຫລັນ, ຫ້ອງໜຶ່ງໄວ້ເກັບຄໍາຮ້ອຍ, ຫ້ອງໜຶ່ງໄວ້ແອ້ມສ້ວມນ້ອຍໃຫ້ລູກສາວເຂົ້າຢູ່ນອນ.

ບັດນີ້, ຂ້ອຍຈັກເຊີນເອົາຂ້ວນເຈົ້າຄົວເຮືອນໃຫ້ມາຢູ່ ເຊີນເອົາຂ້ວນລູກເຕົ້າໃຫ້ມາເຂົ້າຢູ່ໂຮງ ວ່າມາເຢີຂ້ວນເຮີຍ!

ຂ້ວນເຈົ້າໄປຟັນໄມ້ເສົາທອນ ເຊົາຢູ່ປ່າແຝກ, ຂ້ວນເຈົ້າໄປຟັນໄມ້ເສົາແຮກເຊົາຢູ່ປ່າໜາມທັນ ກໍໃຫ້ມາສາມື້ນີ້ວັນນີ້, ຂ້ວນເຈົ້າໄປຟັນໄມ້ເສົາຂ້ວນ ເຊົາແຮງອາບນໍ້າ, ຂ້ວນເຈົ້າໄປຟັນໄມ້ເສົາຄໍ້າ ເມົາແດດເຊຊວນ ກໍໃຫ້ມາສາມື້ນີ້ວັນນີ້, ຂ້ວນເຈົ້າໄປຟັນໄມ້ສະຍົວ ເຊົາຢູ່ຮິມຫລອດ, ຂ້ວນເຈົ້າໄປໄມ້ກະທອດ ເຊົາຢູ່ຮິມກາງດົງ ກໍໃຫ້ມາສາມື້ນີ້ວັນນີ້, ຂ້ວນເຈົ້າໄປຕັດຕົງຕັດກອນ ເຊົາຢູ່ໂຄກຄ້ອຍ ໆ ກໍໃຫ້ມາສາມື້ນີ້ວັນນີ້, ຂ້ວນເຈົ້າໄປຂຶ້ນໂຄກສູງ ໆ ກໍໃຫ້ມາສາມື້ນີ້ວັນນີ້, ຂ້ວນເຈົ້າລົງໄປໂຄກຄ້ອຍ ໆ ໃຫ້ວອຍຂ້າມຕ່າວມາ. ວ່າມາເຢີຂ້ວນເຮີຍ!

ມາພະລັນຢ່າຊ້າ ເຊີນທັງຂ້ວນອ່ອນຫັລາກຸມມະຣາເຂົ້າມາສູ່ເຊີນເອົາຂ້ວນໝູ່ເຈົ້າໃຫ້ມາເຂົ້າສູ່ໂຮງ ໃຫ້ເຈົ້າມາທະຣົງສ້າງ ເຮືອນຊານບ້ານໃໝ່ ຄັນເຈົ້າມາຮອດແລ້ວ ຄວາມທຸກກໍຢ່າໃຫ້ໃກ້ ຄວາມໄຂ້ກໍຢ່າໃຫ້ມີ ທຸກ ໆຄືນກໍຂ້າເຖິ້ນ.ຍະຖາວາຣິວະໂຫ ປູໂຣ ສັບພະກາລັງ ນະຂີຍັນຕິ ອຸອະ ມຸມະ ມູນມາ ປະສິດທິ ອານຸພາເວນະ ປະສິດທິມັງຄະລັງ ສະທາໂສດຖິ ພະວັນຕຸ ເຕ.

ພຸດໂທ ເມ ພຸດທະເຕຊະສາ

ທັມໂມ ເມ ທັມມະເຕຊະສາ

ສັງໂຄ ເມ ສັງຄະເຕຊະສາ

ຣະຕະນັຕຕະຍະທັມມິກາ ເຕຊະ ປະສິດທິປະສິເທວາ ສັບເພ ພັທຣານິ ປັດສັນຕຸ ມາ ກິນຈິ ປາປະມາ ຄະມາ ຊະຍະສິດທິ ທະນັງ ລາພັງ ສັບພະທຸກຂາ ສັບພະພະຍາ ສັບພະໂຣຄາ ວິນາສັນຕຸ ສະທາ ໂສດຖີ ພະວັນຕຸ ເຕ ๆ

ຂຶ້ນເຮືອນໃໝ່

ເຮືອນເປັນຂອງສຳຄັນ ເປັນສະຖານທີ່ອາໄສຂອງຄົນທຸກ ໆຄົນ. ຄົນທີ່ມີກຳລັງດີ ມີຮູບຮ່າງຈົບງາມ ມີຍານພາຫະນະໃຊ້ສອຍ ແລະມີຄວາມສຸກຄວາມຈະເລີນ ພຽບພ້ອມໄປດ້ວຍສົມບັດທຸກຢ່າງ ແຕ່ຖ້າບໍ່ມີບ້ານເຮືອນອັນເປັນທີ່ຢູ່ອາໄສຢ່າງດຽວທ່ານັ້ນ ກໍເທົ່າກັບວ່າບໍ່ມີຫັຍງເລີຍ ເພາະເຮືອນເປັນສະຖານທີ່ຊຸມນຸມ ແລະເປັນຍອດແຫ່ງຄວາມມີສັບພະວັດຖຸທຸກຢ່າງ. ດັ່ງນັ້ນ ການຂຶ້ນເຮືອນໃໝ່ຂອງຄົນບູຮານຈຶ່ງມີພິທີດັ່ງຕໍ່ໄປນີ້:

ພິທີຂຶ້ນເຮືອນໃໝ່

ພິທີຂຶ້ນເຮືອນໃໝ່ນີ້ ຕ້ອງໃຫ້ມີຜູ້ເຖົ້າຜູ້ແກ່ເປັນຫົວໜ້າພາຂຶ້ນ ແລ້ວກໍໃຫ້ມີພວກຍາດພີ່ນ້ອງມາຊ່ອຍໃນການຂຶ້ນເຮືອນໃໝ່ນຳ ແບ່ງອອກເປັນສອງພວກ ແຕ່ລະພວກໃຫ້ມີຜູ້ເຖົ້າເປັນຫົວໜ້າດັ່ງນີ້ :

1)- ໃຫ້ຜູ້ເຖົ້າຜູ້ໜຶ່ງນັ່ງຄອຍຢູ່ຄັນໄດທີ່ຈະຂຶ້ນເຮືອນ ລໍຫັກທາຍໄຕ່ຖາມ ແລະທີ່ຕີນຄັນໄດນັ້ນ ໃຫ້ເອົາໃບຕອງກ້ວຍມາປູໄວ້ ເພື່ອເປັນເຄື່ອງຮອງລ້າງຕີນພວກຜູ້ເຖົ້າຜູ້ແກ່ທີ່ຈະຂຶ້ນເຮືອນໃໝ່.

2)- ພວກໜຶ່ງຕຽມຂົນສິ່ງຂອງແລະເຄື່ອງໃຊ້ ເຊິ່ງຈະມາຢູ່ເຮືອນໃໝ່ນີ້ ໂດຍໃຫ້ມີຜູ້ເຖົ້າຜູ້ແກ່ເປັນຫົວໜ້າ ແລ້ວໃຫ້ຜູ້ເຖົ້າຜູ້ໜຶ່ງພາຍຖົງໜຶ່ງໜ່ວຍໃສ່ກຸບເກົ້າ ໃນຖົງນັ້ນໃຫ້ມີ ຄຸດ ແກ້ວ ແຂ້ວ ເຂົາ ນໍ ງາ

ເພາະຖືກັນວ່າເປັນຂອງມີຄ່າ ເປັນຂອງຄໍ້າຂອງຄູນ ແລະໃຫ້ມີສິ່ວ ຄ້ອນຕອກສິ່ວ ຫືລ ເຫັລກຕາປູ ຄ້ອນຕີ ໄປພ້ອມເພື່ອຈະໄດ້ຕອກ ທ້ອຍຖີງ. ໃຫ້ຜູ້ເຖົ້າຍ່າງໄປກ່ອນ ພວກຖືສິ່ງຂອງກໍຍ່າງຕາມຫລັງ ຄັນໄປເຖິງທີ່ເຮືອນປຸກໃໝ່ແລ້ວ ໃຫ້ພາກັນຍ່າງອ້ອມວຽນເຮືອນສາມ ຮອບ ແລ້ວມາຢຸດຢູ່ທີ່ຄັນໄດ.

ຜູ້ເຖົ້າຜູ້ແກ່ທີວໜ້າ ທີ່ຢືນຄອຍຢູ່ເທິງຄັນໄດເຮືອນນັ້ນ ກໍທັກທາຍ ໄຕ່ຖາມຂຶ້ນ ດ້ວຍສຽງອັນດັງ ມີທ່າທາງຢ່າງສະທ່ງາຜ່າເຜີຍ ຫຼື ໂກດຄຽດ.

ສ່ວນຜູ້ເຖົ້າຜູ້ແກ່ທີວໜ້າ ເຊິ່ງພາໝູ່ມາຢຸດຢູ່ຄັນໄດຂ້າງລ່າງນັ້ນ ເປັນຜູ້ຕອບຄໍາຖາມ ຖາມແລະຕອບກັນໄປກັນມາ ທີແຮກຜູ້ຖາມໃຫ້ ທໍາທ່າທາງໂກດຄຽດ ຕໍ່ໄປໃຫ້ຄ່ອຍອ່ອນລົງ ໆ. ສ່ວນຜູ້ຕອບນັ້ນກໍ ໃຫ້ທໍາທ່າທາງອ່ອນໂຍນບໍ່ໂກດຄຽດແຕ່ຢ່າງໃດເລີຍ.

<u>ຄໍາຖາມແລະຄໍາຕອບຂອງເຖົ້າແກ່ທັງສອງຝ່າຍ ມີດັ່ງຕໍ່ໄປນີ້ :</u>

<u>ຜູ້ຖາມ ສະແດງທ່າທາງຂຶງຂັງ ຖາມວ່າ :</u>

ເຮີຍ! ພວກນີ້ທາບກະດອນ ຄອນກະຕ່າ ຂົນສິ່ງຂອງມາແຕ່ໃສ?

- <u>ຜູ້ຕອບ ຕອບວ່າ:</u> ຂ້ານ້ອຍມາແຕ່ເມືອງໝັ້ນຄໍາທອງ ໄດ້ຍິນ ຂ່າວວ່າລູກຫລານປຸກເຮືອນໃໝ່ໃສ່ທ້າຍາເຕັມ ວ່າຊິມາຄໍ້າມາຄູນໃຫ້ ຢູ່ຊຸ່ມກິນເຢັນ ໃຫ້ຢູ່ດີມີແຮງຄວາມເຈັບບໍ່ໃຫ້ໄດ້ ຄວາມໄຂ້ບໍ່ໃຫ້ມີ ບໍ່ ໃຫ້ອຶດໃຫ້ຢາກ ບໍ່ໃຫ້ຂາດໃຫ້ເຂີນທຸກອັນທຸກແນວທັ້ນແລ້ວ.

- <u>ຜູ້ຖາມຕອນນີ້ ໃຫ້ເວົ້າຈາອ່ອນລົງ ຖາມວ່າ :</u>

ເອີ ຄັນຊິມາຄໍ້າມາຄູນ ໃຫ້ຢູ່ດີມີແຮງ ໃຫ້ຢູ່ຊຸ່ມກິນເຢັນ ຄວາມ ເຈັບບໍ່ໃຫ້ໄດ້ ຄວາມໄຂ້ບໍ່ໃຫ້ມີນັ້ນ ເພິ່ນໄດ້ຫັຍງມານໍາແດ່ນໍ ?

- <u>ຜູ້ຕອບ ຕອບວ່າ:</u> ໄດ້ມາພ້ອມທຸກອັນທຸກແນວທັ້ນແລ້ວ.
- <u>ຜູ້ຖາມ ຖາມວ່າ :</u> ກຸບສ່ອງຟ້າ ຜ້າສ່ອງດາວ ໄດ້ມານໍາບໍ່?
- <u>ຜູ້ຕອບ ວ່າ:</u> ໄດ້ມາ.
- <u>ຜູ້ຖາມ ວ່າ</u> : ຂ້ອຍຍິງຂ້ອຍຊາຍ ໄດ້ມາພອັມບໍ່ນໍ?
- <u>ຜູ້ຕອບວ່າ :</u> ເອີ ຄືວ່າຂອ້ຍຍິງ ຂ້ອຍຊາຍ ຜ້າຜ່ອນ ທ່ອນສະໃບ

ເຂົ້ານໍ້າຊ້າມປາ ມີດ ພ້າ ແຫລມຫລາວ ແກ້ວແຫວນ ເງິນ ຄໍາ ໄດ້ມາພ້ອມ.

- ຜູ້ຖາມ ວ່າ: ຊ້າງ ມ້າ ງົວ ຄວາຍ ໄດ້ມາບໍ່?
- ຜູ້ຕອບ ວ່າ: ໄດ້ມາ
- ຜູ້ຖາມ ວ່າ: ຂອງຢູ່ຂອງກິນ ເປັນເນື້ອເຖິກເອີກລາຍ ໄດ້ມາບໍ່?
- ຜູ້ຕອບ ວ່າ: ໄດ້ມາ
- ຜູ້ຖາມ ວ່າ : ແຫລູກທອງ ມອງລູກກົ່ວໄດ້ມາບໍ່?
- ຜູ້ຕອບ ວ່າ: ໄດ້ມາ
- ຜູ້ຖາມ ວ່າ: ເຫົ້າລາຍປາປາປີ້ງ ໄດ້ມາບໍ່?
- ຜູ້ຕອບ ວ່າ: ໄດ້ມາ
- ຜູ້ຖາມເວົ້າຕໍ່ໄປ ວ່າ: ເອີ ຄັນເພິ່ນມາຄໍ້າມາຄູນ ໃຫ້ລູກໃຫ້ຫລານຢູ່ດີມີແຮງ ໄດ້ມາທຸກອັນທຸກແນວແລ້ວ ກໍເຊີນຂຶ້ນມາທ້ອນ. ກໍເປັນອັນວ່າສຸດຄໍາຖາມຄໍາຕອບພຽງທໍ່ນີ້ແລ.

ເມື່ອຜູ້ເຖົ້າທັງສອງຝ່າຍໄດ້ຖາມແລະຕອບກັນໝົດແລ້ວ ຜູ້ເຖົ້າຝ່າຍທີ່ຖາມກໍເຊີນຜູ້ເຖົ້າຝ່າຍທີ່ຕອບ. ເມື່ອໄດ້ຄໍາເຊື້ອເຊີນແລ້ວ ຜູ້ເຖົ້າຜູ້ແກ່ກໍຢຽບກ້ອນຫີນ ມີແຕ່ລ້າງຕີນແລ້ວກໍຂຶ້ນເຮືອນໂລດ ຜູ້ທີ່ຂົນຂອງ ແລະເຄື່ອງໃຊ້ ກໍໃຫ້ນໍາໄປວາງໄວ້ໃນຫ້ອງກາງ.

ສ່ວນຜູ້ເຖົ້າພາຍຖົງມານັ້ນກໍໃຫ້ເອົາສິ່ວ ຫລື ເຫັລກຕາປູຢູ່ໃນຖົງນັ້ນອອກມາຕອກເສົາຂ້ວນແລ້ວເອົາຖົງຫ້ອຍໄວ້ເຈັດວັນລ່ວງໄປແລ້ວຈິ່ງໃຫ້ມ້ຽນຖົງໄດ້. ການຕອກສິ່ວ ຫລື ເຫັລກຕາປູລົງເສົາຂ້ວນນັ້ນ ກໍມີພິທີດັ່ງນີ້:

ຄໍາຕອກສິ່ວ ຫລື ເຫັລກຕາປູ

- ຕອກບາດໜຶ່ງ ໃຫ້ໄດ້ຄ້ອງເກົ້າກໍາ
- ຕອກບາດສອງ ໃຫ້ໄດ້ຄໍາເກົ້າໝື່ນ
- ຕອກບາດສາມ ໃຫ້ໄດ້ເຂົ້າລ້ານໝື່ນມາເຍັຍ
- ຕອກບາດສີ່ ໃຫ້ໄດ້ເມັຍສາວມານອນຫຽມຂ້າງ
- ຕອກບາດຫ້າ ໃຫ້ໄດ້ຊ້າງໃຫ່ຍມາໂຮງ

- ຕອກບາດທີກ ໃຫ້ໄດ້ຊາຍໂຖງມາຢາຍແຈກເຫົ້າລາ

- ຕອກບາດເຈັດ ໃຫ້ໄດ້ຜູ້ເຖົ້າມານອນເຝົ້າເຮືອນ

ໂອມ ອຸອະ ມຸມະ ມູນມາ ມະຫາມູນມັງ ມູນລັງ ໂທນຕຸ. ຄາຳນີ້ໃຊ້ເວລາຕອກສິ່ວ ແລ້ວເອົາຖົງຫ້ອຍ.

ເມື່ອຜູ້ເຖົ້າຜູ້ແກ່ຕອກສິ່ວເອົາຖົງຫ້ອຍແລ້ວ ຈິ່ງເອົາຜ້າຂາວມ້າມານຸ່ງສາລັບອາບນ້ຳ, ຄັນອາບນ້ຳແລ້ວຈິ່ງມານອນທີ່ນອນເຊິ່ງປູໄວ້ແລ້ວ ເພື່ອສ່ຽງທວາຍສິ່ງເສີມເອົາໂຊກເອົາລາບ ການນອນນັ້ນໃຫ້ເອົາຜ້າມາຫົ່ມອິຫລີ ທາທ່ານອນຫັລບແລະໂກນຢູ່ກາກ ໆ ແລ້ວໃຫ້ຜູ້ໜຶ່ງສົມມຸດເປັນໄກ່ ຂັນບອກໂມງບອກຍາມ ເມື່ອຂັນໄດ້ສາມເທື່ອແລ້ວ ຈິ່ງຖືວ່າແຈ້ງເປັນມື້ໃໝ່ ຜູ້ນອນກໍຕື່ນຂຶ້ນແກ້ຄວາມຝັນ. ຄວາມຝັນນັ້ນວ່າດັ່ງນີ້:

ຄວາມຝັນ

ບ໊ະ ຝັນຄືນນີ້ ຝັນທິລດຝັນຫລາດເວີ້ຍ! ຝັນວ່າເພິ່ນນີ້ຈູງແຂນເຂົ້າພາຂ້ອນເກາະກ່າຍ ຝັນວ່າເພິ່ນນີ້ຈັບໄຂ່ປ້ອນ ປັນໃຫ້ແກ່ເຮົາ, ໝົດກະບວນແລ້ວ ຄືນເມືອກັ້ງງອ່ອຍທ່ອຍ, ຝັນວ່ານ້ອງພີ້ຈັບຈ່ອງນົ້ວ ເອົາອ້າຍເຂົ້າບ່ອນນອນ ວ່າຊັ້ນໃດ.

ເມື່ອແກ້ຄວາມຝັນສຸດລົງແລ້ວ ຜູ້ເຖົ້າຜູ້ແກ່ຝ່າຍຖາມນັ້ນ ກໍໃຫ້ພອນດັ່ງຕໍ່ໄປນີ້ :

ຄວາມໃຫ້ພອນ ວ່າ:

* ເອີ ! ນອນຫັລບໃຫ້ເຈົ້າໄດ້ເງິນພັນ

- ນອນຝັນ ໃຫ້ເຈົ້າໄດ້ເງິນໝື່ນ
- ນອນຕື່ນ ໃຫ້ເຈົ້າໄດ້ເງິນແສນ
- ແບນມືໄປ ໃຫ້ເຈົ້າໄດ້ແກ້ວມະນີໂຊດ

- ໂຫດຮ້າຍ ຢ່າໄດ້ມາແພ້ວພານ
- ຝູງໂຈນມານ ຢ່າໄດ້ມາກ່ຽວຂ້ອງ
- ຝູງພີ່ນ້ອງ ຕຸ້ມຕ່ອມຫອມຮັກ ໂອມສວາຫົມ.

ພິທີຂຶ້ນເຮືອນໃໝ່ກໍແລ້ວທໍ່ນີ້ ຕໍ່ຈາກນີ້ໄປ ກໍທຳພິທີສູ່ຂັວນຂຶ້ນເຮືອນໃໝ່. (ມີຢູ່ໜ້າ 103)

ສູ່ຂັວນພາ

ຖ້າເຈັບໄຂ້ໄດ້ປ່ວຍ ກິນບໍ່ໄດ້ ນອນບໍ່ຫລັບ ຫາກວ່າໄດ້ສູ່ຂັວນກ່ອງ, ສູ່ຂັວນຫລວງ, ສູ່ຂັວນຄີນປ່ວຍ, ສູດທາດ, ສູດຕໍ່ຊາຕາໃຫ້ແລ້ວ ແຕ່ໂຣກໄພໄຂ້ເຈັບຍັງບໍ່ຫາຍ ກໍທຳການສູ່ຂັວນພາໃຫ້ອີກແຕ່ງເຄື່ອງຄືກັນກັບສູ່ຂັວນຫລວງ.

ຄຳສູ່ຂັວນພາ

ສີ ສີ ສິດທິໄຊຍະມັງຄະລະເລີດລ້ຳ ສິດທິເດດລືຍົດ ຍໍແຍງຄຸນຄູ່ຕີນຕັນຕ້ອນ ຣະຕະນັງແກ້ວສາມປະການກົມຂາບ ເຊີນຊ່ອຍຂ້າຄາວແຄ້ນຂອດຂັວນແດ່ທ້ອນ, ບັດນີ້ ຂ້ອຍຈັກເຊີນທັງປວງທ້າວ ເທພາພົມມະໂລກ ເຊີນທັງເທບພະແຜ່ນຫລ້າ ຫລາຍຊັ້ນຊ່ອຍຊູ ເຊີນທັງຄຸດນາກນ້ຳ ໃນກິ່ງກົງສະໝຸດ ຈະຕຸໂລຣາຊາ ຄູ່ຕີນຕັນຕ້ອນ. ແມ່ນວ່າຂັວນເຂີນຄ້າງ ໄພຂວາງຂາມຣາດ ເຊີນໄຕ່ເຕົ້າຂັວນເຂົ້າຄອບຄີງ ແດ່ທ້ອນ.

ບັດນີ້, ຂ້ອຍຈັກເຊີນຂັວນເຈົ້າ ນິງເຍົາເຍື້ອນຍ່າງ ຢ່າໄດ້ຊ້າ ເຮັວຣ້ອນຮີບມາ ພໍ່ແມ່ຕົ້ມໄຂ່ໄວ້ ຕັ້ງແຕ່ງພາຂັວນ ນານາມີຄູອັນມວນພ້ອມ ມີທັງແພຂາວພ້ອມ ແພແດງດູອາດ ມີທັງເທບພະທ່ອນໃຫ້ຫຼຽມເນື້ອນຸ່ງທີງ ມີທັງພາຫວານພ້ອມ ພາຄາວຂີນໄຂ່ວ ພໍ່ແມ່ຕົ້ມໄຂ່ໄວ້ປະສົງຊ່ອມສູດຂັວນ <u>ເຊີນເຍີຂັວນເຮີຍ!</u>

ເຊີນທັງຂ້ວນທິວພ້ອມ ເກສາສະເດັດດ່ວນ ເຊີນເຈົ້າມາຮ່ວມຫ້ອງເຮືອນຢ້າວຢູ່ເຢັນ ມີທັງຕຽງສູງພ້ອມ ສະໜະທອງທີ່ງອາດ ສາດເສື່ອຊ້ອນ ຊີມກົ້ວກິ່ນສະເໜ ສະໜຸກຍິ່ງແມ້ງ ມຸງເມກບັງບິດ ໝອນທິວສີມແສ່ວຄຳລາຍແກ້ວ ມາລາລົ້ນເປັນແຖວຖັນຖີ່ ລະອອງອູດເອົ້າ ຍູຫ້ອມຫົ່ນທອມ ເຊີນເຢີຂ້ວນເຮີຍ!

ເຊີນທັງຂ້ວນໂລມາແມ້ງ ມະໂນກອງຄົ້ວກ່ອງ ໃຫ້ເຈົ້າມາລູບໄລ້ທາແປ້ງປິ່ນທອມ ເຊີນເຢີຂ້ວນເຮີຍ! ເຊີນທັງຂ້ວນນະຂາເລັບເບື້ອງຕີນມືພ້ອມພ່ຳ ໃຫ້ເຈົ້າມາຢູ່ຊ້ອນປາຍນີ້ວປີ່ງທາ ເຊີນທັງທັນຕາແຂ້ວເປັນແຖວຖັນຖີ່ ຍາມເມື່ອໃສ່ຊີ່ແລ້ວດຳປີ້ຮູບງາມ ໃຫ້ເຈົ້າມາສະເທີ້ວຍເຂົ້າ ພາອວນອ້ວນອ່ອນ ມີທັງປາປີ່ນປີ້ງ ປະລິງຈຳແຈ່ວບອງ ຫລາຍພ່ຳເຊື້ອ ປີ້ງຈີ່ຈຽວຈືນ ຍູທ່າງຊີມຄວາມສຸກຢູ່ສະບາຍທາຍຮ້ອນ ເຊີນເຢີຂ້ວນເຮີຍ!

ເຊີນທັງຂ້ວນຕະໂຈໜັງ ໃຫ້ມາຫວຍທີ່ງຜ້າ ຜີນງາມເນື້ອອ່ອນ ໃຫ້ເຈົ້າຍືນຍາວໝັ້ນພັນປີເປັນເຂດ ຝູງໝູ່ໂພຍພະຍາດຮ້າຍ ທິດເຮືອນຢ່າມີ. ເຊີນທັງ ຂ້ວນມັງສັງຊີ້ນ ໃນຄີງນ້ອຍອ່ອນ ໃຫ້ເຈົ້າມາຢູ່ຊ້ອນໃນເສັ້ນຄູ່ເອັນ ຢ່າໄດ້ເປັນພະຍາດຕ້ອງ ໂຣຄາບັງບຽດ ຢ່າໄດ້ເຈັບປ່ວຍໄຂ້ ໃນເນື້ອໜ່ວງໜາວ. ເຊີນທັງຂ້ວນນະຫາຣູເສັ້ນ ພາຊີງຫງວທ່ອງ ຢ່າໄດ້ເຈັບປວດເສັ້ນເອັນອ້າງຢ່າຈັງ ເຊີນທັງຂ້ວນອັດຖິມິນຊັງເທີ່ຍອ ສະໝອງເນົາໃນກະດູກ ໂພຍພະຍາດຮ້າຍ ແມ່ເຮັງຜາໃຫ້ພ່າຍພັງ ເຊີນຂ້ວນກາ້ ຂາທັລງນິດທະເນັ່ງ ໃຫ້ເຈົ້າມາຢູ່ຊ້ອນ ໂຄງກາ້ຝ່າຍທັລງ, ທະທະຍັງນັ້ນ ຂ້ວນໃຈດູອາດ ເຈົ້າທາກສະຫລາດຮູ້ ເຫັນແຈ້ງຮີດຄອງ ໃຫ້ເຈົ້າມາຊີມຫ້ອງ ໃນຄີງຂອງເກົ່າ ເຂົ້າສູ່ໂຄງຄາບຮ້າຍ ຢ່າຟ້າວນ່າຍຊັງ. ຍະກະນັງນ້ອມ ຂ້ວນຕັບມາເປັນໝູ່ ກີໂລມະກັງ ຜັງຜືດນັ້ນ ໃຫ້ມາພ້ອມພ່ຳມວນ. ເຊີນທັງຂ້ວນປີຫະກັງກາ້ ໃຫ້ມາໄວແວນທ່ຽວ. ເຊີນທັງຂ້ວນປັບຜາສັງປອດນັ້ນ ໃຫ້ມາພ້ອມພ່ຳກັນ. ເຊີນທັງຂ້ວນອັນຕັງໄສ້ ພຸງຫລວງອັນໃຫ່ຍ. ເຊີນທັງຂ້ວນອັນຕະຄຸນັງໄສ້ນ້ອຍໃຫ້ມາພ້ອມພ່ຳມວນ. ເຊີນທັງຂ້ວນກາຣີສັງກາ້ ອາຫານກີນຂອງເກົ່າ. ອຸທະຣີຍັງ ເຊີນເອົາຂ້ວນອາຫານໃໝ່ເຂົ້າ ມາຫ້ອນທ່ຽວເປືອງ. ເຊີນ

ທັງຂ້ວນປິຕັງນາ ໃນບິເບື້ອງຝ່າຍ ພາຍໃນຂົມເຝື່ອນນັ້ນກໍ່ໃຫ້ມາ. ເຊີນທັງຂ້ວນເສມທະໝໍ້ ໃນຄໍຄືສະເຫລດກໍ່ໃຫ້ມາ. ເຊີນທັງຂ້ວນປຸບໂພທ້ອງ ໜອງໃນນູມເບົ່າກໍ່ໃຫ້ມາ. ເຊີນທັງຂ້ວນໂລຫິຕັງນາ ພາຍໃນໜອງເລືອດກໍ່ໃຫ້ມາ. ເຊີນທັງຂ້ວນເສໂທ ເມໂທໄຄຄາດເນື້ອ ໃຫ້ມາພ້ອມພ່ຳມວນ. ເຊີນທັງຂ້ວນອັດສຸນາ ໃນຕາໄຫລຫຍາດກໍ່ໃຫ້ມາ. ເຊີນທັງຂ້ວນວະສານາ ມັນແຫລວໄຫລລ່ວງ ໄຫລອອກເຂົ້າ ຫງວເທົ້າທົ່ວຄີງ ເຊີນທັງຂ້ວນເຂໂລນາ ລາຍໄຫລເຫລືອປາກກໍ່ໃຫ້ມາ. ສິງຄານິກາ ລະສິກາ ນ້ຳມູກຍ້ອຍສອງຂ້າງກໍ່ໃຫ້ມາ. ເຊີນທັງຂ້ວນມຸດຕັງນາ ຫງວທາງທຸກຍາກກໍ່ໃຫ້ມາ. ເຊີນທັງຂ້ວນມັດຖະເກນາ ກະໂບງຫົວອັນໃຫ່ຍກໍ່ໃຫ້ມາ. ມັດຖະລຸງຄັງ ຂ້ວນສະໝອງຢູ່ຊ້ອນ ໃນນັ້ນກໍ່ໃຫ້ມາ. ເຊີນທັງຂ້ວນຫົວພ້ອມ ຫູຕາຄີ້ວກ່ອງ ໃຫ້ເຈົ້າຍືນຍາວໝັ້ນ ພັນວັດສາທັດທ່ຽງ ຢ່າໄດ້ຄວຍໂຄ່ນຄ້າງ ຄອນລົ້ມທີ່ລົນເສັຍ, ໃຫ້ເຈົ້າມາຢູ່ຊ້ອນເຊື້ອຊາດແນວຄົນ ຢ່າໄດ້ໄປປົນເຊື້ອແນວຜີຜິດຊາດ, ຢ່າໄດ້ໄປປົນຊ້ອນແນວຟ້າຊົ່ວສູງ ໄກຊົນເຊື້ອຊາວຄົນຕ້ອງຍາກ ຢ່າໄດ້ໄປຢູ່ຊ້ອນຊາວເຊື້ອນາກຄາ ຢ່າໄດ້ໄປຢູ່ກ້ ຊາວຄົນປະເທດອື່ນ ບຸນບໍ່ສ້າງ ສິນຈ້າງບໍ່ມີ ເມືອງເຮົາສ້າງສົມພານທຸກເມື່ອ, ຊົມຊື່ນສ້າງສິນຊ້ອຍຊູ່ວັນອີງພຸດໄທເຈົ້າ ຈອມຄຸນຄາວກ່ອນ ເພິ່ນກໍ່ຊົມຊື່ນສ້າງ ຊົມພູພື້ນທີບເຮົານີ້ແລ້ວ ກໍ່ຈິ່ງໄດ້ຜ່ານພົ້ນ ເປັນໜໍ່ໂພທິສັດ ຕູ໊ດສັບພັນຍູ ຍອດທັມເທໄວ້. ເຊີນທັງຂ້ວນຕີນພ້ອມ ຂ້ວນມືນິ້ວອ່ອນ ໃຫ້ເຈົ້າມາສຸບແຫວນໃສ່ກ້ອຍ ກະຈອນນ້ອຍໃສ່ຫູ ບຸນຊູສ້ອຍໂສມງາມສະເໝີຫລໍ່ ພໍ່ແມ່ເຈົ້າ ຫົວໄຫ້ຮຸ່ງຫາ ຕານາຍເຈົ້າ ຫົວຫາທຸກຮຸ່ງ ຝູງພີ່ນ້ອງ ຊາວບ້ານເພິ່ນບໍ່ຊັງ ເພິ່ນກໍ່ຮັກແຈ່ມເຈົ້າ ຊົມຈູບຈອມຂ້ວນ ໃຫ້ເຈົ້າລີລາເດີນດ່ວນມາຢ່າຊ້າ ໃຫ້ເຈົ້າລີລາເຂົ້າໃນຄີງຂອງເກົ່າ ເຈົ້າເນີ ຝູງພີ່ນ້ອງເຫັນແລ້ວຊື່ນຊົມ. ຊະຍະຕຸ ພະວັງ ຊະຍະມັງຄະລະ ອຸອະ ມຸມະ ມູນມາ ມະຫາມູນມັງ ມູນມັງ ໂທນຕຸ ໆ

ສູ່ຂ້ວນເສົາເຮືອນ

ປະເພນີບູຮານ ເມື່ອຈະປຸກເຮືອນໃໝ່ຕ້ອງທຳພິທີສູ່ຂ້ວນເສົາເຮືອນເສັຍກ່ອນ ເພື່ອເປັນສິຣິມຸງຄຸນ ເສັດແລ້ວຈຶ່ງຍົກເສົາຂ້ວນຂຶ້ນໄດ້ ຄຳສູ່ຂ້ວນເສົາເຮືອນ ວ່າດັ່ງນີ້ :

* ສິ ສິ ສິດທິພູຣະພອນ ບໍວອນແວນວິເສດ ວັນນີ້ເປັນວັນດີ ວັນດີຖີ ອະມຸດຕະໂຊກ ອຸດຕະມະໂຍກ ພ້ອມລັກຂະນາ ຂ້າຈັກເຊີນເທວະດາ ທຸກຣາສີ ອັນສະເດັດຢູ່ໃນຄີຣີ ແລະປ່າກ້ວາງ ທຸກຮ່ອມຫ້ວຍແລະຮາວເຂົາ ທຸກແຖວເຖົາເຖື່ອນຖ້ຳ ທຸກທ່ານ້ຳແລະເຫວຫີນ ທຸກພູດິນແລະທາງລຸ່ມ ທຸກພຸ່ມໄມ້ແລະຈອມຜາ ຂ້ອຍຈັກເຊີນເອົາທ້າວຈະຕຸໂລກກະບານທັງ 4 ທັງພູະອາທິດແລະພູະຈັນ ພູະອັງຄານແລະພູະພຸດ ພູະປະຫັດ ພູະສຸກແລະພູະເສົາ ທັງ 7 ລ່ຽມເຂົາພູະສຸເມຣຸຣາດ ກັບທັງເທບພະດາເຈົ້າຕີນອິງອາດ ຢູ່ເມືອງສະຫ້ວນ ຂ້າຈັກເຊີນເອົາພູະວິສນຸກັມຜູ້ສັກສິດ ໃຫ້ລົງມາຊ່ອຍຜູ້ຂ້າ ຜູ້ກະທຳການມຸງຄຸນໃນມື້ນີ້ວັນນີ້.

ຜູ້ຂ້າຂໍອາຣາທະນາພູະມຸນີ ຜູ້ຊົງໄຕູເພດ ທ່ານຜູ້ມີອິດທິຣິດທິພິເສດຈຶ່ງໃຫ້ອວຍພອນ ຝູງຂ້າທັງຫລາຍເອົາກັນມາສອນລອນນັ່ງເຝົ້າ ເພື່ອຈັກຮຽກເອົາຂ້ວນເສົາເຮືອນເຈົ້າ ໃຫ້ເຂົ້າມາສູ່ ຮຽກໃຫ້ມາພ້ອມໝູ່ເສົາ ພໍສົມຄວນປຸກຂຶ້ນເປັນບ້ານ ຝູງຂ້າບໍ່ໄດ້ຄ້ານເລືອກໄດ້ໄມ້ລຳດີ ເສົາຂ້ວນມີ ແມ່ນໄມ້ປອດ ຍາວອອດຫລອດບໍ່ມີຕາ ຈຶ່ງໄດ້ນຳເອົາມາເປັນເສົາຂ້ວນແລະເສົາແຮກ ເສົານີ້ແປກ ທ່ານວ່າເປັນມຸງຄຸນ ເສົານັ້ນສົນ ຕົ້ນດີທຸກເມື່ອ, ຕັ້ງໄວ້ເພື່ອເປັນເສົາທີ່ສອງ. ເສົາທີ່ສາມງາມດີ ອອດຫລອດ ອົນພູມຍອດ ຍົກໃຫ້ປຸນແປງ ເສົານີ້ແພງມຸງຄຸນແຕ່ເຄົ້າ ເສົາທີ່ສີ່ພູະເຈົ້າບອກໃຫ້ນີ້ ແມ່ນໄມ້ວິເສດມຸງຄຸນ ເສົາທີ່ຫ້າສົມບູນ ສັດຕູພັງພ່າຍ ເສົາທີ່ຫົກກໍໃຫ່ຍອິງອາດງາມດາຍ ອົນພູມໝາຍຍົກຍໍ ມອບໃຫ້ ເສົາທີ່ເຈັດກໍໄດ້ອິງອາດພໍຕາ ໄດ້ມາຈາກດົງໜາຫິມະວັນປະເທດ ຫາກແມ່ນໄມ້ວິເສດມະຫາມຸງຄຸນ ເສົາທີ່ແປດໄດ້ລຸນງາມດີອ່ອງຕ່ອງ ປຸກເປັນເຮືອນກໍຄ່ອງເສົາຄຳເສົາຄູນ ເສົາຫາໄດ້ທີ່ລຸນດີໝົດຕະຫລອດ ພ້ອມທັງໄມ້ກະທອດໄມ້ຂື້ໄມ້ຂາງ ເປັນຂອງດີທຸກທາງຄືວ

ເຮືອນເຮົາປູກ ໄມ້ນີ້ພ້ອມພໍ່າລູກໝູ່ມິດສະຫາຍ ຊິນມາຢາຍວັນດີແປງ ປູກ ຈຶ່ງໄດ້ມາຮ້ອງກູກຮຽກເອີ້ນເອົາຂວັນ.

ວ່າ ມາເຢີຂວັນເຮີຍ !

ເຖິງເວລາເຂົາຕັດເຈົ້າລົ້ມ ເຈົ້າຢ່າດ່ວນດີນໜີ ໃຫ້ຂວັນເຈົ້າກັບມາ ສູ່ພິທີມະຫາປາສາດ ຂວັນເສົານາງເຮີຍຢ່າຫີລາງໄປຟັງສຽງ ເລໄລ ແລະແມງຈ້ວງ ໄປຕິດຂ້ອງຢູ່ໃນພົງໄພ ວ່າມາເຢີຂວັນເຮີຍ!

ເສົາແຮກໃຫ້ຮີບວາງ ເສົາກາງໃຫ້ຮີບແລ່ນມາເຢີຂວັນເຮີຍ ຂວັນ ນາງຈຶ່ງມາສູ່ ໃນທີ່ຢູ່ອັນສຳລານ ກຳຈັດໄພໃຫ້ເປັນສຸກສະຫັວດດີ ຈຳ ເລີນສີທຸກຄ່ຳເຊົ້າ

ວ່າມາເຢີຂວັນເຮີຍ!

ຂວັນເສົາແຮກໄປຫີລາງຢູ່ກາງທາງ ຂວັນເສົາກາງໄປຫີລາງຢູ່ປ່າໄມ້ ກໍໃຫ້ມາ ວ່າມາເຢີຂວັນເຮີຍ! ຂວັນເສົາໃຕ້ໄປທ່ຽວຢູ່ນ້ຳເຖືອ ຂວັນເສົາ ເໜືອໄປຄ້າງຢູ່ປ່າເປົ້າ ຄັນຂວັນເຈົ້າຮູ້ແລ້ວຮີບດ່ວນພະລັນມາ ວ່າມາ ເຢີຂວັນເຮີຍ!

ຂວັນຂື່ ຂວັນຂາງ ຂວັນແຂນນາງແລະຂວັນກະທອດ ໃຫ້ເຈົ້າ ແລ່ນອອດຫລອດມາສູ່ເຄຫາ ວ່າມາເຢີຂວັນເຮີຍ! ມາພະລັນຢ່າຊ້າ ໃຫ້ເຈົ້າມາພ້ອມໜ້າ ຊິນສູ່ພາຂວັນ ສິ່ງອັນໃດສົມຄວນ ຊຸນກໍແຕ່ງໄວ້ ຖ້າ ຂວັນເສົາມາຮອດແລ້ວຈຶ່ງໃຫ້ຢູ່ສະຫັວດດີ ຈຳເລີນສີແກ່ຝູງຂ້າ ຂໍ ໃຫ້ເຈົ້າຕັ້ງໜ້າຢູ່ສຸກສະຖາພອນ ສຸກທັງນັ່ງ ສຸກທັງນອນ ສຸກທັງຍາມ ໂຄຈອນ ຢ່າໃຫ້ຄາຄາດແຄ້ວ ຄັນປຸກເຮືອນຂຶ້ນແລ້ວໃຫ້ຜາບແພ້ຂ້າ ເສິກສັດຕູ ໄຊຍະຕຸ ພະວັງ ໄຊຍະມັງຄະລະ ໄຊຍະມະຫາມຸງຄຸນ ຂໍ ຄວາມຈະເລີນ ໄຊຍະໂຊກຈຶ່ງມີແກ່ຝູງຂ້າ ທັງຫລາຍ ທຸກຕົນທຸກຄົນ ກໍຂ້າເທີ້ນ ๆ

ຄຳສູ່ຂວັນເສົາເຮືອນ
(ອີກແບບໜຶ່ງ)

* ສູ ສູ ສິດທິພູ່ພອນ ເກສອນທອນຮ່ວງເຮົາ ມື້ນີ້ແມ່ນມື້ສັນ ວັນນີ້ແມ່ນວັນດີ ວັນເສດຖີເບີກສະເພົາໄປຄ້າ ມື້ນີ້ວ່າວັນກາບສະງ້າ ຢູ່ສະຫ້ວດສະດີ ຍັງມີພູ່ຍາຕົນໜຶ່ງຢູ່ເມືອງໝັ້ນຄຳທອງ ພູ່ຍາຕົນທີ່ສອງຢູ່ເມືອງສີຍຸດທະຣາດ ຈຶ່ງພ້ອມກັນມາຄ້ຳມາຄູນໜູນແບກ ຈຶ່ງພ້ອມກັນມາຍົກເສົາແຮກຂຶ້ນ ໃຫ້ໄດ້ງົວແມ່ລາຍ ຍົກເສົາຂວັນຂຶ້ນໃຫ້ໄດ້ຄວາຍເຂົາຢ່ອງ ຍົກເສົາສາມຂຶ້ນໃຫ້ໄດ້ຄ້ອງເກົ້າກຳ ຍົກເສົາສີ່ຂຶ້ນໃຫ້ໄດ້ຄຳເກົ້າໝື່ນ ຍົກເສົາຫ້າຂຶ້ນ ໃຫ້ໄດ້ເຂົ້າລ້ານໝື່ນມາເຍ້ຍ ຍົກເສົາຫົກຂຶ້ນໃຫ້ໄດ້ເມັຍຜູ້ດີຜູ້ງາມມານອນທຽມຂ້າງ ຍົກເສົາເຈັດຂຶ້ນໃຫ້ໄດ້ຊ້າງສານໃຫ່ຍມາໂຮງ ຍົກເສົາແປດຂຶ້ນໃຫ້ໄດ້ຊາຍໂຖງມາຢາຍແຈກເຫຼືອ ຍົກເສົາເກົ້າຂຶ້ນ ໃຫ້ເຈົ້າເຮືອນນີ້ມັ່ງມີ ເປັນດັ່ງທະນັນໄຊຍະເສດຖີທັງຫ້າ ຂໍໃຫ້ມີຂ້ອຍຂ້າເຫຼືອຫລາຍ ມີງົວຄວາຍແພ່ເຕັມຄອກຊ້າງມ້າອອກເນືອງນອງ ເງິນຄຳກອງແສນໂກດ.

ບັດນີ້ ຂ້ອຍຈັກເຊີນເອົາສິບໝໍດີລຸກມາແຕ່ເມືອງຟ້າ ໃຫ້ມາຊ່ອຍຍໍມື້ນີ້ວັນນີ້, ຊາວໝໍກ້າຜູ້ຢູ່ເມືອງລຸ່ມ ໃຫ້ມາຊ່ອຍຍໍມື້ນີ້ວັນນີ້, ສາມສິບພໍ່ໝໍຫລວງຜູ້ຢູ່ພູເກົ້າ ໃຫ້ມາຊ່ອຍຍໍມື້ນີ້ວັນນີ້, ເກົ້າຮ້ອຍພໍ່ໝໍຫລວງຜູ້ຢູ່ພູທຳພູໂຮງ ໃຫ້ມາຊ່ອຍຍໍມື້ນີ້ວັນນີ້, ຄາຖາອັນນີ້ບໍ່ແມ່ນຄາຖາເຮົາເວົ້າຕັ້ງແມ່ນຄາຖາໝໍເຖົ້າແຕ່ບູຮານ ເຈັດໃບຍໍເພິ່ນກໍເອົາມາໜູນ ເຈົ້າແລ້ວ ເຈັດໃບຄູນເພິ່ນກໍເອົາມາຄ້ຳເຈົ້າແລ້ວ ໃຫ້ເຈົ້າເປັນດັ່ງບໍ່ສ້າງນ້ອຍອອກບໍ່ເຢັນດີ, ໃຫ້ເຈົ້າໄດ້ເປັນດີ ດັ່ງເສດຖີທັງຫ້າ, ໃຫ້ເຈົ້າໄດ້ຂ້ອຍຂ້າຍິງຊາຍ ງົວຄວາຍຫລາຍເຕັມຄອກ ຊ້າງມ້າອອກເນືອງນອງເງິນຄຳກອງແສນໂກດ.

ບັດນີ້ ຂ້ອຍຈັກເຊີນເອົາຜູ້ແກ່ກ້າສະເຫຼົວຍເມືອງກໍໃຫ້ມາ, ທ້າວຄຳເຫຼືອງແລະທ້າວໂພໄຊ ພູ່ສີໄວວອນແຈ່ມໜ້າກໍໃຫ້ມາ ກັບທັງຜູ້ແກ່ກ້າອີງເອກທະນຸມານກໍໃຫ້ມາ, ເຊີນທັງທ້າວເຈືອງຫານກັບທ້າວສັງຄີບ ໃຫ້ຮີບມາຍໍ ຝູງຂ້າຍົກເສົາຂວັນຂຶ້ນຢ່າໃຫ້ແຕກ ເສົາແຮກໃຫ້ທ່ຽງ

ຊຸ້ນ ເສົາທັງມວນໃຫ້ໝັ້ນແກ່ນ ໃຫ້ເຈົ້າໝັ້ນປານແທ່ນບັນລັງ ໃຫ້ເຈົ້າໝັ້ນ ປານຄຳກ້ອນລ້ານ.

ຝູງຂ້າທັງຫລາຍຍົກຂື່ຂື້ນສຸບດວດ ຫວາຍມວດບ້າວກັບແຈ ຕັດກອນແປຊຸກໃສ່ຢາຍລຽນ ເອົາຫວາຍຄຽນກັບຂາງແຮ່ງ ຈັດແຈ່ງແລ້ວຈື່ງເອົາຟາກມາສານ ເອົາກະດານມາປູລວດແລ້ວ ປັດກວາດແຜ້ວສິນເສັຍ. ລາງຄົນເອົາເປັຍມາຕັ້ງໃສ່ແບບ ລາງຄົນປຸນເອົາດັ້ງມາຜູກຕັ້ງກັບຂື່ ລາງຄົນຢື້ຂື້ນໃສ່ແປບິນ ລາງຄົນຂື້ນຄາດຂ້າວ ຫວາຍຜູກອ້າວກັບສະຍົວ ບາງຜ່ອງຂົນຫົວກອນມາຮ້ອຍ ບາງຜ່ອງກາດໄມ້ຮອງຊາຍລາງຄົນຢາຍມຸງຫຍ້າ ມຸງແຕ່ເຄົ້າເທົ້າຮອດແປບິນ ຈົນເທິງນານເລີຍແລ້ວ ໄມ້ແກ້ວສອດຕາໜູ ປຸນດູງາມແປງແຊ່ງ ເທົ້າລາໃສແພ່ງຢາຍກັນ ນັ່ງເປັນຖັນດູມ່ອນ ລາງຄົນດ່ວນເອົາເຊັນມາຕັດຊຸກໃສ່ຮູ ລາງຄົນຖູເອົາຝາມາແອ້ມ ແຕ້ມຮູບໃສ່ລິງລາຍ ບໍຣະບວນແລ້ວດູງາມອ່ອງຕ່ອງ ທຸກແຫ່ງຫ້ອງເປັນບ່ອນບົວນາງ ຫຽມທາງກາງນັ້ນເປັນສະບໍ່ແກ້ວ ນາງອາບແລ້ວໂສດສົງສີ ດູດີງາມສຸດທະຍິ່ງ ຂໍໃຫ້ເຈົ້າຂອງເຮືອນຫັລງນີ້ ໄດ້ມີມິ່ງເມັຍຊ້ອນ ພັນປີຢ່າໄດ້ຄາດແຄ້ວ, ຂໍໃຫ້ເຈົ້າຂອງເຮືອນຫັລງນີ້ ໄດ້ຊ້າງແກ້ວໃສ່ພວງຄຳ ເສນານຳແຫ່ໜ້າສອງຮ້ອຍ ຫ້າຮ້ອຍແຫ່ຕາມຫັລງ ໃຫ້ເຈົ້າຂອງເຮືອນຫັລງນີ້ ເປັນດັ່ງທາດສິຈັນ ເປັນດັ່ງຕາວັນຂື້ນຟ້າ ໃຫ້ມີເດດກ້າຮຸ່ງປານເດືອນ ໃຫ້ເຈົ້າເຮືອນຫັລງນີ້ເຫືລອງເໝືອນແກ້ວມະນີໂຊດ ໂທດຮ້າຍຢ່າມາພານ ມານຮ້າຍຢ່າມາຂ້ອງ ໃຫ້ຕຸ້ມພີ່ນ້ອງຢູ່ເຕັມເຮືອນ ເພິ່ນຂາຍກຸບໃຫ້ເພິ່ນແລ່ນມາຫ້ອຍເຈົ້າເນີ, ເພິ່ນຂາຍຂ້ອຍ ໃຫ້ເພິ່ນແລ່ນມາໂຮມເຈົ້າເນີ, ທາງໃຕ້ໃຫ້ເພິ່ນມາຊ່ອຍເຮືອເຈົ້າເນີ, ທາງເໜືອໃຫ້ເພິ່ນມາຊ່ອຍຊ້າງເຈົ້າເນີ, ສອງຕາບຂ້າງ ໃຫ້ເພິ່ນມາຊ່ອຍດອກໄມ້ເງິນຄຳເຈົ້າເນີ.

ບັດນີ້, ເສົາແຮກໃຫ້ເປັນແກ່ນຄູ້ຫອມຊົ່ວພັນວາ ເສົາຊ້ອນໃຫ້ເປັນແກ່ນຈັນຫອມຊົ່ວແສນມື້, ເພິ່ນມາຊື້ ໃຫ້ເຈົ້າໄດ້ຂາຍແພງ ໃຫ້ເຈົ້າໄດ້ເງິນພໍກຳ ໃຫ້ເຈົ້າໄດ້ຄຳພໍກອບ ໃຫ້ເຈົ້າຫອບເອົາແຕ່ແກ້ວແຫວນທັງມວນ.

ໄຊຍະຕຸ ພະວັງ ໄຊຍະມັງຄະລະ ອາຍຸ ວັນໂນ ສຸຂັງ ພະລັງ ໃຫ້ເຈົ້າມີເດຊານຸພາບ ຜາບແພ້ຂ້າເສິກສັດຕູ ໃຫ້ຫາຍພະຍາດທີໂຣຄາ ຂໍໃຫ້ມີອາຍຸໝັ້ນຍືນ ຮ້ອຍຊາວພູະວັດສາ ຂໍໃຫ້ມີພະຫຍາປັນຍາ ດັ່ງເຈົ້າມະໂຫສົດ ຂໍໃຫ້ມີໃຈອົດດັ່ງພູະເຈົ້າເຕມີ ຄະເຕສິ ກິງກະຣະນັງ ອະຫັງ ປິຕັງ ຊານາມິ ນິບພານະ ປັດຈະໂຍ ໂຫຕຸ ໆ

ພິທີສູ່ຂັວນເຂົ້າຂື້ນເລົ້າ

ເມື່ອຂົນເຂົ້າຂື້ນເລົ້າເສັດແລ້ວ ປະເພນີບູຮານຖືເອົາເດືອນ 3 ຂື້ນ 3 ຄ່ຳ ເປັນວັນປອດໄພແລະເປັນສີຣິມຸງຄຸນ ສຸພະຣິກອັນດີ ຖ້າບໍ່ທັນຈະທຳວັນໃດກໍໄດ້ ແລ້ວແຕ່ຄວາມສະດວກ.

ຄຳສູ່ຂັວນເຂົ້າຂື້ນເລົ້າ

* ສິ ສິ ມື້ນີ້ແມ່ນມື້ດີ ສິ ສິ ປີນີ້ແມ່ນປີເຮົາ ປູ່ພູະເຈົ້າໃຫ້ຂ້ອຍຄູນຂັວນ ກໍວ່າດີມື້ນີ້ວັນນີ້ ໝໍ່ສ້າງໆໄຮ່ໄດ້ເຂົ້າຮວງໜາ ກໍວ່າດີມື້ນີ້ວັນນີ້, ໝໍ່ສ້າງນາໄດ້ເຂົ້າຮວງກ້ອນ ກໍວ່າດີມື້ນີ້ວັນນີ້, ເອົາບ່າວເຂົ້າຮຽງສາວ ກໍວ່າດີມື້ນີ້ວັນນີ້, ຟັນຕາວໃຫ້ຜາບແພ້ ກໍວ່າດີມື້ນີ້ວັນນີ້, ເອົາຊ້າງເຂົ້າມາໂຮງ ກໍວ່າດີມື້ນີ້ວັນນີ້, ທ້າວບຸນເຮືອງຂື້ນຜາສາດ ກໍວ່າດີມື້ນີ້ວັນນີ້, ຜູ້ສະຫລາດເຂົ້າມາຟັງທັມ ກໍວ່າດີມື້ນີ້ວັນນີ້, ເຂົາໄດ້ເງິນຄຳແສນ ກໍວ່າດີມື້ນີ້ວັນນີ້, ເຂົາປູກແຕງໃສ່ໄຮ່ ກໍວ່າດີມື້ນີ້ວັນນີ້, ລູກໄພ່ເຂົ້າມາເບີກບາສີ ກໍວ່າດີມື້ນີ້ວັນນີ້, ເສດຖີເຂົ້າມາເບີກເງິນຄຳ ກໍວ່າດີມື້ນີ້ວັນນີ້.

ສິ ສິ ມື້ນີ້ແມ່ນມື້ດີ ສິ ສິ ມື້ນີ້ແມ່ນມື້ອຸດຕະມະໂຊກ ໂຕກໃບນີ້ແມ່ນໂຕກໄມ້ຈັນ ຂັນໃບນີ້ແມ່ນຂັນໄມ້ແກ້ວ ຂຸນນາງດາແຕ່ງແລ້ວ ຈຶ່ງຍົກມາ ໄຊຍະຕຸ ພະວັງ ໄຊຍະມັງຄະລາ.

ໂອກາສະ ໆ ເຖິງກາລະດູເດືອນຫ້າ ຟ້າຮ້ອງເດືອນຫົກ ຝົນຕົກຟ້າຮ້ອງຮຳ ຝູງໝູ່ທາສາ ຝູງຊາວນາເຂົາຈຶ່ງຫາພ້າແລະຂວານ ດວງຄົມບາງເຂັ້ນໃໝ່ ແບກໄປໃສ່ປ່າໄມ້ໄພໜາ ຟັນພະນຽງໄຖ ຕັດກິກສິນ

ປາຍ ຮວຍເປືອກເສັຍເອົາແຕ່ແກ່ນ ປຸນແມ່ນແລ້ວຈິ່ງແບກເອົາມາ ເຖິງເຄຫາໄວ້ໃຕ້ລ່າງ ຝູງໝູ່ຊ່າງເຂົາຈິ່ງມາດູ ປຸນສິ່ວຮູເຂົ້າຮາກ ມີທັງງ້ອນໄຖໃຫ່ຍໃບພະນຽງໝາ ແບກໄປນາໄຮ່ແຮກ ມີທັງແອກອັນງໍ ພາດຄໍຄວາຍເຂົ້າເຊືອກຄ່ອງ ຄັນໄຖກ່ອງ ເພື່ອຄວາຍແຮງ ຖືກດິນແຂງເພື່ອຮາກໄມ້ ໄຖລອດໄວ້ຫລາຍວັນ ຄາດຢາຍໄປທົ່ວໄຮ່ ຫ່ວານເຂົ້າໃສ່ໃນຕົມ ພູະບໍຣິມຕົກແຕ່ງ ອອກຮາກແບ່ງເປັນໃບ ພ້ອມກັນໄປທິລກອອກ ຫາຕອກມາກົ້ວ ມີດປາດລົ້ວໃບເສັຍ ເຂົາຈິ່ງເອົາໄປປະສຸມຊຸມບຸມກັນໄວ້ ເຫລືອຫລາຍເດັຍຣະດາດ ຄາດແລ້ວຫາບກ້າມາດໍາປັກໃສ່ຕົມໃສ່ພິງ ກໍຈິ່ງໄດ້ຫລາຍຕົ້ນ ດໍາຫິນໜ້າແລະຫິນຫັລງໄປມາ ຕາມພາສາໄທນາແລະໄທນອກ ດໍາຂອກແລະດໍາກາງ ດໍາເຫິງນານກໍຈິ່ງໄດ້ຫລາຍຕົ້ນ ເຖິງຫລາຍເດືອນກໍຈິ່ງປົ່ງ ເຂົ້າປົ່ງແລ້ວກໍຈິ່ງຊິງໃບວິລິມພັດໃບຢູ່ຊີຊິ່ວ ໆ ຝູງເດັກນ້ອຍຈິ່ງໄປໄລ່ນົກຈິບແລະນົກຈາບ ຢ່າໃຫ້ມາກິນນອກ ຢ່າໃຫ້ມາກິນຂອກ ຢ່າໃຫ້ມາກິນກາງ ໝູກວາງຟານຢ່າໃຫ້ມາກິນໃກ້ ເຖິງເດືອນສິບສອງ ເຈົ້າຈິ່ງເຫັລອງກົກຫ່ງວ ເຂົາກ່ງວເຈົ້າຕາກໄວ້ຊູ່ໄຮ່ຊູ່ຄັນ ເຖິງສອງສາມວັນເຂົາຈິ່ງກູ້ແລ້ວ ຄັນຫລາວແກ້ວ ເຂົາຈິ່ງຫາບເຈົ້າໄປໃສ່ໄວ້ໃນລານ ເຂົາຈິ່ງກອງກັນຂຶ້ນ ເໝືອນດັ່ງກອງທາດ ຮອດມື້ອາດແລະວັນດີ ເຂົາຈິ່ງມ້າງເຈົ້າລົງມາ ຄ້ອນສັ້ນເຂົາຈັກຕີ ຄ້ອນຮີເຂົາຈັກຟາດ ເຂົາຈິ່ງເອົາເຈົ້າຕັ້ງໄວ້ໃນລານດູສະພາດ ເດັຍຣະດາດເຫລືອຫລາຍ ເຂົາຈິ່ງເອົາຄວາຍມາຫຍຸບຫຍ່ຳຍໍາຍີ ຜິງທຸລີກົ້ວໄງ່ ວຽນເບື້ອງຊ້າຍຄືຄິວ ວຽນເບື້ອງຂວາຄືຄ້ວາງ ມີເບື້ອງຊ້າຍຖືເຊືອກຄວາຍ ມີເບື້ອງຂວາຖືຂໍຄີ ຕີເຕາະແລະຕີຕ່ອຍ ຕີຄ່ອຍແລະຕີແຮງ ຕີປົ໊ກ ໆ ແລະຕີແປ໊ກ ໆ ຕີແຫລກແລ້ວຈິ່ງເອົາຄວາຍອອກເຂົາຈິ່ງບອກວ່າ ເຖົ້ານີ້ຈັກເປັນເຖົ້າໄຮ່ແລະພໍ່ນາ ເຂົາຈິ່ງໄປຫາ ໝານຄອມແລະໝານໄຜ່ ມາກວາດກ່ວຍເຟືອງເສັຍແລ້ວ ຈິ່ງບອກເມັຍແກ່ນແກ້ວອັນຢູ່ໃນເຮືອນ ໃຫ້ຫາເຫົ້າລາ ເຕົ້າຕອງຢາ ຫາລຸງຕາແລະພີ່ນ້ອງ ເອົາໃສ່ກ້ອງ ກອງຂຶ້ນໃຫ້ເປັນກອງ ແລ້ວຈິ່ງໄປຂີນຂວາຍຫາ ຄືລາແລະໝຽ້ງໝາກ ມີທັງຕອງອ່ອນແລະຕອງຂຽວ ມີທັງຍອດຄູນແລະຍອດຍໍ່ຂຽວອ່ອນ ມີທັງກະຈອນຈັບຄູ່ຫອມງາມ ຕາມພາສາຂອງໂລກ

ມີທັງໄກ່ຜູ້ໂອກບໍ່ຣະບວນ, ສາດສິນຄວນປູລາດ ມີທັງຂໍຄືອາດຄັນ ຫລາວ ປາຍແຫລມຍາວຊາກລາກ ມີທັງເສື້ອຜ້າອາດຊາວດີ, ມີທັງ ຫງຸນທອງສີຕິດໄຕ້ ມີທັງຝ້າຍອ່ອນໃຫ້ມຸງຄຸມ ມີທັງບຸງສີ່ໜ່ວຍ ຕັ້ງໄວ້ ສວຍລວຍເດັຍຣະດາດ, ຂັນໄຂ່ວຂ້ວງເຫລືອຕາ ແຫລວໜ້າງົວປັກໄວ້ ສີ່ແຈເລົ້າ, ດູເຮືອງງາມອີງອາດ ຈຶ່ງໄປອາຣາທະນາອາຈານຜູ້ສະ ຫລາດ ມານັ່ງສູດຖູນຂັວນ ວ່າ:

ສິ ສິ ມື້ນີ້ແມ່ນມື້ໝັ້ນ ໃຫ້ເຈົ້າໝັ້ນປານຫີນຜາແອ່ນ, ໃຫ້ເຈົ້າໝັ້ນ ປານແທ່ນຜາຈວງຜາຈັບ ໃຫ້ເຈົ້າໝັ້ນປານສັນເຂົາຫລວງໄກລາດ ໃຫ້ ເຈົ້າໝັ້ນປານອາກາດສູນຕາວັນ.

ວ່າ ມາເຢີຂັວນເຮີຍ!

ນາງເຂົ້າຈ້າວແລະເຂົ້າໜຽວ ກໍໃຫ້ມາມື້ນີ້ວັນນີ້ ຕົ້ນຂຽວ ໆ ເຂົ້າ ກ່ຳ ກໍໃຫ້ມາມື້ນີ້ວັນນີ້, ຕົ້ນຕ່ຳ ໆແມ່ນເຂົ້າໝາກເຂືອ ກໍໃຫ້ມາມື້ນີ້ວັນ ນີ້, ຮວງເຝືອແມ່ນເຂົ້າປ້ອງແອ້ວແລະເຂົ້າແຂ້ວງູ ຮວງຟູນັ້ນແມ່ນເຂົ້າ ປັດໜີ ຮວງຮີນັ້ນແມ່ນເຂົ້າອີ່ວນ້ອຍ ແລະເຂົ້າຂີ້ຄວາຍ ເມັດສວຍລວຍ ນັ້ນແມ່ນເຂົ້າຮວງຊ້າງ, ເມັດຂວງນັ້ນແມ່ນເຂົ້າລວດຫງຸນ ລາຍວຽນ ນັ້ນເຂົ້າໝາແຍ່ງ ເຂົາແບ່ງໄວ້ໃຫ້ໝູ່ໄທໄກ ກໍໃຫ້ມາມື້ນີ້ວັນນີ້, ເອົາແຕ່ ເຂົ້າກະເຊີນຮວງມຸ່ຍ ອຸຍທຸ່ຍນັ້ນແມ່ນເຂົ້າດໍແດງ ເມັດແດງນັ້ນແມ່ນ ເຂົ້າເລືອດແຮດ ເມັດແຈບນັ້ນແມ່ນເຂົ້າໜຍງເປັດ ເມັດຖີ່ນັ້ນແມ່ນ ເຂົ້າໝາກກອກ ເມັດນອກນັ້ນແມ່ນເຂົ້າມັນທອມ ກິນນົວນັ້ນແມ່ນເຂົ້າ ປາດ ສະພາດພ້ອມນັ້ນແມ່ນເຂົ້າໝາກໂພ ຫອມພາໂລນັ້ນແມ່ນເຂົ້າ ງວງຊ້າງເຕັມໄຮ່ ກໍໃຫ້ມາມື້ນີ້ວັນນີ້.

ວ່າ ມາເຢີຂັວນເຮີຍ !

ໃຫ້ເຈົ້າມາຈາກປາກມັ່ງຕົວຄຳລາຍ ໃຫ້ເຈົ້າມາຈາກປາກຄວາຍຕົວ ເຂົາງ້ອງ ໃຫ້ເຈົ້າມາຈາກປາກຊ້າງຕົວງາງີງ ໃຫ້ເຈົ້າມາຈາກ ປາກກວາງແລະກະຕ່າຍ ໃຫ້ເຈົ້າມາຈາກປາກຊ້າງຕົວພາຍວັນ ໃຫ້ ເຈົ້າມາຈາກປາກໝູຊັນແລະປາກປູຄາບ ໃຫ້ເຈົ້າມາຈາກປາກນົກຈິບ ແລະນົກຈາບ ຄາບເຈົ້າຄ່ວາບິນໄປ ໃຫ້ເຈົ້າມາຈາກປາກນົກເຂົາຂຽວ ຄາບເຈົ້າໄປຈັບຮຽວແລະປາຍພຸ່ມ ກໍໃຫ້ມາມື້ນີ້ວັນນີ້. ໃຫ້ເຈົ້າມາເຕັມ

ເຍັຍແລະເຕັມເລົ້າ ຄັນເຈົ້າມາຮອດແລ້ວ ໃຫ້ເຈົ້າມາຢູ່ສະຫັວດສະດີ ກິນສິບປີຢ່າໄດ້ບົກ ຈົກສິບປີຢ່າໄດ້ລົງ ວ່າມາເຢີຂັວນເຮີຍ!

ໃຫ້ເຈົ້າມາຈາກປາກມັ່ງຕົວຄຳແດງ ໃຫ້ເຈົ້າມາຈາກປາກແມງແຄງ ຕົວປີກອ້າ ກະຊ້າຂາດກະບຸງແຕງ ຄັນຫລາວແທງທັກຄາບ່າ ຂັວນເຈົ້າ ຢ່າຕົກໃຈເນີນາງເນີ, ຕົ້ນອ້ອຍລຳທີ່ຂາກໍໄດ້ມານີ້ແລ້ວ ອ້ອຍປາລຳທີ່ ແຄ່ງ ກໍໄດ້ມານີ້ແລ້ວ ຕົ້ນເຂົ້າແຂ່ງໃສ່ພາຂັວນ ກໍໄດ້ມານີ້ແລ້ວ, ມີທັງ ພູພັນແລະໝາກອ່ອນກໍໄດ້ມານີ້ແລ້ວ ມີທັງກະຈອນຈັບຄູ່ຫອມງາມ ຕາມພາສາຂອງໂລກ ມີທັງໄກ່ຜູ້ໂອກຕົວທີ່ນົກຍູງ ມີທັງໄກ່ຜູ້ສູງຕົວທີ່ ຫ່ານ ບິນຜ່ານຟ້າກ່າງກີ້ແຫລວມັນ ມີທັງເຜືອກຫົວຊັນ ມີທັງມັນຫົວ ຊ້ອງ ພີ່ນ້ອງແວນຫລາຍ ຕານາຍແວນມາກ

ວ່າ ມາເຢີຂັວນເຮີຍ!

ມາຢູ່ເລົ້າພົ້ນແຜ່ນສະນອນພຽງເຈົ້າເນີ, ເພິ່ນຕັກໄປຕຳເຈົ້າຢ່າໄດ້ ທັກ ສັກກະລັນຄົກມອງເຈົ້າຢ່າໄດ້ຟັງ ຖອກໃສ່ດົ້ງເຈົ້າຢ່າໄດ້ຟັງບິນໜີ ໃຫ້ເຈົ້າກິ້ງກັນມາເໝືອນດັ່ງພັນສາດ ໃຫ້ເຈົ້າກວາດກັນມາເໝືອນດັ່ງ ເກົ້າສາວໜຸ່ມ ໃຫ້ເຈົ້າຕຸ້ມກັນມາເໝືອນດັ່ງຕ່ອມເງິນລຽງ. ເມັດໜຶ່ງຕັກ ໄປທານທຸກຄ່ຳເຊົ້າເຫລືອຫລາຍ ເມັດໜຶ່ງຕັກໄປຊື້ຄວາຍຕົວເຂົາ ຊ້ອງ, ເມັດໜຶ່ງຕັກໄປຊື້ຄ້ອງເກົ້າກຳ, ເມັດໜຶ່ງຕັກໄປຊື້ຄຳໃຫ້ໄດ້ເກົ້າ ໝື່ນ, ເມັດໜຶ່ງຕັກໄປຊື້ເຂົ້າໃຫ້ໄດ້ເຂົ້າລ້ານໝື່ນມາເຍັຍ, ເມັດໜຶ່ງຕັກ ໄປສູ່ເມັຍໃຫ້ໄດ້ເມັຍມາຢູ່ເຮືອນຂາຍເຂົ້າ, ເມັດໜຶ່ງຕັກໄປເອົາຜູ້ເຖົ້າ ໃຫ້ມາເລົ່າຂາຍຂອງ ວ່າມາເຢີຂັວນເຮີຍ!

ເພິ່ນຕັກເຈົ້າໃສ່ດົ້ງ ຢ່າໄດ້ຟັງບິນໜີ ໃຫ້ເຈົ້າມາລ້ຽງຊີວິດອິນຊີ ຂອງຄົນທັງໂລກ ບໍຣິໂພກລ້ຽງພູະພຸດທະສາສະໜາທຸກຄ່ຳເຊົ້າ ຕາບຕໍ່ ເທົ່າຫ້າພັນພູະວັດສາ ພຸ້ນແດ່ກໍຂ້າເຖີ້ນ.

ອະຍັງ ໂພຊະນັງ ພີຊັງ ມະມະ ທະທະຍັງ ຊະຍະຕຸ ພະວັງ ຊະ ຍະມັງຄະລັງ ໄຊຍະມະຫາມຸງຄຸນ ອຸອະ ມຸມະ ມູນມາສວາຫົມ ໆ

ຄາຖາສູ່ຂວັນເລົ້າ

* ພຸດທັງ ສັດຕະຣະຕະນະປາກາຣັງ ສະຣະນັງ ຄັດສາມິ
ທັມມັງ ສັດຕະຣະຕະນະປາກາຣັງ ສະຣະນັງ ຄັດສາມິ
ສັງຄັງ ສັດຕະຣະຕະນະປາກາຣັງ ສະຣະນັງ ຄັດສາມິ.

ໂອມສິ ໆ ໄຊຍະມະຫາມຸງຄຸນເລີດລົ້ນ ເປັນວັນພົ້ນເພີ່ມເຫລືອຫລາຍ ຝູງຂ້າຈຶ່ງໄດ້ຂົນຂວາຍຫາມາຍັງເຄື່ອງບາຍສີ ສູ່ຂວັນເລົ້າ ຂວັນຍຸ້ງເຂົ້າແລະຂວັນເຍັຍ ເພື່ອຈັກປ້ອງກັນເສັຍເຊິ່ງອຸປັດຕິເຫດ ອາເພດເສື່ອມສູນຫາຍ ຂໍເຊີນເທບພະດາເຈົ້າທັງຫລາຍ ໃນບໍຣິເວນຂົງເຂດ ຈຶ່ງຊາບເຫດດ້ວຍທິບພະເນດແລະທິບພະໂສດທັງສອງ ຈຶ່ງມາຊ່ອຍປະຄັບປະຄອງ ຂວັນເຍັຍແລະຂວັນເລົ້າ ຂວັນຍຸ້ງເຂົ້າແລະຂວັນສາງ, ເພື່ອວ່າຈັກໄດ້ກິນໄດ້ທານເຜີຍແຜ່ ແກ່ພູະສັງຄະເຈົ້າແລະມວນຊົນ ອັນເປັນຜົນສິມປະໂຍກ ອຸດົມໂຊກວ່າວັນດີ ຂ້າຈຶ່ງທຳບາສີສູ່ຂວັນເລົ້າ ຂໍເຊີນເທບພະເຈົ້າຈຶ່ງໄດ້ຊ່ອຍອວຍພອນ ໃຫ້ເຈັຍຣະການສະຖາວອນວິລາດ ຢ່າໄດ້ບົກເປັນຫາດ ຢ່າໄດ້ຂາດເຂີນວັງ ສັບພະກາລັງ ຍັງເຕັມດີຄືເກົ່າ ກະທອດເລົ້າໄດ້ໂສກສ່ວນພໍດີ ພີ່ນ້ອງໄກແລ່ນມາຮອດມາຈອດແລ້ວອິ່ມໜຳສຳລານ ລ້ຽງຂ້ອຍຂ້າໄດ້ພໍພັນ.

ວ່າ ມາເຢີຂວັນເຮີຍ !

ຂວັນເສົາແລະຂວັນກະທອດ ປັດຂອດພ້ອມຂວັນແປແລະສະຍົວ ຂວັນຫົວໝູແລະອົກໄກ່ ຂວັນຝາແອ້ມໃສ່ທາເປືອະ ຂວັນກະດານປູແລະສີໜ້າ ທັງຂວັນທ້າຍາແລະຂວັນກ່ອນ ຢ່າໄດ້ຄືດອາວອນໂສກເສົ້າ ຈຶ່ງພ້ອມກັນມາຮັກສາເຂົ້າໃນເຍັຍ ຢ່າໃຫ້ເສັຍແກ່ໝູແລະໝູ່ປວກ ທັງປອບເປົ້າແລະໂພງຜີ ອັນອະລັດຊີທ່ຽວຂະໂມຍຍາມຄ່ຳ ຕະວັນຕົກຕ່ຳຂວັນເຂົ້າຈຶ່ງຮັກສາ ຢ່າໃຫ້ຄົນພານມາຂະໂມຍເອົາເຂົ້າ ຂໍໃຫ້ຂວັນແຈ່ມເຈົ້າຄູນເຂົ້າຢູ່ເຍັຍ ຂໍໃຫ້ຂວັນແຈ່ມເຈົ້າຄູນເກືອຢູ່ລ້າງ ຄືດັ່ງປວກຢູ່ພື້ນຄູນອຸ້ນເຮັດໂພນ ຂໍໃຫ້ຄູນກັນຂຶ້ນຄືເຂົາໄກລາດ ຄືດັ່ງຂວຍຕຸ່ມອຸ້ນ ຄູນຂຶ້ນໃຫ້ມັ່ງມູນ ຂໍໃຫ້ຄູນກັນຂຶ້ນຄືຂວຍມົດງ່າມ ຢ່າໄດ້ບົກຂາດແຫ້ງຄືແກ້ງທີ່ລຜີ. ແມ່ນວ່າເຂົາຕັກເຂົ້າມາຕຳມື້ຮ້ອຍຕ່າ ຂໍໃຫ້ເຕັມຢູ່

ເລືອຍຄືນຈໍ່ແມ່ທະເລ ຢ່າໄດ້ບົກຂາດແຫ້ງ ແລ້ງໄງ່ເປັນດົງ ຂໍໃຫ້ຍັງເຕັມເຍັຍຢ່າລົງບົກແຫ້ງ ຂໍໃຫ້ພາກັນຕຸ້ມຫັນຍາໃຫ້ເຕັມຢຸ້ງມ ຂໍໃຫ້ຂ້ອນເລົ້າຕຸ້ມເອົາເຂົ້າຢ່າໃຫ້ສູນ ພຸດທັງປິດ, ທັມມັງປິດ, ສັງຄັງປິດ, ພຸດທັງຮັກສາ, ທັມມັງຮັກສາ, ສັງຄັງຮັກສາ ຯ

<u>ຍັນຕິດປະຕູ ເລົ້າ, ຍຸ້ງ, ສາງ</u>

4	9	2
3	5	7
8	1	6

<u>ບົດປຸກເສກຍັນຕ໌</u>

ຈະຕຸໂຣ ນະວະໂມ ທະເວ ຈະ ຕີນີ ປັນຈະປີ ສັດຕະກາ ອັດຖະເອໂກ ພະໂວ ສັດຖາ ສັບພະສັດຕູ ວິນາດສັນຕິ ຯ

<u>ລາກເສັ້ນຍັນຕ໌ວ່າ :</u>

ຍັນຕັງ ສັນຕັງ ວິກລຶງຄະເລ: ເມື່ອລົງເລກເສັດແລ້ວ ເອົາຝາມືປິດທີ່ຍັນຕ໌ກິດໄວ້ແລ້ວ ຈື່ງວ່າຄາຖາປຸກເສດຍັນຕ໌ 7 ຄາບດີແລ ຯ

<u>ສູ່ຂ້ອນເຂົ້າໃນລານ</u>

ເມື່ອຂົນເຂົ້າຂຶ້ນລານແລ້ວ ເວລາປົງຈະຟາດ ຫືລ ຕີ ນວດ ເສັດແລ້ວກໍໄດ້ ແລ້ວແຕ່ສະດວກເອີ້ນວ່າ "ເອົາບຸນລານ" ຕາມທຳນຽມຕ້ອງນິມົນພູະສົງ 3-5-7-9 ຮູບ ມາສູດປະຣິດຕະມຸງຄຸນ ຕັກບາດສັນເຊົ້າ ແລ້ວສູ່ຂ້ອນເຂົ້າໃນລານຕໍ່ໄປ.

ຄຳສູ່ຂ້ວນເຂົ້າໃນລານ

* ໂອກາສະ ໆ ເຖິງກາລະດູເດືອນຫ້າ ຟ້າໃໝ່ເດືອນຫົກ ຝົນຕົກ ຟ້າຮ້ອງຮ່ຳ ທຸກຄ່ຳເຊົ້າຝູງໝູ່ຊາວນາ ຈິ່ງພາກັນສະແຫວງຫາ ຂວານ ເຂັ່ນໃໝ່ຄົມກ້າ ພ້າເຂັ່ນໃໝ່ດວງຄົມ ແບກເຂົ້າດົງຫາຟັນໄມ້ ເລີຍ ລວດໄດ້ໃບພະນຽງ ຕັດກົກຂາດສົບປາຍ ຖາກເປືອກເສັຍເອົາແຕ່ ແກ່ນ ປຸນແມ່ນແລ້ວຈິ່ງແບກມາ ຖົ້ມໄວ້ເຄຫາໃຕ້ລ່າງ ຝູງຊ່າງຈິ່ງມາດູ ມາປຸນຮູເຊົ້າງ້ອນ ຮາກໄຖໃຫ່ຍໃບພະນຽງໝາ ແລ້ວຈິ່ງແບກໄປນາ ໄຮ່ແຮກ ມີທັງແອກອັນງາ ພາດຄໍຄວາຍຄ້າງໄວ້ ມີທັງເຊືອກໄຖນາຄ່າວ ຈ່ອງ ໄຖຄ່ອງເພື່ອຄວາຍແຮງ ດິນແຂງເພື່ອຮາກໄມ້ ເລີຍລວດໄດ້ ຫລາຍວັນ ແລ້ວຂີດເປັນຖັນທົ່ວໄຮ່ ຫ່ວານເຂົ້າໃສ່ນາຕົມ ຟູລະບຸຣົມຕົກ ແຕ່ງ ເມັດເຂົ້າແບ່ງເປັນໃບ ຝູງຂ້າທັງຫລາຍຈິ່ງມວນກັນມາທົລກອອກ ເອົາຕອກມາກົ້ວ ບິດລົ້ວອົ້ວປາດໃບເສັຍ ເອົາມາຊຸມນຸມກັນເປັນຫ່ຍຸມ ດູມາກລົ້ນເຫືລອຫລາຍ ແລ້ວຈິ່ງຫາບໄປຍາຍດຳໃສ່ຕົມໃສ່ພົງໃຫ້ ເກີດເປັນຫລາຍຕົ້ນ ຫົນກົ້ນອອກລະເວລະວາ ຕາມພາສາໄທນາໄທ ນອກ ເດືອນສິບອອກເພັງແຮມ ເດືອນສິບເອັດສິບສອງແຖມລ່ວງແລ້ວ ເຂົ້າໃນນາເລີຍອອກຮວງໃຫ່ຍ ລົມພັດໃບຢູ່ຊິຊວດຊິຊ່າ ເດັກນ້ອຍດ່າ ນົກຈິບແລະນົກຈອກ ເຂົາບໍ່ໃຫ້ມາກິນຂອກແລະກິນກາງ ໝູກວາງ ຟານບໍ່ໃຫ້ມາກິນໃກ້ ເລີຍລວດໄດ້ຫລາຍວັນ ເຂົ້າແກ່ພັນໃບຫ່ຽວ ຝູງ ຂ້າທັງຫລາຍຈິ່ງມາກ່ຽວຕາກ ເດັຍຣະດາດປຸນເປືອງ ຍາຍເຟືອງໄປປູ ໄວ້ ເລີຍລວດໄດ້ສາມວັນ ຄັນຫລາວມາສອດຫາບ ໄປຮອດຣິມລານ ຝູງອາຈານຈິ່ງມາຕັ້ງກໍ່ ໄວ້ໃຫ້ເປັນລອມ ພ້ອມວັນດີຈິ່ງເອົາລົງມາ ຟາດໃສ່ກຸ້ມ ອຸ້ມລຸ້ມທໍ່ພູຜາ ຈິ່ງເອົາຄວາຍມາຫຍຽບຢ່ຳ ຂໍຄືຈິ່ງມາ ຟາດ ຫວນໝານກວາດໝົເສັຍ.

ວັນນີ້ແມ່ນວັນດີ ຝູງຂ້າທັງຫລາຍຈິ່ງມີໃຈຂົນຂວາຍຫາເຄື່ອງ ປູນ ພູແລະໝ້ຽງໝາກ ເຂົ້ານ້ຳມາກມູນມາ ມີທັງຫົວມັນແລະລູກໄມ້ ມີທັງ ເຫົ້ລາກ້ອງແກ້ວໃສ່ພາຂ້ວນ ມີທັງໝາກອະນັນຫລາຍຫໍ່ ຍອດກ້ວຍຊໍ່ ໃບຂຽວ ຄູນຍໍຮຽວອອກຍອດ ມີທັງໄຂ່ໜ່ວຍປອດຂັນສະຫລາ ມີທັງ

ປາແລະເຂົ້າຕົ້ມໃສ່ກ້ວຍ ມີທັງນ້ຳອ້ອຍຍ້ວຍເຂົ້າຄຸລິກາ ອາຈານທາ ຂຶ້ນຕັ້ງຮອງຮັບເຈົ້າແລ້ວ. ວັນນີ້ເປັນວັນດີພ້ອມພ່ຳ ວັນຄ່ຳວັນຄູນກໍວ່າ ແມ່ນມື້ນີ້ວັນນີ້, ພູະຍາວິທູນຂຶ້ນແທນພໍ່ ກໍວ່າແມ່ນມື້ນີ້ວັນນີ້, ຂ້ອນເຈົ້າ ເຂົ້າມາໂຮມ ກໍວ່າແມ່ນມື້ນີ້ວັນນີ້, ຂ້ອນເຈົ້າຢູ່ຈອມພູແລະໃນນ້ຳ ຢູ່ ປາກຖ້ຳແລະເມືອງຜີ ຢູ່ຄີຣີແລະປ່າຊ້າງ ຢູ່ດອຍກ້ວາງແລະຊຸມພູ ກໍ ໃຫ້ມາໂຮມສາ ມື້ນີ້ວັນນີ້.

ວ່າ ມາເຢີຂ້ອນເຮີຍ !

ມີທັງໄກ່ຜູ້ກຸ້ມແລະຜູ້ໂອກ ແຕ່ງໃສ່ໂຕກບໍຣະບວນ ມີທັງອາສະນະ ລາຍປູລາດໄວ້ ຜ້າກັ້ງອາດປູໄປ ຝ້າຍໄຊຍະມຸງຄຸນແລະນ້ຳເຕົ້າ ຕັ້ງ ເຂົ້າໄວ້ຮຽງກັນ ຈັດເປັນຖັນໄຂ່ວຂ້ວາງ ຕາແຫລວປ່ອງໜ້າງົວ ບໍ່ເມົາ ມືວປັກໄວ້ ຈັດໃຫ້ໄດ້ສີ່ແຈລານ ບໍ່ໃຫ້ນານໃນວັນນີ້ ມື້ນີ້ແມ່ນມື້ສົນ ວັນ ນີ້ແມ່ນວັນດີ ຈຶ່ງໄປເຊີນເມທີແລະນັກປູາດ ຂຶ້ນນັ່ງອາດຄູນຂ້ອນ ວ່າ ມາເຢີຂ້ອນເຮີຍ !

ຕົ້ນຂຸນນັ້ນເຂົ້າຈ້າວ ແກ່ຟ້າວນັ້ນເຂົ້າດໍ ຫອມສົມພໍເຂົ້າອີນ້ອຍ ຫອມຈ້ອຍໆເຂົ້າຈອມນາງ ເມັດບາງເຂົ້າອີເຕາະ ເງາະແງະເຂົ້າແຂ້ວ ງູ ໃບປູນັ້ນເຂົ້າລີ້ນນົກ ກົກຕ່ຳນັ້ນເຂົ້າເປ້ຍ ຖອກເຮືອນັ້ນແມ່ນເຂົ້າ ຂາວ ຮວງຍາວນັ້ນເຂົ້າເລືອດແຮດ ແຊດໆນັ້ນເຂົ້າໝາກທິ່ງ ປີ່ງສິ່ງນັ້ນ ເຂົ້າກາບລາຍ ເມັດຜາຍເຂົ້າໝາກກອກ ຊອກແຊກເຂົ້າລອດກວຽນ ງານສຽນລຽນເຂົ້າໝາແຫຍ່ງ ເມັດແບ່ງເຂົ້າຂີ້ກາ ເມັດໜາເຂົ້າກາບ ອ້ອຍ ເມັດນ້ອຍເຂົ້າໝາກໂພ ເມັດໂຕເຂົ້າຫາງຊ້າງ ເມັດຂ່ວຍຂ້ວາງ ເຂົ້າປ້ອງແຊງ ເມັດແດງເຂົ້າຮ້າວ ຮວງໃຫ່ຍລ້າວເຂົ້າໝາກເຂືອ ເມັດ ເຈືອເຂົ້າດ້າມພ້າ ແກ່ຊ້າເຂົ້າຂີ້ຕົມ ໃບສົມພົມເຂົ້າໝາກໝ້ອຍ ຮວງ ຊ້ວຍລ້ວຍເຂົ້ານາງເກົ້າ.

ເຂົ້າທັງຫລາຍຝູງນີ້ ຢ່າທີລກລີ້ນານວັນ ໃຫ້ພາກັນມາສາມື້ນີ້ວັນນີ້ ວ່າ ມາເຢີຂ້ອນເຮີຍ ! ກຸ່ງວເກາະຂາດກະເດັນຕົກ ກໍໃຫ້ມາ ຄັນຫລາວ ຕົກຄາບ່າ ກໍໃຫ້ມາ ນົກນ້ອຍຄາບບິນໜີ ກໍໃຫ້ມາ ນົກຈິບຄາບອອກ ນົກຈອກຄາບໜີ ນົກເປັດແລະຄັບແຄ ຄາບໄປກິນເທິງປາຍແກແລະ ປາຍເປົ້າ ກໍໃຫ້ມາສາມື້ນີ້ວັນນີ້, ນົກຈາບໂຕຂາເຫີລອງ ນົກຈິບເຟືອງ

ໂຕຂາກ່ານ ບິນຜ່ານຄາບໄປກິນແຈຮົ້ວແລະແຈນາ ກໍໃຫ້ມາສາມື້ນີ້ວັນນີ້. ຂວັນເຂົ້າຢູ່ປ່າຄາແລະປ່າແຝກ ຂວັນເຂົ້າແຮກຢູ່ກາງໜອງ ຂວັນເຂົ້າໜຽວຢູ່ດົງປ່າເປົ້າ ຂວັນເຂົ້າຈ້າວຢູ່ທ່ານ້ຳແລະວັງຫລວງ, ຂວັນເຂົ້າຢູ່ປາກກວາງແລະປາກມັ່ງ ກໍໃຫ້ມາສາມື້ນີ້ວັນນີ້ ຂ້ອຍຊິເຊີນຂວັນເຂົ້ານາໃຕ້ແລະນາເໜືອ ໃຫ້ໄຫລມາປານນ້ຳ ຂວັນເຂົ້າຢູ່ປາກຖ້ຳແລະຮູປູ ຂວັນເຂົ້າຢູ່ປາກໜູແລະກະຕ່າຍ ຂວັນເຂົ້າຢູ່ຝ່າຍໃຕ້ແລະແຈນາ ຂວັນເຂົ້າຢູ່ປາກກາແລະຮອກຈ້ອນ ກໍໃຫ້ມາສາມື້ນີ້ວັນນີ້ວ່າ ມາເຢີຂວັນເຮີຍ !

ເຈົ້າບໍ່ມາຄ້ອນສັ້ນເຂົາຊິຕີເຈົ້າແລ້ວ ຄ້ອນຮີເຂົາຊິຟາດເຈົ້າແລ້ວ ພັດດ້າມແກ້ວຂ້ອຍຊິວີປ່າຍເບື້ອງຊ້າຍໃຫ້ຂີ້ຜີ້ງໄງ່ປິ້ວໄປກາງນາ ວີເບື້ອງຂວາໃຫ້ກຸ້ມເຂົ້າທີ່ພູຜາ. ບັດນີ້ຂ້ອຍຊິເຊີນເອົາອ້າຍເຂົ້າເມົ້າຢູ່ຈອມປວກຫົວນາ ຂ້ອຍຈັກເຊີນເອົາທ້າວນາຄາຜູ້ຢູ່ແຄມນ້ຳ ໃຫ້ມາຊ່ອຍຄູນຊ່ອຍຍໍສາມື້ນີ້ວັນນີ້ ວ່າມາເຢີຂວັນເຮີຍ !

ຂ້ອຍຊິເຊີນເອົາຂວັນເຂົ້າຈ້າວມາໂຮມລານ ງົວຄວາຍກັດກິນຍອດ ຊ້າງມ້າຖອດກິນໃບກໍໃຫ້ມາສາມື້ນີ້ວັນນີ້, ໃຫ້ມາກ້ຽວກັນຢູ່ດັ່ງນາກກ້ຽວກັນ ໃຫ້ມາພັນກັນຢູ່ດັ່ງເກົ້າສາວໝ່ອມ ໃຫ້ມາຕ້ອມກັນຢູ່ມວນມາ ເອີ້ນເຈົ້າບໍ່ມາຄວາຍຊິລີງຍ່ອງຍີຜີ້ງ ນົກເຂົາຊິລີງສັບຕອດໃຫ້ເຈົ້າປັດຂອດກັນມາ ວ່າມາເຢີຂວັນເຮີຍ ! ໃຫ້ເຈົ້າອຸ້ມກັນມາຄືຂວຍຕຸ່ນ ຈຸ່ມພູ່ມດັ່ງກອງຊາຍ ໄຫລນອງມາຄືຊາຍໄຫລແລ້ງ ເປັນດັ່ງແກ້ງເມືອງຫລວງ ໄຫລນອງມາເປັນດັ່ງລົມຢູ່ເທິງອາກາດ ຂໍໃຫ້ເປັນດັ່ງນ້ຳຝົນຫຍາດຮາໍແຜ່ນທໍຣະນີ ກິນສິບປີຢ່າໃຫ້ບົກ ຈົກສິບປີຢ່າໃຫ້ລົງ.

ບັດນີ້ຂ້ອຍຊິເຊີນເອົາຂວັນເຂົ້າ ໃຫ້ເມືອຢູ່ເລົ້າພົ້ນແປ້ນ ທ້ຍາແຝກມຸງໜາ ເມືອຢູ່ເລົ້າພົ້ນແປ້ນທ້ຍາຄາມຸງຖີ່ ເມືອຢູ່ທີ່ອັນສະບາຍໃຫ້ເຈົ້າເມືອຈຳເລີນເຮືອງຮອດ ເດືອນສາມວັນມື້ປອດ ເຂົາຊິເອົາບຸງສອດຕັກລົງຕຳ ສັກກະລັນຄືກມອງ ເຈົ້າຢ່າໄດ້ຟື້ງ ຊິດໃສ່ດົ້ງເຈົ້າຢ່າໄດ້ປິ້ວໜີ, ເຂົາຕ່ອຍສາກເຈົ້າຢ່າໄດ້ຕົກໃຈ ເຂົາໄລ່ໄກ່ເຈົ້າຢ່າໄດ້ສະດຸ້ງ ເຂົ້າລີບກໍໃຫ້ເປັນເຂົ້າໝາກ ເຂົ້າກາກກໍໃຫ້ເປັນເຂົ້າສານ ຝູງຂ້າ

ທັງຫລາຍລັງງສາສະໜາພູະພຸດທະເຈົ້າ ຂໍໃຫ້ມີອາຍຸໝັ້ນຍືນທ່ຽງເທົ້າ ຮ້ອຍເອັດພັນພູະວັດສາ ກໍຂ້າເຖີ້ນ.

ໄຊຍະຕຸ ພະວັງ ໄຊຍະມັງຄະລະ ໄຊຍະ

ມະຫາມຸງຄຸນ ອຸອະ ມຸມະ ມູນມາ ສວາຫົມ ৴

ຄາໍສູ່ຂັວນລານ

* ໂອງກາຣ ພົມຖຸນາຖັງ ອຸປປັນນັງ ພຣີມມາສະຫະປະຕີນາມະ ອາທິກັບເປສຸ ອາຄະໂຕ ປັນຈະປະທຸມັງ ທິສວາ ນະໂມພຸດທາຍະ ວັນ ທະຕີ ສິດທິກິດຈັງ ສິດທິວາຈັງ ສິດທິກາຣິຍະ ຕະຖາຄະໂຕ ສິດທິເຕ ໄຊ ຊະໂຍນິດຈັງ ສັບພະກັມມັງ ປະສິດທິ ເມ.

ສີ ສີ ມື້ນີ້ແມ່ນມື້ສັນ ວັນນີ້ແມ່ນວັນໄຊກ ສຸກເສົາໂຍກເດດມຸງຄຸນ ອັນເປັນຜົນສົມປະໂຫຍກ ອຸດົມໄຊກວ່າຍາມດີ ຝູງຂ້າທັງຫລາຍຈຶ່ງ ພ້ອມກັນມາທຳພິທີສູ່ຂັວນລານແລະກຸ້ມເຂົ້າ ສູ່ຂັວນເລົ້າແລະຂັວນ ເຍັຍ ບໍ່ໃຫ້ເສັຍປະເພນີຮີດເກົ່າ ຈຶ່ງໄດ້ນິມົນພູະສັງຄະເຈົ້າຜູ້ມີສິລມີທັມ ເພື່ອກຸສົນມະຫາກັມ ການສະຫລອງສົມໂພດ ອັນຈັກໄດ້ສຳເລັດປະ ໂຫຍດ ບຸນຍະສົມພານ ຈຶ່ງໄດ້ສູ່ຂັວນລານອັນໃຫ່ຍກ້ວາງ ທຸງມດັ່ງພູະ ເກດແກ້ວ ຈຸນລະມະນີ ຄືດັ່ງລານພູະສົມະຫາໂພດ ອັນໃຫ້ສຳເລັດປະ ໂຫຍດແກ່ພູະໂພທິຍານ ເປັນຣົມມະນິຍະສະຖານອັນວິເສດ ທຽມດັ່ງ ລານບ່ອນພູະເຈົ້າຕັດເກດ ແທບຝັ່ງອະໂນມາ ຄືດັ່ງລານທີ່ພູະອົງຕຣັສ ເທດສະໜາ ທັມມະຈັກກັບປະວັດຕະນະສູດ ເປັນດັ່ງລານບ່ອນພູະ ເຈົ້າປະສູດໃນສວນລຸມພິນີ ເປັນດັ່ງລານພູະເຈດີຍ໌ ດອຍສິງຄຸດຕະ ຣາດ ເປັນທີ່ບັນຈຸອຸຣັງຄະທາດແທ່ງພູະສາສະດາ ຄືລານບ່ອນພູະສົງ ທຳສັງຄາຍະນາ ທັມວິໄນຄັ້ງກ່ອນ ປຽບດັ່ງລານບ່ອນພູະພຸດທະເຈົ້າ ຈະເຂົ້າສູ່ພູະນິບພານ ເປັນທີ່ໂມທະນາສາທຸການ ແຫ່ງເທວະດາທຸກ ໝູ່ ລານນີ້ເປັນອູ່ເຂົ້າແທ່ງພູະສັງຄະເຈົ້າ ແລະປວງຊົນ ເປັນທີ່ບຳເພັນ ຜົນແກ່ທັງມວນຝູງຂ້າ ຈຶ່ງໄດ້ພ້ອມກັນຈັດເສື້ອຜ້າແລະເຄື່ອງໄທຍະ ທານ ທັງຄາວຫວານແລະໝັ່ງງໝາກ ຖ້ວນທຸກພາກເຄື່ອງບູຊາ ທັງ

ເຫຼົ້າຢາ ໝູເຫັດເປັດໄກ່ ຕາມແຕ່ຈັກໄດ້ອັນເປັນເຄື່ອງສັງເວີຍ ມາເຍີຂ້ວນເຮີຍ ຂ້ວນລານແລະຂ້ວນເຂົ້າ ໃຫ້ພ້ອມກັນມາເຕົ້າຈູ່ມພູ່ມເຕັມສະຖານ ເພື່ອຈັກໄດ້ກິນທານ ທຳບຸນຕັກບາດ ແລ້ວຊິໄດ້ຫຍາດນ້ຳເຖິງແມ່ທໍຣະນີ ຢ່າໄດ້ມີຄາ ກິນແໜງຂິມຄຽດ ຢ່າຢູ່ຊ້າວັນນີ້ໃຫ້ດ່ວນມາ ໃຫ້ເຈົ້າມາໂຮມເຂົ້າໃນລານກ້ຽງອ່ອຍທ່ອຍ ເຂົາຫາກຕີຟາດເຂົ້າ ທິວເຈົ້າຢ່າກະເທືອນ ຢ່າໄດ້ເບືອນຂິມຄ້ອຍ ໃນມະໂນຄຶດຄຽດວ່າເຂົາບັງບຽດເຈົ້າ ເອົາຄ້ອນຟາດຕີ ຢ່າໄດ້ຕົກໃຈຢ້ານ ທະຍານໜີລີ້ຊ່ອນ ຂໍໃຫ້ເຮັວຮີບຮ້ອນ ຄືນທ້ອນທ່ຽວພະລັນ ເຊີນເຈົ້າຄືນມາເຕົ້າທັນຍາກຸ້ມໃຫ່ຍ ຂໍຈົ່ງມາຕ່ອມຕຸ້ມ ກອງເຂົ້າໃຫ້ໃຫ່ຍສູງ ແມ່ນວ່າທຳປີໜ້າ ສິບສອງວາຢ່າໄດ້ຂາດ ຄັນແມ່ນປີໜ້າພຸ້ນ ຊາວຫ້າຢ່າໄດ້ຄາ ຂໍໃຫ້ທັນຍາເຂົ້າໄຫລມາຄືນ້ຳທ່າ ຄືດັ່ງຝົນທ່າແກ້ວ ລິນເລື້ອຍບໍ່ຂາດສາຍ ນາທາມຂໍໃຫ້ງາມເຫືລອລ້ຳ ລຳສູງຕົ້ນໃຫ່ຍ ປາຍໄຜ່ຂໍໃຫ້ເອັ້ນວ່ານ້ອງ ຮວງເຂົ້າທີ່ຮີນ ໂອມທັນຍະ ອາຄັດ ສັບຕຸ ສວາຫົມ ໆ

ຄຳສູ່ຂ້ວນນາ

* ສູ໋ ສູ໋ ອາຈາຣິຍາເລີດລ້ຳ ສິດທິເດດລືຊາ ຂ້າຂໍອັງເຊີນເທບພະດາ ອັນຮັກສາພູມເຂດ ໃນປະເທດທິວໄຮ່ແລະປາຍນາ ອັນໄດ້ນາມສົມຍາ ວ່າຕາປູ່ແຮກ ເຊິ່ງຢູ່ໃນລະແວກເຂດແຄ້ວນແດນນາ ບັດນີ້ຝູງຂ້າໄດ້ພາກັນນຳເຄື່ອງກິຍາແລະໝ້ຽງໝາກ ເຂົ້າເຫົ້າລາຫລາກອາຫານທັງຄາວຫວານແລະເຄື່ອງສົ້ມ ເຂົ້າຕົ້ມກ້ວຍແລະແດກງາ ໄຫສຸຣາກັບໄກ່ກຸ້ມ ເປັນເຄື່ອງຕຸ້ມ ຕ່ອມເຂົ້າໂຮມຂ້ວນ ສັບພະສັນນິທຸກສິ່ງເພື່ອຈັກໄດ້ກະທຳມິ່ງສິ່ງຂ້ວນ ທັງນາເໜືອແລະນາໃຕ້ ນາໃກ້ແລະນາໄກ ທັງນາທາມແລະນາໂຄກ ນາໂສກແລະນາປີນາແຊງ ນາດອນແລະນາຊຸ່ມ ນາທົ່ງກ້ວາງຈຸເຂົ້າໄດ້ພໍພັນ ຄັນວ່າຝົນຕົກມາ ນາປີຢ່າໄດ້ຖ້ວມ ນາໂຄກຢ່າໄດ້ເຂີນ ໃຫ້ພໍດີພໍງາມເຂົ້າອ້ວນ ໃບກ່ອງຄ້ອມ ໝາກພົ້ວດົກໜາ ທັງຄູຄັນນາຢ່າໄດ້ຮົ່ງໄດ້ຂາດ ເດັຍຣະດາດ ນ້ຳທົ່ວເຕັມນາ ທັງປູປາໃຫ້ໄຫລມາບໍ່ຂາດ ເປັນດັ່ງສະອະໂນດາດຂອງທ້າວເວດສຸ

ວັນ ຝູງທັນຍາແລະເຂົ້າກ້າ ໃບກ່ອງຄ້ອມເທົ້າທົ່ວທົ່ງນາ ແຜ່ກິ່ງກ້ານສາຂາເຕັມໄປທົ່ວທີ່ງ ໃຫ້ມີແຕ່ເມັດຕິ່ງ ຕົ້ນອ້ວນລໍາສູງ ຮວງລະສອງສາມກະບຸງ ທົ່ງນາເໜືອແລະນາໃຕ້ ເພາະເພື່ອເທບພະໄທ້ ທ່ານຊ່ອຍອວຍພອນ ທົ່ງນາດອນ ນາທາມແລະນາໂຄກ ງາມລົ້ນໂລກກ່ວາເພິ່ນນາແຊງ ຢ່າໄດ້ກິນແໜງຂິນມາເຕັມເລົ້າ ນາເຂົ້າຈ້າວນັ້ນໃຫ້ໄດ້ເຕັມກວຽນ ນາເຂົ້າໜຽວນັ້ນໃຫ້ໄດ້ພັນເຫັ້ລມ ຄັນວ່າເຕັມຍຸ້ງແລ້ວຊິໄດ້ຮີບຍໍສາງ ເຂົ້າຂາວກາງ ໃຫ້ໄດ້ຟັນຍຸ້ງໃໝ່ ຊິໄດ້ຟັນຍຸ້ງໃສ່ນາແຊງແລະນາທາມ, ຕົ້ນຂາວງາມພໍປານວ່າຕົ້ນອ້ອຍ ໃຫ່ຍບໍ່ນ້ອຍ ພໍຖ້ວມປາຍຈານ ຕົ້ນເຂົ້າມານໃຫ່ຍສອງສາມອ້ອມ ໃບກ່ອງຄ້ອມດັ່ງໃບອ້ອຍແລະໃບເລົາ ຮວງເຂົ້າເບົາ ໃຫ້ຍາວໄດ້ພໍສອກ ຮວງເຂົ້າໜັກນັ້ນໃຫ້ໄດ້ສອກກໍາມາ ຝູງສັດສາງົວຄວາຍຢ່າໄດ້ມາກິນໃກ້ ຝູງບົ້ງໄຕ່ຢ່າໄດ້ມາຮາວີ ທັງສັດຕົວຮີແລະຕົວກ້ອມ ຕົວອ້ອມປ້ອມ ແມ່ນນົກຈາບຕົວຂາເຫຼືອງ ນົກຈິບເຟືອງຕົວຂາກ່ານ ຢ່າໄດ້ມາບິນຜ່ານກະທໍາອັນຕະລາຍ ສັດທັງຫລາຍມີໝູແລະກະຕ່າຍ ຢ່າໄດ້ມາທໍາຮ້າຍແກ່ເຂົ້າກ້າໃນນາ.

ພຸດໂທຮັກສາ, ທັມໂມຮັກສາ, ສັງໂຄຮັກສາ.

ຂະໂຄຂະຄັງ ປະຣິດສະຍັງ ສວາຫະ ໂອມກິນຈິ ຜູກຜິກແຜ້ວຜັດໂອມຕ່ອຍຕ້ອງຜູກແຂ້ວສັດຕູ ໂອມປະທະ ປະທະ ກະແຈບິດກົກກູຊິທັບໄວ້ ນະໂມພຸດທາຍະ ຈະພະກະສະ ນະມະພະທະ ຈັຂະ ທຸດຊະນະ ສັງສັກຄັງ ຣັຊຊະ ສາທຸ ສະມາຄະຕັງ ກະຣະປຸນຍະມະໂຫຣັດຕັງສະຣະນິດຈະມະນິດຈະຕັງ ໆ

<u>ສູ່ຂັວນງົວຄວາຍ</u>

ງົວຄວາຍ ເປັນສັດທີ່ມີຄຸນແກ່ຄົນມາກ ເມື່ອຈະລົງມືທໍານາຄັ້ງແຮກ ຫືລ ເລີກທໍານາແລ້ວ ເຈົ້າຂອງມັກສູ່ຂັວນໃຫ້ ເພື່ອສົ່ງເສີມສັດຂອງລ້ຽງໃຫ້ມີກໍາລັງໃຈດີຂຶ້ນ ພາຂັວນກໍເຮັດເໝືອນສູ່ຂັວນທໍາມະດາແຕ່ໃຫ້ມີເຂົ້າເປືອກ ຫັຍາອ່ອນ ເຊືອກ ສາລັບເຄື່ອງເຮັດນາ ແລະນໍ້າ

ອັບນ້ຳຫອມສຳລັບຫົດງົວຄວາຍ ເສັດແລ້ວຝ້າຍຜູກເຂົາທັງສອງ ອວຍໄຊໃຫ້ພອນ ແລະຂໍຂະມາໂທດມັນດ້ວຍ ແລ້ວປ່ອຍໄປ.

ຄຳສູ່ຂັວນງົວຄວາຍ

* ສິ ສິ ມື້ນີ້ແມ່ນມື້ດີ ສິ ສິ ມື້ນີ້ແມ່ນມື້ໝັ້ນ, ໝັ້ນໃຫ້ເຈົ້າໝັ້ນຍິ່ງກ່ວາກ້ອນຜາແອ່ນ ໝັ້ນໃຫ້ເຈົ້າໝັ້ນຍິ່ງກ່ວາແທ່ນຜາຈວງຜາຈັນ, ໝັ້ນໃຫ້ເຈົ້າໝັ້ນຍິ່ງກ່ວາພູເຂົາຫລວງໄກລາດ, ໝັ້ນໃຫ້ເຈົ້າໝັ້ນຍິ່ງກ່ວາສີລາອາດຫີນເພັດ, ເສັດມາເຈົ້າຢ່າໄດ້ຊ້າ ໃຫ້ເຈົ້າຕັ້ງໜ້າຊື່ໄປໄວໆ ເຈົ້າຢ່າໄດ້ມີໃຈໂກດກ້າ ຫຍາບຊ້າອວດສະຫາວ ຂ້ອຍມັກເຈົ້າຄືສາວມັກນ້ອງ ໄມ້ລ້ອງຄ້ອງເຕາະຕ່ອຍຕີໄປ ກູຊິແກ້ຊິປົດມື້ນີ້ວັນນີ້, ຂ້ອຍຈິ່ງສູ່ຂັວນຄວາຍທັງໝູ່ ປູ່ຍ່າແລະຫລານເຫລັນ ຕົວໃດເຂັນຫລາຍໃຫ້ເຈົ້າແພ່ພືນເມືອໜ້າ ເຈົ້າກິນຫຍ້າເຈົ້າຢ່າໄດ້ເຂົ້າສວນ ໃຫ້ເຈົ້າຊວນກັນມາແຕ່ນາຮອດບ້ານ ໃຫ້ເຈົ້າອວນກັນມາຢູ່ແທ່ລງໃຕ້ລ່າງຮຽງເສົາ ບ່ອນຂ້ອຍຊິຜູກເຈົ້າໄວ້ ໃຫ້ເຈົ້າໄດ້ລູກເຕົ້ານ້ອຍອ່ອນພໍພັນ.

ມື້ນີ້ແມ່ນມື້ສັນ ວັນນີ້ແມ່ນວັນດີ ຂ້ອຍຈິ່ງສູ່ຂັວນຄວາຍບັກຄຳຕົວຄຸ້ນເຊືອກ ອີເຜືອກຕົວບຸນມີ ອີເຂົາປີຕົວບຸນກ້ວາງ ຂ້ອຍຈິ່ງເອົາເຈົ້າເມືອຢູ່ສ້າງກະທຳການ ມີລູກຫລານແລະລູກນ້ອຍ ແລ່ນອ່ອມອ້ອຍແອ່ວກິນນົມ ທົມໆ ໃຈຈັກຂາດ ນ້ຳຕາຢາດໄຫລຕົກ ເຈົ້າຈິ່ງຄະນຶງໃນອົກໃນທອງຈັກແຕກທະລາຍ ຢູ່ເທິງຫລາຍສວາຍພໍງາຍແດດແກ່ກ້າ ເຈົ້າຈິ່ງຕ່າວໜ້າຄືນມາ ຂ້ອຍຈິ່ງມີໃຈຄຽດຄ້ອຍ ຂ້ອຍຈິ່ງບາຍເອົາຄ້ອນນ້ອຍໆ ເຕາະຕ່ອຍຕີໄປ ໄປບໍ່ດີຂ້ອຍຈິ່ງໄດ້ດ່າ ໄປຊ້າຂ້ອຍຈິ່ງໄດ້ໄລ່ເຮົ້າໄວ ເຈົ້າຈິ່ງໄປຊິຊຸດ ເຈົ້າຈິ່ງໄປຊິຊາດ ຊິດຄ່າວຂາດເຊໄປ ປົດໄຖເຊົາຂ້ອຍກໍໄດ້ຕີຊ້ຳ ມາເຢີຂັວນເຮີຍ !

ຂັວນເຈົ້າໄປກິນຫຍ້າຢູ່ປ່າກາງດົງ ກໍໃຫ້ມາສາມື້ນີ້ວັນນີ້, ຂັວນເຈົ້າໄປເຊຊິງຢູ່ໃນປ່າ ກໍໃຫ້ມາສາມື້ນີ້ວັນນີ້, ຂັວນເຈົ້າໄປແມບນ້ຳຢູ່ໜອງແໜນ ລີ້ເຫີລອກ ກໍໃຫ້ມາສາມື້ນີ້ວັນນີ້ ມາເຢີຂັວນເຮີຍ ! ເຈົ້າຢ່າໄດ້ຕົກສະທ້ອນຮ້ອນໃຈກົວຂ້ອຍເນີ ຝົນຕົກຟ້າຮ່ຳຮ້ອງໃຫ້ເຈົ້າຕັ້ງໜ້າຕໍ່

ທາງມາ ດູສອງຕາງາມລະຫ້ອຍ ກັບທັງຂ້ວນລູກອ່ອນນ້ອຍ ແລ່ນອ່ອມອ້ອຍນຳແມ່ຢູ່ລີລາ ໃຫ້ເຈົ້າມາກິນຫຍ້າແຝກໃບໜາ ຂ້ອຍກໍໄດ້ມາແລ້ວ, ໃຫ້ເຈົ້າມາກິນຫຍ້າຄາໃບຂຽວອ່ອນ ຂ້ອຍກໍໄດ້ມາແລ້ວ, ຫຍ້າປ້ອງແອ້ວເຫຼືອຫລາຍ ຂ້ອຍກໍໄດ້ມາແລ້ວ, ຫຍ້າຫວາຍກິນແຊບຊ້ອຍຂ້ອຍກໍໄດ້ມາແລ້ວ, ໃບແລບນ້ອຍນັ້ນແມ່ນຫຍ້າໄຊ ຂ້ອຍກໍໄດ້ມາແລ້ວ, ໃບສວຍລວຍຍອດກ້ວຍຍອດອ້ອຍ ຂ້ອຍກໍໄດ້ມາພ້ອມ, ມາຕັ້ງລ້ອມພາຂ້ວນຢູ່ສວຍລວຍ ມັກອັນໃດໃຫ້ເຈົ້າກິນອັນນັ້ນ ມາເຍີຂ້ວນເຮີຍ !

ຕົວໃດບໍ່ມາເສືອເຫຼືອງມັນຊິນຳໄປຂ້າສູເຈົ້າແລ້ວ ມາເຍີຂ້ວນເຮີຍ ! ຕົວໃດບໍ່ມາໝາປ່າມັນຊິນຳໄປກິນສູເຈົ້າແລ້ວ ມາເຍີຂ້ວນເຮີຍ! ຕົວໃດບໍ່ມາໝາໃນມັນຊິນຳໄປໄລ່ສູເຈົ້າແລ້ວ ມາຢູ່ຍືນຍາວໃນຫ້ອງໄມ້ລ້ອງຄ້ອງເຕາະຕ່ອຍຕີໄປ ຂ້ອຍຊິແກ້ຊິປົດມື້ນີ້ວັນນີ້ ຂ້ອຍຈັກຕ່ອຍທັງຫີ້ລມຈິມໄຖ ຂ້ອຍຈັກຕ່ອຍທັງໄລຈິມຄາດ ໃຫ້ເຈົ້າຍືນຍາວໝັ້ນທັນຕາຕັ້ງຢູ່ດີເຍີ ຢ່າໄດ້ຄວຍໂຄ່ນຄ້າງຄອນລົ້ມຫ່ລອນເສັຍ.

ມະຫິງສາ ໂຄນາ ໄຊຍະຕຸ ພະວັງ ໄຊຍະມັງຄະລັງ ສະຕະວັດສະທີຄາຍຸໂກ ໂຫຕຸ ດັ່ງນີ້ ກໍຂ້າເຖີ້ນ ໆ

ຄຳສູ່ຂ້ວນງົວຄວາຍ
(ອີກແບບໜຶ່ງ)

* ສີ ສີ ສິດທີພູະພອນ ບ່ວອນອະຕິເຣກ ຂ້າຈະທຳຂ້ວນຄວາຍເອກມະຫິງສາ ວັນນີ້ເປັນວັນອຸດທັງ ຣາຊະໂຊກ ຂ້າຈຶ່ງຫາຫຍ້າໄວ້ໃສ່ໂຕກຕັ້ງໄວ້ສອນລອນ ເພື່ອຈັກໃຫ້ສິນໃຫ້ພອນແກ່ຄວາຍຕົວກ້າ ອັນເກີດແຕ່ຕະກູນມະຫິງສາອາດຕົວດີ ອັນມີກຳລັງດັ່ງຄວາຍທໍຣະພີ ຕົວຣິບສັງຄິບ ມີກຳລັງຖີບບໍ່ຮູ້ທີນ ມີກຳລັງທີນບໍ່ຮູ້ຖອຍ ແມ່ນວ່າຕົວເຈົ້ານ້ອຍກໍຫາກມີກຳລັງຫລາຍ ທຳງານຕັ້ງແຕ່ເຊົ້າຕະຫລອດສວຍເຖິງຄ່ຳ ແຮງບໍ່ຕົກຕ່ຳຍັງຄືງ ແຮງບໍ່ມີຍາມລົງເທັຍຣະຄາເຖິງເຖົ້າ ຂ້າຂໍເຊີນເທບພະເຈົ້າຈຶ່ງມາຊ່ອຍອວຍພອນ ໃຫ້ມະຫິງສາກາສອນຕົນອາດໃຫ້ເປັນຕົວສາມາດຫຽມພໍທໍຣະພີ ມີກຳລັງດັ່ງພູະຍາຣາຊະສີຕົວອົງ

ອາດ ຫງຸມດັ່ງກຸນຊະຣາດຕົວຊີ່ເອຣາວັນ ອັນມີໃນເມືອງສະຫ້ວນ ເທວະໂລກ ເຊີນຂ້ອນເຈົ້າມາກິນນ້ຳໃນໂຕກໄຕຄຳ ໃຫ້ເຈົ້າມີກຳລັງດັ່ງ ທະນຸມານສິດທິເດດ ດັ່ງມ້າທ້າວກາລະເກດ ຂີ່ເຣອມານ ດັ່ງສັງຄືບຕົວ ທານທັກສັດແກ້ວ ດັ່ງອິງຄິດຕົວເລີດແລ້ວຖວາຍສານ ໃຫ້ເຈົ້າມີບໍຣິ ວານນັບດ້ວຍຮ້ອຍ ທັງຄວາຍນ້ອຍແລະເຖິກຖ່າວຊາມຄະນອງ ໃຫ້ ເຈົ້າຮູ້ຈັກບຸນຄຸນແກ່ເຈົ້າຂອງຜູ້ລ້ຽງ ເຖິງຍາມທ່ຽງໃຫ້ເຈົ້າເຂົ້າມາເຮືອນ ເດືອນດຳຕົກໃຫ້ເຈົ້າຮູ້ຈັກຄອກ ໃຫ້ເຈົ້າຮູ້ຈັກປອກແລະເຊືອກປ່ານປໍ ໃຫ້ຮູ້ຈັກເຊືອກພານຄໍແລະຄ່າວຈ່ອງ ທັງເຊືອກຄ້ອງແລະເຊືອກໄຖ ຍາມຫງຸມໄປໃຫ້ເຈົ້າຮູ້ຈັກຮ່ອງ ໃຫ້ເຈົ້າເດີນຄ່ອງ ໆ ຢ່າໄດ້ຢ່າງໄວ ຫລາຍ ປະຣິຍາຍຍາມໄຖຕຳຮາກໄມ້ ໄປບໍ່ໄດ້ໃຫ້ເຈົ້າຄ່ອຍຖອຍຄືນ ເຈົ້າຢ່າບືນຄ່າວໄຖແລະໜັງຕ່ອງແອກ ໝາກສິບກໍຈັກແຕກຍ່ຳຍີຜີງ ໃຫ້ເຈົ້າຈິງໃຈຫງຸມໄຖລາກແກ່ ເຂົ້າກໍຈັກໄດ້ແພ່ເປັນໝາກເປັນຮວງ ເຈົ້າຈິ່ງອຸດສ່າກະທຳພຽນ ຢ່າກຽດຄ້ານ ເຈົ້າຢ່າໄດ້ຂີ້ຢ້ານມັກຕື່ນຕົກ ໃຈ ໄຊຍະຕຸພະວັງ ເຈົ້າຈິ່ງມີໄຊຍັງທຸກເມື່ອ ຢ່າໄດ້ຮູ້ຈັກເບື່ອໃນການ ງານ ຝູງໄພພານຢ່າໄດ້ມາບັງບຽດ ໃຫ້ເຈົ້າຮູ້ຈັກເໝືອດເຊືອກ ອັນຈັກ ຂ້ອງຫັລກຕໍ ແມ່ນວ່າເຊືອກທໍ່ເຊືອກໄກ່ເຈົ້າຢ່າໄດ້ຮູດຂາດ ໃຫ້ປາສະ ຈາກໂຣຄທຸກສິ່ງມາ ໆ <u>ມາເຢີຂ້ອນເຮີຍ !</u>

ຂ້ອນມະຫິງສາເຊື້ອ ຄວາຍທໍແຮມທ່າ ຢ່າໄປຫງຸມໝູ່ຮ້າ ຊິລືມ ບ້ານເກົ່າຫັລງ ຢ່າໄດ້ຫີລງນອນນ້ຳ ວັງເວີນຫ້ວຍຫາດ ຢ່າໄດ້ຫີລງ ແມບນ້ຳວັງກ້ວາງອາບເຢັນ ຢ່າໄດ້ຫີລງໄປທົ້ລນກິນກຽງໃນປ່າ ຢ່າໄປ ແກມໝູ່ຮ້າກິນຫ້ຍາຢູ່ໄພ ໃຫ້ເຈົ້າມາຢູ່ຢັ້ງເນົາຄອກດອມຄີນ ຊິບໍ່ມີອັນ ຕະຣາຍບຽດບຽນຕົວເຈົ້າ ມາທັງຂ້ອນເຂົາພ້ອມ ຂ້ອນຫູທັງຄູ່ ຈະຕຸ ບາດຢ່າຊັກຊ້າ ໃຫ້ມາພ້ອມພ່ຳກັນ ນັງຄັລພົ້ວຟອຍຫາງກ້ວດແກ່ວງ ໃຫ້ເຈົ້າມາໄລ່ຮື້ນ ຍຸງພ້ອມເຫົ້ລອກຕອມ ຈັກຊຸກ້ຳຕາດຳທັງຄູ່ ຂ້ອນ ປາກພ້ອມ ໃຫ້ມານ້ອມຕົ່ກຽງ ຊິວຫາລີ້ນກ້ວດຂອງໃສ່ປາກ ຢ່າໄດ້ຄຶດ ຍາກງໍ້ ຂ້ອນເຈົ້າໃຫ້ຮີບມາ ໃຫ້ເຈົ້າມາກິນ ຫ້ຍາຫວາຍຄານໍາໝູ່ ຂ້ອນ ຢ່າໄດ້ຢູ່ຊ້າດຽວນີ້ໃຫ້ຮີບມາ ຕາມບາດພູຄະຄາຖາສັບພັນຍູກ່າວໄວ້ວ່າ

ຍະຖາ ວາຣິວະໂຫ ປຸໂຣ ສັບພະກາລັງ ນະຂີຍະຕີ ມະຫິງສາໂຄນາ ອາຄັດສາທີ ດັ່ງນີ້ເປັນເຄົ້າ ກໍຂ້າແລ ๆ

ສູ່ຂວັນກວຽນ

ກວຽນ ເປັນພາຫະນະຮັບໃຊ້ສໍາລັບລາກເຂັນ ການສູ່ຂວັນກວຽນກໍເພື່ອໃຫ້ເປັນສີຣິມຸງຄຸນ ແລະສອນໃຫ້ເຈົ້າຂອງຮູ້ຈັກໃຊ້ກວຽນໃຫ້ເປັນປະໂຫຍດ ຄໍາສູ່ຂວັນມີດັ່ງຕໍ່ໄປນີ້ :

ຄໍາສູ່ຂວັນກວຽນ-ຣົຖ

* ໂອກາສະ ໆ ເຖິງກາລະດູດີຖືປີໃໝ່ ເຈົ້າຜູ້ໃຫ່ຍຖ່າຍຣາສີ ພູະພູມີສຸຣິເຍດ ເຖິງລະດູເຂດເດືອນສາມ ນາງສິມງາມກວຽນແກ້ວ ອາບນໍ້າແລ້ວເຈົ້າຈຶ່ງລາພອນ ລົມພັດວອນແຫ້ງແລ້ວ ເຂົາຈຶ່ງເອົາພາຊະນະແກ້ວເບີກຄູນຂວັນ ມີທັງພູພັນແລະໝາກຈີບ ທັງຜ້າຜ່ອນແລະໃບສີ ມີທັງຫວີແລະຕ້າງແກ້ວ ດູລວດແລ້ວກະຈົກແຍງ ມີທັງຂອງຫອມແລະແປ້ງປິ່ນ ດູເລີດລົ້ນຝ້າຍຜູກແຂນ ມີທັງແຫວນແລະສາຍສ້ອຍ ຝູງຕູຂ້ອຍຈຶ່ງຫາມາ ມີທັງບຸບຜາດວງດອກໄມ້ ມີທັງທຽນທູບໄຕ້ໃສ່ໃນພາ ມີທັງສຸຣາແລະໄກ່ຕົ້ມ ມີທັງຫວານແລະສົ້ມ ເຂົ້າຕົ້ມແລະເຜືອກມັນ ສັບພະສັນມີທຸກສິ່ງ ມີທັງກ້ວຍອ້ອຍມິ່ງ ນາ ໆ ມີຊູ່ອັນຈັດຫາມາສະພາດ ເຂົາຈຶ່ງໄປອາຣາທະນາອາຈານຜູ້ສະຫລາດ ມານັ່ງອາດຄູນຂວັນວ່າ ສີ ສີ ສິດທິພູະພອນ ມະຫາໄກສອນຫອມຮ່ວງເຮົ້າ ຂ້ອຍຈັກເຊີນຂວັນເຈົ້າກວຽນຄໍາ ທັງກົງກໍາແລະດຸມແອກ ທັງຫວກແບກແລະຄານຫັລງ ທັງປະທຸນແລະເຊືອກອ້ອງ ໝັງຜູກຄ້ອງຢູ່ຫົວກວຽນ ມາເຍີຂວັນເຮີຍ !

ຂວັນເຈົ້າໄປເຂັນໄມ້ໃນດົງເດີນຍາກ ກໍໃຫ້ມາສາມື້ນີ້ວັນນີ້, ຂວັນເຈົ້າໄປລາກໄມ້ດົງກ້ວາງປ່າໄພ ກໍໃຫ້ມາສາມື້ນີ້ວັນນີ້, ຂວັນເຈົ້າໄປເຂັນຫັຍາບະປ່າຮັງໄມ້ແຈ່ງແທ່ງ ກໍໃຫ້ມາສາມື້ນີ້ວັນນີ້, ຂວັນເຈົ້າໄປ

ຮັບຈ້າງຂົນເຂົ້າໃສ່ສາງ ຂ້ວນເຈົ້າໄປຮັບຈ້າງຂົນຫີນຊາຍແລະດິນຈີ່ ຂ້ວນເຈົ້າໄປຢູ່ລີ້ໃນຖ້ຳເຖື່ອນແຖວ ໃຫ້ເຈົ້າຄືນມາບ້ານສະຖານເຮົາ ເຄີຍຢູ່ ຢ່າໄປແກມໝູ່ໄມ້ເປັນເຫົ້າງາປົ່ງໃບ ຂ້ວນຫວກໃຫ້ມາຢູ່ຫວກທັງສອງ ຂ້ວນຄານໃຫ້ມາຢູ່ຄານລ່າງງ່າງ ຂ້ວນກົບໃຫ້ມາຢູ່ກົບເປັນວົງ ຂ້ວນກົງກຳໃຫ້ມາຢູ່ກຳນຳສຽບ, ຂ້ວນແປກໃຫ້ມາຢູ່ແປກທັງສອງ ຂ້ວນດຸມໃຫ້ມາຢູ່ດຸມລ້ອງຄ້ອງ ຢ່າໄດ້ຕ້ອງພະຍາດອັນໃດ ຂ້ວນເຈົ້າໄປແກ່ໄທແລະແກ່ເຂົ້າ ກໍໃຫ້ມາສາມື້ນີ້ວັນນີ້, ຂ້ວນເຈົ້າແກ່ເຂົ້າສິ່ງເລົ້າເຈັກ ແລະໄທລາວຍວນມອນ ກໍໃຫ້ມາສາມື້ນີ້ວັນນີ້, ສິ ສິ ມື້ນີ້ແມ່ນມື້ດີ ຂ້ອຍຈັກທຳບາສີກວຽນແກ້ວ ສູ່ຂ້ວນແລ້ວໃຫ້ເຈົ້າຄ້ຳຄູນເຮືອນ ເຖິງລະດູປີເດືອນຂວບເຂົ້າ ໃຫ້ເຈົ້າຮັກສາໄວ້ຍັງງົວແລະຄວາຍ ໃຫ້ຢູ່ສຸກສະບາຍບໍ່ຍາກ ໃຫ້ເຈົ້າມີອາຍຸໝັ້ນຍືນຍາວ ຝູງລາວໄທຈີນມາຫ່ຽວຈ້າງ ໃຫ້ເຈົ້າຄ່ອຍອົດທົນ ຫົນທາງຄິດເດີນຍາກ ຮາກໄມ້ໃຫ່ຍຕັນທາງ ຮາກໄມ້ບາງຂວາງໜ້າ ເຈົ້າຢ່າໄດ້ລື້ມທັນສະແດງ ໃຫ້ເຈົ້າມີກຳລັງແຮງດັ່ງຮາຊະຣິຖ ຄັນວ່າໄດ້ຂົນຂອງໜັກໃຫ້ເຈົ້າໄປຄ່ອຍ ໆ ຝູງເດັກນ້ອຍເຂົາຂີ່ໄປນຳ ເຂົາບໍ່ຮູ້ເກງຢຳເຈົ້າຢ່າໄດ້ຄຽດຄ້ອຍ ຝູງເດັກນ້ອຍເຈົ້າຢ່າຖືຊາ ຄົນທັງຫລາຍເຂົາມາຫ່ຽວຈ້າງ ໃຫ້ເຈົ້າຢູ່ສ້າງຫລາຍປີ ມີຣັດສະໝີຮຸ່ງສີເຮືອງຮຸ່ງ ຝູງຕູຂ້ອຍກໍໃຫ້ຢູ່ເຢັນໃຈ ຄວາມຈັງໄຮຢ່າໄດ້ມາບັງເກີດ ໃຫ້ເຈົ້າປະເສີດເໝືອນດັ່ງແກ້ວໄພທູນ ໃຫ້ເຈົ້າຄ້ຳຄູນເຮືອນເປັນດັ່ງແກ້ວທັມມະຣາດ ໃຫ້ເຈົ້າອົງອາດເໝືອນດັ່ງຣິຖເທບພະອິນທາ ມີກຳລັງວັງຊາດັ່ງພູະສັງຄົບ ໃຫ້ຣັບໄດ້ສົມດັ່ງໃຈໝາຍ ອັນຕະຣາຍຢ່າໄດ້ມາບັງເກີດ ໃຫ້ປະເສີດທຸກເມື່ອທຸກຍາມ ຕາມວາຣະພູະຄາຖາສັບພັນຍູກ່າວໄວ້ວ່າ ອາຍຸ ວັນໂນ ສຸຂັງພະລັງ ດັ່ງນີ້ກໍຂ້າເຖີ້ນ ๆ

ຄວາມສົມມາພໍ່ແມ່ເຈົ້າໂຄດລຸງຕາ

* ສິ ສິ ສິດທິພູະພອນ ໄກສອນທອມຮ່ວງເຮົ້າ ພູະເຈົ້າເກີດຍາມງາຍ ຝູງຂ້າທັງຫລາຍຂົນຂວາຍຫາຄັນທາແລະເຂົ້າຕອກ ດອກໄມ້ແລະທຽນສີ ດວງດີອັນປະເສີດ ເລີດລ້ຳກ່ວາດວງມາລາ ດອກຈູມຜາ

ບານແບ່ງສ້ອຍ ຫອມຄ້ອຍກິ່ນທຸກຍາມ ມີທັງດອກອາມພາມຢູ່ໃນເຖື່ອນ ບານລະເລື່ອນຢູ່ກາງໄພ ລົມພັດໃບເປືອງແກ່ວງ ແຕ່ງໃສ່ຂັນແລ້ວຈິ່ງຍໍມາ ມາສົມມາພໍ່ແມ່ແລະລຸງຕາ ຫລອນວ່າຫຍໍ້ໄປມາບໍ່ຄ່ອງ ໄດ້ຢື່ຢ່ອງເທິງຫົວ ເຈົ້າກູຕົກໃຈກົວຢ້ານສັ່ນ ໃຈສະບັ້ນຫ່ລາຫີລງຈິດ ພວກລູກຫລານໄດ້ກະທຳຜິດ ແລະບໍ່ຊອບ ໄດ້ຕອບຖ້ອຍແລະຖຽງຄວາມ ໄດ້ຖີ້ມບຸງກາຍນ້າ ໄດ້ຖີ້ມຊ້າກາຍຕາ ໄດ້ສະຫລ້າງພັ້ງພາດດ້ວຍຈິດໃຈແລະດ້ວຍຄວາມປາກເວົ້າອັນໃດອັນໜຶ່ງກໍດີ ຂໍໃຫ້ພໍ່ແລະແມ່ເຈົ້າໂຄດລຸງຕາ ຈົ່ງອະໂຫສິກຳບໍາເສັຍຍັງໂທດ ຢ່າໃຫ້ເປັນໂທດຕ້ອງຂ້ອງຢູ່ໃນວັດຕະສົງສານ ຂໍໃຫ້ພວກລູກຫລານທັງຫລາຍຈິ່ງໄດ້ເຖິງຄວາມສຸກ ເປັນທີ່ແລ້ວກໍຂ້າເຖິ້ນ ອາຍຸ ວັນໂນ ສຸຂັງ ພະລັງ ໆ

ຄວາມໃຫ້ພອນຄູ່ຜົວເມັຍມາສົມມາ

* ເຂືອທັງສອງ ສິຫຽນມາທໍ່ຫຸ້ມ ມີທັງເຂົ້າຕອກແລະດອກໄມ້ນຳມາ ມີທັງຄີລາແລະໝັ້ງໝາກ ສູເຈົ້າທາກແຕ່ງເປັນຂັນສົມມາ ຕາມພາສາວ່າຂ້ອຍເປັນແກ່ ເໝືອນພໍ່ແມ່ແລະລຸງຕາ ສອງໂສດາງາມທັງຄູ່ສະພູ່ໜ້າມີສີ ຂໍໃຫ້ສົມບັດມີຢ່າຂາດ ເສືອຜ້າອາດເຕັມຖົງ ເຂືອທັງສອງຖືຂັນທັງຄູ່ ງາມສະພູ່ເໝືອນດັ່ງແກ້ວມະນີ ຂໍໃຫ້ເຈົ້າເປັນຜົວຮັ່ງເມັຍມີນຳກັນສືບສ້າງ ໃຫ້ເຈົ້າໄດ້ຊ້າງມ້າຝູງໝູ່ງົວຄວາຍ ຝູງຕານາຍໃຫ້ໄດ້ເພິ່ງ ໃຫ້ເຈົ້າມີເຂົ້າຫລາຍເກົ່ງອາດຍາຈັກ ຕັກໄປກິນໄປທານຢ່າໄດ້ໝົດໄດ້ສ້ຽງ ລ້ຽງລູກເຕົ້າຢ່າໄດ້ຫລອດຕາຍເສັຍ ລ້ຽງລູກຍິງໃຫ້ເຈົ້າໄດ້ລ້ຽງຫລາຍ ລ້ຽງລູກຊາຍໃຫ້ເຈົ້າໄດ້ລ້ຽງງ່າຍ ໃຫ້ເຂືອເຈົ້າທັງສອງຢູ່ທ່າງຈ່າຍແຕ່ແກ້ວແຫວນເງິນຄຳ ລ້ຽງງົວຄວາຍໃຫ້ເຈົ້າໄດ້ເຕັມກ້ອງໃຕ້ລ່າງ ໃຫ້ເຈົ້າມີເໝືອນດັ່ງເສດຖີໃຫຍ່ເມືອງອິນເມືອງພົມ ຂອງເຈົ້າມີໃຫ້ໝັ້ນທ່ຽງ ຄັນເຈົ້າໄປຄ້າໃຫ້ໄດ້ຊ້າງມ້າໝູ່ເງິນຄຳກີ ໄຫລມາກອງເຈົ້າເນີ ເຂືອເຈົ້າທັງສອງລ້ຽງລູກເຕົ້າໃຫ້ໄດ້ຜູ້ປະເສີດກວ່າເພິ່ນທັງເມືອງ ໃຫ້ຂອງເຈົ້າເຮືອງໄຫລນອງມາທົ່ວເທົ້າ ໃຫ້ອາຍຸເຈົ້າທັງສອງໄດ້ຮ້ອຍຊວບເຂົ້າພັນປີ ຜູ້ທີ່ລັກແລ່ນມາໃຫ້ ຜູ້ໃບ້ແລ່ນມາປັນ ຜູ້ບໍ່ທັນ

ໃຫ້ນຳເອົາມາສິ່ງ ເຈົ້າເຮັດພຽງຕີນໃຫ້ຂຶ້ນພຽງຕາ ເຈົ້າເຮັດພຽງຕາໃຫ້ຂຶ້ນພຽງເກົ້າ ໃຫ້ໄດ້ເປັນເຈົ້ານັ່ງສົມບັດພໍ່ທ້ອນ ອາຍຸ ວັນໂນ ສຸຂັງ ພະລັງ ໆ

ຄວາມໃຫ້ພອນລູກຫລານ ເອົາຜ້າແພມາສົມມາ

* ສູເຈົ້າທັງຫລາຍສິທຽນມາທໍ່ຫຸ້ມ ມີທັງເຂົ້າຕອກດອກໄມ້ໄດ້ນຳມາ ມີທັງເຄື່ອງຄີລາແລະໝ້ຽງໝາກ ສູເຈົ້າຫາກແຕ່ງເປັນຂັນສົມມາ ຕາມພາສາວ່າຂ້ອຍເປັນແກ່ ເໝືອນພໍ່ແມ່ແລະລຸງຕາ ເຈົ້າທັງຫລາຍມີສັດທາແຜ່ກ້ວາງ ສູເຈົ້າເປັນຫ່ວງຢ້ານມີບາບ ມີກັມ ເຈົ້າຈິ່ງເອົາຜົນທານຕ່າງໆ ມີຫລາຍຢ່າງຜ້າຜືນແພວາ ນຳເອົາມາສົມມາຕູຂ້ອຍຕາມໃຈນ້ອຍວ່າຢາກມົ້ມບາບກັມ ຂໍໃຫ້ຄຸນພຸທທັມກູນາເຍື້ອນໂຜດ ຂໍໃຫ້ເປັນປະໂຫຍດດ້ວຍເຄື່ອງສົມມາ ຂໍໃຫ້ຄຸນປີຕາມານດາພໍ່ແມ່ ຄຸນເຖົ້າຄຸນແກ່ຄຸນສິນຄຸນທັມ ນຳເອົາເສັຍປາປັງຍັງບາບ ຢ່າໃຫ້ສູເຈົ້າໄດ້ເປັນຄົນບາບຢູ່ໃນໂລກສົງສານ ຂໍໃຫ້ສູເຈົ້າທັງຫລາຍໄດ້ກິນທານຖືຄອງຕັກບາດ ທຸກຕົນທຸກຄົນ ກໍຂ້າເຖີ້ນ ອາຍຸ ວັນໂນ ສຸຂັງ ພະລັງ ໆ

ອີກແບບໜຶ່ງ

* ບັດນີ້ຂ້ອຍຊິແຖມພອນໃຫ້ ມີໄຊສິດທິໂຊກ ຂໍໃຫ້ບຸນມາກລົ້ນສິດທິເດດລືຊາ ນາໂຖງເຖິງຍອດຍານດວງແກ້ວ ສະຫັວດສະດີພ້ອມໃນນະຄອນຕຸ້ມໄພ່ ມະນຸດໃຕ້ລຸ່ມຟ້າໃຫ້ລືເທົ້າທົ່ວແດນ ຝູງໄພ່ນ້ອຍໃຫໄດ້ເພິ່ງປາຣະມີ ຍິງຊາຍໃນຊົມພູໃຫ້ຂາບທູນປະນົມໄຫ້ວ ອັນວ່າເງິນຄຳແກ້ວໃຫ້ໄຫລເຂົ້າມາໂຮມ ໃນເຮືອນຊານຊູ່ວັນເລິງເລື້ອຍ ກັບທັງແກ້ວຄ່າລ້ານໃຫ້ໄຫລເຂົ້າຮ່ວມໂຮງ ໃຫ້ມີແສງໃສເຫຼື້ອມໃນໂຮງຢ່າໄດ້ຂາດ ຂໍໃຫ້ຣາຊະເຈົ້າຈອມເກດເກສາ ຈິ່ງໄດ້ເທັຍຣະຄາຄິງ ຢູ່

ຍືນຍາວໝັ້ນ ເຖິງຫ້າພັນປີໄດ້ ຄອງເມືອງທິດສະຣາດ ຂໍໃຫ້ຣາຊະເຈົ້າ
ບຸນກ້ວາງໆຄ່ອຍຢູ່ດີແດ່ທ້ອນ ອາຍຸວັນໂນ ສຸຂັງ ພະລັງ ໗

ຄວາມອ່ານໃບສຸວັນນະປັຕເຖຣາພິເສກ
(ຫລາບທິດແບບຫລວງພະບາງ)

* ສີ ສີ ສຸຂະສະຫັວດສະດີ ອັນຊະລີປະນາໄມ ໄຕຍະຣະຕະນາ ຄຸນ ສຸນທໍປະວໍຣະວິຣາດ[1]........ພຸດທະສັງກາດ[2].........ມາດ ພິ ຣາດເຮືອງຣິມ[3]......ອຸດົມ ພິມມະ[4]........ ປັກຂີ[5]........ ດິຖີຍັງ[6]........ວາຣີປະວໍຣະມັງຄະລະດິຖີອະມຸດ ອຸດຕະມະໂຍຄະວໍຣະນັກ ຂັດ ຕະຍຸດຕາ ພູະຈັນທະຈໍວໍຣະສະມາຄົມສົມສລັບ ຈັບກັບດ້ວຍນັກ ຂັດຕະຣີກຖືກໜ່ວຍຊື່ວ່າ[7]........ ລູກໃສສະນິດ ອັນສະຖິດຢູ່ໃນກົງ ແກ້ວ[8]........ ຣສີແສງໃສໂຊດ ດູວິໂຣຈນ໌ຊະມູລີ ສັງຄະສາມັກຄີ ພາຍໃນມີພູະ[9]........ ເປັນເຄົ້າ ກັບທັງສັງຄະເຈົ້ານ້ອຍໜຸ່ມທັງປວງ ເປັນປະທານ, ພາຍນອກມີທ່ານ-ນາງ[10]........ ເປັນເຄົ້າ ເປັນເຈົ້າ ມູລະສັດທາ ກັບທັງປຸດຕະນັດຕາ ສະຫັດຊາ ຍາຕິກາ ພັນທຸວົງສາ ໝູ່ພີ່ນ້ອງ ເຊື້ອຊາດທ້ອງພັນທຸຣາ ຍ່ອມຄຶດເຖິງທາຄຸນພູະແກ້ວ ອັນເປັນໂກຖາກແລ້ວແທ່ງນາບຸນ ອັນເປັນມະຫັນຕະໂກສົນລ້ຳຍິ່ງ ຈິ່ງພ້ອມກັນຂົນຂວາຍຫາໄດ້ແລ້ວ ຍັງເຄື່ອງຍອດແກ້ວມະຫາທານ ອັນເປັນເຄື່ອງສະມະນະບໍຣິຂານ ເປັນຂອງທານອັນວິເສດ ນ້ອມ ເຂົ້າເຂດອາຣາມາ ກັບທັງອຸປາສົກອຸປາສິກາ ທ້າວພູະຍາ ຂຸນກວານແລະແສນໝື່ນ ຊົມຊື່ນພ້ອມໂມທະນາໃສສຸດ ໃນວໍຣະ ພຸດທະສາສະໜາເປັນອັນຍິ່ງ ຈິ່ງພ້ອມກັນນຳມາຍັງນ້ຳສຸຄັນທາ ຈວງຈັນ ກ່າຍລົນຄຳສິງໂສດ ປາໂມດຊື່ນຊົມບານ ກັບທັງບໍຣິຂານ ຄູ່ຜ້າ ເໝືອນດັ່ງພູະມະຫາກະສັດ ປັດເສນທິໂກສົນຣາດ ກັບທັງ ນາງນາດແກ້ວມັນລິກາ ອັນເປັນມະເຫສີນິ່ງເທົ້າາ ທິດສິງເຈົ້າສາຣີ ບຸດ ຕົນບໍຣິສຸດດ້ວຍປັນຍາ ປຽບຫຽມມາໃນວໍຣະພຸດທະສາສະ ໜາເປັນອັນຍິ່ງ ຈິ່ງນິມັນຕະນາ ສັງຄະສາມັກຄາ ໃຫ້ແລ້ວຍັງອະພິ ເສກາເຖຣາພິເສກ ອະຕິເຣກະນາມະຍົດ ອະພິສົນຈິ ກໍທິດສິງຍັງ ພູະ[11]........ ວັດ[12]........ ຕາແສງ[13]....... ເມືອງ[14]........ ແຂວງ[15]....... ຂຶ້ນສະຫລອງສັດທາ ໃນພັດທະສີມາ ວັດ[16]........ ອັນມີ

ພູະ[17]........ ເປັນປະທານ ສາສະນູປະຖຸ້ມພາ ສາສະນະວິໂຣຈນ໌ ໂຊດຕິປາລະເຈົ້າ ໄຊຍະຖຸພະວັງ ໄຊຍະມັງຄະລັງ ດັ່ງນີ້ແລ ຯ

ໝາຍເຫດ: ບ່ອນຂຽນເລກ 1 ເຖິງເລກ 17 ຢູ່ເທິງຂີດເປັນຈຸດໆ ໄວ້ນັ້ນ ໃຫ້ປ່ຽນໄປຕາມວັນ - ພ.ສ - ເດືອນ - ປັກຂະ - ວັນຂຶ້ນ - ແຮມ - ຣະດູ - ຣືກ - ຣາສີ ຊື່ປະທານສົງ - ຊື່ເຈົ້າມູລະສັດທາ - ທີ່ຢູ່ຂອງພູະພິກຂຸຜູ້ຖືກເຖຣາພິເສກ ຕາມທີ່ຈຸດໄວ້ນັ້ນ.

ຄວາມອ່ານໃບສຸວັນນະປັດເຖຣາພິເສກ
(ຫລາບທິດແບບວຽງຈັນ)

* ສິຼ ສິ ສຸຂະສະຫັວດສະດີ ນາງ ໄຕຍະສັງຄະສິ ຜູ້ມີພະຫຍາດີ ແຕ່ງໄວ້ ພູະແກ່ນໄທ້ສືບສ້າງຕາມມາ ສັງກາດຄາຄາດຄ້ອຍ ໄດ້ 25[1].......... ຕົວ ນິວຣະສີສິບສ້າງ ຍິດຍິ່ງກ້ວາງເຕີມຕາມ ເດືອນ[2].. .... ງາມພ່ຳພ້ອມ ຂຶ້ນ-ແຮມ[3] .... ຄ່ຳ ນ້ອມນຳມາວັນ[4].......... ວ່າວັນດີ ວັນໄຊຍະດີຖືອະມຸດຕະໂຊກ ສິດທິໂຍກລ້ຳ ລະດູ[5]........ .. ມັນຕາ ເປັນປີ[6].......... ມາດ ຄ້ອມຄາດເຂົ້າເມື່ອຍາມ[7].......... ພູະຈັນທະຈອນ.......... ຊ້ອຍໂຊດ ຮຸ່ງແຈ້ງໂສດສະເດັດໄປ ທິວ ຣະໄວໄປເປັນຄູ່ ຈັບຣິກຢູ່ເຮືອງໃສ ໜ່ວຍຊື່ວ່າ[8].......... ເປັນລູກ ໃສສະນິດ ອັນສະຖິດທະຣິງໃນກົງນາວາງອິນທະພາດ ພ້ອມຄາດ ເຂົ້າໃນກົງແກ້ວຊື່ວ່າ[9].......... ພູະຣັດສີ ເປັນມຸນີຫຽມໂລກ ສິດທິ ໂຊກຊຳບໍຣິສຸດ ເທບພະບຸດທັງເກົ້າ ຍົກຍ່າງເຂົ້າສູ່ຣາສີ ສັງຄະສາ ມັກຄີ ທັງພາຍໃນແລະພາຍນອກ, ພາຍໃນມີພູະຄູ[10].......... ເປັນ ເຄົ້າ ກັບທັງສັງຄະເຈົ້ານ້ອຍໃຫ່ຍເປັນປະທານ, ພາຍນອກມີທ່ານ-ນາງ[11].......... ເປັນເຄົ້າ ເປັນເຈົ້າມູລະສັດທາ ຈິ່ງໄດ້ມີເຈດຕະນາ ສັດທາສ້າງກອງເຖຣາ ມີຄຳປາດຖະໜາບໍ່ນ້ອຍ ໃຈຊື່ນຊ້ອຍຕັ້ງຕໍ່ ນິຣະພານ ຈິ່ງພ້ອມກັນມາທີ່ລຽງເຫັນອະນິດຈະການ ໃນສົງສານ ອັນປະເສີດ ຕັ້ງໃຈເກີດຍິນດີ ປະສາທະສັດທາແທ່ງຝູງຂ້າທັງ

ຫລາຍ ຈຶ່ງໄດ້ຂົນຂວາຍຫາຜາຍແຜ່ ແຕ່ບ້ານໃກ້ແລະບ້ານໄກ ໄດ້ນຳເອົາມາຍັງປັດໄຈຍະຊາດ ເປັນຕົ້ນອາດຍັງເງິນແລະຄຳ ກໍຈຶ່ງນຳເອົາມາທຸກແຫ່ງ ບາຍແບ່ງຊື້ຫລາຍປະການ ຊື້ທັງສຸວັນນະຣັດຊະຕະປັດຕາ ຊື້ທັງໂກໄສຍາຈີວະຣາເປັນເຄົ້າ ຊື້ທັງໝອນເທົ້າແລະຄຳພິ ເສດຕະສັດ ຕາລະບັດແລະຮົ່ມກັ້ງ ໂອຕັກນ້ຳແລະຂັນທອງ ຂອງພູພານແລະເມັງມາດ ກັບທັງງັ້ງງສະອາດ ກັບທັງສາດປູລຽນ ທຽນຊ້າຍຂວາສະອາດ ສະພາດພ້ອມເປັນເຄື່ອງບໍຣິຂານ ສັບພະວັດຖຸທານທັງມວນ ບໍຣະບວນທຸກສິ່ງ ຈຶ່ງພ້ອມກັນນິມັນຕະນາເຖຣາພິເສກທິດສິງ ປົງປະສິດທິພູະພອນ ແຖມນາມະກອນພູະ[12]............. ຂຶ້ນຕື່ມຍົດ ປາກົດໃນແຜ່ນສຸວັນນະຣັດຊະຕະປັດຕາ ໃຫ້ເປັນພູະ[13]........... ນາມະວົງສາ ສາສະນະວິໂຣຈນ໌ ໂຊດຕິປາລະເຈົ້າ ສັງໂຄ ຣຸດຈະຕິ ດັ່ງນີ້ແລ.

---

1. ໃຫ້ປ່ຽນໄປຕາມ ພ.ສ. ເຊັ່ນ: ພ.ສ. 2539 ເປັນຕົ້ນ
2. ໃຫ້ປ່ຽນໄປຕາມເດືອນ ມີ ເດືອນຈຽງ, ເດືອນຍີ່ ເປັນຕົ້ນ
3. ປ່ຽນຕາມມື້ວັນ ເຊັ່ນ : ວັນອາທິດ, ວັນຈັນ... ເປັນຕົ້ນ ແລະວັນຂຶ້ນ-ແຮມ....ຄ່ຳ ເປັນຕົ້ນ
4. ປ່ຽນຕາມລະດູ ປີໜຶ່ງມີ 3 ລະດູ ຄື :
   (1) ຕັ້ງແຕ່ເດືອນ 12 ແຮມ 1 ຄ່ຳ ເຖິງເດືອນ 4 ເພັງເອີ້ນວ່າ ເໝັນຕະຣະດູ (ລະດູໜາວ)
   (2) ແຕ່ເດືອນ 4 ແຮມ 1 ຄ່ຳ ເຖິງເດືອນ 8 ເພັງ ເອີ້ນວ່າ ຄິມຫັນຕະຣະດູ (ລະດູຮ້ອນ)
   (3) ແຕ່ເດືອນ 8 ແຮມ 1 ຄ່ຳ ເຖິງເດືອນ 12 ເພັງ ເອີ້ນວ່າ ວັດສັນຕະຣະດູ (ລະດູຝົນ)

5,6 ຖ້າປີໃດມີ 8 ສອງເທື່ອ ໃຫ້ປ່ຽນປີອະທິກະມາດ

7. ປ່ຽນໄປຕາມຍາມ, ຍາມກາງເວັນມີ 8 ຮຽກຊື່ດັ່ງນີ້ :

- ຍາມຕູດຕັ້ງ (ເຊົ້າ)	- ຍາມກອງງາຍ
- ຍາມແຖໃກ້ທ່ຽງ	- ຍາມທ່ຽງ

- ຍາມຕູດຊ້າຍ - ຍາມກອງແລງ
- ຍາມແຖໃກ້ຄ່ຳ - ຍາມຄ່ຳ

8. ປ່ຽນໄປຕາມດາວຣິກ ມີອັສວະນີຣິກ ເປັນຕົ້ນ
9. ປ່ຽນໄປຕາມຣາສີ ມີຣາສີເມດ, ຣາສີປະສົບ ເປັນຕົ້ນ
10. ໃຫ້ໃສ່ຊື່ພຼະພິກຂຸສົງຜູ້ເປັນປະທານໃນພິທີ
11. ໃສ່ຊື່ເຈົ້າມູລະສັດທາ
12. ໃສ່ຊື່ເດີມຂອງພຼະພິກຂຸຜູ້ຖືກເຖຣາພິເສກ
13. ໃສ່ຊື່ໃໝ່ຂອງພຼະພິກຂຸຜູ້ຖືກເຖຣາພິເສກ

<u>1. ຊື່ຂອງດາວຣິກແລະຣາສີ ດັ່ງນີ້:</u>

1.	ອັສວະນີ	ຢູ່ໃນຣາສີເມດ
2.	ພະຣະນີ	
3.	ກິດຕິກາ	ຢູ່ໃນຣາສີປະສົບ
4.	ໂຣຫິນີ	
5.	ມິຄສິຣ	ຢູ່ໃນຣາສີເມຖຸນ
6.	ອັທຣະ	
7.	ປຸນັບພະສຸ	ຢູ່ໃນຣາສີກໍຣະກົດ
8.	ປຸສຍາ	
9.	ອະເສາ	
10.	ມາຄະ	ຢູ່ໃນຣາສີສິງ
11.	ປຸບພະຜັກຄຸນີ	
12.	ອຸດຕະຣະຜັກຄຸນີ	ຢູ່ໃນຣາສີກັນ
13.	ຫັດຖະ	
14.	ຈິດຕາ	ຢູ່ໃນຣາສີດຸນ
15.	ສວັສຕິ	
16.	ວິສາຂະ	ຢູ່ໃນຣາສີປະຈິກ
17.	ອະນຸຣາຖະ	
18.	ເຊດຖາ	

19.	ມູລາ	ຢູ່ໃນຣາສີທະນູ
20.	ປຸບພາສາດ	
21.	ອຸຕຣາສາດ	ຢູ່ໃນຣາສີມັງກອນ
22.	ສະວະນະ	
23.	ທະນິສຖາ	ຢູ່ໃນຣາສີກຸມ
24.	ສັດຕະພິດ	
25.	ປຸບພັດທະ	ຢູ່ໃນຣາສີມີນ
26.	ອຸຕຣະພັດທະ	
27.	ເຣວະຕີ	

2. <u>ພິທີຫາດາວຣືກ ດັ່ງນີ້ :</u>

* ສິດທິກາຣິຍະ ຖ້າຈະຫາດາວຣືກ ໃຫ້ເອົາຈຳນວນເດືອນທີ່ນັບໄດ້ຕັ້ງລົງ ແລ້ວເອົາ 2 ຄູນ ໄດ້ທີ່ໃດໃຫ້ເອົາດິຖີວັນ ຂຶ້ນ-ແຮມ ປະສົມ ດັ່ງຕໍ່ໄປນີ້ :

1. <u>ການນັບເດືອນ :</u> ຖ້າປີໃດມີ ອະທິກະມາດ ຄື 8 ສອງເທື່ອ ໃຫ້ຕັ້ງເດືອນ 5 ເປັນເດືອນທີ່ 1
2. <u>ການນັບເດືອນ :</u> ປີທຳມະດາ ໃຫ້ຕັ້ງເດືອນທີກ ເປັນເດືອນທີ່ 1 ເດືອນ 7 ເປັນເດືອນທີ່ 2 ຕະຫລອດໄປເຖິງເດືອນ 5 ໃນປີຕໍ່ໄປ
3. <u>ການນັບວັນປະສົມ :</u> ໃຫ້ນັບເອົາວັນຂຶ້ນ 1 ຄ່ຳຂອງທຸກເດືອນ ເປັນທີ່ 1 ຕະຫລອດຮອດມື້ດັບ <u>ຖ້າເປັນເດືອນຫຍຸດ</u> ໃຫ້ນັບເອົາຕາມທຳມະດາ <u>ຖ້າເປັນເດືອນເຕັມ</u> ໃຫ້ນັບຫລຸດເອົາໄວ້ ເຊັ່ນ : ວັນ 1 ຄື 3 ຄ່ຳ ໃຫ້ນັບເປັນ 2 ຄ່ຳ ແລະ 4 ຄ່ຳ ໃຫ້ນັບເປັນ 3 ຄ່ຳ ເປັນຕົ້ນ. ເມື່ອຄູນແລະບວກ ຫາກວ່າມັນກາຍຈຳນວນ 27 ຂອງດາວຣືກໄປ ໃຫ້ນັບ 28 ເປັນທີ່ 1 ນັບ 29 ເປັນ

ທີ 2 ຕໍ່ໆໄປຕາມລຳດັບຂອງດາວຣືກທີ່ໄດ້ຂຽນໄວ້ນັ້ນແລ ຕົວຢ່າງ :

1. ເດືອນ 3 ຂຶ້ນ 10 ຄ່ຳ ປີຫານະດາ ໃຫ້ຕັ້ງເລກ 10 ຄູນດ້ວຍ 2 ເປັນ 20 ເອົາ 10 ບວກ ລວມເປັນ 30 ນັບມາເຖິງ 27 ແລ້ວໃຫ້ຕັ້ງນັບ 1 ທີ 28 ມາເຖິງ 30 ກໍເປັນທີ 3 ໃຫ້ຮູ້ວ່າເປັນດາວຣືກຖ້ວນສາມແລ.
2. ເດືອນ 4 ແຮມ 8 ຄ່ຳ ປີອະທິກະມາດ ໃຫ້ຕັ້ງເລກ 12 ຄູນດ້ວຍ 2 ເປັນ 24 ແລ້ວໃຫ້ເອົາອອກໃໝ່ 15 ຄ່ຳ ກັບແຮມ 7 ຄ່ຳ ນັບເອົາ 6 ມາປະສົມກັບ 24 ລວມເປັນ 25 ນັບມາເຖິງ 27 ແລ້ວໃຫ້ຕັ້ງນັບ 1 ທີ 28 ເປັນຕົ້ນໄປຄືກັນໄປເຖິງທີ 45 ກໍເປັນທີ 18 ໃຫ້ຮູ້ວ່າເປັນດາວຣືກຖ້ວນ 18 ແລ ຈິ່ງໃຫ້ເອົາດາວຣືກແລະຣາສີທີ່ຫາໄດ້ນັ້ນໃສ່ໃນໃບສຸວັນນະປັດເຖີ້ນ.

3. ຊື່ຂອງເດືອນເປັນພາສາປາລີດັ່ງນີ້ :

1. ເດືອນຈຽງ	ວ່າ	ມິຄະສິຣະມາດ
2. ເດືອນຍີ່	"	ປຸດສະມາດ
3. ເດືອນສາມ	"	ມາຄະມາດ
4. ເດືອນສີ່	"	ຜັກຄຸນະມາດ
5. ເດືອນຫ້າ	"	ຈິດຕະມາດ
6. ເດືອນຫົກ	"	ວິສາຂະມາດ
7. ເດືອນເຈັດ	"	ເຊດຖະມາດ
8. ເດືອນແປດ	"	ອາສາລຫະມາດ
9. ເດືອນເກົ້າ	"	ສາວະນະມາດ
10. ເດືອນສິບ	"	ພັດທະປະທະມາດ
11. ເດືອນສິບເອັດ	"	ອັດສະຍຸຊະມາດ
12. ເດືອນສິບສອງ	"	ກັດຕິກະມາດ

4. ຊື່ຂອງວັນເປັນພາສາປາລີ ວ່າດັ່ງນີ້:

1. ວັນອາທິດ	ວ່າ	ຣະວິວາເຣ
2. ວັນຈັນ	"	ສະສີວາເຣ
3. ວັນອັງຄານ	"	ພູມມະວາເຣ
4. ວັນພຸດ	"	ວຸທະວາເຣ
5. ວັນປະຫັດ	"	ຄະຣຸວາເຣ
6. ວັນສຸກ	"	ສຸກະຣະວາເຣ
7. ວັນເສົາ	"	ໂສຣະວາເຣ

5. ດິຖີຄືການນັບວັນ ຂຶ້ນ-ແຮມ ຂອງເດືອນ

1. ວັນຂຶ້ນ-ແຮມ	1	ຄ່ຳ	ວ່າ	ເອກາ	ດິຖີ
2. "	2	"	"	ທຸຕິຍາ	ດິຖີ
3. "	3	"	"	ຕະຕິຍາ	ດິຖີ
4. "	4	"	"	ຈະຕຸດຖີ	ດິຖີ
5. "	5	"	"	ປັນຈະມີ	ດິຖີ
6. "	6	"	"	ສັດຖີ	ດິຖີ
7. "	7	"	"	ສັດຕະມີ	ດິຖີ
8. "	8	"	"	ອັດຖະມີ	ດິຖີ
9. "	9	"	"	ນະວະມີ	ດິຖີ
10. "	10	"	"	ທະສະມີ	ດິຖີ
11. "	11	"	"	ເອກາທະສີ	ດິຖີ
12. "	12	"	"	ທະວາທະສີ	ດິຖີ
13. "	13	"	"	ເຕຣະສະສີ	ດິຖີ
14. "	14	"	"	ຈະຕຸດຖະສີ	ດິຖີ
15. "	15	"	"	ປັນນະຣະສີ	ດິຖີ

6. ປັກຂະຄະນະນາ ຄື ພິທີນັບວັນຂຶ້ນ-ແຮມ ຕາມປັກຂ໌(15 ວັນ)

1. ເດືອນຂ້າງຂຶ້ນ ວ່າ ສຸກະຣະປັກຂະ
2. ເດືອນຂ້າງແຮມ " ກາຣະປັກຂະ

ໂຄງໃນການທຳບຸງຄຸນຕ່າງໆ

ການກະທຳບຸງຄຸນຕ່າງໆ ມີການປຸກເຮືອນ, ຂຶ້ນເຮືອນໃໝ່ ແລະ ສູ່ຂັວນ ທຳລາບາສີເປັນຕົ້ນ. ໃຫ້ເລືອກເອົາຣືກດີ ວັນດີ ຍາມດີ ພ້ອມທັງຄືນຜູ້ທີ່ເປັນເຈົ້າຂອງພິທີນັ້ນ ຕ້ອງນັ່ງໃຫ້ຖືກຕາມທິດ ຄືໃຫ້ນັ່ງປິ່ນໜ້າໜີຈາກຫລາວເຫລັກ ແລ້ວໃຫ້ປິ່ນໜ້າໃສ່ຫົວໃຈ ເປັນ ເພື່ອຫລີກເວັ້ນຫົວໃຈ ຕາຍ ແລະວັນ ຍາມ ທີ່ບໍ່ດີ ດັ່ງຈະມີຄຳໂຄງຕ່າງໆຕໍ່ໄປນີ້ :

1. ໂຄງວັນຈິມ-ຟູ

* ຈຽງ ສຸກ ຈັນ, ຍີ່ ເສົາ ຄານ,
ສາມ ແປດ ທິດ ພຸດ, ສີ່ ເກົ້າ ຈັນ ປະຫັດ,
ຫ້າ ສິບ ຄານ ສຸກ, ຫົກ ສິບເອັດ ພຸດ ເສົາ,
ເຈັດ ສິບສອງ ປະຫັດ ທິດ ຯ

1.1 ອະທິບາຍວ່າ

ເດືອນຈຽງ	ຈິມວັນສຸກ	ຟູວັນຈັນ
ເດືອນຍີ່	ຈິມວັນເສົາ	ຟູວັນອັງຄານ
ເດືອນ 3 ເດືອນ 8	ຈິມວັນອາທິດ	ຟູວັນພຸດ
ເດືອນ 4 ເດືອນ 9	ຈິມວັນຈັນ	ຟູວັນປະຫັດ
ເດືອນ 5 ເດືອນ 10	ຈິມວັນອັງຄານ	ຟູວັນສຸກ
ເດືອນ 6 ເດືອນ 11	ຈິມວັນພຸດ	ຟູວັນເສົາ

ເດືອນ 7 ເດືອນ 12 ຈິນວັນປະຫັດ ຟູວັນທິດ ໆ

2. <u>ໂຄງຍາມມະຫາໄຊ</u>

* ທິດ ສຸກ ອະ = ອັດໂທທິນັງ (ບໍ່ດີ)

ຈັນ ພຸດ ກະ = ກັນລະຫັງພາເວ (ບໍ່ດີ)

ຄານ ອຸ = ອຸດທັງຣາຊາ (ດີ)

ປະຫັດ ມະ = ມັດເຊມະຣະນັງ (ບໍ່ດີ)

ເສົາ ປະ = ປານະໂພຊະນັງ (ດີ)

2.1 <u>ອະທິບາຍວ່າ</u>

<u>ວັນອາທິດ, ວັນສຸກ :</u>	ຕູດຕັ້ງ(ເຊົ້າ)	ອັດໂທທິນັງ
	ກອງງາຍ	ອຸດທັງຣາຊາ
	ແຖໃກ້ທ່ຽງ	ປານະໂພຊະນັງ
	ທ່ຽງ	ກັນລະຫັງພາເວ
	ຕູດຊ້າຍ	ມັດເຊມະຣະນັງ
	ກອງແລງ	ອັດໂທທິນັງ
	ແຖໃກ້ຄ່ຳ	ອຸດທັງຣາຊາ
	ຄ່ຳ	ປານະໂພຊະນັງ
<u>ວັນຈັນ, ວັນພຸດ :</u>	ຕູດຕັ້ງ(ເຊົ້າ)	ກັນລະຫັງພາເວ
	ກອງງາຍ	ມັດເຊມະຣະນັງ
	ແຖໃກ້ທ່ຽງ	ອັດໂທທິນັງ
	ທ່ຽງ	ອຸດທັງຣາຊາ
	ຕູດຊ້າຍ	ປານະໂພຊະນັງ
	ກອງແລງ	ກັນລະຫັງພາເວ
	ແຖໃກ້ຄ່ຳ	ມັດເຊມະຣະນັງ
	ຄ່ຳ	ອຸດທັງຣາຊາ

<u>ວັນອັງຄານ :</u>	ຕູດຕັ້ງ(ເຊົ້າ)	ອຸດທັງຣາຊາ
	ກອງງາຍ	ປານະໂພຊະນັງ
	ແຖໃກ້ທ່ຽງ	ກັນລະທັງພາເວ
	ທ່ຽງ	ມັດເຊມະຣະນັງ
	ຕູດຊ້າຍ	ອັດໂທທິນັງ
	ກອງແລງ	ອຸດທັງຣາຊາ
	ແຖໃກ້ຄ່ຳ	ປານະໂພຊະນັງ
	ຄ່ຳ	ກັນລະທັງພາເວ
<u>ວັນປະຫັດ :</u>	ຕູດຕັ້ງ(ເຊົ້າ)	ມັດເຊມະຣະນັງ
	ກອງງາຍ	ອັດໂທທິນັງ
	ແຖໃກ້ທ່ຽງ	ອຸດທັງຣາຊາ
	ທ່ຽງ	ປານະໂພຊະນັງ
	ຕູດຊ້າຍ	ກັນລະທັງພາເວ
	ກອງແລງ	ມັດເຊມະຣະນັງ
	ແຖໃກ້ຄ່ຳ	ອັດໂທທິນັງ
	ຄ່ຳ	ອຸດທັງຣາຊາ
<u>ວັນເສົາ :</u>	ຕູດຕັ້ງ(ເຊົ້າ)	ປານະໂພຊະນັງ
	ກອງງາຍ	ກັນລະທັງພາເວ
	ແຖໃກ້ທ່ຽງ	ມັດເຊມະຣະນັງ
	ທ່ຽງ	ອັດໂທທິນັງ
	ຕູດຊ້າຍ	ອຸດທັງຣາຊາ
	ກອງແລງ	ປານະໂພຊະນັງ
	ແຖໃກ້ຄ່ຳ	ກັນລະທັງພາເວ
	ຄ່ຳ	ມັດເຊມະຣະນັງ. ຯ

3. ໂຄງຫລາວເຫລັກ

* ທິດ ສຸກ ຕົກ, ຈັນ ເສົາ ອອກ,
ຄານ ພຸດ ເໜືອ, ປະຫັດໃຕ້.

3.1 ອະທິບາຍວ່າ

ວັນອາທິດ, ວັນສຸກ	ຫລາວເຫລັກ ຢູ່	ທິດຕາເວັນຕົກ
ວັນຈັນ, ວັນເສົາ	"	ທິດຕາເວັນອອກ
ວັນອັງຄານ, ວັນພຸດ	"	ທິດເໜືອ
ວັນປະຫັດ	"	ທິດໃຕ້ ຯ

4. ໂຄງຫົວໃຈເປັນ

* ທິດ ອຸ, ຈັນ ທໍ, ຄານ ອີ, ພຸດ ບົວ,
ປະຫັດ ອາ, ສຸກ ພາ, ເສົາ ທັກ.

4.1 ອະທິບາຍວ່າ

ວັນອາທິດ	ຫົວໃຈເປັນຢູ່ທາງ	ທິດອຸດອນ
ວັນຈັນ	"	ທິດທໍຣະດີ
ວັນອັງຄານ	"	ທິດອີສານ
ວັນພຸດ	"	ທິດບຸຣະພາ
ວັນປະຫັດ	"	ທິດອາຄະເນ
ວັນສຸກ	"	ທິດພາຍັບ
ວັນເສົາ	"	ທິດທັກຂິນ ຯ

5. <u>ໂຄງຫົວໃຈຕາຍ</u>

* ທິດ ທັກ, ຈັນ ອີ, ຄານ ທໍ, ພຸດ ປັດ,
ປະຫັດ ພາ, ສຸກ ອາ, ເສົາ ອຸ.

5.1 <u>ອະທິບາຍວ່າ</u>

ວັນອາທິດ	ຫົວໃຈຕາຍຢູ່ທາງ	ທິດທັກຂິນ
ວັນຈັນ	"	ທິດອີສານ
ວັນອັງຄານ	"	ທິດທໍຣະດີ
ວັນພຸດ	"	ທິດປັດສິມ
ວັນປະຫັດ	"	ທິດພາຍັບ
ວັນສຸກ	"	ທິດອາຄະເນ
ວັນເສົາ	"	ທິດອຸດອນ ຯ

6. <u>ໂຄງອະມຸດຕະໂຊກ</u>

* ທິດ ແປດ, ຈັນ ສາມ, ອັງຄານ ເກົ້າ,
ພຸດ ສອງ, ປະຫັດ ສີ່, ສຸກ ໜຶ່ງ, ເສົາ ຫ້າ.

6.1 <u>ອະທິບາຍວ່າ</u>

ຂຶ້ນ-ແຮມ 8	ຄ່ຳ	ວັນ	ອາທິດ	ຖືກອະມຸດຕະໂຊກ
"	3	"	ວັນຈັນ	"
"	9	"	ວັນອັງຄານ	"
"	2	"	ວັນພຸດ	"
"	4	"	ວັນປະຫັດ	"
"	1	"	ວັນສຸກ	"
"	5	"	ວັນເສົາ	" ຯ

24/VII
ຫ້າມຈຳໜ່າຍ

7. <u>ໂຄງດິຖີທັງຫ້າ</u>

* - 1, 6, 11 ວັນສຸກ
- 2, 7, 12 ວັນພຸດ
- 3, 8, 13 ວັນອັງຄານ
- 4, 9, 14 ວັນເສົາ
- 5, 10,15 ວັນປະຫັດ

7.1 <u>ອະທິບາຍວ່າ</u>

ຂຶ້ນ-ແຮມ 1, 6, 11 ຄ່ຳ ວັນສຸກຂອງທຸກເດືອນ ໄດ້ຣືກຊື່ ນັນທາດິຖີ ດີໃນທາງແຕ່ງງານ ແລະຂໍໝັ້ນບ່າວສາວ ຫລືຂຶ້ນເຮືອໃໝ່ ເປັນຕົ້ນ.

ຂຶ້ນ-ແຮມ 2, 7, 12 ຄ່ຳ ວັນພຸດຂອງທຸກເດືອນ ໄດ້ຣືກຊື່ ພັດທຣະດິຖີ ດີໃນທາງຕົກແຕ່ງ ປະດັບຍົດ ຫລືຮັບຂ້ອນໃນຄາວໄດ້ເລື່ອນຍົດ

ຂຶ້ນ-ແຮມ 3, 8, 13 ຄ່ຳ ວັນອັງຄານຂອງທຸກເດືອນ ໄດ້ຣືກຊື່ ໄຊຍະດິຖີ ດີທຸກຢ່າງ ຫລື ເຂົ້າສູ່ສົງຄາມຊະນະແລ

ຂຶ້ນ-ແຮມ 4, 9, 14 ຄ່ຳ ວັນເສົາຂອງທຸກເດືອນ ໄດ້ຣືກຊື່ ຣິດຕາດິຖີ ດີໃນທາງຕົກແຕ່ງ ດ້ວຍໄໝເປັນຕົ້ນ ຫລື ເປັນວັນໝັ້ນຄົງ ປຸກເຮືອນໃໝ່ ແລະແຮກນາໃໝ່ ດີແລ

ຂຶ້ນ-ແຮມ 5, 10, 15 ຄ່ຳ ວັນປະຫັດຂອງທຸກເດືອນ ໄດ້ຣືກຊື່ ປຸນນາດິຖີ ດີໃນທາງຂົນເຂົ້າໃສ່ຍຸ້ງ ໃສ່ສາງ ຫລື ຫຍິບຖົງເງິນ ຖົງຄຳ ແລະບວດລູກ ບວດຫລານ ເປັນຕົ້ນ ດີແລ

<u>ໝາຍເຫດ :</u> ຖ້າທຳການໃດໆ ໄດ້ຣືກດິຖີທັງຫ້ານີ້ດີໜັກໜາ ໆ

8. <u>ໂຄງໂລກາວິນາດ-ທຸກທົນ</u>

* ທິດ 1 ທິດ ທິດ 4, ຈັນ 4, ຈັນ 6, ຄານ 6, ຄານ 10, ພຸດ 3, ພຸດ 9, ປະຫັດ 5, ປະຫັດ 8, ສຸກ 3, ສຸກ 9, ເສົາ 7, ເສົາ 1.

8.1 <u>ອະທິບາຍວ່າ</u>

ຂຶ້ນ-ແຮມ 1 ຄ່ຳ ວັນອາທິດ ເປັນໂລກາວິນາດ
ຂຶ້ນ-ແຮມ 4 ຄ່ຳ ວັນອາທິດ ເປັນທຸກທິນ
ຂຶ້ນ-ແຮມ 4 ຄ່ຳ ວັນຈັນ ເປັນໂລກາວິນາດ
ຂຶ້ນ-ແຮມ 6 ຄ່ຳ ວັນຈັນ ເປັນທຸກທິນ
ຂຶ້ນ-ແຮມ 6 ຄ່ຳ ວັນອັງຄານ ເປັນໂລກາວິນາດ
ຂຶ້ນ-ແຮມ 10 ຄ່ຳ ວັນອັງຄານ ເປັນທຸກທິນ
ຂຶ້ນ-ແຮມ 3 ຄ່ຳ ວັນພຸດ ເປັນໂລກາວິນາດ
ຂຶ້ນ-ແຮມ 9 ຄ່ຳ ວັນພຸດ ເປັນທຸກທິນ
ຂຶ້ນ-ແຮມ 5 ຄ່ຳ ວັນປະຫັດ ເປັນໂລກາວິນາດ
ຂຶ້ນ-ແຮມ 8 ຄ່ຳ ວັນປະຫັດ ເປັນທຸກທິນ
ຂຶ້ນ-ແຮມ 3 ຄ່ຳ ວັນສຸກ ເປັນໂລກາວິນາດ
ຂຶ້ນ-ແຮມ 9 ຄ່ຳ ວັນສຸກ ເປັນທຸກທິນ
ຂຶ້ນ-ແຮມ 7 ຄ່ຳ ວັນເສົາ ເປັນໂລກາວິນາດ
ຂຶ້ນ-ແຮມ 1 ຄ່ຳ ວັນເສົາ ເປັນທຸກທິນ ຯ

9. <u>ໂຄງຫລົ່ມເດືອນ</u>

ສີ່, ເຈັດ, 4, 4, ຍີ່, ຫ້າ, 2, 2, ທິກ, ເກົ້າ, 6, 6, ແປດ, ສິບເອັດ, 8, 8, ສິບ, ຈຽງ, 10, 10, ສິບສອງ, ສາມ, 12, 12.

9.1 ອະທິບາຍວ່າ

ເດືອນສີ່,ເດືອນເຈັດ ຂຶ້ນ-ແຮມ 4-4 ຄ່ຳ ຖືກຫລິ່ມເດືອນ

ເດືອນຍີ່,ເດືອນຫ້າ ຂຶ້ນ-ແຮມ 2-2 ຄ່ຳ ຖືກຫລິ່ມເດືອນ

ເດືອນຫົກ,ເດືອນເກົ້າ ຂຶ້ນ-ແຮມ 6-6 ຄ່ຳ ຖືກຫລິ່ມເດືອນ

ເດືອນແປດ,ເດືອນສິບເອັດ ຂຶ້ນ-ແຮມ 8-8 ຄ່ຳ ຖືກຫລິ່ມເດືອນ

ເດືອນສິບ,ເດືອນຈຽງ ຂຶ້ນ-ແຮມ 10-10 ຄ່ຳ ຖືກຫລິ່ມເດືອນ

ເດືອນສິບສອງ,ເດືອນສາມ ຂຶ້ນ-ແຮມ 12-12 ຄ່ຳ ຖືກຫລິ່ມເດືອນ

10. ໂຄງພານວັນ

ທິດ, ພຸດ ເຊົ້າ ສຸກ, ເສົາ ງາຍແກ່

ຈັນ, ປະຫັດ ທ່ຽງແທ້ ອັງຄານຄ້າຍຄ່ຳພານ.

10.1 ອະທິບາຍວ່າ

ວັນອາທິດ, ວັນພຸດ ພານຍາມເຊົ້າ. ວັນສຸກ, ວັນເສົາ ພານຍາມງາຍແກ່. ວັນຈັນ, ວັນປະຫັດ ພານຍາມທ່ຽງ. ວັນອັງຄານ ພານຍາມຄ່ຳ ຯ

11. ໂຄງນາກປະຈຳວັນ

ທິດ ບູ, ຈັນ ອາ, ຄານ ປັດ, ພຸດ ອຸ, ປະຫັດ ອິ,

ສຸກ ທັກ, ເສົາ ພາ.

11.1 ອະທິບາຍວ່າ

ວັນອາທິດ ຫົວນາກປິ່ນໄປ ທິດບຸຣະພາ

ວັນຈັນ ຫົວນາກປິ່ນໄປ ທິດອາຄະເນ

ວັນອັງຄານ ຫົວນາກປິ່ນໄປ ທິດປັດສິມ

ວັນພຸດ ທິວນາກປິ່ນໄປ ທິດອຸດອນ
ວັນປະຫັດ ທິວນາກປິ່ນໄປ ທິດອີສານ
ວັນສຸກ ທິວນາກປິ່ນໄປ ທິດທັກຂິນ
ວັນເສົາ ທິວນາກປິ່ນໄປ ທິດພາຍັບ.

ໝາຍເຫດ : ຖ້າຈະຂຶ້ນເຮືອນໃໝ່ ຫລື ໄປຄ້າຂາຍ ໃຫ້ໄຕ່ທິວນາກໄປຫາຫາງຈິ່ງດີ ຯ

12. ໂຄງປີນພິດ

ເດືອນຂຶ້ນ 1,3,5,7 ຄ່ຳ ແລະແຮມ 3,5,9 ຄ່ຳ ຖືກປີນພິດ ຢ່າທຳການມຸງຄຸນ ບໍ່ດີແລ ຯ

13. ໂຄງດາວພິດານເມືອງປະຈຳເດືອນ

ເດືອນ 1,2,3	ດາວພິດານເມືອງຢູ່	ທິດປັດສິມ
ເດືອນ 4,5,6	”	ທິດອຸດອນ
ເດືອນ 7,8,9	”	ທິດບຸຣະພາ
ເດືອນ 10,11,12	”	ທິດທັກຂິນ

ໝາຍເຫດ : ຖ້າຈະແຕ່ງງານສູ່ຂ້ອນບ່າວສາວ ຫລື ໄປຄ້າຂາຍ ຢ່າຫັນໜ້າໄປສູ່ດາວພິດານເມືອງ ບໍ່ດີແລ ຯ

14. ໂຄງວັນແຕ່ງງານບ່າວສາວ

ເດືອນ 1, 11 ຄ່ຳ ທິວສຸບຂາຂຶ້ນ ເດືອນ 3, 4,8,9,14,15 ຄ່ຳ ທິວຊິນທິວ ເດືອນຂຶ້ນ 5, 6, 12 ຄ່ຳ ທິວຮຽງທິວລີງ ເດືອນຂຶ້ນ 7, 10, 13 ຄ່ຳ ທິວຮຽງທິວຂຶ້ນ (ທິວຮຽງໝອນ)
ເດືອນແຮມ 1,5,11,12,13,15 ຄ່ຳ ທິວຊິນທິວ

ເດືອນແຮມ 2 ຄ່ຳ ຫົວຮຽງຫົວລົງ

ເດືອນແຮມ 3,7,9 ຄ່ຳ ຫົວສຸບຂາຂຶ້ນ

ເດືອນແຮມ 4,8,10,15 ຫົວຮຽງຫົວຂຶ້ນ(ຫົວຮຽງໝອນ ດີ)

ເດືອນແຮມ 6 ຄ່ຳ ຕີນທ່ຳຕີນ (ບໍ່ດີແລ)

ໝາຍເຫດ : ຖ້າຖືກວັນຫົວຮຽງຫົວຂຶ້ນ(ຫົວຮຽງໝອນ) ຢູ່ດ້ວຍກັນຈະມີຄວາມສຸກທຸກປະການແລ ຯ

15. ໂຄງກາລະກິນີນ້ອຍ

ໝໍເຖົ້າບູຮານ ທ່ານໄດ້ກຳໜົດໂຄງກາລະກິນີນ້ອຍໄວ້ສຳລັບທວາຍຂອງຫາຍວ່າຈະຢູ່ທີ່ໃດ ຈະໄດ້ຫລືບໍ່ ຄົນເອົາໄປ ຫລືລືມໄວ້ ມີລັກສະນະເໝືອນອີກຕຳລາໜຶ່ງທີ່ເອີ້ນວ່າ ຍາມສາມຕາ ແຕ່ຕ່າງກັນຢູ່ບ່ອນວ່າ ໂຄງກາລະກິນີນ້ອຍນັ້ນ ຖືເອົາວັນຂອງຫາຍເປັນເກນທຳນາຍ ແຕ່ຍາມສາມຕານັ້ນ ຖືເອົາວັນຄົນມາດູເປັນເກນທຳນາຍ ໂຄງກາລະກິນີນ້ອຍທ່ານວ່າໄວ້ດັ່ງນີ້ :

ຄວາມຫຍໍ້ : ຂຸມ ທາງ ໄຟ ບ້ານ ປ່າ ທີ່ນອນ ນ້ຳ.

ຄວາມກາງ : ທິດ ຕົກຂຸມ

ຈັນ ຕົກທາງ

ຄານ ຕົກໄຟ

ພຸດ ຕົກບ້ານ

ປະຫັດ ຕົກປ່າ

ສຸກ ຕົກທີ່ນອນ

ເສົາ ຕົກນ້ຳ

<u>ອະທິບາຍວ່າ</u>

15.1 ທິດຕົກຂຸມ ໝາຍຄວາມວ່າຂອງຫາຍວັນອາທິດ ຕົກຢູ່ໃນຂຸມ ຫລື ທີ່ຕ່ຳ ຫລື ຝັງໄວ້, ຖ້າເປັນງົວຄວາຍ ໃຫ້ໄປຫາທີ່ລຸ່ມໆ ຕ່ຳໆ.

15.2 ຈັນຕົກທາງ ໝາຍຄວາມວ່າຂອງຫາຍວັນຈັນຈະຕົກຢູ່ທີ່ຫົນທາງ ຫລື ບໍ່ກໍແມ່ນຄົນຍ່າງຕາມຫລັງເອົາໄປແລ້ວ ໃຫ້ສືບເບິ່ງທີ່ຄົນຍ່າງຕາມຫລັງມາ ຖ້າເປັນງົວ ຄວາຍ ກໍມີຄົນຈັບໄປຕອນງົວ ຄວາຍຈະກັບມາບ້ານນັ້ນເອງ.

15.3 ຄານຕົກໄຟ ໝາຍຄວາມວ່າ ຂອງຫາຍວັນອັງຄານນີ້ຈະຖືກໄຟໄໝ້ ຫລື ຕົກຢູ່ໃກ້ໆກອງໄຟ ເຕົາໄຟ ຫລື ທີ່ໄຟໄໝ້ ໃຫ້ໄປຫາເບິ່ງທີ່ນັ້ນ, ຖ້າບໍ່ມີທີ່ນັ້ນກໍ່ສະແດງວ່າຄົນເອົາໄປແລ້ວ, ຖ້າເປັນຣົຖ ງົວ ຄວາຍ ກໍຖືກແປສະພາບແລ້ວຈະບໍ່ໄດ້ຄືນແລ.

15.4 ພຸດຕົກບ້ານ ໝາຍຄວາມວ່າຂອງຫາຍວັນພຸດນັ້ນຍັງຢູ່ໃນບ້ານ ລືມເອົາໄວ້, ຖ້າເປັນງົວ ຄວາຍ ກໍຢູ່ທີ່ໄຮ່ ທີ່ນາຂອງຕົນເອງທີ່ເຄີຍເອົາໄປລ້ຽງ ຫລື ບໍ່ກໍມີຄົນທີ່ຮູ້ຈັກກັນຈັບຜູກໄວ້ທີ່ບ້ານຂອງເຂົາເອງ ໄປຫາເອົາຈະບໍ່ຫາຍໄປໃສໄດ້ຄືນແນ່ນອນ.

15.5 ປະຫັດຕົກປ່າ ໝາຍຄວາມວ່າຂອງຫາຍວັນປະຫັດ ທວາຍວ່າຂອງນັ້ນຕົກຢູ່ໃນປ່າ ໃຫ້ຫາທີ່ປ່າ ຫລືບໍ່ກໍທວາຍວ່າ ຈະພົບທີ່ປ່າ.

15.6 ສຸກຕົກທີ່ນອນ ໝາຍຄວາມວ່າຂອງຫາຍວັນສຸກນັ້ນບໍ່ໄດ້ຢູ່ທີ່ອື່ນ ທວາຍວ່າຢູ່ໃນທີ່ນອນນັ້ນເອງ ໃຫ້ຫາທີ່ນອນຈະພົບ, ຖ້າເປັນງົວຄວາຍ ຫລື ຂອງໃຫ່ຍໃຫ້ໄປຫາທາງທິດຫົວນອນ

15.7 ເສົາຕົກນ້ຳ ໝາຍຄວາມວ່າຂອງຫາຍວັນເສົາ ຈະຕົກຢູ່ໃນນ້ຳ ຫລື ທີ່ທ່ານ້ຳ ຫລື ທີ່ໃກ້ນ້ຳ ຫລື ໃນໄຫນ້ຳ ຫລື ໃກ້ຫ້ອງນ້ຳ ລອງຄຶດທົບທວນເບິ່ງແລ້ວຫາຕາມນັ້ນ, ຖ້າເປັນງົວ

. ຄວາຍກໍໃຫ້ຫາຍຢ່າງນັ້ນ ແຕ່ຖ້າເລີຍ 7 ວັນໄປແລ້ວຈະບໍ່ໄດ້ຄືນແລ ຯ

16. ໂຄງກາລະກິນີຫລວງ

ໝໍເຖົ້າບູຮານທ່ານບອກວ່າ ຖ້າຈະທຳການມຸງຄຸນອັນໃດໃຫ້ຄິດເຖິງໂຄງກາລະກິນີຫລວງນີ້ ທ່ານຈະຫ້າມເປັນຢ່າງໆ ໂດຍລວມຊີ້ໄວ້ເຊັ່ນ : ຫ້າມກ່າວໂອມ ຫລື ຂໍສາວເປັນຕົ້ນ ໂຄງກາລະກິນີຫລວງມີດັ່ງນີ້ :

1. ເອໂກ ໂຄໂນ ມະຫິງສາ ຂຶ້ນ ຫລື ແຮມ 1 ຄ່ຳ ຈະເປັນເດືອນໃດກໍຕາມ ກາລະກິນີຫລວງຕົກງົວ ຄວາຍ ຫ້າມຊື້-ຂາຍ ງົວຄວາຍ.
2. ທະເວ ພະຍາທິປິລິໂຕ ຂຶ້ນ ຫລື ແຮມ 2 ຄ່ຳ ຈະເປັນເດືອນໃດກໍຕາມ ກາລະກິນີຫລວງຕົກພະຍາດ ທ່ານຫ້າມເດີນທາງໄກ.
3. ຕະໂຍ ກັນລະຍານະມິດເຕ ຂຶ້ນ ຫລື ແຮມ 3 ຄ່ຳ ຈະເປັນເດືອນໃດກໍຕາມ ກາລະກິນີຫລວງຕົກມິດສະຫາຍ ທ່ານຫ້າມຜູກສ່ຽວ(ຜູກມິດ)
4. ຈັດຕາໂຣ ທະເຊ ຂຶ້ນ ຫລື ແຮມ 4 ຄ່ຳ ຈະເປັນເດືອນໃດກໍຕາມ ກາລະກິນີຫລວງຕົກທຸງ ທ່ານຫ້າມບໍ່ໃຫ້ປັກທຸງຊໍ່ ທຸງໄຊ ຈະບໍ່ເປັນມຸງຄຸນ.
5. ປັນຈະເຂດເຕ ຂຶ້ນ ຫລື ແຮມ 5 ຄ່ຳ ຈະເປັນເດືອນໃດກໍຕາມ ກາລະກິນີຫລວງຕົກນາ ທ່ານຫ້າມທຳກິດຈະການໃດໆກ່ຽວກັບນາ.
6. ສະ ເຄເຫ ຂຶ້ນ ຫລື ແຮມ 6 ຄ່ຳ ຈະເປັນເດືອນໃດກໍຕາມ ກາລະກິນີຫລວງຕົກເຮືອນ ທ່ານຫ້າມປຸກເຮືອນ ຫລື ທຳກິດຈະການໃດໆ ກ່ຽວກັບເຮືອນ.
7. ສັດຕະ ຣາຊາໂນ ຂຶ້ນ ຫລື ແຮມ 7 ຄ່ຳ ຈະເປັນເດືອນໃດກໍ

ຕາມ ກາລະກິນີຫລວງຕົກທ່ານຜູ້ໃຫ່ຍ ຫ້າມຂຶ້ນທູນຫາທ່ານ ເກງຈັກໄດ້ຄຳຮ້າຍຄຽດຟຸນ.

8. ອັດຖະ ຍາເນ ຂຶ້ນ ຫລື ແຮມ 8 ຄ່ຳ ຈະເປັນເດືອນໃດກໍ ຕາມ ກາລະກິນີຫລວງຕົກຍານພາຫະນະທຸກຢ່າງ.

9. ນະວະ ກູເປ ຂຶ້ນ ຫລື ແຮມ 9 ຄ່ຳ ຈະເປັນເດືອນໃດກໍ ຕາມ ກາລະກິນີຫລວງຕົກຂຸມ ຕົກສະ ຫ້າມທຳການອັນໃດ ກ່ຽວ ກັບຫລຸມ ກັບສະ.

10. ທະສະ ບາວາ ຂຶ້ນ ຫລື ແຮມ 10 ຄ່ຳ ຈະເປັນເດືອນໃດກໍ ຕາມ ກາລະກິນີຫລວງຕົກເຮືອ ຫ້າມຟັນເຮືອ ແລະຊື້ຂາຍ ເຮືອ.

11. ເອກາທະສະ ພິຊັງ ຂຶ້ນ ຫລື ແຮມ 11 ຄ່ຳ ຈະເປັນເດືອນໃດ ກໍຕາມ ກາລະກິນີຫລວງຕົກພິດພັນ ທັນຍາຫານ ຫ້າມທຳ ກິດຈະການຄັ້ງແຮກ ຫລື ເລີ່ມຕົ້ນທຸກຢ່າງ ກ່ຽວກັບພືດທຸກ ຢ່າງ.

12. ທະວາທະສະ ອິດຖີ ຂຶ້ນ ຫລື ແຮມ 12 ຄ່ຳ ຈະເປັນເດືອນ ໃດກໍຕາມ ກາລະກິນີຫລວງຕົກແມ່ຍິງ ຫ້າມບໍ່ໃຫ້ຂໍສາວ ຫລື ໂອມສາວ ແລະແຕ່ງດອງ.

13. ເຕຣະສະ ປຸຣິສາ ຂຶ້ນ ຫລື ແຮມ 13 ຄ່ຳ ຈະເປັນເດືອນໃດກໍ ຕາມ ກາລະກິນີຫລວງຕົກຜູ້ຊາຍ ຫ້າມບໍ່ໃຫ້ຮັບຄົນຜູ້ຊາຍ ໄວ້ໃນບ້ານ.

14. ຈຸດທະສະ ພິກຂຸ ຂຶ້ນ ຫລື ແຮມ 14 ຄ່ຳ ຈະເປັນເດືອນໃດກໍ ຕາມ ກາລະກິນີຫລວງຕົກນັກບວດ ຫ້າມທຳການທິດສິງ ແລະບວດນາກ ຫລື ພິທີອື່ນໆ ກ່ຽວກັບພູະພິກຂຸ.

15. ປັນຈະ ທະສະ ເທວາ ຂຶ້ນ ຫລື ແຮມ 15 ຄ່ຳ ຈະເປັນເດືອນ ໃດກໍຕາມ ກາລະກິນີຫລວງຕົກເທວະດາ ຫ້າມທຳພະລີກັມ ແລະຕັ້ງສານພູະພູມ.

ໂຄງຫ້າມທຳການຕາມວັນ

- ວັນອາທິດ ຢ່າໄດ້ເອົາຕີນເຂົ້າ ເນື່ອດິງເຜົາຖ່ານ ແມ່ນເອົາມາເຂັ່ນພ້າ ຄົມຊິຕ້ອງຖືກຕີນ ດີທີ່ໝໍບອກໃຫ້ໄຖນາແຮກໄຮ່ ຍັງຈັກລຸລາບໄດ້ ເນື່ອໜ້າຢູ່ກະເສີມ.
- ວັນຈັນນັ້ນ ຢ່າໄດ້ໄປຕັດໄມ້ ໃນປ່າມາແປງເຮືອນ ເກງຈັກເສັຍຫລານເຫລັນ ລູກເມັຍຕາຍສ້ຽງ ດີທີ່ໝໍບອກໃຫ້ຕັດເສືອຜ້າ ຜືນອາດທວຍທິງ ດູດີງາມ ບ່າວສາວສະຫງວນສູ້.
- ວັນອັງຄານນັ້ນ ຢ່າໄດ້ພາກັນເອົາເຫົ້າລາ ສຸຣາມາລ້ຽງແຂກ ເກງຈັກຜິດແຜກໄດ້ ຄວາມຮ້າຍໃສ່ຕີນ ທີ່ໝໍບອກໃຫ້ເຂັ່ນພ້າ ຕາວຫອກຫລາວແຫລມ ແມ່ນວ່າມານມາພົບ ຊິຊ່ອຍຕີນໃຫ້ໄປພົ້ນ.
- ວັນພຸດນັ້ນ ຢ່າໄດ້ນຳຄວາມຂຶ້ນ ຂຸນຫລວງເຖິງທ່ານ ເກງຈັກໄດ້ຄຳຮ້າຍເມື່ອລຸນ ດີທີ່ແປງສະແນນນອນ ຢູ່ຍືນເຖິງເຖົ້າ.
- ວັນປະຫັດນັ້ນ ຢ່າໄດ້ເອົາຕີນເຂົ້າ ອະຣັນຍາໃນປ່າ ເກງຈັກມີສັດສິ່ງຮ້າຍ ໜາມສ້ຽນຊິຖືກຕີນ ດີທີ່ຫາເອົາເຫົ້າລາສຸຣາມວນມື້ ຝູງພີ່ນ້ອງພົງເຊື້ອຊິຊື່ນຊົມ.
- ວັນສຸກນັ້ນ ຢ່າໄດ້ເອົາກັນຜ້າຍຄີຣີເດີນປະເທດ ເກງຈັກເສັຍສ່ຳຊ້າງ ທັງມ້າຈຸ່ມຈິມ ລູກເມັຍພ້ອມສັບພະສິ່ງເງິນທອງ ດີທີ່ພາກັນຊົ້ງວຄວາຍ ເອົາລູກ ດູແພ່ພ້ອມພໍຮ້ອຍຮ່ອມພົນ ດີທີ່ເອົາກັນຟັນຈູດສຸມສວນເຂົ້າ ໂຮມມາກເຕົ້າເຕັມຢູ່ໃນເຍັຍ ຜົວເມັຍຮັກຢູ່ຍືນເຖິງເຖົ້າ.
- ວັນເສົານັ້ນ ໝໍບອກຫ້າມຢ່າເອົາເຂົ້າໃສ່ເຍັຍ ເກງທີ່ຜີສາງລັກລອບກິນສິນໄຮ້ ດີທີ່ໝໍບອກໃຫ້ຕັດເກດເກສາ ດູດີງາມໝູ່ສາວສະຫງວນຫລີ້ນ ฯ

ເທວະດາປະຈຳທິດແຕ່ລະເດືອນ

ໝໍບູຮານ ທ່ານກ່າວໄວ້ວ່າ ແຕ່ລະເດືອນ ເທວະດາຢູ່ທິດໃດເຮົາຄວນຮູ້ ແລະເມື່ອຈະມີການແຮກໄຖນາ ປຸກເຮືອນຢ້າວ ທ້າວພະຍາ

ສູ່ຂ້ວນ ບາສີ ເປັນຕົ້ນ ໃຫ້ຫັນໜ້າແລະປະນົມມືໄປທາງທິດນັ້ນ ຈຶ່ງດີແລ ເທວະດາປະຈຳທິດມີດັ່ງນີ້ :

ເດືອນ	5	ເທວະດາຢູ່ທິດ	ທໍຣະດີ
ເດືອນ	6	"	ພາຍັບ
ເດືອນ	7	"	ອີສານ
ເດືອນ	8	"	ບຸຣະພາ
ເດືອນ	9	"	ທັກຂິນ
ເດືອນ	10	"	ທໍຣະດີ
ເດືອນ	11	"	ອຸດອນ
ເດືອນ	12	"	ອາຄະເນ
ເດືອນ	1	"	ທໍຣະດີ
ເດືອນ	2	"	ປັດສິມ
ເດືອນ	3	"	ອີສານ
ເດືອນ	4	"	ອາຄະເນ ຯ

ພະຍາວັນ ແລະ ພະຍາຍາມ

ໝໍບູຮານທ່ານວ່າ ຖ້າຈະທຳການອັນໃດກໍຕາມ ຄວນຈະທຳໃຫ້ຖືກພູະຍາວັນ ແລະພູະຍາຍາມ ຖ້າທ່ານທຳໄດ້ຖືກທັງພູະຍາວັນ ແລະພູະຍາຍາມແລ້ວ ທ່ານວ່າຈະໄດ້ຮັບຄວາມສຳເລັດເປັນເລີດແລ.

1. ພູະຍາວັນ ມີດັ່ງນີ້ :

ເດືອນ 1 ເດືອນ 2	ວັນສຸກ	ເປັນພູະຍາວັນ
ເດືອນ 3 ເດືອນ 4	ວັນພຸດ	ເປັນພູະຍາວັນ
ເດືອນ 5	ວັນອາທິດ	ເປັນພູະຍາວັນ
ເດືອນ 6 ເດືອນ 7	ວັນຈັນ	ເປັນພູະຍາວັນ
ເດືອນ 8 ເດືອນ 9	ວັນອັງຄານ	ເປັນພູະຍາວັນ

ເດືອນ 10 ເດືອນ 11 ວັນພຸດ ເປັນພູະຍາວັນ

ເດືອນ 12 ວັນປະຫັດ ເປັນພູະຍາວັນ

2. <u>ພູະຍາຍາມ</u>

ພູະຍາຍາມ ຄືຍາມດີວິເສດນັ້ນ ໃນແຕ່ລະວັນທ່ານກຳນົດໄວ້ດັ່ງນີ້ :

- ວັນອາທິດ ຍາມເຊົ້າ ຄື ເວລາ 09.00-10.30 ໂມງ ເປັນພູະຍາຍາມແລ.
- ວັນຈັນ ຍາມທ່ຽງ ຄື ເວລາ 10.30-12.00 ໂມງ ເປັນພູະຍາຍາມແລ.
- ວັນອັງຄານ ຍາມຕູດຊ້າຍ ຄື ເວລາ 12.00-13.30 ໂມງ ເປັນພູະຍາຍາມແລ.
- ວັນພຸດ ຍາມເຊົ້າ ຄື ເວລາ 09.00-10.30 ໂມງ ເປັນພູະຍາຍາມແລ.
- ວັນປະຫັດ ຍາມບ່າຍ ຄື ເວລາ 15.00-16.30 ໂມງ ເປັນພູະຍາຍາມແລ.
- ວັນສຸກ ແຖໃກ້ທ່ຽງ ຄື ເວລາ 10.30-12.00 ໂມງ ເປັນພູະຍາຍາມແລ.
- ວັນເສົາ ຕູດຕັ້ງ ຄື ເວລາ 06.30-07.30 ໂມງ ເປັນພູະຍາຍາມແລ.

ດັ່ງນັ້ນ ເມື່ອທ່ານຕ້ອງການຈະປະກອບພິທີມຸງຄຸນອັນໃດໃນວັນນັ້ນ ຈະໃຫ້ປະເສີດ ຕ້ອງທຳໃຫ້ກົງກັບພູະຍາຍາມດ້ວຍ ຈຶ່ງດີແລ.

1. <u>ໂຄງວັນເກີດ</u>

ໝໍເຖົ້າບູຮານເລົ່າວ່າ ຄົນເກີດມາຢູ່ໃນຫ້ວງເວລາໃຫ່ຍໆ 3 ຢ່າງ ຄື ວັນ ເດືອນ ແລະ ປີ ເພື່ອຈະໄດ້ຊາບວ່າຄົນເກີດວັນໃດ ເດືອນໃດ ແລະປີໃດ ຈະທຳອັນໃດດີ ຈະມີນິດໄສເປັນຢ່າງໃດນັ້ນ ທ່ານໄດ້ ວາງໂຄງໄວ້ດັ່ງນີ້ :

<u>ໂຄງວັນ</u>

ຜູ້ຈະເປັນໝໍດູ ຈະຕ້ອງຮູ້ໂຄງວັນ ຫລື ໂສກວັນດັ່ງນີ້ :

- ທິດຂຸນນາງ
- ຈັນນັກເລງ
- ຄານພໍ່ໝໍ
- ພຸດລ້ຽງສັດ
- ປະຫັດນັກບວດ
- ສຸກພໍ່ຄ້າ
- ເສົາພໍ່ນາ

<u>ອະທິບາຍວ່າ :</u>

- ທິດຂຸນນາງ ໝາຍຄວາມວ່າ ຄົນເກີດວັນອາທິດ ມີນິດໄສຂຸນ ນາງ ຫລື ຊອບຂຸນນາງ ຫລື ມັກຈະໄດ້ຮັບຣາຊການເປັນຂຸນ ນາງ.
- ຈັນນັກເລງ ໝາຍຄວາມວ່າ ຄົນເກີດວັນຈັນ ມີນິດໄສນັກເລງ ເຖິງໃສເຖິງກັນ ຫລື ຊອບຄົນໃຈເຖິງ ຫືລ ມັກຈະເປັນຄົນໃຈເຖິງ ບໍ່ແມ່ນໝາຍຄວາມວ່າເປັນນັກເລງຫົວໄມ້ ແຕ່ໝາຍຄວາມວ່າ ທຳອັນໃດຈິງໃຈຈົນເກີນໄປ ຫລື ຊອບທຳງານເປັນອິດສະລະ.
- ຄານພໍ່ໝໍ ໝາຍຄວາມວ່າຄົນເກີດວັນອັງຄານ ມີນິດໄສເປັນໝໍ ຫລື ຊອບໝໍ ເຊັ່ນ ໝໍຢາ ໝໍຄວາມ(ທະນາຍຄວາມ) ໝໍດູ

(ໂຫນ) ໄດ້ທຸກໜໍ ຫລືຫົວໜໍ ແບບຊອບວາງແຜນໃຫ້ຜູ້ອື່ນທຳ ແຕ່ໂຕເອງຂໍປອດໄພເອົາໄວ້ກ່ອນ ຫລື ອາຊີບໜໍນີ້ຖືກໂສກເຂົາ.

- ພຸດລ້ຽງສັດ ໝາຍຄວາມວ່າຄົນເກີດວັນພຸດນີ້ ມີນິດໄສຊອບລ້ຽງສັດ ຫລື ຊອບສັດ ຫລື ປະກອບອາຊີບກ່ຽວກັບການລ້ຽງສັດຈິ່ງຈະຖືກໂສກ.
- ປະຫັດນັກບວດ ໝາຍຄວາມວ່າຄົນເກີດວັນປະຫັດ ມີນິດໄສໃຊ້ຊີວິດແບບຄຣູ ຫລື ນັກບວດ ຫລື ປະກອບອາຊີບທາງຄຣູ ຫລື ບວດຈິ່ງຈະຕ້ອງໂສກ.
- ສຸກພໍ່ຄ້າ ໝາຍຄວາມວ່າຄົນເກີດວັນສຸກມີນິດໄສຊອບການຄ້າຂາຍ ຫລື ປະກອບອາຊີບດ້ານການຄ້າຂາຍຈິ່ງຈະຖືກໂສກຂອງຄົນເກີດວັນສຸກ.
- ເສົາພໍ່ນາ ໝາຍຄວາມວ່າຄົນເກີດວັນເສົາ ນິຍົມການທຳນາ ຍົກຍ້ອງການທຳນາ ຫລື ປະກອບອາຊີບການກະເສດດ້ານການທຳນາ ຈິ່ງຈະຕ້ອງໂສກເຂົາ ฯ

2. ໂຄງເດືອນເກີດ

ເດືອນເກີດ ເປັນສ່ວນໜຶ່ງ ທີ່ຈະບອກໃຫ້ຮູ້ວ່າເຈົ້າຊະຕາ ຫລື ຄົນເກີດເດືອນນັ້ນໆ ຈະເປັນແນວໃດ ມີໂຄງເດືອນວ່າ :

- ເດືອນຈຽງ (ອ້າຍ -1)	ເມັຍໜຸ່ມເໜົ້າເພິ່ນເຊີຍຊົມ
- ເດືອນຍີ່ (2)	ຫົວຫຍອງຖາມເອົາໜີ້
- ເດືອນ 3	ບອກຊີ້ເພິ່ນກະທຳການ
- ເດືອນ 4	ໃຈກ້າຫານກະທຳບາບ
- ເດືອນ 5	ຕາຍຍ້ອນດາບຊາວເມືອງ
- ເດືອນ 6	ຂັນຄຳຕັ້ງນັ່ງແທ່ນ
- ເດືອນ 7	ໃຊ້ບໍ່ແລ່ນຊຸມປີງ
- ເດືອນ 8	ຖືຄານງ້ຽງພາຍຖືງກັບດາບ

- ເດືອນ 9 ຮູ້ເພິ່ນກໍຖາມບໍ່ຮູ້ເພິ່ນກໍຖາມ
- ເດືອນ 10 ປາດຖະໜາບໍ່ແລ້ວ
- ເດືອນ 11 ບ່າແປ້ວເພາະຄານສິ
- ເດືອນ 12 ຕີກອງຫລວງລຽບເມືອງກິນເຫົ້າລາ.

ອະທິບາຍວ່າ :

1) ເດືອນຈຽງ ເມັຍໜຸ່ມເໜົ້າເພິ່ນເຊີຍຊິມ ໝາຍຄວາມວ່າຄົນເກີດເດືອນອ້າຍ (1) ຖ້າເປັນຊາຍກໍຈັກມີເມັຍງາມ ຖ້າເປັນຍິງກໍຈັກມີຜົວຮູບຫລໍ່.
2) ເດືອນຍີ່ (2) ທົວຫຍອງຖາມເອົາໜີ້ ໝາຍຄວາມວ່າ ຄົນເກີດເດືອນນີ້ໃຈນັກເລງເກີນໄປ ທັງແບບໃຈເຖິງ ແບບລ້ຽງເພື່ອນທັງໆ ທີ່ເງິນໂຕເອງບໍ່ມີ ແລະຊອບໃຈອ່ອນ ມັກຄ້ຳປະກັນຄົນໃຫ້ລະວັງ.
3) ເດືອນ 3 ບອກຊີ້ເພິ່ນກະທຳການ ໝາຍຄວາມວ່າຄົນເກີດເດືອນນີ້ ມີນິດໄສຊອບທຳໂຕເປັນນາຍ ຫລື ມັກຈະໄດ້ເປັນເຈົ້ານາຍຄົນ.
4) ໃຈກ້າຫານກະທຳບາບ ໝາຍຄວາມວ່າຄົນເກີດເດືອນນີ້ໃຈເຖິງກ້າຫານ ກ້າທຳ ແມ່ນແຕ່ສິ່ງທີ່ບໍ່ຄວນກະທຳ ຄວນລະວັງ ຢັບຢັ້ງໃຈໄວ້ໃຫ້ດີ.
5) ຕາຍຍ້ອນດາບຊາວເມືອງ ໝາຍຄວາມວ່າຄົນທີ່ເກີດເດືອນນີ້ມັກຈະເປັນຄົນໃຈຮ້ອນ ທຳອັນໃດຂາດຄວາມຢັ້ງຄິດ ເພາະຜິດພາດຈາກຄວາມຢັ້ງຄິດນີ້ ອາດຈະຖືກຊາວບ້ານລົງປະຊາທັນດ໌(ລົງໂທດ) ຄວນລະວັງໃຫ້ດີ
6) ເດືອນ 6 ຂັບຄາຕັ້ງນັ່ງແທ່ນ ໝາຍຄວາມວ່າຄົນເກີດເດືອນທີກາທຳອັນໃດມັກຈະມີຜູ້ໃຫ່ຍໃຫ້ຄວາມອຸປະຖຳ.

7) ເດືອນ 7 ໃຊ້ບໍ່ແລ່ນຂຸນປີງ ໝາຍຄວາມວ່າຄົນເກີດເດືອນນີ້ ມີນິດໄສເປັນຄົນອືດຊ້າ ອາດຈະບໍ່ກ້າວໜ້າທາງການງານເພາະຄວາມອືດຊ້ານີ້ ດັ່ງນັ້ນຄວນປັບປຸງບຸກຄະລິກກະພາບດ້ວຍ.

8) ເດືອນ 8 ຖືຄານງ້າງພາຍຖິ່ງກັບດາບ ໝາຍຄວາມວ່າຄົນເກີດເດືອນນີ້ມັກຈະມີຄວາມຮອບຄອບດີ ຕຽມການກ່ອນລົງມືສະເໝີ.

9) ເດືອນເກົ້າ ຮູ້ເພິ່ນກໍຖາມ ບໍ່ຮູ້ເພິ່ນກໍຖາມ ໝາຍຄວາມວ່າຄົນເກີດເດືອນນີ້ ເປັນຄົນທີ່ມີນິດໄສທີ່ໜ້າລຳຄານ ຄວນສັງລວມປາກໄວ້ດ້ວຍ.

10) ເດືອນ 10 ປາດຖະໜາບໍ່ແລ້ວ ໝາຍຄວາມວ່າຄົນເກີດເດືອນນີ້ມີຄວາມນິຍົມການປະພັນ ການຄິດ ການຂຽນ ການເພີ້ຝັນຕ່າງໆ.

11) ເດືອນ 11 ບ່າແປ້ວເພາະຄານສີ ໝາຍຄວາມວ່າຄົນເກີດເດືອນນີ້ ເປັນຄົນຈິງໃຈ ເດັດດ່ຽວ ຕັດສິນໃຈແລ້ວຕ້ອງທຳໃຫ້ສຳເລັດ.

12) ເດືອນ 12 ຕີກອງຫລວງລຽບເມືອງກິນເຫົ້າ ໝາຍຄວາມວ່າຄົນເກີດເດືອນນີ້ມີນິດໄສຊອບສະນຸກ ຮັກເພື່ອນ ຈິງໃຈຕໍ່ເພື່ອນ ໆ

3. ໂຄງປີເກີດ

ປີເກີດ ເປັນສ່ວນປະກອບໃຫ່ຍທີ່ສຳຄັນຂອງຊະຕາຊີວິດທຸກຄົນ ໝໍບູຮານທ່ານມີໂຄງ ຫລື ໂສກປີໄວ້ເພື່ອຊາບນິດໄສຂອງຜູ້ເກີດປີນັ້ນໆ ດັ່ງນີ້ :

- ປີຊວດ ທຸກຂ໌ຄະນິດຄະໜີ
- ປີສະຫລູ ພໍກິນ ພໍຢູ່
- ປີຂານ ເປັນດີເມື່ອເຖົ້າ
- ປີເຖາະ ຊ່າງເວົ້າຊ່າງຈາ

- ປີມະໂຣງ ເປັນດີບໍ່ໄຮ້
- ປີມະເສັງ ເປັນຂຸນໃຊ້ທ່ຽວເມືອງ
- ປີມະເມັຍ ເວົ້າເຊີງຂ້າເຊີງຕີ
- ປີມະແມ ມີໃຈອິດໃຈພຽນ
- ປີວອກ ໃຈພະລັນປານມ້າ
- ປີຣະກາ ເຖົ້າແກ່ແລ້ວໄດ້ເມັຍສາວ
- ປີຈໍ ຢູ່ເຍັຍເງິນລ້ານ
- ປີກຸນ ໄດ້ແລ້ວເລົ່າພອຍເສັຍ ໆ

<u>ໂຄງປີເກີດອີກຢ່າງໜຶ່ງ</u>

- ເກີດປີຊວດ ເຂົາໄດ້ຂີ່ໜູ ພູຣະຣາຫູອາຄົມບໍ່ຫຍອກ ເປັນໝໍຜອກປັດເປົ່າເຢົາຢາ ຄົນເກີດມາວິຊາດີເລີດ.
- ເກີດປີສະຫລູ ຂີ່ງົວມາເກີດ ແສນປະເສີດທາງເລົ່າທາງຮຽນ ມີໃຈພຽນສູດມົນຜ່ອງແຜ້ວ ຍັງຄ່ອງແຄ້ວຄອງສິນຄອງທານ.
- ເກີດປີຂານ ຂີ່ເສືອກັ້ງຮົ່ມ ມີຊ້າຍຂົ່ມຖືໂຄບຝັກຄຳ ຄວາມປາກຍຳປານແສງຟ້າແລບ ເວົ້າແຈ້ງແຈບຄຳກ່າວດີເໝາະ.
- ເກີດປີເຖາະ ເວົ້າເຕາະເລາະ ມັນຂີ່ຊຽງໝັ້ງ ຕົວະປາກກັ່ງມັນບໍ່ເປັນການ ມີໂວຫານພໍຄວນແນ່ໆ ຄວາມຈິງແທ້ແມ່ນສະຫລາດແກມໂກງ.
- ເກີດປີມະໂຣງ ຂີ່ນາກຄະຣາດ ສາຍແນນຄາດ ສ້າງໄຮ່ທຳນາຕາມຊະຕາເປັນດີບໍ່ໄຮ້ ໄຖ່ຂ້ອຍໄວ້ປັດກວາດເຮືອນຊານ ບໍຣິວານມີມາທຸກເມື່ອ.
- ເກີດປີມະເສັງ ຂີ່ງູສິງເສື້ອ ເວົ້າເຂົ້າເນື້ອ ຄຳປາກແວນກົງ ໃຈປະສົງເປັນຄົນຮັບໃຊ້ ບໍ່ວ່າໃກ້ ຫລື ວ່າຢູ່ໄກ ວຽກນ້ອຍໃຫ່ຍແມ່ນບໍ່ໃຫ້ເສັຍ.

- ເກີດປີມະເມັຍ ຂີ່ມ້າມາເກີດ ດີເປັນເລີດທາງຮຽນວິຊາ ເປັນໝໍຢາໝໍດູ ໝໍສ່ອງ ດີທຸກຊ່ອງທາງເລື່ອງເປັນໝໍ ເປັນອາຈານທາງຄຣູນັກປາດ ຄວາມສະຫລາດ ໃຈຮ້ອນດັ່ງໄຟ
- ເກີດປີມະແມ ເຂົາໄດ້ຂີ່ແບ້ ດີແທ້ໆ ໃຈອົດໃຈພຽນ ຮຽນອັນໃດດີໄປບໍ່ຫຍອກ.
- ເກີດປີວອກ ກັບກອກຄືລິງ ການເໜັງຕີງພະລັນປານມ້າ ບໍ່ຢູ່ລ້າທັງປາກຕີນມື ເວົ້າໃຫ້ຄືຕະຫລົກຕະແຫລກ ທຸກພະແນກທາງດ້ານວາຈາ.
- ເກີດປີຣະກາ ຂີ່ໄກ່ຜູ້ແກ້ວ ເກີດມາແລ້ວເດີນຫລົ້ນເມືອງຄົນ ສັບປະດົນມາຍາຫລາຍຫລາກ ເຖົ້າແກ່ແລ້ວພອຍໄດ້ເມັຍສາວຄວາມສຳຫາວຕົວະເປັນດີເກັ່ງ ເວົ້າລວດເລັ້ງປະຈົບສໍພໍ.
- ເກີດປີຈໍ ໄດ້ແກ່ສັດໜ້າງໍຂີ່ໝາມາເກີດ ມັນບໍ່ປະເສີດໃນທາງປັນຍາ ເພາະວ່າສຸນັກຂາ ພາເດີນພາຍ່າງ ມັນຈຶ່ງຫ່າງຊັບສິນເປັນທຸນ.
- ເກີດປີກຸນ ຂີ່ໝູມາເກີດ ມັນບໍ່ເລີດທາງດ້ານຊັບສິນ ມັນບໍ່ມີມູນເດີມຂອງເກົ່າ ໄດ້ແລ້ວເລົ່າພອຍຕົກພອຍເສັຍ ເປັນນຳດວງຊະຕາຂີ່ໝູມາເກີດ.

<u>ອະທິບາຍໂຕງປີເກີດ ໜ້າ163</u>

1) ປີຊວດ ທຸກຂ໌ຄະນິດຄະໜີ່ ໝາຍຄວາມວ່າຄົນເກີດປີນີ້ບໍ່ຄ່ອຍຢູ່ມີສຸກ ຊອບທຳ ຊອບແກ້ໄຂຊີວິດ ຈຶ່ງບໍ່ຢູ່ສະບາຍ ຄວາມທຸກໃນທີ່ນີ້ຊອບເຮັດວຽກງານ ບໍ່ກົວລຳບາກ ບໍ່ແມ່ນວ່າ "ທຸກຈົນ"
2) ປີສະຫລູ ພໍກິນພໍຢູ່ ໝາຍຄວາມວ່າຄົນເກີດປີນີ້ມີພື້ນເພອັດທະຍາໄສແລ້ວເປັນຄົນບໍ່ໂລບ ແລະຍັງມີນ້ຳໃຈເພື່ອໄວ້ໃຫ້ຄົນອື່ນດ້ວຍ ເຊັ່ນ ໄດ້ຂອງກິນກໍແບ່ງໄວ້ພໍກິນໂຕເອງ ແລ້ວເຫລືອໄວ້ໃຫ້ໝູ່ເພື່ອນ ເປັນຄົນກຽດຊັງສ່ວນເກີນ.
3) ປີຂານ ເປັນດີເມື່ອເຖົ້າ ໝາຍຄວາມວ່າວຽກງານທີ່ຄົນເກີດປີນີ້ເຮັດນັ້ນ ສິ່ງຜົນຊ້າ.

4) ປີເຖາະ ຊ່າງເວົ້າຊ່າງຈາ ໝາຍຄວາມວ່າຄົນເກີດປີນີ້ຈະໄດ້ຮັບຄວາມຍົກຍ້ອງ, ຈະໄດ້ຮັບຄວາມສຳເລັດຈາກການເວົ້າ ແຕ່ກໍ່ໃຫ້ລະວັງການເວົ້າ ຈະພາເສັຍດ້ວຍເຊັ່ນກັນ.
5) ປີມະໂຣງ ເປັນດີບໍ່ໄຮ້ ໝາຍຄວາມວ່າຄົນເກີດປີນີ້ເປັນຄົນບໍ່ແລ້ງນ້ຳໃຈ ເຮັດອັນໃດມີຄວາມຮັບຜິດຊອບ ຖານະກໍ່ໃຊ້ໄດ້.
6) ປີມະເສັງ ເປັນຂຸນໃຊ້ຫ່ງວເມືອງ ໝາຍຄວາມວ່າຄົນເກີດປີນີ້ເປັນຄົນຊອບຊ່ອຍເຫລືອສ່ວນລວມ ຊອບພໍ່າເພັງສາທາຣະນະປະໂຫຍດ.
7) ປີມະເມັຍ ເວົ້າເຊິງຂ້າເຊິງຕີ ໝາຍຄວາມວ່າເປັນຄົນຈິງໃຈໃຜຈະຫລອກບໍ່ໄດ້ ເວົ້າດ້ວຍອາຣົມແຫ່ງຄວາມຈິງໃຈ ເມື່ອໃຜຟັງເຂົ້າຈຶ່ງມີຄວາມຄິດວ່າເໝືອນຈະຂ້າຈະແກງ ແຕ່ຄົນເກີດປີນີ້ບໍ່ມີຄວາມຮ້າຍເຊັ່ນນັ້ນ.
8) ປີມະແມ ໃຈອົດໃຈພຽນ ໝາຍຄວາມວ່າ ຄົນເກີດປີນີ້ ໜັກເອົາເບົາສູ້ ຮັບປາກກັບຜູ້ໃດແລ້ວໄວ້ໃຈໄດ້ ຈຶ່ງຂໍແນະຄົນເກີດປີນີ້ວ່າ ຢ່າໄປຄົບຄົນເຕາະແຫລະ ແລະຢ່າໄປຮັບປາກກັບຄົນງ່າຍໆ ເພາະຖ້າຮັບປາກແລ້ວ ທ່ານຈະລຳບາກກ່ວາຄົນອື່ນເພາະເຂົາຈະເລັ່ງໃຫ້ເຮັດ.
9) ປີວອກ ໃຈພະລັນປານມ້າ ໝາຍຄວາມວ່າຄົນເກີດປີນີ້ມີຄວາມຄິດສັບໄວ ຮັກສາເວລາຫລາຍກວ່າຄວາມຖືກຕ້ອງ ກ່າວຄື ກົວເສັຍເວລາຕອບເອົາໄວ້ກ່ອນ ຖືກບໍ່ຖືກຄ່ອຍອະທິບາຍນຳຫລັງທານອງນັ້ນ ແຕ່ເຂົາກໍ່ຫາທາງອອກໄດ້ດີ.
10) ປີຣະກາ ເຖົ້າແລ້ວໄດ້ມີສາວ ໝາຍຄວາມວ່າ ຄົນເກີດປີນີ້ ທັງຊາຍແລະຍິງເປັນຄົນຫົວໃຈບໍ່ແກ່ ທັງນີ້ບໍ່ໄດ້ໝາຍຄວາມວ່າເຈົ້າຊູ້ ແຕ່ໝາຍຄວາມວ່າຄົນເກີດປີນີ້ມອງທຸກຢ່າງໃຫ້ໂສພາດັ່ງນັ້ນເຂົາໄປສູ່ສັງຄົມໃດຈຶ່ງເຮັດໃຫ້ສັງຄົມນັ້ນ ທີ່ປະຊຸມນັ້ນຄື້ນເຄັງ.
11) ປີຈໍ ຢູ່ເຢັຍເງິນລ້ານ ໝາຍຄວາມວ່າຄົນເກີດປີນີ້ແມ່ນຈະຈົນເງິນໃນບາງຄັ້ງ ແຕ່ບໍ່ຈົນທາງຄວາມຄິດ ດັ່ງນັ້ນເຂົາຈຶ່ງສາມາດ

ຫາເງິນໄດ້ ແລະສ້າງໂຕໄດ້ ດັ່ງຄຳບູຮານວ່າ " ຖ້າບໍ່ຈິນໃຈ ທຸກຢ່າງຈະບໍ່ຈົ້ມ" .

12) ປີກຸນ ໄດ້ແລ້ວເລົ່າພອຍເສັຍ ໝາຍຄວາມວ່າ ຄົນເກີດປີນີ້ ບໍ່ເປັນຄົນເກັບອາຣົມ ບໍ່ຜູກອາຄາດ ຮູ້ແພ້ ຮູ້ຊະນະ ຮູ້ອະໄພ ຮູ້ທັນໂລກະທັມທີ່ວ່າ ມີໄດ້ກໍເສັຍໄດ້ ກົງກັບພາສິດທີ່ວ່າ "ໄດ້ບໍ່ເສັຍ ບໍ່ມີບ່ອນໄວ້ ຢືມບໍ່ໄຊ້ ເປັນໜີ້ເທົ່າຕາຍ"

ຂໍຝາກຄະຕິເຕືອນໃຈດ້ວຍວ່າ "ຄົນທີ່ພາຍເຮືອ ຍ່ອມຈະນຳເຮືອໄປສູ່ທາງທີ່ຕົນປະສົງໄດ້ ບໍ່ວ່າຈະຕາມນ້ຳ ຫລື ທວນນ້ຳ ແຕ່ຖ້າຄົນບໍ່ພາຍເຮືອກໍຍ່ອມແລ້ວແຕ່ກະແສນ້ຳຈະພັດໄປ " ຄືດປຽບທຽບລະຫວ່າງຄົນເຮັດວຽກຕາມແຜນ ກັບຄົນປ່ອຍຊີວິດຕາມດວງເອົາເອງ ໆ

<u>ໂຕງວັນປູກພືດບູຮານ</u>

1. ວັນອາທິດ ເປັນເຫົ້າງຣາກທົວດີ : ໃຫ້ປູກພືດທີ່ເປັນຫົວ ເຊັ່ນ ຂີງ ຂ່າ ເຜືອກ ມັນ ມັນຕົ້ນ ຫອມບົ່ວ ຫົວກະທຽມ ໆລໆ
2. ວັນຈັນ ເປັນເຄືອຣິຍາວດີ້ວ : ໃຫ້ປູກພືດທີ່ເປັນເຄືອ ເຊັ່ນ ໝາກອຶ ໝາກແຕງ ໝາກໂຕ່ນ ໝາກໂມ ໝາກຖົ່ວ ໆລໆ
3. ວັນອັງຄານ ເປັນໃບພົ້ວດີກໜາ : ໃຫ້ປູກພືດທີ່ໃຊ້ໃບເປັນປະໂຫຍດ ເຊັ່ນ ໃບຢາ ໃບມອນ
4. ວັນພຸດ ເປັນດອກຫວາ ບານບໍ່ເສົ້າ : ໃຫ້ປູກໄມ້ດອກ ເຊັ່ນ ດອກມະລິ (ມະລິຊ້ອນ) ພຸດທະຮັກສາ ດອກແຄ ດອກບົວຫລວງ ໆລໆ
5. ວັນປະຫັດ ເປັນແຕ່ເຫົ້າງາ ເທົ້າເຖິງປາຍ : ໃຫ້ປູກພືດທີ່ໃຊ້ຮວງ ເຊັ່ນ ເຂົ້າ ເຂົ້າຟ່າງ ເຂົ້າສາລີ ໆລໆ
6. ວັນສຸກ ເປັນໝາກຫລາຍເຫລືອແທ່ລ : ໃຫ້ປູກພືດທີ່ໃຊ້ຜົນ ເຊັ່ນ ໝາກມີ້ ໝາກມ່ວງ ສົ້ມໂອ ໝາກທັນ ລະມຸດ ລຳໄຍ ລິ້ນຈີ່ ລາງສາດ ໆລໆ

7. ວັນເສົາ ເປັນຕົ້ນແກ່ ເຫລືອແຕ່ລາ : ໃຫ້ປູກໄມ້ຂາຍ ເຊັ່ນ ຢູຄາລິບຕັດ ປ່ານປໍ ໆລໆ

ການດູຂອງຫາຍແບບງ່າຍໆ

ສິດທິກາຣິຍະ ທ່ານບຸຣານາຈານກ່າວໄວ້ວ່າ ຫາກຄົນ, ຂອງ ຫລື ສັດຫາຍ ມີວິທີການດູ ແລະທຳນາຍເລື້ອງນີ້ໄດ້ 2 ແບບ ຄື :

1. ແບບຈັບຍາມ 3 ຕາ

ກ່ອນອື່ນເຮົາຕ້ອງມາຮຽນຮູ້ເລື້ອງຍາມ 3 ຕາກ່ອນ ຄື: ກາຈັບຫລັກ, ໄມ້ທັກທັບທາງ, ນົກຍາງຄາບໝີ. ທັງ 3 ຢ່າງນີ້ ມີການດູ ແລະ ການນັບຢ່າງໃດ ອ່ານໃຫ້ໝົດ ແລ້ວທ່ານຈະຮູ້ເອງ.

ຕົວຢ່າງຍາມ 3 ຕາ



ຄຳອະທິບາຍ

- ຖ້າຕົກເລກ 1 ຄື ກາຈັບຫລັກ ໝາຍຄວາມວ່າຂອງນັ້ນຈະຢູ່ກັບທີ່ ຫລື ບໍຣິເວນທີ່ຕົກນັ້ນ ບໍ່ໄດ້ເຄື່ອນທີ່ໄປໃສ ໃຫ້ຫາພາຍໃນບ້ານ ຫລື ບໍຣິເວນທີ່ຂອງຕົກນັ້ນຈະເຫັນ.
- ຖ້າຕົກເລກ 2 ໄມ້ທັກທັບທາງ ໝາຍຄວາມວ່າ ຂອງນັ້ນໄດ້ເຄື່ອນທີ່ໄປແລ້ວ ຈະມີຄົນເອົາໄປ ແລະເອົາອັນໃດອັນໜຶ່ງປົກໄວ້ ຫລື ບໍ່ກໍຫາຍວ່າຈະເຫັນແຕ່ຕ້ອງໃຊ້ເວລາແດ່.

- ຖ້າຕົກເລກ 3 ຄືນິກຍາງຄາບໜີ ໝາຍຄວາມວ່າຖືກຂະໂມຍເອົາໄປໄກແລ້ວ ຂອງນັ້ນຈະບໍ່ໄດ້ຄືນເລີຍ.

ຖ້າດູຄືນປ່ອຍກໍໃຫ້ຖືຕາມເກນດູຂອງຫາຍນີ້.

ວິທີດູ

ການດູຍາມ 3 ຕານີ້ ທ່ານໃຫ້ຖືຈັນທະຣະຄະຕິ ຄື ວັນຂ້າງຂຶ້ນ-ຂ້າງແຮມ ເປັນຫຼັກ ຄົນມາດູໝໍກັບເຮົາວັນໃດ ຂ້າງຂຶ້ນ ຫລື ຂ້າງແຮມ ກໍໃຫ້ນັບຈາກວັນຂຶ້ນ ຫລື ແຮມ 1 ຄ່ຳ ມາຈົນເຖິງວັນທີ່ເຂົາມາດູ. ຖ້າຂ້າງຂຶ້ນ ໃຫ້ນັບຈາກເລກ 1 ວຽນໄປເລກ 2 ແລະວຽນໄປເລກ 3 ແລ້ວວຽນມາເລກ 1-2-3 ອີກ ຈົນເຖິງວັນທີ່ເຂົາມາດູໝໍກັບເຮົາ ຕົກເລກໃດ ໃນ 1-2-3 ນັ້ນ ໃຫ້ທາຍຕາມນັ້ນ (ຕາມອະທິບາຍໄວ້ຂ້າງຕົ້ນ)

ແຕ່ຖ້າເປັນຂ້າງແຮມ ໃຫ້ເລີ່ມນັບ 1 ລົງທີ່ເລກ 2 ແລ້ວວຽນໄປເລກ 3 ວຽນໄປເລກ 1-2-3 ຈົນເຖິງວັນທີ່ເຂົາມາດູໝໍກັບເຮົາ ຕົກເລກອັນໃດໃຫ້ທາຍຕາມເລກນັ້ນ ແລະຂໍຢ້ຳຄວາມເຂົ້າໃຈວ່າ ຂອງຈະຫາຍວັນໃດບໍ່ຕ້ອງກັງວົນ ໃຫ້ຖືເອົາວັນມາດູໝໍເປັນຫລັກ ຄື ນັບຈາກວັນ 1 ຄ່ຳມາ ເຖິງວັນທີ່ເຂົາມາຫາເຮົາ ຕົກເລກອັນໃດແຫ່ງເລກ 3 ໂຕ ໃນ 3 ຕານັ້ນ ໃຫ້ທາຍຕາມນັ້ນ.

ຕົວຢ່າງຂ້າງຂຶ້ນ

ສົມມຸດວ່າ ຂອງຫາຍຕັ້ງແຕ່ແຮມ 14 ຄ່ຳຂອງເດືອນທີ່ແລ້ວແຕ່ເຂົາມາດູໝໍວັນຂຶ້ນ 6 ຄ່ຳ ເດືອນຖັດມາ ເຮົາກໍດູໂດຍນັບວັນຂຶ້ນ 1 ຄ່ຳ ລົງທີ່ເລກ 1 ຂຶ້ນ 2 ຄ່ຳ ລົງທີ່ເລກ 2 ຂຶ້ນ 3 ຄ່ຳ ລົງທີ່ ເລກ 3 ຂຶ້ນ 4 ຄ່ຳ ລົງທີ່ເລກ 1 ຂຶ້ນ5 ຄ່ຳ ລົງທີ່ເລກ 2 ຂຶ້ນ 6 ຄ່ຳ ລົງທີ່ເລກ 3 ຕົກນິກຍາງຄາບໜີ ທາຍວ່າບໍ່ໄດ້ຄືນແລ.

ຂໍຢ້ຳອີກວ່າ ແມ່ນຂອງຫາຍໃນວັນຂ້າງຂຶ້ນ ຈະເປັນເທົ່າໃດຄ່ຳກໍຕາມ ບໍ່ຕ້ອງກັງວົນ ໃຫ້ນັບວັນຂຶ້ນໜຶ່ງຄ່ຳລົງທີ່ເລກ 1 ຂຶ້ນສອງຄ່ຳ

ລົງທີ່ເລກ 2 ຂຶ້ນສາມຄ່ຳລົງທີ່ເລກ 3 ຂຶ້ນສີ່ຄ່ຳລົງທີ່ເລກ 1 ຕົກເລກອັນໃດກໍທຳນາຍຕາມນັ້ນ.

ຕົວຢ່າງຂ້າງແຮມ

ສົມມຸດຂອງຫາຍຂ້າງຂຶ້ນ ແຕ່ເຂົາມາດູຂ້າງແຮມ ວັນແຮມຫ້າຄ່ຳ ເຮົາກໍໃສ່ສູດໝໍດູຂອງເຮົາ ຄືເອົາວັນແຮມ 1ຄ່ຳລົງທີ່ເລກ 2 ແຮມສອງຄ່ຳລົງທີ່ເລກ 3 ແຮມສາມຄ່ຳລົງທີ່ເລກ 1 ແຮມສີ່ຄ່ຳລົງທີ່ເລກ 2 ແຮມຫ້າຄ່ຳລົງທີ່ເລກ 3 ຕົກນົກຍາງຄາບໜີ ຫາຍວ່າບໍ່ໄດ້ຄືນແລ.

ເຂົາມາຫາເທົ່າໃດຄ່ຳກໍໃຫ້ນັບດັ່ງກ່າວ ໄປຈົນເຖິງວັນທີ່ເຂົາມາຫາ ຕົກເລກໃດໃນສາມຕານັ້ນ ກໍໃຫ້ທາຍຕາມນັ້ນ.

2. ແບບກາລະຈັກຣ໌

ແບບນີ້ ເປັນແບບລະອຽດ,ສັບຊ້ອນ,ເຂົ້າໃຈຍາກ ແຕ່ທາຍໄດ້ແມ່ນສາມາດບອກໄດ້ວ່າຂອງນັ້ນຢູ່ທີ່ໃດ ຜູ້ຍິງ ຫລື ຜູ້ຊາຍເອົາໄປ,ຢູ່ບ່ອນໃດ, ແປສະພາບແລ້ວຫລືຍັງ, ເອົາໄປເຊື່ອງໄວ້ທີ່ລຸ່ມຕ່ຳ ຫລືທີ່ສູງຢ່າງໃດ, ແຂວນຢູ່ ຫລືວາງຢູ່, ຝັງຢູ່ໃນດິນ ຫລື ຕົກຢູ່ໃນນ້ຳ, ເທົ່າໃດວັນຈິ່ງຈະໄດ້ຮູ້ຂ່າວ, ຜູ້ໃຫ້ຂ່າວເປັນຍິງ ຫລື ເປັນຊາຍ, ເປັນຍາດ ຫລືເປັນຄົນຮູ້ຈັກກັນ, ເປັນຄົນສູງ ຄົນຕ່ຳ ຄົນດຳ ຄົນຂາວ ຄົນຕຸ້ຍ ຄົນຈ່ອຍ ເປັນຕົ້ນ. ແຕ່ທ່ານຕ້ອງຮຽນຮູ້ກົດເກນດັ່ງນີ້ :

2.1 ຊື່ຍາມຕາມເວລາໃນວັນນັ້ນ ໆ ເຊັ່ນ :

(ກ) ວັນອາທິດ ມີ 8 ຍາມ ຄື :

ຊື່ຍາມ	ຈາກເວລາເຖິງເວລາ
- ຍາມສຸຣິຍະ(ອາທິດ)	06.00-07.30 ມ.
- ຍາມສຸກຣະ(ສຸກຣ໌)	07.30-09.00 ມ.
- ຍາມພຸທ(ພຸດ)	09.00-10.30 ມ.

- ຍາມຈັນເທົາ(ຈັນ)	10.30-12.00 ມ.
- ຍາມເສົາຣີ(ເສົາ)	12.00-13.30 ມ.
- ຍາມຄະຣຸ(ປະຫັດ)	13.30-15.00 ມ.
- ຍາມພຸມມະ(ອັງຄານ)	15.00-16.30 ມ.
- ຍາມສຸຣິຍະ(ອາທິດ)	16.30-18.00 ມ.

(ຂ) ວັນຈັນ ມີ 8 ຍາມ ຄື :

ຊື່ຍາມ	ຈາກເວລາເຖິງເວລາ
- ຍາມ ຈັນເທົາ	06.00-07.30 ມ.
- ຍາມ ເສົາຣີ	07.30-09.00 ມ.
- ຍາມ ຄະຣຸ	09.00-10.30 ມ.
- ຍາມ ພຸມມະ	10.30-12.00 ມ.
- ຍາມ ສຸຣິຍະ	12.00-13.30 ມ.
- ຍາມສຸກະຣະ	13.30-15.00 ມ.
- ຍາມ ພຸທະ	15.00-16.30 ມ.
- ຍາມ ຈັນເທົາ	16.30-18.00 ມ.

(ຄ) ວັນອັງຄານ ມີ 8 ຍາມ ຄື :

ຊື່ຍາມ	ຈາກເວລາເຖິງເວລາ
- ຍາມ ພຸມມະ	06.00-07.30 ມ.
- ຍາມ ສຸຣິຍະ	07.30-09.00 ມ.
- ຍາມ ສຸກະຣະ	09.00-10.30 ມ.
- ຍາມ ພຸທະ	10.30-12.00 ມ.
- ຍາມ ຈັນເທົາ	12.00-13.30 ມ.
- ຍາມ ເສົາຣີ	13.30-15.00 ມ.
- ຍາມ ຄະຣຸ	15.00-16.30 ມ.
- ຍາມ ພຸມມະ	16.30-18.00 ມ.

ສຳລັບວັນພຸດ, ວັນປະຫັດ, ວັນສຸກ ແລະວັນເສົາ ເຊິ່ງບໍ່ໄດ້ເຮັດເປັນຕົວຢ່າງນັ້ນ ກໍໃຫ້ເຮັດເໝືອນວັນອາທິດ, ຈັນ ແລະອັງຄານ ຕາມທີ່ໄດ້ເຮັດຕົວຢ່າງໄວ້ໃຫ້ ກ່າວຄື ໃຫ້ເອົາວັນນັ້ນຂຶ້ນຕົ້ນແລ້ວໝຸນໄປຕາມຊື່ ແລະເວລາດັ່ງຕົວຢ່າງ ເຊັ່ນ ວັນພຸດ ກໍຕັ້ງຍາມພຸດທີ່ເວລາ 06.00-07.30 ມ. ວຽນໄປທີ່ຍາມຈັນເທົາ, ເສົາຣີ, ຄະຣຸ ໆລໆ ສຳລັບເວລາກໍປ່ຽນໄປທຸກຊົ່ວໂມງເຊິ່ງນັ້ນເອງ.

ອັນໜຶ່ງ ສຳລັບຊື່ໃນ 8 ຍາມນັ້ນ ຈະມີຊື່ທີ່ພ້ອງກັນຢູ່ໃນຍາມສຸດທ້າຍ ເຊັ່ນ ວັນອາທິດ ຍາມທີ່ 1 ເວລາ 06.00-07.30 ກໍຄືຍາມສຸຣິຍະ ຍາມ 8 ສຸດທ້າຍກໍຄືເວລາ 16.30-18.00 ມ ນັ້ນ ເປັນຍາມສຸຣິຍະອີກນັ້ນ ແທ້ຈິງຄືວັນຣາຫູ ຫລືຍາມຣາຫູນັ້ນເອງ ສຳລັບວັນອື່ນໆ ກໍໃຫ້ເຂົ້າໃຈເຊັ່ນດຽວກັນ ຄື ເໝືອນກັນກັບວັນອາທິດນັ້ນເອງ.

2.2 ອິດທິພົນຂອງຍາມ

ຍາມທັງ 8 ນັ້ນ ມີອິດທິພົນຕາມລາຍຊື່ທີ່ສົມເຄາະຫ໌ (ໃຫ້ຄຸນ) ແລະບາບເຄາະ (ໃຫ້ໂທດ) ເຊັ່ນ ຍາມສຸຣິຍະ (ອາທິດ) ຍາມພຸມມະ (ອັງຄານ) ຍາມເສົາຣີ (ເສົາ) ແລະຍາມທີ່ 8 ທີ່ຊື່ຊ້ຳກັນກັບຍາມຕົ້ນນັ້ນ ຄື ຍາມຣາຫູ (ພຸດກາງຄືນ) ຖ້າວັນທີ່ເຂົາມາດູຂອງຫາຍ ເວລາທີ່ເຂົາມາດູ ໄປກົງກັບຍາມທີ່ເປັນບາບເຄາະຫ໌ນີ້ ທ່ານວ່າໄດ້ຄືນຍາກ ຖ້າດູກ່ຽວກັບຄົນປ່ວຍ ກໍສະແດງວ່າ "ຫາຍຍາກ" ຍາມຈັນເທົາ (ຈັນທຣ໌) ຍາມພຸທະ (ພຸດ) ຍາມຄະຣຸ (ປະຫັດ) ຍາມສຸກະຣະ (ສຸກຣ໌).

ຖ້າວັນທີ່ເຂົາມາດູຂອງຫາຍ ເວລາໄປກົງກັບຍາມທີ່ເປັນສົມເຄາະ ທ່ານວ່າ "ໄດ້ຄືນ" ຖ້າດູຄົນປ່ວຍກໍຫາຍວ່າ "ຮັກສາຫາຍໄດ້"

2.3 ອິດທິພົນຂອງທັກສາ

ທັກສານີ້ ຈະບອກທ່ານໄດ້ວ່າຂອງນັ້ນຢູ່ທີ່ໃດ (ຢູ່ໃນຖ້ຳ ຫລື ເທິງບົກ, ຢູ່ໃກ້ກັບອັນໃດ, ຫ້ອຍຢູ່ ຫລື ວາງຢູ່ ໆລໆ ຢູ່ທາງທິດໃດ ຈະໄດ້ຍາກ ຫລື ໄດ້ງ່າຍ, ຫລືບໍ່ໄດ້ເລີຍ) ຖ້າທ່ານຢາກຮູ້ອິດທິພົນ ຂອງທັກສາ ທ່ານຈະຕ້ອງຮູ້ຈັກ ແລະເຂົ້າໃຈຄວາມໝາຍສ່ວນປະ ກອບຂອງທັກສານັ້ນໆ ກັບຍາມດັ່ງກ່າວໃນຂໍ້ 2.2 ກ່ອນ ສ່ວນປະ ກອບຂອງທັກສາມີດັ່ງນີ້:

(ກ) ການແບ່ງຫ້ອງເວລາໃນຈັກຣຣາສີ ເຊັ່ນ ເຊິ່ງຈະຕ້ອງມີສ່ວນປະ ກອບອື່ນກອກລົງໃນຊ່ອງຫ້ອງເວລານັ້ນ

(ຂ) ຊື່ແລະອິດທິພົນຂອງດວງດາວຕ່າງໆ ທີ່ຈະລົງໃນຊ່ອງຫ້ອງເວ ລາໃນຈັກຣຣາສີ ຕາມເວລາໃນຍາມນັ້ນໆເຊັ່ນ ດາວອາທິດ= 1, ດາວຈັນ= 2, ດາວອັງຄານ= 3, ດາວພຸທ= 4. ດາວປະຫັດ= 5, ດາວສຸກຣ໌= 6, ດາວເສົາຣ໌= 7, ດາວຣາຫູ= 8 ເຊິ່ງເປັນສ່ວນປະ ກອບໜຶ່ງທີ່ສຳຄັນໃນການທຳນາຍເຊັ່ນ:

1) ທາຍສະຖານທີ່ ໝາຍເຖິງຂອງຈະຕົກຢູ່ທີ່ໃດ ເຊັ່ນ:

ອາທິດ ຫລື ເລກ 1 ຕົກທາດໄຟ ເຊິ່ງອາດຈະທຳນາຍ ວ່າ ຕົກຢູ່ໃກ້ກອງໄຟ ຫລືໃນຄົວໄຟ ຫລື ອັນໃດທຳນອງ ນັ້ນ.

ຈັນ ຫລື ເລກ 2 ຕົກທາດດິນ ເຊິ່ງອາດຈະທຳນາຍ ວ່າ ຢູ່ເທິງດິນບໍ່ແມ່ນຕົກນ້ຳ.

ອັງຄານ ຫລື ເລກ 3 ຕົກທາດລົມ ເຊິ່ງອາດຈະທຳນາຍວ່າແຂວນ ຫລື ຫ້ອຍຢູ່ເປັນຕົ້ນ.

ພຸດ ຫລື ເລກ 4 ຕົກທາດນ້ຳ ເຊິ່ງອາດຈະທຳນາຍວ່າ ຢູ່ໃນນ້ຳ ຢູ່ໃກ້ນ້ຳ ຫລື ຢູ່ຣິມນ້ຳ ເປັນຕົ້ນ.

ປະຫັດ ຫລື ເລກ 5 ຕົກທາດດິນ ເຊິ່ງອາດຈະທຳນາຍໄດ້ວ່າ ຢູ່ ເທິງບົກ ຫລື ຢູ່ທີ່ສູງກໍໄດ້.

ສຸກຣ໌ ຫລື ເລກ 6 ເຊິ່ງອາດຈະທຳນາຍ ເໝືອນເລກ 4 (ດາວ
ພຸທ).

ເສົາຣ໌ ຫລື ເລກ 7 ຕົກທາດໄຟ ເຊິ່ງອາດຈະທຳນາຍເໝືອນເລກ
1 (ອາທິຕຍ໌)

ຣາຫູ ຫລື ເລກ 8 ຕົກທາດລົມ ເຊິ່ງອາດຈະທຳນາຍເໝືອນເລກ
3 (ດາວອັງຄານ).

2) ທາຍທິດ ໝາຍເຖິງຂອງຈະຢູ່ທິດໃດເຊັ່ນ :

- ຕົກເລກ 1 ຫລື ອາທິຕຍ໌ ຂອງຢູ່ທິດອີສານ
- ຕົກເລກ 2 ຫລື ຈັນທຣ໌ ຂອງຢູ່ທິດບຸຣະພາ
- ຕົກເລກ 3 ຫລື ອັງຄານ ຂອງຢູ່ທິດອາຄະເນ
- ຕົກເລກ 4 ຫລື ພຸທ ຂອງຕົກຢູ່ທີ່ທັກຂິນ
- ຕົກເລກ 5 ຫລື ປະຫັດ ຂອງຕົກຢູ່ທີ່ປັດສິມ
- ຕົກເລກ 6 ຫລື ສຸກຣ໌ ຂອງຕົກຢູ່ທີ່ອຸດອນ
- ຕົກເລກ 7 ຫລື ເສົາຣ໌ ຂອງຕົກຢູ່ທິດທໍຣະດີ
- ຕົກເລກ 8 ຫລື ຣາຫູ ຂອງຕົກຢູ່ທີ່ທິດປັດສິມ

3) ທາຍວ່າໄດ້ ຫລື ບໍ່ໄດ້ ໝາຍຄວາມວ່າຂອງນັ້ນຈະໄດ້ຄືນຫລືບໍ່
ໃຫ້ດູສ່ວນປະກອບໃນທັກສາ 8 ຢ່າງຄື :

ບໍຣິວານ ຖ້າຕົກນີ້ ທາຍວ່າເພື່ອນຝູງເອົາໄປ ອາດໄດ້ຄືນ ຖ້າຄົນ
ປ່ວຍກໍທາຍວ່າບໍ່ຕາຍ.

ອາຍຸ ຖ້າຕົກນີ້ກໍທາຍວ່າ ຖ້າຄົນທາຍກໍທາຍວ່າກຳລັງປ່ວຍ ຖ້າ
ຂອງທາຍກໍທາຍວ່າຖືກສັກຂາດ ຫລື ໄຟໄໝ້ ຫລື ຖືກ
ແປສະພາບແລ້ວ.

ເດຊ ຖ້າຕົກນີ້ທາຍວ່າ ໄດ້ຄືນ ຖ້າຄົນປ່ວຍກໍທາຍ

ສຣີ ຖ້າຕົກນີ້ດີ ທາຍວ່າໄດ້ຄືນ ຖ້າຄົນປ່ວຍກໍທາຍແນ່ນອນ

ມູລະ ຖ້າຕົກນີ້ທາຍວ່າ ຂອງຢູ່ທີ່ເດີມ ຄົນຮູ້ຈັກກັນຈະໃຫ້ຂ່າວ

ອຸດສາຫະຖ້າຕົກນີ້ ແລະກົງກັບຍາມສຸຣິຍະ, ພູມມະ ແລະເສົາຣີ ທາຍໄດ້ວ່າບໍ່ໄດ້ຄືນ ແຕ່ຖ້າບໍ່ກົງກັບຍາມດັ່ງກ່າວທາຍ ວ່າຈະໄດ້ຄືນ ແຕ່ໃຫ້ພະຍາຍາມຫາຢ່າຂີ້ຄ້ານ ຖ້າຄົນ ປ່ວຍກໍທາຍ.

ມົນຕຣີ ຖ້າກົງກັບຍາມຣາຫູ ຫລື ເລກ 8 ຖ້າຂອງຫາຍກໍທາຍວ່າ ບໍ່ເຫັນ ຖ້າຄົນໄຂ້ກໍທາຍວ່າ "ຕາຍ"

ກາລະກິນີຖ້າຕົກນີ້ທາຍວ່າໄດ້ຍາກ ຖ້າຍິ່ງຕົກກັບຍາມສຸຣິຍະ, ພຸມ ມະ, ເສົາຣີ ແລະຣາຫູ ແມ່ນບໍ່ໄດ້ຄືນເລີຍ ຖ້າດູຄົນປ່ວຍ ກໍທາຍວ່າ "ຕາຍຢ່າງດຽວ"

ເກນການທຳນາຍ ຖ້າຕົກກາລະກິນີ ໝາຍຄວາມວ່າ "ແຢ້ເຕັມທີ" ຖ້າຕົກອາຍຸ ໝາຍຄວາມວ່າ "ແຢ້ຮອງລົງໄປ" ຖ້າຕົກສຣີ ໝາຍ ຄວາມວ່າ"ດີແທ້" ຖ້າຕົກມົນຕຣີ ແລະເດຊ ໝາຍຄວາມ ວ່າ "ດີຮອງ" ຖ້າຕົກມູລະ ແລະ ອຸດສາຫະ ໝາຍຄວາມ ວ່າ "ດີປານກາງ"

ວິທີລົງລາຍລະອຽດໃນຫ້ອງແຫ່ງເວລາ

ດັ່ງໄດ້ກ່າວມາແລ້ວວ່າ ຫ້ອງແຫ່ງເວລາ ຫລື ຈັກຣຣາສີນັ້ນ ມີລາຍ ລະອຽດທີ່ຈະຕ້ອງລົງ ຄື ວັນ, ຍາມ, ທາດ ແລະຊື່ທັກສາ ເຊັ່ນ ຕົວ ຢ່າງຂອງທີ່ຫາຍໃນວັນອາທິດ ເວລາ 07.00 ໂມງກາງເວັນ ຈະ ຕ້ອງລົງເລກດັ່ງນີ້ :



ຂໍ້ຄວາມກໍດີ ໂຕເລກກໍດີ ໃນຊ່ອງນັ້ນໆ ບອກອັນໃດ ໄດ້ອະທິບາຍມາແລ້ວ ທີ່ຈະຍາກແດ່ກໍຄືວິທີລົງຂໍ້ຄວາມ ແລະໂຕເລກເທົ່ານັ້ນ ເພາະຈະຖືຍາມເປັນຫລັກ ອ່ານຈາກນີ້ແລ້ວຖາມຜູ້ຮູ້ເພີ່ມເຕີມອີກເລັກນ້ອຍ ກໍຈະຮູ້ເລື່ອງ.

ຜັງກາລະຈັກຣ

ໃນຜັງສະແດງຈັກຣຣາສີຕໍ່ໄປນີ້ ເປັນການສະແດງການເດີນຂອງເວລາ ແລະການເຄື່ອນໄຫວຂອງດາວເຄາະທ໌ຕ່າງໆ ໃນຈັກຣຣາສີທີ່ນີ້ພຽງແຕ່ສະແດງໃຫ້ເຫັນວ່າ ເຂົາມາດູຂອງຫາຍຈາກເຮົາເວລາເທົ່າໃດ ເປັນຍາມອັນໃດ ຕົກຊ່ວງໃດໃນດວງຂອງຈັກຣຣາສີ ກໍຈະບອກໄດ້ວ່າຜູ້ຍິງຫລືຜູ້ຊາຍເອົາໄປໄດ້ດັ່ງນີ້ :



ທ່ານທີ່ຮຽນຜູກດວງມາແລ້ວກໍເຮັດໄດ້ບໍ່ຍາກ ແຕ່ຖ້າບໍ່ມີພື້ນຄວາມຮູ້ດ້ານຜູກດວງມາກ່ອນ ຈະລຳບາກພໍສົມຄວນ ດັ່ງນັ້ນ ຈຶ່ງບອກໄດ້ວ່າວິທີທີ່ສອງນີ້ "ແມ່ນ" ແລະຫາຍໄດ້ລະອຽດ ແຕ່ຕ້ອງມີຄວາມຮູ້ເລື່ອງ ວັນ, ຍາມ, ເວລາ, ຈັກຣຣາສີ, ທາດ ແລະສ່ວນປະກອບອື່ນໃນຈັກຣຣາສີ ບໍ່ດັ່ງນັ້ນຈະຝັ້ນເຝືອ.

ສ່ວນເວລາກາງຄືນ ກໍມີການແບ່ງເວລາເປັນຍາມຊ່ວງລະ 1 ຊົ່ວໂມງເຄິ່ງເໝືອນກັບກາງວັນ ຈະຕ່າງກໍຄື ກາງຄືນເລີ່ມຈາກ 18.00 ໂມງ ແລະຊື່ຂອງຍາມກາງຄືນກໍຈະຕ່າງຈາກຊື່ຂອງຍາມກາງວັນ ດັ່ງນີ້ :

ຊື່ຂອງຍາມກາງຄືນ

ເວລາ	ຊື່ຍາມ
18.00-19.30ນ.	ຣະວີ
19.30-21.00ນ.	ຊີໂວ
21.00-22.30ນ.	ສະສີ
22.30-24.00ນ.	ສຸກະໂຣ
24.00-01.30ນ.	ພຸມມະ
01.30-03.00ນ.	ໂສໂຣ
03.00-04.30ນ.	ພຸໂທ
04.30-06.00ນ.	ຣະວີ

ວິທີເຮັດແລະສັບປ່ຽນຍາມ ຕະຫລອດຈົນການທຳນາຍ ໃຫ້ຖືກຕາມແນວຂອງການທຳນາຍກາງວັນ ນັ້ນແລ ຯ

ຫັລກການຕັ້ງຊື່ຄົນ

ນາມ ຫລື ຊື່ ໃນປະຖະມະສະມັນຕາປາສາທິກາ ອັດຖະກະຖາຂອງພຼະວິໄນປິດົກ ກ່າວເຖິງຊື່ໄວ້ 4 ຊື່ຄື :

1. ລິງຄະນາມ: ຊື່ທີ່ກຳນົດຕາມເພດ ເຊັ່ນ ຍິງຊາຍເປັນຕົ້ນ
2. ອາວັດຖິກະນາມ: ຊື່ທີ່ກຳນົດຕາມລັກສະນະ ເຊັ່ນ ງົວດ່າງ ງົວເຖິກ ເປັນຕົ້ນ
3. ອະທິດຈະສະມຸປປັນນະນາມ: ຊື່ທີ່ຕັ້ງຂຶ້ນຕາມໂວຫານຂອງໂລກ ໂດຍຄິດວ່າຢາກໃຫ້ເປັນຕາມນັ້ນ ເຊິ່ງທີ່ຈິງຈະເປັນຫລືບໍ່ກໍບໍ່ຮູ້ ເຊັ່ນ ທ້າວທະນະວັຕນ໌ (ທ້າວຊັບຈະເລີນ) ທ້າວສິຣິວັຕນ໌ (ທ້າວສີຈະເລີນ) ເປັນຕົ້ນ
4. ເນມິຕຕິກະນາມ: ຊື່ທີ່ເກີດຂຶ້ນຕາມຄວາມສຳເລັດ ເຊັ່ນ ພຼະພຸດທະເຈົ້າ ພຼະຜູ້ມີພຼະພາກເຈົ້າ ພຼະອໍຣະຫັນຕ໌ ເປັນຕົ້ນ

ນາມທີ່ 3 ຄື ອະທິດຈະສະມຸປປັນນະນາມນີ້ ເປັນນາມທີ່ຫາຕັ້ງກັນຂຶ້ນຕາມໂລກນິຍົມວ່າ ເປັນມຸງຄຸນ ຈະເອີ້ນວ່າ ມຸງຄຸນນາມກໍໄດ້ ເພາະຜູ້ຕັ້ງຢາກໃຫ້ເປັນເຊັ່ນນັ້ນ

ນາມທີ່ 4 ຄື ເນມິຕຕິກະນາມ ຄືນາມຂອງຜູ້ສຳເລັດແລ້ວ ແລະເອີ້ນຊື່ຈາກຄວາມສຳເລັດນັ້ນ. ຖ້າເປັນຊາວບ້ານທີ່ສຳເລັດທາງການເງິນ ກໍຄົງຈະເປັນຊື່ທີ່ເອີ້ນວ່າ "ເສດຖີ" ນັ້ນເອງ ເພາະສັບນີ້ຈະໃຊ້ກັບຄົນຈົນບໍ່ໄດ້ເລີຍ ຊື່ນີ້ຈຶ່ງຕັ້ງຂຶ້ນໂດຍມຸ່ງຫວັງຈະໃຫ້ເປັນເໝືອນ ອະທິດຈະສະມຸປປັນນະນາມ ເພາະເປັນອະພິມະຫາມຸງຄຸນນາມ

ດັ່ງນັ້ນ ການນິຍົມຕັ້ງຊື່ໃໝ່ຂອງຊາວບ້ານ ຈຶ່ງເປັນນາມທີ 3 ເອີ້ນວ່າ ອະທິດຈະສະມຸປປັນນະນາມ ການຕັ້ງຊື່ທີ່ມຸ່ງຫວັງຢາກຈະໃຫ້ເປັນເຊັ່ນນັ້ນ ຕ້ອງໃຫ້ເວັ້ນອັກສຣ (ອັກສອນ) ທີ່ເປັນກາລະກິນີຢ່າໃຫ້ມີໃນຊື່ເລີຍ ຈຶ່ງຈະເປັນມຸງຄຸນນາມ ເປັນສະຫັວສດີມຸງຄຸນແກ່ເຈົ້າຂອງ. ວິທີຫາຊື່ໃຫ້ເປັນມຸງຄຸນ ໃຫ້ດູຕາມຄວາມໝາຍຂອງທັກສາໃນວັນນັ້ນໆ ດັ່ງນີ້ ຄື ບໍຣິວານ, ອາຍຸ, ເດຊ, ສີ, ມູລະ, ອຸຕສາຫະ, ມົນຕຣີ ແລະກາລະກິນີ. ໃຜເກີດວັນອັນໃດ ໃຫ້ນັບບໍຣິວານລົງກົງວັນເກີດຂອງຕົນນັ້ນວຽນຂວາໄປ ບໍ່ວ່າຊາຍ ແລະຍິງກໍເໝືອນກັນ ສົມມຸດວ່າຄົນເກີດວັນຈັນ ໃຫ້ນັບບໍຣິວານລົງທີ່ວັນຈັນ, ຖ້າເກີດວັນອັງຄານກໍໃຫ້ນັບບໍຣິວານລົງທີ່ວັນອັງຄານ ແລ້ວວຽນຂວາໄປ ຕາມລຳດັບດັ່ງນີ້ :

(ຕົວຢ່າງຄົນເກີດວັນຈັນ)

1. ວັນອາທິດຢ໌ອັກຂຣມຸງຄຸນ ຄື ອະ ອາ ອິ ອີ ອຸ ອູ ເອ ໂອ (ກາລະກີນີ)	2. ວັນຈັນທຣ໌ ອັກຂຣ ມຸງຄຸນ ຄື ກ ຂ ຄ ງ (ບໍຣິວາຣ)	3. ວັນອັງຄາຣ ອັກຂຣມຸງຄຸນ ຄື ຈ ฉ ຊ ฌ ຍ (ອາຍຸ)
6. ວັນສຸກຣ໌ ອັກຂຣມຸງຄຸນ ຄື ศ ษ ສ ຫ ຮ (ມິນຕຣີ)		4. ວັນພຸທ ອັກຂຣມຸງຄຸນ ຄື ฒ ฏ ฑ ฒ (ເດຊ)
8. ວັນຣາຫູ (ວັນພຸທກາງຄືນ) ຍ ຣ ລ ວ (ອຸຕສາຫະ)	5. ວັນປະຫັດ ອັກຂຣ ມຸງຄຸນ ຄື ບ ປ ຜ ຝ ພ ຟ ภ ມ (ມູລະ)	7. ວັນເສົາຣ໌ ອັກຂຣມຸງຄຸນ ຄື ດ ຕ ຖ ທ ธ ນ (ສີ)

ວັນຈັນທຣ໌ ກາລະກິນີຕົກວັນອາທິດ (ເບິ່ງຕາຣາງໝາຍເລກ 1) ດັ່ງນັ້ນ ຄົນເກີດວັນຈັນທຣ໌ ສຣະທັງໝົດຈຶ່ງເປັນກາຣະກິນີ ດັ່ງນັ້ນ ຄົນເກີດວັນຈັນທຣ໌ ຈຶ່ງຫ້າມມີສຣະປາກົດໃນຊື່ເດັດຂາດ ສ່ວນຄົນເກີດວັນອັງຄານ ກ ຂ ຄ ງ ເປັນກາລະກິນີ (ເບິ່ງຕາຣາງທີ 2) ດັ່ງນັ້ນໃຜຢາກຕັ້ງຊື່ຕົວເອງເປັນມຸງຄຸນນາມ ກໍໃຫ້ຕັ້ງຊື່ດ້ວຍອັກຂຣ(ອັກສອນ) ທີ່ເປັນມຸງຄຸນຕາມລັກສະນະຂອງທັກສາ ແລະທັກສາດັ່ງກ່າວນັ້ນກໍມີຊື່ແລະຄວາມໝາຍດັ່ງນີ້ :

- ບໍຣິວານ ໝາຍເຖິງເພື່ອນຝູງພວກພ້ອງ, ມີບໍຣິວາຣຫລາຍ, ມີບໍຣິວານຊ່ອຍງານດີ, ບໍຣິວານໃຫ້ຄຸນ.
- ອາຍຸ ໝາຍເຖິງອາຍຸ, ມີອາຍຸຍືນ, ສຸຂະພາບດີ
- ເດຊ ໝາຍເຖິງອຳນາດ ວາດສະນາ, ໜ້າທີ່ການງານ, ຈະເປັນຫົວໜ້າງານ ຄົນເກງຂາມ.
- ສີ ໝາຍເຖິງຊັບສິນ ເງິນຄຳ ໂຊກລາບ
- ມູລະ ໝາຍເຖິງຫລັກຖານ ບ້ານຊ່ອງ, ມໍຣະດົກ
- ອຸຕສາຫະ ໝາຍເຖິງຄວາມຂະຫຍັນ ໝັ່ນພຽນ, ຜົນສຳເລັດ, ຄວາມຄິດລິເລີ່ມ.
- ມົນຕຣີ ໝາຍເຖິງຜູ້ອຸປະຖຳຄ້ຳຊູ, ເຮັດອັນໃດມີຄົນຊ່ອຍເຫລືອ.
- ກາລະກິນີ ໝາຍເຖິງຄວາມຊົ່ວຮ້າຍ, ສັດຕູຄູ່ອາຄາດ, ຄວາມບໍ່ດີ, ການຖືກຕຳໜິ.

ດັ່ງນັ້ນ ຜູ້ຕັ້ງຊື່ທີ່ສະຫລາດ ຈຶ່ງນິຍົມເອົາອັກຂຣ(ອັກສອນ) ຈາກທັງບໍຣິວານ ອາຍຸ ເດຊ ສີ ມູລະ ອຸຕສາຫະ ມົນຕຼີ ເວັ້ນກາລະກິນີ ມາລວມກັນຕັ້ງເປັນຊື່ ຢາກໃຫ້ຊື່ນັ້ນມີດີທາງໃດ ກໍເອົາອັກ-**ຂຣະ**ໃນໝວດນັ້ນຂຶ້ນກ່ອນເຊັ່ນຢາກມີອຳນາດ **ກໍເອົາອັກຂຣະ** ໝວດເດຊນຳໜ້າ ເປັນຕົ້ນ ເຊັ່ນ ຄົນເກີດວັນຈັນທຣ໌ ຕັ້ງຊື່ວ່າ ທສພຣ (ທົສພອນ) ຕົວ ທ. ມາຈາກ ສີ ໝາຍຄວາມວ່າ ຊັບສິນ ศ. ມາຈາກ ມົນຕຼີ ໝາຍຄວາມວ່າ ອຸປະຖຳຄ້ຳຊູ ພ. ມາຈາກມູລະ ໝາຍເຖິງການງານ, ຄວາມສຳເລັດ, ຄວາມຄິດລິເລີ່ມ ເຊິ່ງ

ເປັນມຸງຄຸນນາມກ່ຽວກັບເງິນ ອຸປະຖັມພ໌, ຫລັກຖານ ແລະ ຄວາມສຳເລັດ ດັ່ງນັ້ນຜູ້ຕ້ອງການນາມອັນໃດກໍໃຫ້ຫາຜະສົມເອົາເອງເຖີ້ນ.

ຄຳເຕືອນໃຈ

<u>ພຸດທະພົຈນ໌ :</u>

ນະ ຊັຈຈາ ວະສະໂລ ໂຫຕິ ນະຊັຈຈາ ໂຫຕິ ພຣາຫມໂນ ກັມມຸນາ ວະສະໂລ ໂຫຕິ ກັມມຸນາ ໂຫຕິ ພຣາຫມໂນ.

ແປວ່າ:

ບໍ່ມີຊົ່ວໂດຍກຳເນີດ ບໍ່ມີດີໂດຍກຳເນີດ ຊົ່ວຢູ່ທີ່ກະທຳເອົາ ແລະດີກໍຢູ່ທີ່ກະທຳເອົາ ເທົ່ານັ້ນ.

ດັ່ງນັ້ນ ເພື່ອນຮ່ວມເກີດ, ແກ່, ເຈັບ, ຕາຍທັງຫລາຍ ເມື່ອທ່ານເກີດໃນດວງທີ່ດີບໍ່ໄດ້ ທ່ານກໍຄົງຈະກະທຳດີເອົາເຖີ້ນ ແລ້ວທ່ານຈະໄດ້ສິ່ງທີ່ດີ ທີ່ທ່ານຕ້ອງການ ຢ່າໃຫ້ໝໍດູກຳນົດໂຊກຊະຕາທ່ານ ທ່ານຈົ່ງກຳນົດມັນເອົາເອງ ໂດຍຄວາມບໍ່ປະໝາດເຖີ້ນ.

ຊື່ຕົວຢ່າງ

ຄົນເກີດວັນອາທິດ ຖ້າຢາກມີບໍຣິວານຫລາຍ ໃຫ້ເອົາ ອະ, ອາ, ອິ, ອີ, ເອ, ໂອ ຂື້ນຕົ້ນ ເຊັ່ນ ອຸດຣ (ອຸດອນ) ເຊິ່ງແປວ່າ "ຍອດ" ຫລືເໜືອຄົນ ອຸ ເປັນບໍຣິວານ "ດ" ເປັນມູລະ "ຣ" ເປັນມົນຕຼີ ໄດ້ບໍຣິວານ ມູລະ ແລະມົນຕຼີ ລວມກັນ ດີຫລືບໍ່ດີຢ່າງໃດກໍໃຫ້ເບິ່ງເອົາໃນຄຳອະທິບາຍວ່າດ້ວຍທັກສາ ແລ້ວຖ້າເປັນຊື່ຜູ້ຍິງກໍເປັນ "ອາພຣ" (ອາພອນ) ແປວ່າຜ້າ ຫລື ຄົນງາມ "ອາ" ເປັນບໍຣິວານ "ໆ" ເປັນອຸຕສາຫະ "ຣ" ເປັນມົນຕຼີ "໓" ເປັນສີ ຄືໄດ້ທັງບໍຣິວານ, ອຸຕສາຫະ, ມົນຕຼີ ແລະສີ ລວມກັນ.

ຖ້າຈະຕັ້ງຊື່ແບບອາຍຸຍືນ ກໍໃຫ້ເອົາອັກຂຣະ ກ, ຂ, ຄ, ງ ຂື້ນຕົ້ນ ເຊັ່ນ ກະນົກ ແປວ່າ ທອງຄຳ ຕົວ "ກ" ເປັນອາຍຸ ຕົວ "ນ" ເປັນມູລະ ຕົວ "ກ" ເປັນອາຍຸອີກ. ຊື່ຜູ້ຍິງເຊັ່ນ ກະນົກອຣ (ກະນົກອອນ) ແປວ່າສາວຜູ້ງາມດັ່ງທອງຄຳ ຕົວ "ກ" ມາຈາກອາຍຸ ຕົວ "ນ" ມາ

ຈາກມູລະ ຕົວ "ກ" ມາຈາກອາຍຸ ຕົວ "ອ" ມາຈາກບໍຣິວານ ຕົວ "ຣ" ມາຈາກມົນຕຼີ ຄືໄດ້ອາຍຸ, ບໍຣິວານ, ມູລະ ແລະມົນຕຼີລວມກັນ.

ຖ້າຈະຕັ້ງຊື່ແບບມີອຳນາດ ກໃຫ້ເອົາອັກຂຣະ ຈ,ຝ ຊ,ຊ,ຌ, ຂຶ້ນກ່ອນ ເຊັ່ນຊື່ ຈະຣັຌ ຕົວ "ຈ" ມາຈາກ ເດຊ ຕົວ "ຣ" ມາຈາກມົນຕຼີ ໄມ້ "ັ" ມາຈາກບໍຣິວານ ຕົວ "ຌ" ມາຈາກເດຊ ຄືໄດ້ເດຊ, ບໍຣິວານ, ແລະມົນຕຼີລວມກັນ ແຕ່ເດຊໄດ້ 2 ເທື່ອ.

ຖ້າເປັນຜູ້ຍິງກໍຊື່ ຈັນຈິຣາ ແປວ່າຜູ້ງາມເໝືອນພູະຈັນທຣ໌ ຫລື ຜູ້ໝັ້ນຄົງເໝືອນພູະຈັນທຣ໌ ຕົວ "ຈ" ມາຈາກເດຊ ໄມ້ "ັ" ມາຈາກ ບໍຣິວານ ຕົວ "ນ" ຕົວ "ທ" ມາຈາກມູລະ ຕົວ "ຣ" ມາຈາກມົນຕຼີ ໄມ້ "໌" ບໍ່ມີຄວາມໝາຍ ສຣະ "າ" ມາຈາກບໍຣິວານ ໄດ້ທັງເດຊ, ບໍຣິວານ, ມູລະ ແລະມົນຕຼີ ລວມກັນ.

ຖ້າຈະຕັ້ງຊື່ແບບມີສີ ມີເງິນ ກໍໃຫ້ເອົາອັກຂຣະ ຜ, ຖ, ທ,ຓ, ຂຶ້ນຕົ້ນ ຜູ້ຊາຍ ເຊັ່ນ ຓະຣົງຄ໌ ເຊິ່ງແປວ່າຜູ້ແກ້ວກ້າ ຕົວ "ຓ" ມາຈາກສີ ຕົວ "ຣ" ມາຈາກມົນຕຼີ ຕົວ "ງ" ແລະຕົວ "ຄ" ມາຈາກອາຍຸ ໄດ້ທັງສີ, ມົນຕຼີ ແລະອາຍຸ ລວມກັນ.

ຖ້າເປັນຜູ້ຍິງ ເຊັ່ນ ຠາປະນີ ແປວ່າຜູ້ໝັ້ນຄົງ ຫລື ຜູ້ທີ່ໄດ້ຮັບພຣ (ພອນ) ມາເກີດ ຕົວ "ຠ" ມາຈາກສີ ສຣະ "າ" ສຣະ "ີ" ມາຈາກບໍຣິວານ ຕົວ "ປ" ມາຈາກອຸຕສາຫະ ຕົວ "ນ" ມາຈາກມູລະ ເຊິ່ງໄດ້ທັງ ສີ, ບໍຣິວານ, ອຸຕສາຫະ ແລະ ມູລະ.

ຖ້າຈະຕັ້ງຊື່ແບບມີຫລັກຖານ ມີມໍຣະດົກໃຫ້ເອົາ ອັກຂຣະໝວດ ດ,ຕ,ຖ, ຘ,ນ ນຳໜ້າ ດ້ວຍຕົວອັກຂຣະຕົວໃດຕົວໜຶ່ງກໍໄດ້ ເຊັ່ນ ຜູ້ຊາຍ ຊື່ ຘະນະພຣ (ທະນະພອນ) ຜູ້ໄດ້ພອນຄືຊັບຍ໌ ຕົວ "ຘ" "ນ" ມາຈາກມູລະ ຕົວ "ພ" ມາຈາກອຸຕສາຫະ ຕົວ "ຣ" ມາຈາກມົນຕຼີ ໄດ້ທັງມູລະ, ອຸຕສາຫະ ແລະມົນຕຼີລວມກັນ.

ຜູ້ຍິງຊື່ "ດະຣຸນີ" ແປວ່າ ຜູ້ເຍົາວ໌ໄວ ຫລື ຜູ້ທີ່ໜ້າຮັກ ຕົວ "ດ" ມາຈາກມູລະ ຕົວ "ຣ" ມາຈາກມົນຕຼີ ຕົວ "ຓ" ມາຈາກສີ ສຣະ "ີ" ມາຈາກບໍຣິວານ ໄດ້ທັງມູລະ, ມົນຕຼີ, ສີ ແລະບໍຣິວານລວມກັນ.

ຖ້າຈະຕັ້ງຊື່ແບບຂະຫຍັນ, ສຳເລັດ, ລິເລີ່ມ ໃຫ້ເອົາອັກຂະຣະ ບ,ປ,ຜ,ຝ,ພ,ຟ,ຑ,ມ ນຳໜ້າ. ຊື່ຜູ້ຊາຍ ເຊັ່ນ "ບໍວຣ" (ບໍວອນ) ແປວ່າ ຜູ້ປະເສີດ ຜູ້ໝັ້ນຄົງ ຕົວ "ບ" ມາຈາກອຸຕສາຫະ ຕົວ " ວ" "ຣ" ມາຈາກມົນຕຼີ ຄືໄດ້ທັງອຸຕສາຫະ ແລະມົນຕຼີ.

ຜູ້ຍິງ ຊື່ "ມັທນາ" (ມັດທະນາ) ແປວ່າຄົນງາມດັ່ງດອກກຸຫລາບ ຕົວ "ມ" ມາຈາກອຸຕສາຫະ ຕົວ "ທ" "ນ" ມາຈາກມູລະ ສຣະ " າ" ມາຈາກບໍຣິວານ ຄືໄດ້ທັງອຸຕສາຫະ, ມູລະ, ແລະບໍຣິວານ.

ຖ້າຈະຕັ້ງຊື່ແບບມີຜູ້ອຸປະຖັມພ໌ ທ່ານໃຫ້ເອົາອັກຂະຣະ ຍ,ຣ,ລ,ວ ຂຶ້ນຕົ້ນ ຊື່ຜູ້ຊາຍ ເຊັ່ນ ຍຣຣຍົງຄ໌ (ຍັນຍົງ) ແປວ່າ ຜູ້ໝັ້ນຄົງ ຕົວ "ຍ" "ຣ" ມາຈາກມົນຕຼີ ຕົວ "ຄ" "ງ" ມາຈາກອາຍຸ ໄມ້ "໌" ບໍ່ມີຄວາມໝາຍ ໄດ້ທັງມົນຕຼີ ແລະອາຍຸ.

ຊື່ຜູ້ຍິງ ເຊັ່ນ " ຣັຊນີ " ແປວ່າ ຜູ້ໜ້າຮັກ ຕົວ "ຣ" ມາຈາກມົນຕຼີ ຕົວ "ຊ" ມາຈາກເດຊ ຕົວ "ນ" ມາຈາກມູລະ ໄມ້ " ັ " ແລະ ສຣະ "ີ" ມາຈາກບໍຣິວານ ຈະໄດ້ທັງ ສີ, ເດຊ, ມູລະ ແລະບໍຣິວານ.

ສຳລັບຄົນເກີດວັນອາທິຕຍ໌ນີ້ ອັກຂະຣະ ຄ,ຆ,ສ,ຫ,ຣ ຫ້າມມີໃນຊື່ ເພາະທ່ານວ່າມັນເປັນກາລະກິນີ ຄວາມນິຍົມຕັ້ງຊື່ ຄື ທ່ານພະຍາຍາມໃຫ້ມີທຸກຢ່າງ ຄື ມີທັງບໍຣິວານ, ອາຍຸ, ເດຊ, ສີ, ມູລະ, ອຸຕສາຫະ ແລະມົນຕຼີ ໃນຊື່ ຫ້າມມີແຕ່ກາລະກິນີ ແຕ່ທ່ານຈະຊອບຊື່ແບບໃດ ໃຫ້ເອົາອັກຂະຣະໃນໝວດນັ້ນຂຶ້ນຕົ້ນເທົ່ານັ້ນ ເບິ່ງຕາມຕົວຢ່າງຂອງຄົນທີ່ເກີດວັນອາທິຕຍ໌ ທີ່ຕັ້ງມາໃນອັກຂະຣະໝວດນັ້ນໆ ທ່ານຈະເອົາຕົວໃດກໍໄດ້ ຄິດຫາເອົາຕົວປະສົມເອົາໃຫ້ໄດ້ຖ້ອຍໄດ້ຄວາມ ຄືມີຄວາມໝາຍກໍພໍ.

ອັນນຶ່ງ ບຸຣານາຈາຣຍ໌ທ່ານກ່າວໄວ້ວ່າ ຖ້າທ່ານຢາກໄດ້ພະລັງອັນໃດຫລາຍ ໃນບໍຣິວານ, ອາຍຸ, ເດຊ, ສີ, ມູລະ, ອຸຕສາຫະ ແລະ ມົນຕຼີນັ້ນ ທ່ານໃຫ້ເອົາອັກຂະຣະນັ້ນໃຫ້ຫລາຍໃນຊື່ນັ້ນ ເຊັ່ນຄົນເກີດວັນອາທິຕຍ໌ ຢາກໄດ້ອຸປະຖັມພ໌ຫລາຍ ກໍໃຫ້ໃສ່ອັກຂະຣະທີ່ໃຫ້ມົນຕຼີຫລາຍໆ ເຊັ່ນ " ບໍວຣ " (ບໍວອນ) ຄື ຕົວ ບ. ມາຈາກ ອຸຕ

ສາຂະ ຕົວ ວ. ແລະຕົວ ຣ. ມາຈາກົມົນຕຼີ ເຊິ່ງໝາຍເຖິງຄວາມອຸປະຖັມພ໌ຫລາຍກວ່າຢ່າງອື່ນເປັນຕົ້ນ.

ໃນກໍຣະນີຄົນເກີດວັນອື່ນ ກໍໃຫ້ເຮັດຄືກັນ ແຕ່ໃຫ້ເລີ່ມດັ່ງນີ້ :

ຄົນທີ່ເກີດ:	ເລີ່ມບໍຣິວານທີ່ອັກຂຣະ	ອັກຂຣະ
		ກາລະກິນີ ຫ້າມມີໃນຊື່
ອາທິຕຍ໌	ອະ ອາ ອິ ອີ ອຸ ອູ ເອ ໂອ	ຨ ຩ ສ ຫ ຮ
ຈັນທຣ໌	ກ ຂ ຄ ງ	ອະ ອາ ອິ ອີ ອຸ ອູ ເອ ໂອ
ອັງຄານ	ຈ ຉ ຊ ຌ ຎ	ກ ຂ ຄ ງ
ພຸທ	ຏ ຐ ຑ ຒ ຓ	ຈ ຉ ຊ ຌ ຎ
ປະຫັສ	ບ ປ ຜ ຝ ພ ຟ ຠ ມ	ດ ຕ ຖ ທ ນ
ສຸກຣ໌	ຨ ຩ ສ ຫ ຮ	ຍ ຣ ລ ວ
ເສົາຣ໌	ດ ຕ ຖ ທ ຘ ນ	ຏ ຐ ຑ ຒ ຓ
ຣາຫູ	ຍ ຣ ລ ວ	ບ ປ ຜ ຝ ພ ຟ ຠ ມ

ໃຫ້ທ່ານຫາຕັ້ງເອົາເອງ ເຊັ່ນ ວັນຈັນທຣ໌ ທ່ານກໍນັບບໍຣິວານລົງທີ່ ກ, ຂ, ຄ, ງ ຖ້າຈະເອົາຊື່ໜັກທາງບໍຣິວານ ກໍເອົາອັກຂຣະຕົວ ກ,ຂ,ຄ,ງ ຂຶ້ນຕົ້ນ. ຖ້າຈະເອົາແບບອາຍຸຍືນ ກໍເອົາ ຈ, ຉ,ຊ,ຌ ,ຎ, ຂຶ້ນຕົ້ນ. ຖ້າຈະເອົາແບບເດຊ, ອຳນາດ ກໍໃຫ້ເອົາອັກຂຣະໝວດ ຏ,ຐ,ຑ,ຒ ຓ ຂຶ້ນຕົ້ນ. ຖ້າຈະເອົາແບບສີ ເງິນຄຳ ກໍໃຫ້ເອົາໝວດ ດ,ຕ,ຖ,ທ, ຘ ,ນ ຂຶ້ນຕົ້ນ. ຖ້າຈະເອົາຊື່ແບບມູລະ,ມໍຣະດົກ,ຫລັກຊັບ,ຫລັກຖານ ກໍໃຫ້ເອົາອັກຂຣະໝວດ ບ,ປ,ຜ,ຝ,ພ,ຟ, ຠ ,ມ ຂຶ້ນຕົ້ນ. ຖ້າຈະເອົາຊື່ແບບຂະຫຍັນ, ຄວາມສຳເລັດ ກໍໃຫ້ເອົາອັກຂຣະໝວດ ຍ,ຣ,ລ,ວ ຂຶ້ນຕົ້ນ. ຖ້າຈະເອົາແບບມີຜູ້ອຸປະຖັມພ໌, ມີຜູ້ເບິ່ງແຍງ ກໍໃຫ້ເອົາອັກຂຣະໝວດ ຨ,ຩ,ສ,ຫ,ຮ ຂຶ້ນຕົ້ນ ຫ້າມບໍ່ໃຫ້ມີອັກຂຣະທີ່ປາກົດຮູບໃນຊື່ຂອງຄົນເກີດວັນຈັນທຣ໌ທັງໝົດ ເພາະທ່ານວ່າເປັນກາລະກິນີ.

ອັນນຶ່ງ ຖ້າທ່ານຢາກໄດ້ກຳລັງອັນໃດຫລາຍ ກໍໃຫ້ເພີ່ມອັກຂະ ຣະໃນໝວດນັ້ນຫລາຍໆ ຄິດຫາເອົາເອງເຖີ້ນ. ການຕັ້ງຊື່ທີ່ດີຈະຕ້ອງໃຫ້ອ່ານເປັນພາສາໄດ້ຮູ້ເລື້ອງ ແລະມີຄວາມໝາຍ ຈຶ່ງຈະເປັນຊື່ທີ່ສົມບູນ ລຳພັງຈັບໂຕອັກຂະຣະໃສ່ກັນອ່ານໄດ້ ແຕ່ບໍ່ມີຄວາມໝາຍ ກໍເປັນຊື່ທີ່ດີບໍ່ໄດ້ ໃນວັນອື່ນໆ ກໍໃຫ້ເຮັດເຊັ່ນດຽວກັນກັບວັນອາທິດ ແລະວັນຈັນທຣ໌ ໂດຍເລີ່ມ "ບໍຣິວານ" ຕາມໝວດອັກຂະຣະທີ່ບອກໄວ້ແລ້ວວຽນໄປຕາມລຳດັບ ຯ

ຍາມອຸບາກອງ (ຍາມພະມ່າແຫກຄຸກ)

ປະຫວັດຍາມອຸບາກອງ

ຄຳວ່າ "ອຸບາກອງ " ເປັນຊື່ນາຍທະຫານເອກຂອງພະມ່າເຊິ່ງເຂົ້າມາຕີໄທ ໃນສະໄໝຕົ້ນຣັຊການກຣຸງຣັຕນະໂກສິນທຣ໌ ມີປະຫວັດທີ່ປາກົດໃນປະຫວັດສາຕຣ໌ຢ່າງນີ້

ອຸບາກອງ ເປັນນາຍທະຫານຍິສຊຸນພົລ ໄດ້ຄຸມກຳລັງເຂົ້າໂຈມຕີເມືອງຊຽງໃໝ່ ເມື່ອ ແຮມ 1 ຄ່ຳ ເດືອນ 5 ພ.ສ 2340 ຄາວທີ່ພະເຈົ້າປະດຸງ ຍົກ 9 ທັບມາຕີນັ້ນເອງ ແຕ່ດ້ວຍເຫດຜົນກົນໃດບໍ່ປາກົດ ອຸບາກອງຖືກຝ່າຍໄທຈັບໂຕໄດ້ ຄາວນັ້ນພໍ່ເມືອງຊຽງໃໝ່ໄດ້ຄຸມຕົວອຸບາກອງສົ່ງລົງມາຍັງກຣຸງເທພ ຯ ເມື່ອຂຶ້ນ 8 ຄ່ຳ ເດືອນ 6 ປີມະເມັຍ ພ.ສ. 2340 ສົມເດັຈພຼະພຸດທະຍອດຟ້າ ຈຸລາໂລກ ຣັຊການທີ່ 1 ແຫ່ງກຣຸງຣັຕນະໂກສິນທຣ໌ ຈຶ່ງສັ່ງໃຫ້ສອບສວນອຸບາກອງທັນທີ ປາກົດວ່າອຸບາກອງເປັນຄົນໄທ ເກີດໃນເມືອງໄທ ເພາະມີພໍ່ເປັນເຊື້ອສາຍຄົນໄທ ແຖບເມືອງທົ່ນບຸຣີ ພຼະອົງຈຶ່ງຊົງພຼະເມຕຕາພຼະຣາຊທານເສື້ອຜ້າ ແລະໃຫ້ນຳໄປຂັງໄວ້ທີ່ຄຸກວັດໂພທາຣາມ (ວັດພຼະເຊຕຸພົນ ຯໃນປັດຈຸບັນນີ້) ແຖວຖົມຮັກສາດິນແດນດຽວນີ້.

ລະຫວ່າງທີ່ອຸບາກອງກັບພວກຖືກຈອງຈຳຄຸມຂັງທີ່ຄຸກວັດ-ໂພ ເຂົາໄດ້ສອນຕຳຣາຍັນຕ໌ຍາມຍາຕຣາໃຫ້ກັບພັກພວກ ເຊິ່ງຍາມນີ້ສາມາດແຫກຄຸກທີ່ຄຸມຂັງໄດ້ ເມື່ອພັກພວກສາມາດຮຽນຍາມຍາຕຣາໄດ້ຕາມທີ່ຕົນບອກແລ້ວ ອຸບາກອງກໍທຳພິທີຕາມຫລັກໂຫຣາ

ສາດຣ໌ ພໍໄດ້ຮຽນຍາມດີຈຶ່ງສາມາດພາກັນແຫກຄຸກວັດໄພຫລົບ ໜີໄປໄດ້ຢ່າງປອດໄພ ໂດຍອຸບາກອງກັບພັກພວກພາກັນຫລົບໜີ ໄປຍັງເມືອງພະມ່າໄດ້.

ແຕ່ຍາມອຸບາກອງບອກກັບພັກພວກນີ້ນັ້ນ ບັງເອີນມີນັກ ໂທດພະມ່າທີ່ເປັນເຊື້ອສາຍໄທບາງຄົນ ບໍ່ໄດ້ຫລົບໜີໄປດ້ວຍ ຈຶ່ງບອກເລົ່າກັບຜູ້ຄຸມນັກໂທດ ຈຶ່ງມີການນຳມາເລົ່າຮຽນກັນ ແລະ ໃຫ້ຊື່ຍາມຍາຕຣານີ້ວ່າ " **ຍາມອຸບາກອງ** " ນັ້ນເອງ.

ອັນນຶ່ງ ຍາມດັ່ງກ່າວປາກົດວ່າ ມີຜູ້ນັບຖືວ່າແມ່ນຍຳ ໄດ້ຜົນ ແທ້ຈິງດ້ວຍ ຈຶ່ງສຶກສາເລົ່າຮຽນສືບໆກັນມາຕາບເທົ່າທຸກວັນນີ້.

<u>ແຜນຕາລາງຍາມ ມີດັ່ງຕໍ່ໄປນີ້ :</u>

ເວລາ	ເຊົ້າ	ສວາຍ	ທ່ຽງ	ບ່າຍ	ແລງ(ຄ່ຳ)
ກາງເວັນ ແຕ່ ເຖິງ	6 ມ. 1 8 ມ. 24	8 ມ. 25 10 ມ. 48	10 ມ. 49 13 ມ. 12	13 ມ. 13 15 ມ. 36	15 ມ. 37 18 ມ. 00
ກາງຄືນ ແຕ່ ເຖິງ	18 ມ. 1 20 ມ. 24	20 ມ. 25 22 ມ. 48	22 ມ. 49 1 ມ. 12	1 ມ. 13 3 ມ. 36	3 ມ. 37 6 ມ. 00
1.ວັນອາທິດຍ໌	0 0 0 0	x		0 0	0
2. ວັນຈັນທຣ໌	0	0 0 0 0	x		0 0
3.ວັນອັງຄານ	0 0	0	0 0 0 0	x	
4.ວັນພຸທ		0 0	0	0 0 0 0	x
5. ວັນປະຫັສ	x		0 0	0	0 0 0 0
6. ວັນສຸກຣ໌	0 0 0 0	x		0 0	0
7. ວັນເສົາຣ໌	0	0 0 0 0	x		0 0

ເປັນຍາມດີ ແລະຍາມຮ້າຍປະຈຳວັນ ເວລາ ສຳລັບຍາຕຣາ(ເດີນທາງ) ເປັນທີ່ນິຍົມກັນມາແຕ່ບູຮານວ່າເປັນຍາມທີ່ແນ່ນອນ.

ໝາຍເຫດ: ຍາມນີ້ໃຊ້ເມື່ອຈັກເດີນທາງສະແຫວງຫາໂຊກລາບ ທ່ານວ່າແມ່ນຍຳ ໄດ້ຜົນແທ້ຈິງ ຈຶ່ງມີການເລົ່າຮຽນສືບໆກັນມາຈົນຕາບເທົ້າທຸກວັນນີ້ແລ ຯ (ກະຣຸນາທ່ອງຈຳໂຕງປະຈຳວັນໃຫ້ໄດ້)

- ສູນໜຶ່ງ ຢ່າພຶ່ງຈອນ ແມ່ນຣານຣອນຈະອັບປຣາ (ບໍ່ດີ)
- ສອງສູນ ເລັ່ງຍາດຕຣາ ຈະມີລາບ ສະຫວັດດີ (ດີ)
- ປອດສູນ ພູນສະຫວັສດິ໌ ໄພພິບັດ ລາບບໍ່ມີ (ບໍ່ດີ ບໍ່ຮ້າຍ)
- ກາກະບາດ ຕົວອັບປຣີ ແມ່ນຈອນລີຈະອັບປຣາ (ບໍ່ດີ)
- ສີ່ສູນ ຈະພູນຜົລ ແມ່ນຈຳຣະດົລດີພັກໜາ ມີລາບລົ້ນ ຄະນະນາ ເຣັ່ງຍາຕຣາ ຈະມີໄຊ (ດີທີ່ສຸດ)

ໃຫ້ເບິ່ງຕາຣາງ ຍາມ ວັນ ເວລາ ທີ່ໄດ້ກ່າວໄວ້ ຄື:

ສູນໜຶ່ງ (ບໍ່ດີ) ສອງສູນ (ດີ)

ປອດສູນ (ບໍດີ-ບໍ່ຮ້າຍ) ກາກະບາດ(x) ແມ່ນບໍ່ດີແທ້ໆ

ສີ່ສູນ (ດີຫລາຍກວ່າທຸກຢ່າງແລ) ຯ

(ຈົບຍາມອຸບາກອງແຕ່ພຽງເທົ່ານີ້)

ຮີດເຂົ້າຄອງເຂີຍບູຮານ

(ມີ 8 ລັກສະນະ)

* ລັກສະນະເຂີຍຜູ້ທີ່ 1

ຮີດເຂົ້າຄອງເຂີຍ ມາເຊີຍສົມສູ່
ຂໍຢູ່ອາສາ ຂານລ້ຽງລຸງຕາ ພັນຣະຍາເມັຍມິ່ງ
ສ້າງໄດ້ທຸກສິ່ງ ວັດຖຸເຂົ້າຂອງ
ບໍ່ໄດ້ພີປອງ ເຈົ້າໂຄດລຸງຕາ
ຢູ່ຕາມພາສາ ຮີດເຂົ້າຄອງເຂີຍ
ເລີຍຢູ່ມານານ ພາຍລຸນເປັນໂທດ

ໄດ້ໂກດທຳຜິດ ທຳທຸຈະຣິດດ້ວຍເຫດອັນໃດ
ໃຫ້ໂຜດດີຫລີຜິດເຖິງສາມທີຈຶ່ງມີເງິນຕາກັບທັງໝູ
ຄວນໃຫ້ອິດູ ໂທດນັ້ນສິມມາ
ໃຫ້ຫວນຫາຄຸນ ສ້າງໄວ້ພາຍຫລັງ
ຢ່າວ່າເປັນສັງ ຜິດແຕ່ທີດຽວ
ຄວນໃຫ້ສິມມາ ລຸງຕາສິມຊອບ
ປະກອບຄອງທັມ ຕາມຄຳເຖົ້າເກົ່າ
ເພິ່ນເວົ້າສືບມາ.

* ລັກສະນະເຂີຍຜູ້ທີ່ 2

ມີແຕ່ຜິປອງ ເອົາຖ້ອຍເອົາຄວາມ
ບໍ່ຕາມນຳຮີດ ມີໄຮ່ບໍ່ຫາ ມີນາບໍ່ສ້າງ
ອ້າງແຕ່ຜິດຖຽງ ບໍ່ສູ້ຢຳຢ້ານ ຈາຕ້ານດ່າເມັຍ
ເວົ້າຊຳເຊີຍ ນຳສາວຝູງອື່ນ
ມັນແຕ່ງເພດລື່ນ ຝູງບ່າວນິງຮາມ
ຜິປອງເອົາຄວາມ ຢາກຮ້າງເມັຍໜີ
ຫ້າມເຖິງສາມທີ ຊ້ຳບໍ່ມີຟັງ
ຍັງດ່ວນກາຍຄວາມ ລຸງຕາເຖົ້າແກ່ ພໍ່ແມ່ສັ່ງສອນ
ໃຫ້ໄໝຕາມຄອງ ເງິນຮ້ອຍຄວາຍໂຕ
ເຫດມັນພາໂລ ຊອບແທ້ຄອງທັມ ນຳມາສອນໄວ້
ເຂີຍຢູ່ບໍ່ໄດ້ ລວດເລົ່າເລີຍໜີ
ດັ່ງນັ້ນຕາມທີໜີໄປໃຫ້ຂາດ ຕາມອາດຍາຕັດ.

* ລັກສະນະເຂີຍຜູ້ທີ 3

ເປັນນາມມັກປາດ ເຂີຍນັ້ນວິວາດດ່າລູກຕີຫລານ
ດື້ຂືນພາງານ ບໍ່ຢຳລຸງຕາ
ຕີໝາໃນເຮືອນ ຂອງເພິ່ນລ້ຽງດູ
ຕີແມວທັງໝູ ບໍ່ດູເປັນສັງ
ປ້ອຍດ່າງົວຄວາຍ ເປັນຄຳລະອາຍ
ຊ້ຳດ່າສັບທີສີ້ແມ່ ເຂີຍນັ້ນດູແກ່ ໃຫ້ໃສ່ຂັນງານ

24/VII ຂ້າມຈາຂໍ້ມາຍ

ຕາມຮີດບູຮານ ສອນເຂີຍແຕ່ເຄົ້າ ເຖົ້າເກົ່າສືບມາ
ຮ້ອຍໜຶ່ງເງິນຕາ ຫາມາໃຫ້ໄດ້
ໄໝຊໍາທັງຄວາຍ ຍິງຊາຍເພິ່ງຊອບ ປະກອບເຂີຍງານ
ຜິດແຕ່ພື້ນຖານ ແລະເທື່ອສອງທີ
ຄັນຢາກປະໜີ ໃຫ້ມີເງິນບາດ ດອກໄມ້ທຽນຄູ່ ເຂົ້າສູ່ສົມມາ
ເຈົ້າໂຄດລຸງຕາ ຊອບທີ່ສົມຄວນ
ໃຫ້ທວນຫາຄຸນ ໃຫ້ປຸນຫາໂທດ ພູະໂຜດກູນາ.

* ລັກສະນະເຂີຍຜູ້ທີ່ 4

ແມ່ນເຊື້ອລຸງຕາ ລູກມ້າຫລານອາ ເຊື້ອປ້າທັງລຸງ
ວ່າໂຕແນວສູງ ບໍ່ຢ້ານບໍ່ຢໍາ
ເຂີຍຫາກຂັບລໍາ ຕີນທໍາຊໍາດ່າ
ປາກວ່າເລີຍໂພດ ເປັນໂທດດີຫລີ
ໄໝເບ້ຍປານີ ເປັນເງິນສອງບາດ
ຄອງອະນຸຍາດ ດອກໄມ້ທຽນຄູ່
ມັນຈິ່ງສົມຄວນ ທັງມວນກັບໂທດ
ຢ່າໂຜດໄປຫລາຍ ຜິດກາຍລື່ນນັ້ນ
ເບັ້ຍພັນຂັນໄໝ ໃຫ້ໃສ່ຂັນງານ
ຕາມຮີດບູຮານ ຄອງເຮົາເຖົ້າເກົ່າ
ແຕ່ເຄົ້າພາຍຫລັງ ຊອບແທ້ໃນຄອງ
ຕຶກຕອງເມືອໜ້າ.

* ລັກສະນະເຂີຍຜູ້ທີ່ 5

ຕາມຄອງອັນໃໝ່ ເຂີຍໃຫ່ຍກ່ວາເຮົາ
ຄໍາໜັກຄໍາເບົາໃຫ້ຕວງໃຫ້ຄັກ ສັບພະສິ່ງທັງມວນ
ເຂີຍຜູ້ສົມຄວນ ໄດ້ມອບທຸກສິ່ງ ເຂົ້າຂອງເງິນຄໍາ
ເຂີຍຄໍ້າເຮືອນຊານ ຊ້າງມ້າງົວຄວາຍ
ໂພຍໄພທັງຫລາຍ ເຂີຍນັ້ນຄໍ້າຊູ
ມີຄໍາອີດູ ເຈົ້າໂຄດວົງສາ
ຢູ່ໄປຢູ່ມາ ລຸງຕາຕ້ອງໂທດ ຜິດໂຜດພາຍລຸນ

ເຂີຍນັ້ນເປັນຄຸນຊ່າງມາປຸນປອງ ບໍ່ແພ້ຈິ່ງເສຍ
ເງິນຊ່ອຍເບື້ອງເມັຍ ບໍ່ໃຫ້ເສັຍຄຸນ
ເຂີຍຢູ່ມານານ ພາຍລຸນເປັນໂທດໃຫ້ໂຜດຍັງເຂີຍ
ໃຫ້ເພີຍຄຳງາມຄວນໃຫ້ຂັບຕາມ ດອກໄມ້ທຽນຄູ່
ແລ້ວຢູ່ຕາມຄອງ ຢ່າປອງໄປຫາໂທດ ໃຫ້ໂຜດດີຫລີ
ເຂີຍນັ້ນບໍ່ດີ ເລີຍມີຄຳໃໝ່ ລວດໄດ້ຂອງເຂີຍ
ເລີຍແບ່ງປານິດ ຕາມຮີດໃນທັມ ຕາມຄຳເຖົ້າເກົ່າເພິ່ນເວົ້າສືບມາ.

* ລັກສະນະເຂີຍຜູ້ທີ່ 6

ເປັນຄອງໂສພາບ ເຂີຍນັ້ນໃຈບາບ ສອນຍາກພາໂລ
ພາໂຕເປັນໂທດ ເວົ້າໂອດສະຫາວ
ເວົ້າແຕ່ເຊິງສາວ ອວດອ້າງເຂົ້າຂອງ
ຈອງຫອງຄຳຫລາກ ເອົາຍາກໃສ່ໂຕ
ເຂີຍນັ້ນພາໂລ ຄວນໃຫ້ສັ່ງສອນ
ໃຫ້ແຈບໃຫ້ນອນ ຄອງເຂີຍບູຮານ
ໄດ້ຢູ່ມານານ ທຳການຊື່ນຊອບ
ປະກອບຄອງເຂີຍ ເລີຍໃຫ້ເພີ່ງແພງ
ຕາມລັກສະນະ ຢ່າປະບູຮານ
ວຽກເຮືອນວຽກຊານ ບໍ່ນານໄດ້ຜິດເຈົ້າໂຄດລຸງຕາ
ຄວນໃຫ້ສິມມາແຕ່ທຽນຜ້າຜ່ອນ ໃຫ້ສອນເອົາເຂີຍ
ເລີຍຜິດລື້ນນັ້ນ ໃຫ້ຄ່ອຍພິຈານ
ຕາມແພ່ງບູຮານ ອາຈານເຖົ້າເກົ່າ ເພິ່ນເວົ້າສືບມາ.

* ລັກສະນະເຂີຍຜູ້ທີ່ 7

ເຊື້ອຊາດແນວຊຸນ ປຸນມາສົມສູ່ ມາຢູ່ເປັນເຂີຍ
ເລີຍໄດ້ຫລາຍປີ ຈຶ່ງມີບຸດຕາ
ເຂີຍນັ້ນບໍ່ຈາ ວຽກຢ້າວການເຮືອນ
ມີແຕ່ຈາເຟືອນ ເຣື່ອງເສບສຸຣາ
ຫລິ້ນໄພ້ ແທງໂປ ຫລິ້ນເບັ້ຍ ເສັຍທຶນຂອງເກົ່າ
ປະເປົ່າເຮືອນຊານ ສູບຝິ່ນກິນຊາ

ໂຖງໝາກສະກາ ເລີຍເລົ່າຈົບຫາຍ
ພາໂຕດັບວາຍ ຂາຍລູກຂາຍເມັຍ
ເສັຍທຶນຊັບເກົ່າ ປະເປົ່າເຮືອນຊານ
ເຂີຍນັ້ນດູງານ ດ່າລູກຕີເມັຍ
ອ້າງແຕ່ຢາກປະເສັຍ ຜົວເມັຍວິວາດ
ຄວນຂາດກັນໜີ ບອກເຖິງສາມທີ ບໍ່ໄດ້ຢ່າຄອງ
ຂັບໜີເລີຍໂລດ ຢ່າໂຜດພາຍລຸນ
ບໍ່ຄວນເປັນຄຸນ ອັນໃດຈັກສິ່ງ
ຈອມມິ່ງຕິຕຽນ ຈັກວຽນຄືນຄອບ ບໍ່ຊອບຄອງທັມ
ນຳມາແຕ່ເຄົ້າ ກ່າວເວົ້າສືບມາ.

*ລັກສະນະເຂີຍຜູ້ທີ່ 8

ມີແຕ່ລູກເມັຍ ໂຄດວົງຕາຍເສັຍ
ຍັງແຕ່ຜົວເມັຍ ເພິ່ງແພງກັບລູກ
ວ່າມີຂອງຜູກ ເປັນຫ່ວງລຶງສານ
ຢູ່ມາບໍ່ນານ ໄດ້ແຕ່ຄຳຕິວະ ຍົວະໃຫ້ວົງສາ
ເຊື້ອປ້າແນວລຸງ ຜູ້ເປັນຍິສຸງ ກຳ້ຝ່າຍເມັຍຕົນ
ລາງຄົນເດັກນ້ອຍ ບໍ່ພ້ອຍທຳຜິດ ຕິດໂຕບໍ່ຊ້າ
ຄືເປັນລູກຫລານ ແມ່ນເຊື້ອທາງໄກ
ນິດໄສຝູງອື່ນ ຢ່າລື່ນຄຳຕາຍ
ຕາມອຸບາຍ ຄຳມາແຕ່ເຄົ້າ ເພິ່ນເວົ້າສືບມາ
ໄດ້ຕີບຸດຕາ ດ້ວຍໄມ້ທັນດັງ
ໂທດຍັງບໍ່ແລ້ວ ຄວນໃຫ້ສົມມາ
ເຮົາຈາຢູ່ເກົ່າ ເພິ່ນເວົ້າສືບມາ
ຕັ້ງແຕ່ປະຖະມາ ບຸຣິມຜູ້ເຖົ້າ
ຊຸນບຸຣິມກ່າວໄວ້ ໃຫ້ເປັນທຳນອງ
ຊັກອຸປະມາ ເວົ້າໃຫ້ເປັນຄອງ
ເວົ້າຕອງຕາມຣີກ ໃຫ້ຖືກຄອງເມືອງ
ຈັກມີບຸນເຮືອງ ເຖິງຍອດນີຣະພານ

ອາຈານກ່າວໄວ້ ໃຫ້ຈື່ຈຳເອົາ
ລູກຫລານຂອງເຮົາ ເກີດມາເປັນຊຸມ
ຮໍາເພິງໃຫ້ຖີ່ ຢ່າໃຫ້ເສັຍສິລ ໆ

ຄວາມຟາຍເຫລົ້າອີກແບບໜຶ່ງ
(ແຖມທ້າຍ)

* ນະໂມ ຕັສສະ ພະຄະວະໂຕ ອະຣະຫະໂຕ ສັມມາ ສັມພຸດທັສສະ (3 ເທື່ອ)

ໂອມ ພູະພຸດທັງ ໂອມ ພູະທັມມັງ ໂອມ ພູະສັງຄັງ ອຸທະກັງ ນ້ຳອັນນີ້ບໍ່ແມ່ນນ້ຳທັມມະດາ ພູະຍາແຖນປະທານມາແຕ່ຟາກຟ້າ ວ່າ ໃຫ້ເອົາມາທົດໃຫ້ຄົນໃຕ້ລຸ່ມຟ້າ ໃຫ້ໄດ້ດັ່ງຄຳມັກ ຄຳປາດຖະໜາ

ໂອມ ພູະພຸດທັງ ໂອມ ພູະທັມມັງ ໂອມ ພູະສັງຄັງ ອຸທະກັງ ນ້ຳອັນນີ້ເປັນນ້ຳສັກສິດ

ກູຈັກຊິດໃສ່ຄົນຜູ້ຖືກຫວ້ານກ້ານໜາ ກໍຫາຍ
ກູຈັກຊິດໃສ່ຄົນຜູ້ຖືກຢາກ້ານກ່ຳ ກໍຫາຍ
ກູຈັກຊິດໃສ່ຄົນຜູ້ຖືກຫຸ່ນຖືກຮອຍ ກໍຫາຍ
ກູຈັກຊິດໃສ່ຄົນຜອມເຫລືອງເປັນພະຍາດ ກໍຫາຍ
ກູຈັກຊິດໃສ່ຄົນເປັນເຄາະຄາດເຂົ້າເຖິງຄີງ ກໍຫາຍ
ກູຈັກຊິດໃສ່ຄົນ ຜູ້ເຫັນລາງຟານເທົ່າ ກໍຫາຍ
ກູຈັກຊິດໃສ່ຄົນ ທີ່ນົກເຄົ້າຮ້ອງກູກເອົາຂ້ວນ ກໍຫາຍ
ກູຈັກຊິດໃສ່ຄົນເຫັນງູຢູ່ໃນບ້ານ ກໍຫາຍ
ກູຈັກຊິດໃສ່ຄົນໝົດບ້ານໜຶ້ງເຂົ້າສິແດງ ກໍຫາຍ

ສັບພະໂຣຄຣະງັບ ສັບພະໄພຣະງັບ
ສັບພະເຄາະຫ໌ຣະງັບ ສັບພະເຂັນຣະງັບ ສວາຫາຍ.

ໂອມ ພູະພຸດທັງ ໂອມພູະທັມມັງ ໂອມພູະສັງຄັງ ອຸທະກັງ ນ້ຳອັນນີ້
ເປັນນ້ຳສັກສິດ ກູຈັກຊິດໃສ່ຄູ່ແຕ່ງງານ ກໍມີອາຍຸຍືນດອມກັນເທົ້າເຖົ້າ
ມີລູກເຕົ້າລ້ວນແຕ່ຜູ້ດີ ເປັນເສດຖີມັ່ງມີບໍ່ໄຮ້
ກູຈັກຊິດໃສ່ດິນທຸກຂ໌ໄຮ້ ກໍເປັນດິນລ່ຳລວຍ
ກູຈັກຊິດໃສ່ຄວາຍ ກໍເກີດເປັນຄວາຍເຂົາແກ້ວ
ກູຈັກຊິດໃສ່ຮ້ານຄ້າ ເປີດໃໝ່ແລ້ວກໍມັ່ງມີເງິນຄຳ
ກູຈັກຊິດໃສ່ຜູ້ນຳ ກໍຈັກເປັນຫລັກໄຊຂອງປະເທດ
ກູຈັກຊິດໃສ່ນະຄະເຣດ ກໍຈັກເປັນເມືອງຫລວງ
ກູຈັກຊິດໃສ່ປວງນັກຮຽນ ກໍໄດ້ເປັນດີບໍ່ນ້ອຍ
ກູຈັກຊິດໃສ່ຂ້ອຍຂ້າ ຂ້ອຍຂ້າກໍກັບຕ່າວເປັນນາຍ
ກູຈັກຊິດໃສ່ຂ້າຣາຊການຜູ້ນ້ອຍກໍມາເກີດ ເປັນໃຫ່ຍເປັນໂຕ
ກູຈັກຊິດໃສ່ພູະສັງໂຄ ແລະຈົວນ້ອຍ ກໍຈັກໄດ້ເປັນພູະຍອດແກ້ວ
ໂອມອ່ານແລ້ວດ້ວຍບາດພູະຄາຖາວ່າ ອຸ ອະ ມຸ ມະ ມູນມາ ມະຫາ
ມູນມັງ ມູນລັງ ໂຫນຕຸ ສວາຫົມ ຯ

ພິມທີ່ໂຮງພິມໜຸ່ມລາວ   ໂທ 21 5721   ແຟັກ 21 6338

ຈຳໜ່າຍ ໂທ 31 3237 - 31 3044

ລົດຊາດທີ່ມີເອກະລັກສະເພາະ
ແມ່ນຄວາມພູມໃຈຂອງພວກເຮົາ
ເບຍລາວ
Bièrelao ラオス ビール Beerla
ເບຍລາວ
ເບຍລາວ
Beerlao
PREMIUM QUALITY
ເບຍລາວ
Beerlao
LAGER BEER
フル テースト オブ ハピネス
LA SAVEUR DU BONHEUR
FULL TASTE OF HAPPINESS